# ຍຸດທະສາດປ່າໄມ້ຮອດປີ 2020

# ຂອງ ສ.ປ.ປ ລາວ

ກໍລະກົດ 2005

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 229 /ນຍ

ນະຄອນຫລວງວຽງຈັນ, ວັນທີ 09/08/2005

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້

## ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003;
- ອີງຕາມກົດໝາຍປ່າໄມ້ ສະບັບເລກທີ 01-96, ລົງວັນທີ 11/10/1996;
- ອີງຕາມເອກະສານສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0163/ກປ.05, ລົງວັນທີ 08/07/2005.

**ນາຍົກລັດຖະມົນຕີ ອອກດຳລັດ:**

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ ສະບັບເດືອນກໍລະກົດ ປີ 2005 ຢ່າງເປັນທາງການ.

ມາດຕາ 2: ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ ໃຫ້ປະກົດຜົນເປັນຈິງ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດ ສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

สแกนด้วย CamScanner

# ຄຳນຳ

ພັກ ແລະ ລັດ ຍາມໃດກໍມີຄວາມເປັນຫວ່ງເປັນໃຍ ຕໍ່ວຽກງານການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້, ດັ່ງອະດີດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກ ຂອງປວງຊົນລາວ ທັງຊາດໄດ້ກ່າວໃນກອງປະຊຸມໃຫຍ່ປ່າໄມ້ທົ່ວປະເທດ ໃນປີ 1989 ວ່າ: "ສະພາບການທຳລາຍປ່າໄມ້ ຂອງ ປະເທດເຮົາໄດ້ເຖິງລະດັບເຕືອນໄພແລ້ວ, ເຖິງເວລາແລ້ວ ທີ່ພວກເຮົາຈະຕອ້ງຫັນຢ່າງຂາດຕົວ ຈາກສະພາວະແຫ່ງການຂຸດຄົ້ນ ແລະ ທຳລາຍປ່າໄມ້ ຢ່າງຊະຊາຍ ໄປສູ່ການປູກ ແລະ ການປົກປັກຮັກສາ ເປັນຕົ້ນຕໍ" *(ເອກະສານກອງປະຊຸມປ່າໄມ້ທົ່ວປະເທດ, ປີ 1989, ໜ້າ 38).* ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກ ໃນປີ 2001 ໄດ້ຕີລາຄາວ່າ: ການຂຸດຄົ້ນ ແລະ ສະພາບການທຳລາຍປ່າໄມ້ ໃນປະເທດເຮົາ ເຫັນວ່າໄດ້ມີທ່າ ເພີ່ມຂຶ້ນຢູ່ບາງບອ່ນອັນເຮັດໃຫ້ຊັບພະຍາກອນປ່າໄມ້ຂອງຊາດ ຖືກເສັຽຫາຍຫຼາຍ, ແຕ່ຜົນໄດ້ຮັບ ບໍ່ພໍເທົ່າໃດ *(ເອກະສານກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກ).*

ຍອ້ນເຫັນໄດ້ສະພາບຄືດັ່ງກ່າວ, ລັດຖະບານຈຶ່ງໄດ້ໃຫ້ທິດ ຊີ້ນຳແກ່ຂະແໜງການກະສິກຳ ແລະ ປ່າໄມ້ ຢ່າງໃກ້ສິດ ໃນການ ກຳນົດຍຸດທະສາດປ່າໄມ້ ແຕ່ນີ້ຫາ ປີ 2020. ຈຸດປະສົງລວມ ຂອງຍຸດທະສາດປ່າໄມ້ແຕ່ນີ້ຮອດປີ 2020 ຂອງ ສປປລາວ ແມ່ນ ເພື່ອປະກອບສວ່ນ ເຂົ້າໃນການຈັດຕັ້ງປະຕິບັດ ໃຫ້ບັນລຸຕາມ ເປົ້າໝາຍ ຂອງແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ, ຕອບສະໜອງຄວາມຕອ້ງການ ໃນການຜະລິດເປັນສິນຄ້າ ແລະ ການບໍລິການໃນຫຼາຍໆດ້ານ, ຫຼຸດຜອ່ນການເອື່ອຍອີງ ໃສ່ຊັບພະຍາກອນທຳມະຊາດ ແລະ ປະກອບສວ່ນ ເຂົ້າໃນການຈັດຕັ້ງປະຕິບັດ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດໃຫ້ບັນລຸຜົນສຳເລັດ. ຄືດັ່ງທີ່ຮູ້ແລ້ວວ່າ ປະຊາຊົນລາວສວ່ນໃຫຍ່ ແມ່ນດຳລົງຊີວິດ ຢູ່ໃນເຂດຊົນນະບົດທີ່ອອ້ມຮອບໄປດ້ວຍປ່າໄມ້ ຫຼື ຢູ່ໃນປ່າໄມ້. ການດຳລົງຊີວິດປະຈຳວັນ ຫຼື ການດຳເນີນກິດຈະກຳໃນການສ້າງລາຍຮັບຂອງເຂົາເຈົ້າ ສວ່ນໃຫຍ່ ແມ່ນຕິດພັນກັບການເກັບກູ້ຜະລິດຕະພົນປ່າໄມ້ ຊຶ່ງນອກຈາກ ເພື່ອນຳໃຊ້ພາຍໃນຄອບຄົວແລ້ວ ກໍແມ່ນເພື່ອຂາຍ. ສະນັ້ນ ຈຶ່ງເວົ້າໄດ້ວ່າ ຊັບພະຍາກອນປ່າໄມ້ ແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ໃນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ.

ການສ້າງຍຸດທະສາດປ່າໄມ້ ຮອດປີ 2020 ໄດ້ລິເລີ່ມ ພາຍຫຼັງ ກອງປະຊຸມປຶກສາຫາລືກ່ຽວກັບນະໂຍບາຍດ້ານປ່າໄມ້ ທີ່ ຫຼວງພະບາງ ໃນເດືອນ ກັນຍາ ປີ 2000, ຊຶ່ງແມ່ນຊ່ວງໄລຍະການກະກຽມໃຫ້ແກ່ກອງປະຊຸມໂຕະມົນ ຄັ້ງທີ 7. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຖືກແຕ່ງຕັ້ງ ໃຫ້ເປັນຜູ້ຮັບຜິດຊອບໂດຍກົງ ໃນການຮ່າງຍຸດທະສາດປ່າໄມ້ ຊຶ່ງໄດ້ຮັບການຊີ້ນຳລວມ ຈາກ ຄະນະປະສານງານລະດັບອະວຸໂສ ທີ່ແຕ່ງຕັ້ງ ໂດຍທ່ານຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການແຜນການ ແລະ ການລົງທຶນ ໃນເດືອນ ເມສາ 2001. ຈາກນັ້ນ ກໍໄດ້ດຳເນີນການສຶກສາໂດຍລະອຽດ ກ່ຽວກັບ ສະພາບລວມ ແລະ ບັນຫາຕ່າງໆ ໃນຂະແໜງປ່າໄມ້ ແລະ ໄດ້ຈັດກອງປະຊຸມປຶກສາຫາລືຂຶ້ນ ຫຼາຍຄັ້ງ ແນໃສ່ສ້າງຄວາມເປັນເອກະພາບ ໃຫ້ໄດ້ ໃນລະດັບສູງ. ຮ່າງຍຸດທະສາດປ່າໄມ້ ສະບັບທຳອິດ ໄດ້ຖືກນຳໄປປຶກສາຫາລື ໃນກອງປະຊຸມເປີດກວ້າງ ໃນ ເດືອນ ກໍລະກົດ 2003 ໂດຍການເຂົ້າຮ່ວມຂອງບັນດາພາກສວ່ນທີ່ກ່ຽວຂອ້ງທັງໝົດ ທັງພາຍໃນ ແລະ ສາກົນ. ຮ່າງສະບັບທີສອງ ໄດ້ຮັບການປັບປຸງ ແລະ ແຈກຢາຍ ໃຫ້ບັນດາພາກສວ່ນ ທີ່ກ່ຽວຂອ້ງ ທັງໝົດ ທັງພາຍໃນ

ແລະ ສາກົນ ເພື່ອປະກອບຄຳເຫັນຄັ້ງສຸດທ້າຍ ໃນເດືອນ ພະຈິກ ປີ 2003 ແລະ ຮ່າງສະບັບສຸດທ້າຍ ໄດ້ສະເໜີຕໍ່ກອງປະຊຸມສະພາວິທະຍາສາດ-ເຕັກນິກກະສິກຳ ແລະ ປ່າໄມ້ ເພື່ອຮັບຮອງ ໃນເດືອນ ພຶດສະພາ 2004. ຫຼັງຈາກນັ້ນ ໄດ້ນຳສະເໜີຕໍ່ຄະນະກຳມະການແຜນການ ແລະ ການລົງທຶນ ໃນທ້າຍເດືອນ ສິງຫາ ປີ 2004 ເພື່ອພິຈາລະນາ ແລະ ໃຫ້ທິດຊີ້ນຳ ກ່ອນທີ່ຈະນຳສະເໜີຕໍ່ລັດຖະບານ ເພື່ອຮັບຮອງ ໃນຕົ້ນປີ 2005. ການສ້າງແຜນຍຸດທະສາດປ່າໄມ້ຮອດປີ 2020 ແມ່ນໄດ້ຮັບການຊ່ວຍເຫຼືອ ທາງດ້ານທຶນຮອນ ແລະ ເຕັກນິກວິຊາການ ຈາກອົງການ ຊີດາ ແລະ ອົງການໃຈກ່າ.

ຍຸດທະສາດປ່າໄມ້ ຮອດປີ 2020 ທີ່ຖືກຮັບຮອງເອົາຈາກລັດຖະບານ ແມ່ນເປັນເອກະສານທາງການ ເພື່ອຊີ້ນຳ ໃນການພັດທະນາ ຂະແໜງປ່າໄມ້ ຊຶ່ງສອດຄ່ອງກັບ ຍຸດທະສາດລວມ ແລະ ແຜນງານບຸລິມະສິດ ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການອະນຸລັກສິ່ງແວດລ້ອມ ລວມທັງ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ.

ຍຸດທະສາດສະບັບນີ້ ແມ່ນເປັນພື້ນຖານ ສຳລັບການສ້າງແຜນດຳເນີນງານດ້ານປ່າໄມ້ ປະຈຳປີ ແລະ ແຜນໄລຍະກາງ ຂອງລັດຖະບານ ຕະຫຼອດຮອດການສ້າງແຜນງານ ແລະ ໂຄງການຮ່ວມມືດ້ານປ່າໄມ້ກັບສາກົນ. ຍຸດທະສາດປ່າໄມ້ 2020 ຈະໄດ້ ຮັບການທົບທວນ ແລະ ດັດປັບ ໃຫ້ທ່ວງທັນກັບສະພາບ ເພື່ອຕອບສະໜອງຕາມແນວທາງນະໂຍບາຍຂອງພັກ ແລະ ລັດ ໂດຍອີງຕາມສະພາບ ແລະ ເງື່ອນໄຂຂອງການປ່ຽນແປງ ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ.

ຍຸດທະສາດປ່າໄມ້ຮອດປີ 2020 ໄດ້ກຳນົດແຈ້ງ ຈຸດປະສົງ ໃນການພັດທະນາຂະແໜງປ່າໄມ້ ແລະ ນະໂຍບາຍ, ແຜນງານ ແລະ ແຜນການດຳເນີນງານ (ລວມທັງໝົດ ມີ 146 ແຜນດຳເນີນງານ) ຄຽງຄູ່ໄປກັບການກຳນົດ ພາລະບົດບາດ ຄວາມຮັບຜິດຊອບ ຂອງຂະແໜງການຕ່າງໆທີ່ກ່ຽວຂ້ອງ ໃນແຕ່ລະແຜນດຳເນີນງານ ດັ່ງກ່າວ. ຍຸດທະສາດປ່າໄມ້ຮອດປີ 2020 ຍັງໄດ້ສັງລວມເອົາ ຄວາມເປັນມາ, ສະຖານະພາບ ແລະ ບັນຫາທັງໝົດ ຂອງຂະແໜງປ່າໄມ້ ຂອງ ສປປລາວ ລວມທັງ ສະພາບ ຂອງຊັບພະຍາກອນປ່າໄມ້, ສະພາບການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕະຫຼອດຮອດ ນະໂຍບາຍ ແລະ ແຜນງານ ຂອງລັດຖະບານ ໃນການພັດທະນາປ່າໄມ້ ໃນໄລຍະຜ່ານມາ ເຖິງປະຈຸບັນ. ເຖິງວ່າ ແຕ່ລະແຜນດຳເນີນງານ ທີ່ກຳນົດໃນຍຸດທະສາດປ່າໄມ້ ຈະມີລັກສະນະຂໍ້ສະເໜີ ແຕ່ຄາດຫວັງວ່າ ມັນຈະເປັນບ່ອນອີງ ໃນການກຳນົດ ແຜນການປະຈຳປີ ແລະ ແຜນການ 5 ປີ ຂອງບັນດາກະຊວງ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງທັງໝົດ ທັງຢູ່ໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຢູ່ໃນຂົງເຂດວຽກງານ ແລະ ທ້ອງຖິ່ນຂອງຕົນ.

ນະຄອນຫຼວງວຽງຈັນ, ວັນທີ 07 /07/2005

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ສຽນ ສະພັງທອງ

ສາລະບານ


ສາລະບານ ....................................................................................................i

ບົດສະຫຼຸບຫຍໍ້

1. ພາກສະເໜີ........................................................................................................1

1.1. ສະພາບລວມ ແລະ ຈຸດປະສົງ ຂອງ ຍຸດທະສາດປ່າໄມ້ ຮອດປີ 2020 ...........................................1

1.2. ບາດກ້າວ ແລະ ຂັ້ນຕອນ ຂອງ ການສ້າງຍຸດທະສາດປ່າໄມ້ຮອດປີ 2020 ........................................1

2. ສັງເກດລວມກ່ຽວກັບປ່າໄມ້ ແລະ ວຽກງານປ່າໄມ້...........................................................2

2.1. ສະພາບລວມ ກ່ຽວກັບປ່າໄມ້ຂອງລາວ.........................................................................2

2.2. ສັງເກດລວມ ກ່ຽວກັບການພັດທະນານະໂຍບາຍປ່າໄມ້ ......................................................3

2.2.1. ແຕ່ປີ 1975 ເຖິງປີ 1989...............................................................................3

2.2.2. ແຕ່ກອງປະຊຸມປ່າໄມ້ທົ່ວປະເທດ ໃນປີ 1989 ເຖິງ 1996 ....................................................4

2.2.3. ພາຍຫຼັງທີ່ມີກົດໝາຍປ່າໄມ້ ໃນປີ 1996 ເປັນຕົ້ນມາ...........................................................8

2.3. ການຮ່ວມມືກັບສາກົນ .......................................................................................9

2.4. ບົດບາດ ຂອງປ່າໄມ້ ແລະ ວຽກງານປ່າໄມ້ ຢູ່ ສປປ ລາວ ..................................................10

2.4.1. ການປະກອບສ່ວນຂອງວຽກງານປ່າໄມ້ ໃນການພັດທະນາເສດຖະກິດ-ສັງຄົມ..................................10

2.4.2. ບົດບາດຂອງຂະແໜງປ່າໄມ້ ໃນ ສປປ ລາວ.............................................................11

3. ສະຖານະພາບ ແລະ ບັນຫາ ..................................................................................13

3.1. ການນຳໃຊ້ທີ່ດິນ ແລະ ປ່າໄມ້.............................................................................13

3.1.1. ລະບົບການນຳໃຊ້ທີ່ດິນ ................................................................................13

3.1.2. ການຈັດແບ່ງປະເພດປ່າ ...............................................................................14

3.1.3. ການປ່ຽນແປງການນຳໃຊ້ທີ່ດິນ ແລະ ສາເຫດຕົ້ນຕໍ ..........................................................16

3.1.4. ບັນຫາທີ່ຕອ້ງໄດ້ປັບປຸງ ໃນການນຳໃຊ້ທີ່ດິນ ແລະ ປ່າໄມ້ ....................................................19

3.2. ປ່າຜະລິດ...................................................................................................20

3.2.1. ສະພາບປະຈຸບັນຂອງປ່າຜະລິດ.........................................................................20

3.2.2. ດຳລັດຂອງນາຍົກລັດຖະມົນຕີ ເລກທີ 59/2002 ວ່າດ້ວຍ ການຄຸ້ມຄອງປ່າຜະລິດແບບຍືນນານ ....21

3.2.3. ບັນຫາສຳລັບການຄຸ້ມຄອງປ່າຜະລິດແບບຍືນນານ ......................................................22

3.3. ເຄື່ອງປ່າຂອງດົງ ............................................................................................24

3.3.1. ຄວາມສຳຄັນຂອງເຄື່ອງປ່າຂອງດົງ ຕໍ່ເສດຖະກິດໃນເຂດຊົນນະບົດ ............................................24

3.3.2. ຄວາມສຳຄັນຂອງເຄື່ອງປ່າຂອງດົງ ຕໍ່ເສດຖະກິດແຫ່ງຊາດ.................................................25

3.3.3. ຄວາມສຳຄັນຂອງເຄື່ອງປ່າຂອງດົງ ຕໍ່ ການພັດທະນາປ່າໄມ້ ແລະ ການອະນຸລັກຊີວະນາໆພັນ .....25

3.3.4. ທ່າອ່ຽງໃນປະຈຸບັນ ສຳລັບການຄົ້ງຕົວ ແລະ ການນຳໃຊ້ ເຄື່ອງປ່າຂອງດົງ...............................26

3.3.5. ນິຕິກຳ ກ່ຽວກັບ ເຄື່ອງປ່າຂອງດົງ.........................................................................26

3.3.6. ບັນຫາສຳລັບການພັດທະນາເຄື່ອງປ່າຂອງດົງ............................................................27

3.4. ການພັດທະນາການປູກໄມ້ .................................................................................28

3.4.1. ຄາດໝາຍ ແລະ ທ່າແຮງ ຂອງການປູກໄມ້ ຢູ່ ສ.ປ.ປ.ລາວ ........ 28
3.4.2. ດ້ານນະໂຍບາຍ ແລະ ນິຕິກຳ ........ 29
3.4.3. ສະພາບການປູກໄມ້ ໃນປະຈຸບັນ ........ 29
3.4.4. ທຶນ ສຳລັບ ການປູກໄມ້ ........ 30
3.4.5. ການປະຕິບັດນະໂຍບາຍ ຕໍ່ ການປູກໄມ້ ........ 31
3.4.6. ບັນຫາ ໃນການປັບປຸງການພັດທະນາການປູກໄມ້ ........ 32
**3.5. ແຜນການຂຸດຄົ້ນ ແລະ ຄ່າພັນທະ ........ 33**
3.5.1. ແຜນການຂຸດຄົ້ນ ........ 33
3.5.2. ຄ່າພັນທະໄມ້ທ່ອນ ແລະ ພັນທະປູກໄມ້ ........ 34
3.5.3. ການຂາຍໄມ້ທ່ອນ ແລະ ເຄື່ອງປ່າຂອງດົງ ........ 35
3.5.4. ບັນຫາສຳລັບການປັບປຸງລະບົບ ແຜນການຂຸດຄົ້ນ ແລະ ການຂາຍໄມ້ທ່ອນ ........ 36
**3.6. ອຸດສາຫະກຳການປຸງແຕ່ງໄມ້ ........ 36**
3.6.1. ສັງເກດລວມ ກ່ຽວກັບ ອຸດສາຫະກຳການປຸງແຕ່ງໄມ້ ........ 36
3.6.2. ອົງການຈັດຕັ້ງ ແລະ ກອບທາງດ້ານນິຕິກຳ ........ 38
3.6.3. ນະໂຍບາຍຂອງລັດຖະບານ ........ 39
3.6.4. ບັນຫາຕ່າງໆ ຂອງອຸດສາຫະກຳປຸງແຕ່ງໄມ້ ........ 41
**3.7. ການອະນຸລັກຊີວະນາໆພັນ ........ 42**
3.7.1 ຊີວະນາໆພັນ ຢູ່ໃນ ສປປ ລາວ ........ 42
3.7.2. ລະບົບການອະນຸລັກຊີວະນາໆພັນ ........ 43
3.7.3. ກອບທາງດ້ານນິຕິກຳ ........ 43
3.7.4. ການຈັດຕັ້ງ ສຳລັບຄຸ້ມຄອງປ່າສະຫງວນແຫ່ງຊາດ ........ 44
3.7.5. ບັນຫາ ແລະ ໄພຂົ່ມຂູ່ ຕໍ່ປ່າສະຫງວນ, ສັດປ່າ ແລະ ສັດນ້ຳ ........ 45
**3.8. ປ່າປ້ອງກັນ ແລະ ການຄຸ້ມຄອງ-ຈັດສັນອ່າງໂຕ່ງ ........ 47**
3.8.1. ສະພາບຂອງອ່າງໂຕ່ງ ແລະ ປ່າປ້ອງກັນ ........ 47
3.8.2. ນະໂຍບາຍກ່ຽວກັບການຄຸ້ມຄອງ-ຈັດສັນອ່າງໂຕ່ງ ........ 48
3.8.3. ອົງການຈັດຕັ້ງ ສຳລັບຄຸ້ມຄອງອ່າງໂຕ່ງ ........ 48
3.8.4. ການມີສ່ວນຮ່ວມຂອງທ້ອງຖິ່ນ ........ 48
3.8.5. ບັນຫາສຳລັບ ການຄຸ້ມຄອງ-ຈັດສັນອ່າງໂຕ່ງ ........ 48
**3.9. ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ເພື່ອລຶບລ້າງຄວາມທຸກຍາກ ........ 49**
3.9.1. ຄວາມທຸກຍາກ ແລະ ປ່າໄມ້ ........ 49
3.9.2. ກອບທາງດ້ານນິຕິກຳ ກ່ຽວກັບການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ ........ 50
3.9.3. ຜົນໄດ້ຈາກການປະຕິບັດແຜນງານ ແລະ ໂຄງການຕ່າງໆ ກ່ຽວກັບ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ ແລະ ການລຶບລ້າງຄວາມທຸກຍາກ ........ 51
3.9.4. ບັນຫາສຳລັບ ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ເພື່ອລຶບລ້າງຄວາມທຸກຍາກ ........ 56
**4. ຈຸດປະສົງຂອງຂະແໜງປ່າໄມ້ ........ 58**
**4.1. ສະພາບແວດລ້ອມ ໃນການກຳນົດນະໂຍບາຍ ........ 58**

4.1.1. ຄວາມຕ້ອງການໃນການພັດທະນາ ....... 58
4.1.2. ຂົງເຂດສາກົນ ແລະ ການປ່ຽນແປງໃນຂົງເຂດພາກພື້ນ ....... 58
**4.2. ສິ່ງທ້າທາຍ ແລະ ທາງເລືອກ ສຳລັບການພັດທະນາປ່າໄມ້ ....... 60**
4.2.1. ສິ່ງທ້າທາຍ ສຳລັບຂະແໜງປ່າໄມ້ ....... 60
4.2.2. ທາງເລືອກ ສຳລັບການພັດທະນາປ່າໄມ້ ....... 62
**4.3. ຈຸດປະສົງ ຂອງຂະແໜງປ່າໄມ້ ....... 63**
4.3.1. ວິໄສທັດ ....... 63
4.3.2. ຈຸດປະສົງ ແລະ ລະດັບຄາດໝາຍ ....... 65
**5. ນະໂຍບາຍ, ແຜນງານ ແລະ ແຜນການດຳເນີນງານບຸລິມະສິດ ....... 67**
**5.1. ທິດທາງນະໂຍບາຍ ແລະ ຫຼັກການ ໃນການຈັດຕັ້ງປະຕິບັດ ....... 67**
**5.2. ແຜນງານ ແລະ ແຜນການດຳເນີນງານ ....... 68**
5.2.1. ການນຳໃຊ້ທີ່ດິນ ແລະ ປ່າໄມ້ ....... 68
5.2.2. ປ່າຜະລິດ ....... 69
5.2.3. ເຄື່ອງປ່າຂອງດົງ ....... 70
5.2.4. ການພັດທະນາການປູກໄມ້ ....... 71
5.2.5. ແຜນການຂຸດຄົ້ນ ແລະ ຄ້າພັນທະ ....... 73
5.2.6. ອຸດສາຫະກຳການປຸງແຕ່ງໄມ້ ....... 73
5.2.7. ການອະນຸລັກຊີວະນາໆພັນ ....... 75
5.2.8. ປ່າປ້ອງກັນ ແລະ ການຄຸ້ມຄອງຈັດສັນອ່າງໂຕ່ງ ....... 76
5.2.9. ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ....... 77
**5.3. ຂົງເຂດໃນການດຳເນີນງານຮ່ວມກັນ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ....... 78**
5.3.1. ຂັ້ນຕອນທາງດ້ານລະບຽບກົດໝາຍ ແລະ ການຈັດຕັ້ງປະຕິບັດ ....... 78
5.3.2. ການປະຕິບັດລະບຽບກົດໝາຍ ແລະ ການບໍລິຫານທີ່ດີ ....... 79
5.3.3. ການສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ການພັດທະນາຊັບພະຍາກອນມະນຸດ ....... 79
5.3.4. ການສຶກສາຄົ້ນຄວ້າ ແລະ ການສົ່ງເສີມ ....... 80
5.3.5. ບົດບາດຍິງ-ຊາຍ ....... 81
5.3.6. ງົບປະມານ ແລະ ການຈັດສັນງົບປະມານ ....... 82
5.3.7. ການຮ່ວມມືກັບສາກົນ ....... 83
**6. ກົນໄກໃນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ ຍຸດທະສາດປ່າໄມ້ ຮອດປີ 2020 ....... 85**
**6.1. ກອບໃນການຈັດຕັ້ງປະຕິບັດ ສຳລັບແຜນດຳເນີນງານທີ່ສະເໜີໃນຍຸດທະສາດປ່າໄມ້ ....... 85**
**6.2. ອົງການຮັບຜິດຊອບ ສຳລັບການຈັດຕັ້ງປະຕິບັດ, ການກວດກາ ແລະ ປະເມີນຜົນ ....... 85**
**6.3. ແຫຼ່ງງົບປະມານ ເພື່ອຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ....... 86**
**6.4. ການປຶກສາຫາລື ກັບສາກົນ ....... 86**
**6.5. ການສົ່ງເສີມການລົງທຶນ ພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ວຽກງານປ່າໄມ້ ....... 86**
**ເອກະສານຕິດຄັດ**

# ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ

## 1. ພາກສະເໜີ

### 1.1. ສະພາບລວມ ແລະ ຈຸດປະສົງ ຂອງ ຍຸດທະສາດປ່າໄມ້ ຮອດປີ 2020

ຍຸດທະສາດປ່າໄມ້ ຮອດປີ 2020 ແມ່ນ ເອກະສານທາງການ ເພື່ອຊີ້ນຳ ໃນການພັດທະນາ ວຽກງານປ່າໄມ້ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ມາດຕະການອະນຸລັກສິ່ງແວດລ້ອມ. ຍຸດທະສາດນີ້ ເປັນພື້ນຖານ ສຳລັບ ການສ້າງແຜນດຳເນີນງານດ້ານປ່າໄມ້ຂອງລັດຖະບານ ແລະ ເພື່ອສ້າງແຜນງານ ແລະ ໂຄງການຮ່ວມມືກັບສາກົນ ໃນໄລຍະສັ້ນ ແລະ ໄລຍະກາງ. ຍ້ອນວ່າ ການພັດທະນາ ເສດຖະກິດ-ສັງຄົມ ແລະ ເງື່ອນໄຂດ້ານສິ່ງແວດລ້ອມ ມີການປ່ຽນແປງເລື້ອຍໆ, ຍຸດທະສາດປ່າໄມ້ ຮອດປີ 2020 ຈະຕ້ອງໄດ້ ທົບທວນ ແລະ ດັດປັບ ໃຫ້ທ່ວງທັນກັບສະພາບ ແລະ ຕອບສະໜອງຕາມແນວທາງນະໂຍບາຍຂອງພັກ-ລັດໃນແຕ່ລະໄລຍະ.

**ຈຸດປະສົງລວມ ຂອງຍຸດທະສາດປ່າໄມ້ ຮອດປີ 2020** ແມ່ນ ເພື່ອກຳນົດ ແລະ ສ້າງນະໂຍບາຍ ແລະ ການຈັດຕັ້ງ, ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງອົງການຈັດຕັ້ງຕົ້ນຕໍ ທີ່ມີສ່ວນກ່ຽວຂ້ອງ ແນໃສ່ ບັນລຸຈຸດປະສົງ ແລະ ລະດັບຄາດໝາຍ ຂອງຂະແໜງປ່າໄມ້ (ດັ່ງທີ່ກຳນົດໃນພາກທີ 4) ໂດຍຜ່ານການຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ ແລະ ແຜນດຳເນີນງານ ທີ່ໄດ້ຜ່ານການຄັດເລືອກແລ້ວ (ດັ່ງທີ່ກຳນົດໃນພາກທີ 5 ແລະ 6).

**ຈຸດປະສົງສະເພາະຂອງຍຸດທະສາດປ່າໄມ້ຮອດປີ 2020** ແມ່ນເປັນທິດນຳ ໃນການ ສ້າງຂະແໜງປ່າໄມ້ ໃຫ້ມີຄວາມເຂັ້ມແຂງ ເພື່ອ ສາມາດບັນລຸຕາມຈຸດປະສົງ ຂອງຂະແໜງ ຢ່າງມີປະສິດທິຜົນ. ພ້ອມກັນນັ້ນ, ຍຸດທະສາດປ່າໄມ້ຮອດປີ 2020 ຍັງມີ ຈຸດປະສົງ ແນໃສ່ດຶງດູດ ແລະ ຍາດແຍ່ງ ເອົາການຊ່ວຍເຫຼືອຂອງສາກົນ ແລະ ເປັນກອບໃນການປະສານງານ ການດຳເນີນກິດຈະກຳຕ່າງໆ ຂອງບັນດາອົງການຜູ້ໃຫ້ທຶນ.

### 1.2. ບາດກ້າວ ແລະ ຂັ້ນຕອນ ຂອງ ການສ້າງຍຸດທະສາດປ່າໄມ້ຮອດປີ 2020

ການສ້າງຍຸດທະສາດປ່າໄມ້ ຮອດປີ 2020 ໄດ້ລິເລີ່ມ ພາຍຫຼັງ ກອງປະຊຸມປຶກສາຫາລືກ່ຽວກັບນະໂຍບາຍດ້ານປ່າໄມ້ ທີ່ ຫຼວງພະບາງ ໃນເດືອນ ກັນຍາ ປີ 2000 ເຊິ່ງແມ່ນຊ່ວງໄລຍະການກະກຽມໃຫ້ແກ່ກອງປະຊຸມໂຕະມົນຄັ້ງທີ 7. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຖືກ ມອບໝາຍ ໃຫ້ເປັນຜູ້ຮັບຜິດຊອບໂດຍກົງ ໃນການຮ່າງຍຸດທະສາດປ່າໄມ້ ຊຶ່ງໄດ້ຮັບການຊີ້ນຳລວມ ໂດຍ ຄະນະປະສານງານລະດັບອະວຸໂສ ທີ່ແຕ່ງຕັ້ງ ໂດຍ ທ່ານຮອງນາຍົກລັດຖະມົນຕີ, ປະທານຄະນະກຳມະການແຜນການ ແລະ ການຮ່ວມມື ໃນເດືອນ ເມສາ ປີ 2001 (ປະຈຸບັນ ໄດ້ປ່ຽນມາເປັນຄະນະກຳມະການແຜນການ ແລະ ການລົງທຶນ). ຈາກນັ້ນ ກໍໄດ້ດຳເນີນການສຶກສາໂດຍລະອຽດ ກ່ຽວກັບສະພາບລວມ ແລະ ບັນຫາຕ່າງໆ ໃນຂະແໜງປ່າໄມ້ ແລະ ໄດ້ຈັດກອງປະຊຸມປຶກສາຫາລືຂຶ້ນຫຼາຍຄັ້ງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ແນໃສ່ສ້າງຄວາມເປັນເອກະພາບໃຫ້ໄດ້ ໃນລະດັບສູງ. ຮ່າງຍຸດທະສາດປ່າໄມ້ສະບັບທຳອິດ ໄດ້ຖືກນຳໄປປຶກສາຫາລື ໃນກອງປະຊຸມເປີດກວ້າງ ໃນເດືອນ ກໍລະກົດ ປີ 2003 ໂດຍການເຂົ້າຮ່ວມ ຂອງບັນດາພາກສ່ວນທີ່ກ່ຽວຂ້ອງທັງໝົດ ທັງຢູ່ພາຍໃນ (ແຕ່ສູນກາງ ຮອດທ້ອງຖິ່ນ) ແລະ ສາກົນ. ຮ່າງສະບັບທີສອງໄດ້ແຈກຢາຍ ໃຫ້ແກ່ບັນດາພາກສ່ວນທີ່ກ່ຽວຂ້ອງທັງໝົດ ທັງພາຍໃນ ແລະ ສາກົນ ເພື່ອປະກອບຄຳເຫັນ ຄັ້ງສຸດທ້າຍ

ໃນເດືອນ ພະຈິກ ປີ 2003. ຮ່າງສະບັບສຸດທ້າຍ ໄດ້ນຳສະເໜີຕໍ່ ກອງປະຊຸມສະພາວິທະຍາສາດ-ເຕັກນິກ ກະສິກຳ ແລະ ປ່າໄມ້ ເພື່ອຮັບຮອງ ໃນເດືອນ ພຶດສະພາ ປີ 2004. ຫຼັງຈາກນັ້ນ ໄດ້ນຳສະເໜີຕໍ່ ຄະນະກຳມະການແຜນການ ແລະ ການລົງທຶນ ໃນທ້າຍເດືອນ ສິງຫາ ປີ 2004 ເພື່ອພິຈາລະນາ ແລະ ໃຫ້ທິດຊີ້ນຳ ກ່ອນທີ່ຈະນຳສະເໜີຕໍ່ລັດຖະບານ ເພື່ອຮັບຮອງ ໃນຕົ້ນປີ 2005.

# 2. ສັງເກດລວມກ່ຽວກັບປ່າໄມ້ ແລະ ວຽກງານປ່າໄມ້

## 2.1. ສະພາບລວມ ກ່ຽວກັບປ່າໄມ້ຂອງລາວ

ສປປ ລາວ ອຸດົມສົມບູນ ໄປດ້ວຍປ່າໄມ້ ທີ່ມີຄຸນຄ່າ ແລະ ເປັນເອກະລັກທາງດ້ານນິເວດ ຊຶ່ງມີຄວາມສຳຄັນ ບໍ່ພຽງແຕ່ສຳລັບດ້ານເສດຖະກິດເທົ່ານັ້ນ ແຕ່ ປ່າໄມ້ຍັງເປັນແຫຼ່ງ ສະໜອງສະບຽງອາຫານ ແລະ ເປັນແຫຼ່ງລາຍຮັບ ໃຫ້ແກ່ປະຊາຊົນໃນເຂດຊົນນະບົດ ໂດຍສະເພາະຜູ້ທຸກຍາກ. ພ້ອມກັນນັ້ນ, ປ່າໄມ້ ຍັງ ເປັນຖິ່ນອາໃສ ສຳລັບ ຊີວະນາໆພັນທີ່ຮັ່ງມີຂອງຊາດ ແລະ ຍັງປ້ອງກັນດິນ, ແຫຼ່ງນ້ຳ ແລະ ຊັບພະຍາກອນນ້ຳ. ປະຊາຊົນປະມານ 80% ອາໃສ ປ່າໄມ້ ເພື່ອ ນຳໃຊ້ໄມ້; ໄມ້ຟືນ, ເສັ້ນໄຍ, ຢາປົວພະຍາດ, ອາຫານ, ແລະ ນອກນັ້ນ ຍັງເພື່ອຄວາມເຊື່ອຖືທາງດ້ານຮີດຄອງປະເພນີ ສຳລັບບາງທ້ອງຖິ່ນອີກດ້ວຍ. ຢູ່ໃນເຂດຊົນນະບົດ, ປ່າໄມ້ ສະໜອງກິດຈະກຳດ້ານເສດຖະກິດຕົ້ນຕໍ ໃຫ້ແກ່ປະຊາຊົນ ໂດຍສະເພາະ ເຄື່ອງປ່າຂອງດົງ ສະໜອງລາຍຮັບ ຫຼາຍກວ່າເຄິ່ງໜຶ່ງ ຂອງ ລາຍຮັບພາຍໃນຄອບຄົວທັງໝົດ ຂອງປະຊາຊົນ.

ໃນປີ 2001 ປ່າໄມ້ ປະກອບສ່ວນ 3,2% ຂອງລວມຍອດຜະລິດຕະພັນພາຍໃນ (GDP)[1] ໂດຍສະເພາະແມ່ນໄມ້. ຖ້າລວມທັງມູນຄ່າຂອງການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ຕົວເລກການປະກອບສ່ວນຂອງປ່າໄມ້ເຂົ້າໃນລວມຍອດຜະລິດຕະພັນພາຍໃນ ອາດຈະສູງກວ່ານັ້ນ. ນອກຈາກນັ້ນ, ຜະລິດຕະພັນໄມ້ ຍັງປະກອບສ່ວນປະມານ 25% ຂອງລາຍຮັບຈາກ ການສົ່ງອອກທັງໝົດ[2]. ໃນດ້ານການນຳໃຊ້ພະລັງງານ, ພະລັງງານຈາກໄມ້ ລວມທັງ ຖ່ານ ແລະ ໄມ້ຟືນ ແມ່ນແຫຼ່ງພະລັງງານຕົ້ນຕໍ ສຳລັບການປຸງແຕ່ງອາຫານ ລວມທັງໃນເຂດນະຄອນຫຼວງວຽງຈັນ ແລະ ໃນເຂດເນີນສູງ, ເຂດພູດອຍ ຫຼື ເຂດຊົນນະບົດ ກໍເຊັ່ນດຽວກັນ ໄມ້ ຍັງສາມາດສະໜອງຄວາມອົບອຸ່ນທີ່ຈຳເປັນອີກດ້ວຍ.

ຈາກຜົນການສຶກສາ ການປ່ຽນແປງຄວາມປົກຫຸ້ມປ່າໄມ້ ໃນປີ 2002 ຊີ້ໃຫ້ເຫັນວ່າ ໃນເນື້ອທີ່ທົ່ວປະເທດທັງໝົດ 23,68 ລ້ານ ເຮັກຕາ, ມີປ່າໄມ້ ທີ່ຂອັນຂ້າງອຸດົມສົມບູນ, ມີລະດັບຄວາມໜາແໜ້ນ ຂອງຊັ້ນເຮືອນຍອດຫຼາຍກວ່າ 20% ຂຶ້ນໄປ ກວມປະມານ 41,5%. ນັ້ນສະແດງວ່າ ປ່າໄມ້ ໄດ້ປ່ຽນແປງ ໃນລະດັບທີ່ເຕືອນໄພແລ້ວ ເມື່ອທຽບກັບ ເນື້ອທີ່ປ່າໄມ້ ທີ່ມີປະມານ 70% ໃນກາງຊຸມປີ 1960. ການປ່ຽນແປງຂອງປ່າໄມ້ ແມ່ນລວມທັງ ການຫຼຸດລົງ ຂອງປະລິມານໄມ້, ການປ່ຽນແປງທາງດ້ານອົງປະກອບຂອງຊະນິດພັນ ແລະ ໂຄງສ້າງຂອງປ່າໄມ້, ການສູນເສຍ ຖິ່ນອາໃສ ແລະ ການຫຼຸດລົງຂອງປະຊາກອນສັດປ່າ ແລະ ພືດພັນ ຢູ່ຫຼາຍເຂດ.

ຈາກທ່າອ່ຽງໃນການຫຼຸດລົງຂອງປ່າໄມ້ ດັ່ງທີ່ກ່າວມາຂ້າງເທິງນັ້ນ ອາດຈະນຳໄປສູ່ຜົນກະທົບໃນທາງລົບ ຕໍ່ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໂດຍລວມ. ຍິ່ງໄປກວ່ານັ້ນ, ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມ

[1] *ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (2001).*

[2] *ແຫຼ່ງຂໍ້ມູນ: ສະຖິຕິເສດຖະກິດ-ເງິນຕາ, ກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ (ກັນຍາ, 2002).*

ລົງຂອງປ່າ ອາດຈະສົ່ງຜົນກະທົບໂດຍກົງ ຕໍ່ປະຊາຊົນຜູ້ທຸກຍາກ ໂດຍສະເພາະ ຕໍ່ແມ່ຍິງ ແລະ ປະຊາຊົນບັນດາເຜົ່າ ທີ່ດຳລົງຊີວິດ ຕິດພັນກັບຊັບພະຍາກອນປ່າໄມ້ເປັນສ່ວນໃຫຍ່.

## 2.2. ສັງເກດລວມ ກ່ຽວກັບການພັດທະນານະໂຍບາຍປ່າໄມ້

ໃນປະຈຸບັນ ແນວທາງນະໂຍບາຍໃນຫຼາຍໆດ້ານ ຂອງລັດຖະບານ ໄດ້ຫັນເປັນນິຕິກຳລະອຽດ ເພື່ອຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນສູງ. ພາກນີ້ ໄດ້ຍົກໃຫ້ເຫັນ ຄວາມພະຍາຍາມ ແລະ ຄວາມເປັນຫ່ວງເປັນໄຍ ຂອງລັດຖະບານ ໃນແຕ່ລະໄລຍະ ໃນການຄຸ້ມຄອງ, ປ້ອງກັນ ແລະ ພັດທະນາປ່າໄມ້ ກໍຄື ຊັບພະຍາກອນປ່າໄມ້ ສຳລັບການພັດທະນາເສດຖະກິດ, ການປັບປຸງຊີວິດການເປັນຢູ່ ແລະ ການປ້ອງກັນສິ່ງແວດລ້ອມ.

### 2.2.1. ແຕ່ປີ 1975 ເຖິງປີ 1989

ໃນທ້າຍຊຸມປີ 1970, ຂະແໜງປ່າໄມ້ ໄດ້ກຳນົດຈຸດປະສົງຕົ້ນຕໍ ຄືດັ່ງນີ້:

- ນຳໃຊ້ຊັບພະຍາກອນປ່າໄມ້ ເພື່ອ ການພັດທະນາ ແລະ ຄວາມຜາສຸກ ຂອງປະຊາຊົນ ແລະ ເພື່ອສ້າງທຶນຮອນໃຫ້ແກ່ປະເທດຊາດ.
- ຮັບປະກັນ ໃຫ້ມີການປູກໄມ້ ພາຍຫຼັງການຂຸດຄົ້ນ.
- ນຳໃຊ້ທຶນຮອນທີ່ສ້າງມາ ເຂົ້າໃນການລົງທຶນ ໃສ່ອຸດສາຫະກຳ ທີ່ອີງໃສ່ຜະລິດຕະຜົນປ່າໄມ້ ແລະ ຜົນຜະລິດກະສິກຳ.

ພາຍໃຕ້ນະໂຍບາຍ ການຄຸ້ມຄອງເສດຖະກິດແຜນການ ແລະ ນຳພາໂດຍລັດ, ໃນທ້າຍຊຸມປີ 1970 ລັດຖະບານ ໄດ້ສ້າງຕັ້ງລັດວິສະຫະກິດປ່າໄມ້ຂຶ້ນ 9 ແຫ່ງ ເພື່ອ ບັນລຸ ຈຸດປະສົງຂອງເສດຖະກິດແຜນການ. ແຕ່ລະລັດວິສະຫະກິດປ່າໄມ້ ລັດໄດ້ມອບ ເນື້ອທີ່ປ່າຜະລິດ ໂດຍສະເລ່ຍ ປະມານ 200,000 ຫາ 300,000 ເຮັກຕາ ເພື່ອຄຸ້ມຄອງ ຊຶ່ງລວມທັງ ການວາງແຜນ, ການຂຸດຄົ້ນ, ການປູກໄມ້, ການປ້ອງກັນ ແລະ ການປຸງແຕ່ງ ຜະລິດຕະຜົນປ່າໄມ້. ໂດຍໄດ້ຮັບການຊ່ວຍເຫຼືອ ຈາກ ຜູ້ໃຫ້ທຶນ ແລະ ການລົງທຶນຂອງລັດຖະບານ, ລັດວິສະຫະກິດປ່າໄມ້ ຫຼາຍແຫ່ງ ມີເຄື່ອງກົນຈັກຂຸດຄົ້ນຂະໜາດໜັກ ທີ່ທັນສະໄໝ ແລະ ໂຮງງານປຸງແຕ່ງໄມ້ຂະໜາດໃຫຍ່. ຢ່າງໃດກໍຕາມ, ການຄຸ້ມຄອງ ແລະ ການດຳເນີນງານ ຂອງວິສາຫະກິດເຫຼົ່ານັ້ນ ເຫັນວ່າ ບໍ່ມີປະສິດທິຜົນພຽງພໍ, ເຖິງວ່າ ການປູກໄມ້ ແມ່ນໜຶ່ງໃນນະໂຍບາຍທີ່ສຳຄັນ ທີ່ກຳນົດໄວ້ໃນໄລຍະນັ້ນກໍຕາມ ແຕ່ການປູກໄມ້ຕົວຈິງ ເຫັນວ່າ ມີຈຳນວນຈຳກັດ.

ນິຕິກຳ ກ່ຽວກັບປ່າໄມ້ ສະບັບທຳອິດ ພາຍຫຼັງປີ 1975 ແມ່ນ ຂໍ້ກຳນົດຂອງ ສະພາລັດຖະມົນຕີ ສະບັບເລກທີ 74/ນຍ ລົງວັນທີ 19 ມັງກອນ 1979 ວ່າດ້ວຍ ການປົກປັກຮັກສາປ່າໄມ້. ນິຕິກຳສະບັບນີ້ ໄດ້ກຳນົດກຳມະສິດຂອງປວງຊົນ ຕໍ່ກັບຊັບພະຍາກອນປ່າໄມ້, ການອະນຸຍາດ ໃນການຫັນປ່ຽນຈຸດປະສົງການນຳໃຊ້ປ່າໄມ້ ແລະ ການຂຸດຄົ້ນ, ການເກືອດຫ້າມ ການຖາງປ່າເຮັດໄຮ່ ໃນເຂດແຫຼ່ງນ້ຳ, ການນຳໃຊ້ປ່າໄມ້ ຕາມປະເພນີ ຂອງປະຊາຊົນ, ການສົ່ງເສີມການປູກໄມ້ ເພື່ອຟື້ນຟູບູລະນະປ່າໄມ້. ແຕ່ແນວໃດກໍຕາມ, ຍ້ອນຂາດເຂີນ ວັດຖຸອຸປະກອນ, ງົບປະມານ ແລະ ບຸກຄະລາກອນ ຈຶ່ງເຮັດໃຫ້ ການຈັດຕັ້ງປະຕິບັດ ມີຂໍ້ຈຳກັດ.

ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ ໃນປີ 1986 ໄດ້ຮັບຮອງເອົາ ກົນໄກເສດຖະກິດໃໝ່ ຊຶ່ງແມ່ນການຫັນປ່ຽນໄປສູ່ ລະບົບການຄຸ້ມຄອງເສດຖະກິດຕະຫຼາດ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 2 (1986-1990) ໄດ້ກຳນົດເອົາ ແຜນງານຫຼຸດຜ່ອນ ແລະ ກ້າວໄປເຖິງບ່ອນຢຸດຕິການຖາງປ່າເຮັດໄຮ່ ເປັນ ແຜນງານບຸລິມະ

ສິດອັນດັບ ທີ 2 ຂອງລັດຖະບານ ຖັດຈາກ ການເພີ່ມທະວີ ການຜະລິດສະບຽງອາຫານ ຊຶ່ງແມ່ນ ບັນຫາຕົ້ນຕໍ ຂອງນະໂຍບາຍລັດຖະບານ ນັບແຕ່ 1975 ເປັນຕົ້ນມາ. ແຜນງານໄດ້ຢືນຢັນວ່າ ໃນແຕ່ລະປີ ມີເນື້ອທີ່ປ່າໄມ້ປະມານ 300,000 ເຮັກຕາ ຖືກທຳລາຍ ຍ້ອນການຖາງປ່າເຮັດໄຮ່ ທີ່ ພາໃຫ້ເກີດບັນຫາທາງສິ່ງແວດລ້ອມ ຢ່າງຮ້າຍແຮງ. ແຜນງານນີ້ ໄດ້ເນັ້ນໜັກວ່າ ບໍ່ສາມາດຢຸດຕິ ການຖາງປ່າເຮັດໄຮ່ໄດ້ ດ້ວຍການອອກຄຳສັ່ງ ແລະ ການບັງຄັບ, ແຕ່ຕ້ອງດຳເນີນການດ້ວຍວິທີການປູກພືດຢ່າງອື່ນ ຫຼື ຫັນປ່ຽນອາຊີບແບບໃໝ່ ເພື່ອທົດແທນ ການຖາງປ່າເຮັດໄຮ່.

### 2.2.2. ແຕ່ກອງປະຊຸມປ່າໄມ້ທົ່ວປະເທດ ໃນປີ 1989 ເຖິງ 1996

ກອງປະຊຸມປ່າໄມ້ທົ່ວປະເທດ ໄດ້ເປີດຂຶ້ນ ໃນເດືອນ ພຶດສະພາ ປີ 1989 ພາຍໃຕ້ ສະພາບການທຳລາຍປ່າໄມ້ ທີ່ນັບວັນເພີ່ມທະວີ ແລະ ໄດ້ກຳນົດ ທິດທາງລວມ ຂອງຂະແໜງປ່າໄມ້, ຊຶ່ງ ໄດ້ກຳນົດ ທິດທາງນະໂຍບາຍຕົ້ນຕໍ 3 ດ້ານ ດັ່ງລຸ່ມນີ້:

- ປົກປັກຮັກສາ, ປັບປຸງບູລະນະ ແລະ ເພີ່ມທະວີເຫງື່ອພະລັງທາງຊີວະວິທະຍາ ຂອງປ່າໄມ້ ໂດຍສະເພາະ ແມ່ນການປັບປຸງ ລະບົບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ທີ່ມີຢູ່ໃນປະຈຸບັນ.
- ນຳໃຊ້ປ່າໄມ້ ແລະ ຄຸນປະໂຫຍດຂອງປ່າໄມ້ ຢ່າງສົມເຫດສົມຜົນ ໂດຍສະເພາະ ເພື່ອປັບປຸງຄຸນປະໂຫຍດທາງດ້ານເສດຖະກິດ ຂອງຊັບພະຍາກອນປ່າໄມ້.
- ຕ້ອງເອົາການຟື້ນຟູ, ປົກປັກຮັກສາ, ຂະຫຍາຍປ່າໄມ້ ໃຫ້ຕິດພັນກັບການແກ້ໄຂ ຄວາມຕ້ອງການດ້ານທັນຍາຫານ, ລະບົບການຜະລິດສິນຄ້າ ແລະ ການສ້າງກິດຈະກຳເສດຖະກິດຖາວອນ ສຳລັບປະຊາຊົນເຂດພູດອຍ.

ກອງປະຊຸມໄດ້ຕົກລົງ ກ່ຽວກັບບາດກ້າວ ທີ່ຕ້ອງດຳເນີນການ ເພື່ອສະກັດກັ້ນ ການທຳລາຍປ່າໄມ້ ແລະ ລົງມະຕິວ່າ ຕ້ອງເພີ່ມຄວາມປົກຫຸ້ມຂອງປ່າໄມ້ ຂຶ້ນໃຫ້ໄດ້ 70% ຄືເກົ່າ ໃນປີ 2020.

ປະຕິບັດຕາມການຕົກລົງ ຂອງກອງປະຊຸມ, ໃນ ເດືອນ ຕຸລາ ປີ 1989, ສະພາລັດຖະມົນຕີ ໄດ້ປະກາດໃຊ້ 2 ດຳລັດ ຄື: ດຳລັດ ເລກທີ 117 ວ່າດ້ວຍ ການຄຸ້ມຄອງ ແລະ ການນຳໃຊ້ປ່າໄມ້ ແລະ ດິນປ່າໄມ້ ແລະ ດຳລັດເລກທີ 118 ວ່າດ້ວຍ ການຄຸ້ມຄອງປົກປັກຮັກສາ ສັດນ້ຳ, ສັດປ່າ ແລະ ການລ່າເນື້ອ, ຫາປາ. ດຳລັດ ເລກທີ 117 ມີ 16 ມາດຕາ ຊຶ່ງໄດ້ເນັ້ນໜັກ ການກຳນົດ ພາລະບົດບາດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ຈະແຈ້ງ ໂດຍສະເພາະ ຕໍ່ກັບວຽກງານປ່າໄມ້, ການມອບດິນ-ມອບປ່າ ແລະ ການເກືອດຫ້າມ ການຂຸດຄົ້ນໄມ້ ຂອງບໍລິສັດ ແລະ ປະຊາຊົນທ້ອງຖິ່ນ. ດຳລັດ ເລກທີ 118 ໄດ້ກຳນົດວ່າ ສັດປ່າ ແມ່ນເປັນກຳມະສິດ ຂອງວົງສາຄະນະຍາດແຫ່ງຊາດ ແລະ ຢູ່ພາຍໃຕ້ການຄຸ້ມຄອງ ຂອງລັດຖະບານ ແລະ ດຳລັດສະບັບນີ້ ຍັງໄດ້ກຳນົດ ພາລະບົດບາດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການຄຸ້ມຄອງ ສັດປ່າ. ຕໍ່ກັບ ການປົກປັກຮັກສາ ສັດປ່າ, ມາດຕາ 3 ໄດ້ກຳນົດ ການເກືອດຫ້າມ ການນຳໃຊ້ວິທີການລ່າສັດ ທີ່ມີລັກສະນະດັບສູນ ເຊັ່ນ: ອາວຸດເສິກ, ລະເບີດ, ທາດເບື່ອ, ການລ່າສັດຊະນິດຫວງຫ້າມ, ການລ່າສັດຊະນິດທີ່ໃກ້ຈະສູນພັນ ແລະ ການລ່າສັດໃນລະດູສືບພັນ. ຕໍ່ມາ ໃນເດືອນມີນາ ປີ 1993, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກ ບົດແນະນຳ ສະບັບເລກທີ 298 ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດຂອງສະພາລັດຖະມົນຕີ ເລກທີ 118/ປສລ. ບົດແນະນຳ ໄດ້ຈັດບັນຊີ ຊະນິດສັດປ່າ ອອກເປັນປະເພດ ຫວງຫ້າມ, ປະເພດຄຸ້ມຄອງ ແລະ ປະເພດທົ່ວໄປ.

ການຈຳກັດການຖາງປ່າເຮັດໄຮ່ ໄດ້ຖືເປັນບັນຫາສຳຄັນ ໃນກອງປະຊຸມ, ການມອບດິນ-ມອບປ່າ ໃຫ້ບ້ານ ແລະ ປະຊາຊົນ ໄດ້ເວົ້າແຈ້ງ ຢູ່ໃນມະຕິກອງປະຊຸມວ່າ ເປັນເຄື່ອງມືຂອງນະໂຍບາຍທີ່ສຳຄັນ ເພື່ອກ້າວໄປສູ່ ການນຳໃຊ້ປ່າໄມ້ ຢ່າງສົມເຫດສົມຜົນ ແລະ ຈັດສັນອາຊີບໃໝ່ ໃຫ້ແກ່ປະຊາຊົນ ທີ່ຖາງປ່າເຮັດໄຮ່. ບາງເນື້ອໃນ ຂອງດຳລັດ ເລກທີ 117, ໃນມາດຕາ 3, ກອງປະຊຸມໄດ້ນຳມາກຳນົດລາຍລະອຽດຕື່ມ ຄືດັ່ງລຸ່ມນີ້:

- ລັດ ມອບປ່າໄມ້ ແລະ ດິນປ່າໄມ້ ໃຫ້ແຕ່ລະຄອບຄົວຊາວກະສິກອນ ແຕ່ 2-5 ເຮັກຕາ ແລະ ໃຫ້ ແຕ່ລະບ້ານ 100-500 ເຮັກຕາ ເພື່ອປົກປັກຮັກສາ, ຟື້ນຟູບູລະນະ ແລະ ປູກຂະຫຍາຍປ່າໄມ້ໃນເຂດທ້ອງຖິ່ນຂອງຕົນ.
- ລັດ ອະນຸຍາດ ໃຫ້ ປະຊາຊົນ ຄຸ້ມຄອງ ແລະ ນຳໃຊ້ ປ່າໄມ້ ທີ່ໄດ້ມອບໃຫ້ ໃນເມື່ອວ່າ ບໍລິມາດໄມ້ຢືນຕົ້ນ ໄດ້ເພີ່ມຂຶ້ນ.
- ລັດ ອະນຸຍາດ ໃຫ້ປະຊາຊົນ ສືບມູນ ຫຼື ໂອນ ປ່າໄມ້ ທີ່ໄດ້ມອບ ໃຫ້ແກ່ບຸກຄົນອື່ນ ຕາມລະບຽບການຂອງລັດ.
- ລັດ ຮັບຮູ້ ກຳມະສິດ ຂອງບຸກຄົນ ຫຼື ລວມໝູ່ ໃນເຂດເນື້ອທີ່ດິນຊຸດໂຊມ ທີ່ເຂົາເຈົ້າໄດ້ ປູກໄມ້, ຟື້ນຟູປ່າ, ປູກພືດ ຫຼື ລ້ຽງສັດ ໂດຍການນຳໃຊ້ ເຫື່ອແຮງ ແລະ ທຶນຮອນ ຂອງເຂົາເຈົ້າເອງ.

ນະໂຍບາຍໃໝ່ນີ້ ໄດ້ທົດສອບຄັ້ງທຳອິດ ຢູ່ ບາງແຂວງພາກເໜືອ, ຈາກນັ້ນ ໄດ້ນຳເອົາມາໃຊ້ ເປັນທາງການ ໃນປີ 1994 ໂດຍມີການປັບປຸງບາງດ້ານ.

ພາຍຫຼັງ ລັດວິສະຫະກິດປ່າໄມ້ຂັ້ນສູນກາງ ໄດ້ຖືກສ້າງຕັ້ງຂຶ້ນ, ເກືອບທຸກໆແຂວງ ກໍໄດ້ສ້າງຕັ້ງ ລັດວິສະຫະກິດປ່າໄມ້ຂອງແຂວງຂຶ້ນ ເພື່ອການ ຂຸດຄົ້ນ ແລະ ປຸງແຕ່ງໄມ້ ຫຼື ອອກ ໃບອະນຸຍາດຂຸດຄົ້ນໄມ້ ໃຫ້ບໍລິສັດເອກະຊົນ ເພື່ອສ້າງລາຍຮັບ ແລະ ເປັນທຶນສຳລັບໂຄງການພັດທະນາຕ່າງໆ. ໃນເວລາດຽວກັນນັ້ນ, ການດຳເນີນງານ ຂອງບາງ ລັດວິສະຫະກິດປ່າໄມ້ ໄດ້ສ້າງຄວາມເສຍຫາຍ ຕໍ່ລັດຖະບານ ຍ້ອນວ່າ ຂາດຄວາມສາມາດໃນການຄຸ້ມຄອງ ບໍລິຫານ ທຸລະກິດ, ເຊິ່ງນຳໄປສູ່ ບໍ່ສາມາດເກັບລາຍຮັບໄດ້ຄືນ ເພື່ອຖົມຊຸມຈຳນວນທຶນທີ່ໄດ້ຮັບ. ພາຍຫຼັງ ກອງປະຊຸມປ່າໄມ້ທົ່ວປະເທດ, ລັດວິສະຫະກິດປ່າໄມ້ຂອງສູນກາງ ແລະ ຂອງແຂວງ ສ່ວນຫຼວງຫຼາຍ ຖືກຍຸບ, ຫັນເປັນຂອງເອກະຊົນ ຫຼື ໃຫ້ບໍລິສັດຕ່າງປະເທດເຊົ່າ ໃນໄລຍະຍາວ ແລະ ໃນຂະນະດຽວກັນນັ້ນ ລັດຖະບານ ໄດ້ສົ່ງເສີມ ສ້າງຕັ້ງບໍລິສັດລັດ ໂດຍສະເພາະ ໃນຂົງເຂດຍຸດທະສາດ ເຊັ່ນ: ພະລັງງານ ແລະ ໄຟຟ້າ ເພື່ອຈັດຕັ້ງປະຕິບັດນະໂຍບາຍ ການຄຸ້ມຄອງ ເສດຖະກິດຕາມກົນໄກຕະຫຼາດ.

ມະຕິຂອງກອງປະຊຸມປ່າໄມ້ທົ່ວປະເທດ ໄດ້ຮຽກຮ້ອງ ໃຫ້ຢຸດຕິ ການຂຸດຄົ້ນໄມ້ແບບຊະຊາຍ ແລະ ດຳລັດ ເລກທີ 117 ໄດ້ກຳນົດວ່າ ຕ້ອງດຳເນີນການຂຸດຄົ້ນ ສະເພາະຢູ່ໃນປ່າຜະລິດ ທີ່ໄດ້ຜ່ານການສຳຫຼວດ ແລະ ມີບົດວິພາກເສດຖະກິດ-ເຕັກນິກ ທີ່ໄດ້ຮັບຮອງ ໂດຍ ກະຊວງກະສິກຳ ແລະ ປ່າໄມ້ ແລະ ໄດ້ຈ່າຍຄ່າພັນທະໄມ້ ແລະ ພັນທະປູກໄມ້ທົດແທນຄືນ ໃຫ້ລັດຖະບານ ຢ່າງຄົບຖ້ວນແລ້ວເທົ່ານັ້ນ. ໃນດ້ານການຮ່ວມມືກັບສາກົນ, ໄດ້ເລັ່ງໃສ່ ການສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດ ໃນການວາງແຜນ ແລະ ການຄຸ້ມຄອງ.

ຫຼັງຈາກ ກອງປະຊຸມໃຫຍ່ ຄັ້ງ ທີ V ຂອງພັກ ໃນປີ 1991, ນາຍົກລັດຖະມົນຕີ ໄດ້ອອກດຳລັດ ເລກທີ 67/ນຍ ໃນເດືອນ 8/1991 ວ່າດ້ວຍ ການຢຸດຕິ ການຂຸດຄົ້ນໄມ້ ແລະ ພາຍຫຼັງ ການຍຸບ ລັດວິສະຫະກິດປ່າໄມ້, ລັດຖະບານ ໄດ້ນຳໃຊ້ ລະບົບແຜນການຂຸດຄົ້ນໄມ້. ລັດຖະບານ ເປັນຜູ້ກຳນົດ ແຜນການຂຸດຄົ້ນໄມ້ ແລະ ແບ່ງປັນແຜນການຂຸດຄົ້ນໄມ້ໃຫ້ແຂວງ ແລະ ໃຫ້ແຂວງ ເຮັດສັນຍາຂາຍໄມ້ ກັບ ຜູ້ຊື້ໄມ້. ໃນຫຼາຍໆ ກໍລະນີ ແຂວງ ໄດ້ຂຸດຄົ້ນ ຫຼາຍກວ່າແຜນການຂຸດຄົ້ນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ເພື່ອສ້າງທຶນຮອນເພີ່ມເຕີມ ສຳລັບ ການກໍ່ສ້າງໂຄງການພັດທະນາຕ່າງໆ ແລະ ຄຽງຄູ່ກັນນັ້ນ ກໍມີຂໍ້ຂາດຕົກບົກພ່ອງຫຼາຍຢ່າງ ກ່ຽວກັບ ສັນຍາຂາຍໄມ້, ການ

ຂຸດຄົ້ນຕົວຈິງ, ການຈັດຊັ້ນຄຸນນະພາບ ແລະ ການຂາຍໄມ້. ດຳລັດ ເລກທີ 67/ນຍ ໄດ້ປະກາດ ໃຫ້ຢຸດຕິການຂຸດຄົ້ນໄມ້ ໃນຂອບເຂດທົ່ວປະເທດ ແລະ ໄດ້ສັ່ງໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ອອກມາດຕະການ ເພື່ອເຮັດໃຫ້ການຄຸ້ມຄອງປ່າໄມ້, ການຂຸດຄົ້ນໄມ້, ການປຸງແຕ່ງ ແລະ ການຄ້າຂາຍໄມ້ ໄດ້ດຳເນີນໄປ ຢ່າງຖືກຕ້ອງຕາມລະບຽບກົດໝາຍ. ນອກຈາກນັ້ນ ດຳລັດ ຍັງໄດ້ກຳນົດ ໃຫ້ ສຳຫຼວດຈັດສັນປ່າໄມ້ ແລະ ແບ່ງເຂດປ່າໄມ້ ອອກເປັນ: ເຂດປ່າປ້ອງກັນ, ເຂດປ່າສະຫງວນ, ເຂດປ່າຜະລິດ ແລະ ເຂດປ່າເຫຼົ່າ ເພື່ອຟື້ນຟູໃຫ້ກາຍເປັນປ່າດົງຄືນ. ການຫ້າມການຂຸດຄົ້ນ ໄດ້ຈັດຕັ້ງປະຕິບັດ ເປັນຢ່າງດີ ຊຶ່ງໃນປີ 1992 ການຜະລິດໄມ້ ໄດ້ພຽງເຄິ່ງໜຶ່ງ ຂອງປີຜ່ານມາ ແລະ ມີການກ່າວວ່າ ໄມ້ທ່ອນສ່ວນຫຼາຍ ແມ່ນ ໄມ້ເກົ່າ ຫຼື ໄມ້ທີ່ໄດ້ຕັດ ໃນປີຜ່ານມາ. ແຕ່ແນວໃດກໍຕາມ ການຂຸດຄົ້ນໄມ້ ໃນ ປີ 1993 ເຫັນວ່າມີບໍລິມາດໄມ້ ສູງກວ່າ ລະດັບ ທີ່ໄດ້ຂຸດຄົ້ນ ໃນປີ 1991.

ໃນປີ 1993, ນາຍົກລັດຖະມົນຕີ ໄດ້ອອກ ດຳລັດ 2 ສະບັບທີ່ສຳຄັນຄື: ດຳລັດ ເລກທີ 164/ນຍ ວ່າດ້ວຍການສ້າງຕັ້ງປ່າສະຫງວນແຫ່ງຊາດ ແລະ ດຳລັດ ເລກທີ 169/ນຍ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້. ດຳລັດ ເລກທີ 164 ແມ່ນ ນິຕິກຳທີ່ສຳຄັນ ສຳລັບ ການອະນຸລັກຊີວະນາໆພັນ ຢູ່ ສປປ ລາວ. ດຳລັດສະບັບນີ້ ໄດ້ປະກາດສ້າງຕັ້ງ ປ່າສະຫງວນແຫ່ງຊາດ 18 ແຫ່ງ ທີ່ມີເນື້ອທີ່ທັງໝົດ 2,8 ລ້ານ ເຮັກຕາ ຫຼື ເທົ່າກັບປະມານ 12% ຂອງ ເນື້ອທີ່ທັງໝົດທົ່ວປະເທດ. ຕໍ່ມາ ໄດ້ປະກາດສ້າງຕັ້ງເພີ່ມ 2 ແຫ່ງ, ຊຶ່ງປ່າສະຫງວນເຫຼົ່ານີ້ ໄດ້ເປັນພື້ນຖານທີ່ສຳຄັນ ສຳລັບ ການອະນຸລັກຊີວະນາໆພັນ ຢູ່ ສປປ ລາວ.

ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 169 ເປັນການຕອບສະໜອງ ດຳລັດ ວ່າດ້ວຍການຢຸດຕິການຂຸດຄົ້ນໄມ້ ແລະ ເປັນນິຕິກຳປ່າໄມ້ ອັນຄົບຖ້ວນ ອັນໃໝ່ ເພື່ອໃຊ້ແທນ ດຳລັດຂອງສະພາລັດຖະມົນຕີ ເລກທີ 117 ທີ່ປະກາດໃຊ້ ໃນປີ 1989 ແລະ ດຳລັດສະບັບນີ້ ຍັງເປັນພື້ນຖານໃຫ້ແກ່ກົດໝາຍປ່າໄມ້ ໃນປີ 1996. ດຳລັດສະບັບນີ້ ປະກອບມີ 54 ມາດຕາ ຊຶ່ງໄດ້ບັນຍັດ ນິຍາມ ກ່ຽວກັບປ່າໄມ້, ກຳມະສິດ, ປະເພດປ່າໄມ້, ສັນຍາກ່ຽວກັບການຄຸ້ມຄອງປ່າໄມ້, ການເກືອດຫ້າມ ກິດຈະກຳການພັດທະນາ ແລະ ກິດຈະກຳປ່າໄມ້ ຢູ່ໃນປ່າປ້ອງກັນ ແລະ ປ່າສະຫງວນ. ປ່າໄມ້ 5 ປະເພດ (ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ, ປ່າຟື້ນຟູ ແລະ ປ່າຊຸດໂຊມ) ທີ່ໄດ້ກຳນົດ ຢູ່ໃນກົດໝາຍປ່າໄມ້ ແມ່ນໄດ້ກຳນົດຢູ່ໃນດຳລັດສະບັບນີ້ ກ່ອນແລ້ວ.

ເຖິງວ່າ ດຳລັດເລກທີ 169/ນຍ ໄດ້ຖືກປ່ຽນແທນ ໂດຍກົດໝາຍປ່າໄມ້ ປີ 1996 ກໍຕາມ, ແຕ່ ມັນຍັງມີບົດບາດສຳຄັນ ໃນກອບຂອງການພັດທະນາ ວຽກງານມອບດິນ-ມອບປ່າ. ໝວດ ທີ IV ກ່ຽວກັບສັນຍາຄຸ້ມຄອງປ່າໄມ້, ໄດ້ແບ່ງ ສັນຍາຄຸ້ມຄອງປ່າໄມ້ ອອກເປັນ 3 ປະເພດ ຄື: ສັນຍາຄຸ້ມຄອງປ່າໄມ້ ສຳລັບບ້ານ, ສັນຍາຄຸ້ມຄອງປ່າໄມ້ ຂອງຄອບຄົວ ແລະ ສັນຍາທຸລະກິດການປູກໄມ້. ສັນຍາຄຸ້ມຄອງປ່າໄມ້ ສຳລັບບ້ານ ແມ່ນ ສັນຍາ ລະຫວ່າງ ເມືອງ ແລະ ບ້ານ ກ່ຽວກັບການນຳໃຊ້ ແລະ ຄຸ້ມຄອງປ່າໄມ້ ແລະ ສັນຍາຄຸ້ມຄອງປ່າໄມ້ ຂອງຄອບຄົວ ແມ່ນສັນຍາ ລະຫວ່າງ ເມືອງ ແລະ ຄອບຄົວ ກ່ຽວກັບ ການນຳໃຊ້ ເນື້ອທີ່ປ່າຊຸດໂຊມ ສຳລັບການປູກຝັງ, ການປູກຕົ້ນໄມ້ ແລະ ການລ້ຽງສັດ. ລັດມີນະໂຍບາຍ ມອບສິດນຳໃຊ້ທີ່ດິນ ໃນໄລຍະຍາວ ໃຫ້ແກ່ຄູ່ສັນຍາ ພາຍຫຼັງ 3 ປີ ຖ້າເຫັນວ່າ ສາມາດຈັດຕັ້ງປະຕິບັດສັນຍາ ໄດ້ຢ່າງມີປະສິດທິຜົນ.

ກ່ຽວກັບການຂຸດຄົ້ນໄມ້, ຄຳສັ່ງແນະນຳ ຂອງນາຍົກລັດຖະມົນຕີ ເລກທີ 16/ນຍ, ລົງວັນທີ 7 ຕຸລາ 1994 ວ່າດ້ວຍ ການດັດແປງລະບົບຄຸ້ມຄອງການຂຸດຄົ້ນໄມ້ທົ່ວປະເທດ ແລະ ໄດ້ນຳເອົາລະບົບການຂຸດຄົ້ນໄມ້ ແບບການບໍລິການສອງສິ້ນມາໃຊ້. ຄຳສັ່ງນີ້ ອະນຸຍາດ ແຜນການຂຸດຄົ້ນ ສຳລັບ ການສົ່ງອອກ, ທັງ ໄມ້ທ່ອນ ແລະ ຜະລິດຕະພັນໄມ້ປຸງແຕ່ງ ໃຫ້ 3 ບໍລິສັດຂອງລັດ ແລະ ບັນດາແຂວງ ສຳລັບ ການນຳໃຊ້ ຢູ່ພາຍໃນ. ລະບົບແຜນການຂຸດ

ຄົ້ນນີ້ ໄດ້ສືບຕໍ່ຖືກນຳໃຊ້ ເຖິງ ປີ 2000 ເມື່ອ ນາຍົກລັດຖະມົນຕີ ອອກຄຳສັ່ງ ເລກທີ 11/ນຍ ໃຫ້ ກັບຄືນນຳໃຊ້ ລະບົບເກົ່າ ທີ່ມອບແຜນການຂຸດຄົ້ນໄມ້ທັງໝົດ ໃຫ້ແຂວງ.

ໃນເດືອນ ຕຸລາ ປີ 1994 ລັດຖະບານ ໄດ້ອອກ ດຳລັດນາຍົກລັດຖະມົນຕີ ເລກທີ 186/ນຍ ວ່າດ້ວຍ ການແບ່ງດິນ-ແບ່ງປ່າ ເພື່ອການປູກໄມ້ ແລະ ປົກປັກຮັກສາປ່າໄມ້. ດຳລັດສະບັບນີ້ ເປັນພື້ນຖານດ້ານນິຕິກຳ ໃຫ້ແກ່ການສົ່ງເສີມການປູກໄມ້ ພ້ອມທັງ ການຍົກເວັ້ນພາສີທີ່ດິນ ສຳລັບເນື້ອທີ່ປູກໄມ້ ທີ່ມີໄມ້ ຫຼາຍກວ່າ 1.100 ຕົ້ນ ຕໍ່ເຮັກຕາ, ກຳມະສິດໄມ້ປູກ (ສິດນຳໃຊ້, ສິດຂຸດຄົ້ນ, ສິດຂາຍ, ສິດໂອນ ແລະ ສິດສືບທອດ), ພ້ອມໆກັບການຍົກເວັ້ນການຈ່າຍຄ່າພັນທະ. ເປົ້າໝາຍຕົ້ນຕໍຂອງດຳລັດສະບັບນີ້ ແມ່ນເພື່ອແນໃສ່ ຮັບປະກັນ ການລົງທຶນປູກໄມ້ ຂອງບໍລິສັດ ທັງພາຍໃນ ແລະ ຕ່າງປະເທດ, ດຳລັດສະບັບນີ້ ກໍຖືກປ່ຽນແທນ ໂດຍ ກົດໝາຍປ່າໄມ້.

ໃນໄລຍະປີ 1996 ນີ້ ຍັງມີ ເອກະສານນິຕິກຳທີ່ສຳຄັນ ອີກ 2 ສະບັບ ຄື: ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 03 ວ່າດ້ວຍ ການສືບຕໍ່ຜັນຂະຫຍາຍ ວຽກງານຈັດສັນທີ່ດິນ ແລະ ມອບດິນ-ມອບປ່າ ແລະ ບົດແນະນຳຂອງ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 822 ກ່ຽວກັບ ການມອບດິນ-ມອບປ່າ ເພື່ອຄຸ້ມຄອງ ແລະ ນຳໃຊ້. ເອກະສານເຫຼົ່ານີ້ ເປັນເຄື່ອງມືມະຫາພາກ ດ້ານນິຕິກຳ ແລະ ເປັນທິດຊີ້ນຳ ສຳລັບການຈັດຕັ້ງປະຕິບັດ ນະໂຍບາຍມອບດິນ-ມອບປ່າ.

ແຜນການມອບດິນ-ມອບປ່າ ມີ 2 ອົງປະກອບຕົ້ນຕໍ; ອົງປະກອບທີ່ໜຶ່ງ ແມ່ນ ການມອບດິນກະສິກຳ ແລະ ດິນປ່າໄມ້ທີ່ເຊື່ອມໂຊມ ໃຫ້ ແກ່ຄອບຄົວ ສຳລັບ ປູກຝັງ, ປູກຕົ້ນໄມ້ ຫຼື ລ້ຽງສັດ ໂດຍລັດໄດ້ມອບ ໃບຢັ້ງຢືນ ການນຳໃຊ້ທີ່ດິນຊົ່ວຄາວ ຊຶ່ງມີກຳນົດເວລາ 3 ປີ. ຖ້າວ່າ ຄອບຄົວ ຫຼື ປະຊາຊົນ ຜູ້ທີ່ຖືກມອບ ຫາກຈັດຕັ້ງປະຕິບັດ ຕາມຫຼັກການທີ່ໄດ້ກຳນົດໄວ້ ໃນໃບຢັ້ງຢືນການນຳໃຊ້ທີ່ດິນຊົ່ວຄາວ ໄດ້ດີ, ເຂົາເຈົ້າ ຈະໄດ້ຮັບໃບຕາດິນ ເພື່ອຊົມໃຊ້ ໃນໄລຍະຍາວ. ອົງປະກອບທີ່ສອງ ແມ່ນມອບປ່າໃຫ້ບ້ານຄຸ້ມຄອງ ແລະ ນຳໃຊ້, ປ່າໄມ້ບ້ານ ໄດ້ຖືກ ຈັດແບ່ງອອກ ເປັນ ປ່າຊົມໃຊ້, ປ່າປ້ອງກັນ, ປ່າຟື້ນຟູ ແລະ ປ່າອື່ນໆ ແລະ ຂໍ້ຕົກລົງກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ແຕ່ລະປະເພດປ່າ ໄດ້ມີການເຊັນຮັບຮູ້ກັບບ້ານ. ຕົວແບບກ່ຽວກັບການມອບດິນ-ມອບປ່າ ປະຈຸບັນ ໄດ້ນຳໃຊ້ຢ່າງເປັນທາງການ ພາຍຫຼັງ ການທົດສອບມາເປັນເວລາ 3-4 ປີ, ຕາມດຳລັດ ເລກທີ 186/ນຍ ໃນ ປີ 1994 ແລະ ໄດ້ມີ ການຈັດຕັ້ງປະຕິບັດຕົວຈິງ ຢ່າງເປັນຂະບວນກວ້າງຂວາງ ພາຍຫຼັງການອອກ ບົດແນະນຳ ເລກທີ 822/ກປ ໃນປີ 1996. ຈຸດປະສົງຕົ້ນຕໍຂອງແຜນການມອບດິນ-ມອບປ່າ ແນໃສ່: *(1) ສົ່ງເສີມການປູກພືດ ເພື່ອທົດແທນ ການຖາງປ່າເຮັດໄຮ່ ໂດຍຜ່ານ ການມອບດິນເພື່ອທຳການຜະລິດ ແລະ ອອກໃບຕາດິນ; (2) ປົກປັກຮັກສາ ປ່າໄມ້ ໂດຍຜ່ານ ການຈັດແບ່ງປະເພດປ່າ ແລະ ການຢຸດຕິການຖາງປ່າເຮັດໄຮ່; ແລະ (3) ນຳໃຊ້ທີ່ດິນ ທີ່ໄດ້ມອບ ແບບຍືນນານ.*

ແຕ່ປີ 1996 ຮອດ 2004 ໄດ້ດຳເນີນ ການມອບດິນ-ມອບປ່າ ໃຫ້ບ້ານ ໄດ້ທັງໝົດ ຈຳນວນ 6.830 ບ້ານ (ຫຼາຍກວ່າ 50% ຂອງ ຈຳນວນບ້ານທັງໝົດ ໃນທົ່ວປະເທດ) ແລະ ໄດ້ມອບໃຫ້ປະຊາຊົນ ຈຳນວນ 420.855 ຄອບຄົວ (ຫຼາຍກວ່າ 60% ຂອງ ຄອບຄົວກະສິກຳ ທັງໝົດ) ໃນເນື້ອທີ່ທັງໝົດທີ່ໄດ້ມອບ ປະມານ 9.135.440 ເຮັກຕາ. ແຜນງານການມອບດິນ-ມອບປ່າ ແມ່ນ ແຜນງານໜຶ່ງ ໃນຈຳນວນແຜນງານ ທີ່ກ່ຽວຂ້ອງກັບປ່າໄມ້ ຊຶ່ງໄດ້ກຳນົດນະໂຍບາຍ, ຈຸດປະສົງ ແລະ ມີຂໍ້ແນະນຳຢ່າງຈະແຈ້ງ ເພື່ອເປັນພື້ນຖານໃນການນຳໄປຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

### 2.2.3. ພາຍຫຼັງທີ່ມີກົດໝາຍປ່າໄມ້ ໃນປີ 1996 ເປັນຕົ້ນມາ

ພາຍຫຼັງປີ 1996, ກົດໝາຍຫຼາຍສະບັບ ທີ່ກ່ຽວຂ້ອງກັບປ່າໄມ້ ໄດ້ຖືກຮັບຮອງເອົາ ແລະ ປະກາດໃຊ້ ໂດຍສະພາແຫ່ງຊາດ. ກົດໝາຍເຫຼົ່ານີ້ ປະກອບດ້ວຍ ກົດໝາຍປ່າໄມ້ (1996), ກົດໝາຍທີ່ດິນ (1997, ແລະ ສະບັບປັບປຸງ ໃນປີ 2004), ກົດໝາຍກະສິກຳ (1998), ກົດໝາຍປົກປັກຮັກສາສິ່ງແວດລ້ອມ (1999), ກົດໝາຍອຸດສາຫະກຳປຸງແຕ່ງ (1999). ກົດໝາຍປ່າໄມ້ ແມ່ນເອກະສານນິຕິກຳ ທີ່ລະອຽດຄົບຖ້ວນ ແລະ ໃຫ້ທິດທາງຈະແຈ້ງສົມຄວນ ກ່ຽວກັບ ວຽກງານການຄຸ້ມຄອງປ່າໄມ້ ໃນຫຼາຍໆດ້ານ. ເຖິງວ່າ ລັດຖະດຳລັດ ເພື່ອຈັດຕັ້ງປະຕິບັດ ກົດໝາຍປ່າໄມ້ ຫາກໍປະກາດອອກໃນ ທ້າຍປີ 1999 ກໍຕາມ, ແຕ່ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກ ລະບຽບການຫຼາຍສະບັບ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ກົດໝາຍປ່າໄມ້ ເຂົ້າໃນວຽກງານຕົວຈິງ.

ແຜນຍຸດທະສາດການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ສຳລັບ ປີ 2020, 2010 ແລະ 2005 ທີ່ໄດ້ກຳນົດຄາດໝາຍການພັດທະນາ ສຳລັບ ປີ 2020, 2010 ແລະ 2005 ໄດ້ຖືກຮັບຮອງເອົາ ໂດຍສະພາແຫ່ງຊາດ ໃນປີ 2001. ອີງຕາມ ຄາດໝາຍເຫຼົ່ານີ້, ບັນຫາທຳອິດ ແມ່ນຕ້ອງຢຸດຕິ ການຖາງປ່າເຮັດໄຮ່ ໃຫ້ໄດ້ໂດຍພື້ນຖານ ໃນປີ 2005 ແລະ ຢຸດຕິຢ່າງສິ້ນເຊີງ ໃນປີ 2010. ບັນຫາທີສອງ ແມ່ນຕ້ອງສົ່ງເສີມ ການປູກໄມ້ເປັນສິນຄ້າ ຢ່າງແຂງແຮງ ຊຶ່ງຄາດໝາຍ ປູກໄມ້ ໃນໄລຍະ 5 ປີ ເຖິງປີ 2005 ໃຫ້ບັນລຸ 134,000 ເຮັກຕາ. ບັນຫາທີສາມ ຕ້ອງເລັ່ງລັດຈັດແບ່ງ ແລະ ກຳນົດເຂດແດນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ.

ນະໂຍບາຍສົ່ງເສີມການປູກໄມ້ ແມ່ນ ນະໂຍບາຍທີ່ເປັນບຸລິມະສິດ ສຳລັບ ສປປ ລາວ ໃນໄລຍະຜ່ານມາ. ລະບຽບການຂອງ ກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການຄຸ້ມຄອງ ແລະ ການສົ່ງເສີມ ການປູກໄມ້ແບບຍືນນານ ເປັນກອບນິຕິກຳ ທີ່ລະອຽດ ກ່ຽວກັບການປູກໄມ້ ແລະ ການຄຸ້ມຄອງໄມ້ປູກ. ເນື້ອທີ່ປ່າປູກ ເພີ່ມຂຶ້ນ ເຖິງ 10,000 ເຮັກຕາ ໃນປີ 1996, ເນື້ອທີ່ການປູກໄມ້ ໄດ້ຫຼຸດລົງ ໃນໄລຍະປີ 1998 ແລະ 1999 ຍ້ອນການລົງທຶນຫຼຸດລົງ ຊຶ່ງເນື່ອງມາຈາກ ວິກິດການທາງດ້ານເສດຖະກິດ ຢູ່ໃນເຂດອາຊີ, ແຕ່ ໃນປີ 2001 ເນື້ອທີ່ປ່າປູກ ເພີ່ມຂຶ້ນສູງສຸດ ເຖິງ 20,000 ເຮັກຕາ. ການເພີ່ມຂຶ້ນນັ້ນ ສ່ວນໜຶ່ງ ແມ່ນການປູກໄມ້ວິກ ເພື່ອການຄ້າ ທີ່ປູກ ໂດຍ ບໍລິສັດຫຸ້ນສ່ວນ ແລະ ບຸກຄົນ ຊຶ່ງບາງກໍລະນີ ກໍໄດ້ຮັບການຊຸກຍູ້ ຈາກ ໂຄງການປູກໄມ້ອຸດສາຫະກຳ ລາວ-ທະນາຄານພັດທະນາອາຊີ. ເພື່ອສົ່ງເສີມການປູກໄມ້ ຂອງຊາວກະສິກອນ, ໃນປີ 2000 ລັດຖະບານ ເລີ່ມຕົ້ນເກັບຄ່າພັນທະປູກໄມ້ ຈາກການຂຸດຄົ້ນໄມ້ ແລະ ລາຍຮັບຈາກ ຄ່າພັນທະປູກໄມ້ນັ້ນ ໄດ້ນຳໃຊ້ ເຂົ້າໃນກິດຈະກຳການສົ່ງເສີມ, ການສ້າງສວນກ້າ ແລະ ການຜະລິດເບ້ຍໄມ້ ເພື່ອແຈກຢາຍ ໃຫ້ຊາວກະສິກອນ.

ລະບຽບການ ກ່ຽວກັບການຄຸ້ມຄອງປ່າໄມ້ບ້ານ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ທີ່ໄດ້ປະກາດໃຊ້ ໃນເດືອນ ມິຖຸນາ ປີ 2001 ໄດ້ສັງລວມ ຫຼັກການຕ່າງໆ ກ່ຽວກັບປ່າໄມ້ບ້ານ ທີ່ມີຢູ່ແລ້ວ ເຊັ່ນ: ການຈັດແບ່ງປ່າໄມ້ບ້ານ, ການຕັດໄມ້ ສຳລັບການປຸກສ້າງ ແລະ ສ້ອມແປງເຮືອນຊານຂອງຊາວບ້ານ ແລະ ການຊົມໃຊ້ສຳລັບວຽກສະຫວັດດີການຂອງບ້ານ. ແຕ່ແນວໃດກໍຕາມ, ລະບຽບການນີ້ ຍັງອະນຸຍາດໃຫ້ເກັບກູ້ເຄື່ອງປ່າຂອງດົງ ເພື່ອ ຂາຍໄດ້ ໂດຍພາຍໃຕ້ເງື່ອນໄຂ ທີ່ຕ້ອງມີແຜນການຄຸ້ມຄອງຢ່າງລະອຽດ ແລະ ຖືກຮັບຮອງເອົາ ໂດຍອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ. ນອກຈາກນັ້ນ, ຍັງໄດ້ຮັບຮູ້ວ່າ ເຄື່ອງປ່າຂອງດົງ ແມ່ນ ແຫຼ່ງລາຍຮັບທີ່ສຳຄັນ ສຳລັບປະຊາຊົນເຂດຊົນນະບົດ ຊຶ່ງແຕ່ກ່ອນ ຍັງບໍ່ທັນໄດ້ຮັບຮອງທາງດ້ານນິຕິກຳ.

ໃນເດືອນ ພຶດສະພາ ປີ 2002, ນາຍົກລັດຖະມົນຕີ ໄດ້ອອກດຳລັດ ເລກທີ 59/ນຍ ວ່າດ້ວຍ ການຄຸ້ມຄອງປ່າຜະລິດແບບຍືນນານ. ນອກຈາກການບັນຍັດ ກ່ຽວກັບການກຳນົດເຂດແດນປ່າຜະລິດແຫ່ງຊາດ ແລະ ການວາງແຜນຄຸ້ມຄອງປ່າຜະລິດ, ດຳລັດສະບັບນີ້ ຍັງຮັບຮູ້ ການມີສ່ວນຮ່ວມຂອງປະຊາຊົນ ໃນທຸກໆກິດຈະກຳຂອງການ

ຄຸ້ມຄອງປ່າຜະລິດ. ເຖິງວ່າ ການຈັດຕັ້ງປະຕິບັດດຳລັດສະບັບນີ້ ຍັງຢູ່ໃນໄລຍະຕົ້ນ ກໍຕາມ ຄາດວ່າ ປ່າຜະລິດໃນທົ່ວປະເທດ ຈະໄດ້ສ້າງຕັ້ງຂຶ້ນ ບົນພື້ນຖານນິຕິກຳ ທີ່ຮັດກຸມ ແລະ ມີການຄຸ້ມຄອງແບບຍືນນານ. ຜົນປະໂຫຍດ ຈາກການຄຸ້ມຄອງປ່າຜະລິດ ຈະປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງບ້ານ ໂດຍສະເພາະແມ່ນບ້ານທີ່ມີສ່ວນຮ່ວມ ໃນການຄຸ້ມຄອງປ່າຜະລິດ.

ຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 18/ນຍ.2002 ວ່າດ້ວຍ ນະໂຍບາຍການຄຸ້ມຄອງປ່າໄມ້ ປະຈຳ ສົກປີ 2002-2003 ໄດ້ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ສຳຫຼວດຄວາມປົກຫຸ້ມຂອງປ່າໄມ້ ໃນທົ່ວປະເທດຄືນໃໝ່, ຈັດແບ່ງປະເພດປ່າໄມ້ ຕາມ ເງື່ອນໄຂປະຈຸບັນ, ກຳນົດເຂດ ສຳລັບຫ້າມການຂຸດຄົ້ນໄມ້ ໃນປ່າທຳມະຊາດ ແລະ ສ້າງຍຸດທະສາດ ສຳລັບການອະນຸລັກ ແລະ ການຟື້ນຟູປ່າໄມ້. ຍິ່ງໄປກວ່ານັ້ນ ຍັງຫ້າມການສົ່ງໄມ້ທ່ອນ ແລະ ໄມ້ເລື່ອຍທີ່ມາຈາກປ່າທຳມະຊາດ ອອກຕ່າງປະເທດ ແລະ ຫັນໄປສູ່ການສົ່ງເສີມການປຸງແຕ່ງໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ຢູ່ພາຍໃນປະເທດ. ຄຳສັ່ງສະບັບນີ້ ຍັງກ່າວເຖິງ ການດັດສົມ ໂຮງງານປຸງແຕ່ງໄມ້ ໂດຍຮຽກຮ້ອງ ໃຫ້ດຳເນີນການຜະລິດ ໃຫ້ໄດ້ຕາມມາດຖານ, ມີວິທະຍາການທີ່ທັນສະໄໝ ແລະ ປະສິດທິພາບສູງ, ຮຽກຮ້ອງໃຫ້ມີການປູກໄມ້ຕາມ ຂະໜາດ (ແຮງມ້າ) ຂອງໂຮງງານ ແລະ ດຳເນີນການຄຸ້ມຄອງ ແລະ ກວດກາ ການນຳໃຊ້ໄມ້ ເປັນແຫຼ່ງພະລັງງານ.

## 2.3. ການຮ່ວມມືກັບສາກົນ

ການຮ່ວມມືກັບສາກົນ ມີບົດບາດສຳຄັນຫຼາຍດ້ານ ຕໍ່ການພັດທະນາປ່າໄມ້ ຢູ່ໃນ ສປປ ລາວ ລວມທັງ ການພັດທະນາຊັບພະຍາກອນມະນຸດ, ການສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ, ການຊຸກຍູ້ໃນການພັດທະນາກົດໝາຍ, ລະບຽບດ້ານປ່າໄມ້, ການພັດທະນາລະບົບການຄຸ້ມຄອງປ່າໄມ້ ແລະ ການລົງທຶນພັດທະນາການປູກໄມ້ .

ໃນປີ 1990, ລັດຖະບານ ຮ່າງແຜນດຳເນີນງານປ່າໄມ້ແຫ່ງຊາດ ທີ່ຮັບຮອງເອົາ ຢ່າງເປັນທາງການ ໃນປີ 1991. ແຜນດຳເນີນປ່າໄມ້ແຫ່ງຊາດ ໄດ້ກຳນົດ 6 ແຜນງານໃຫຍ່ຄື:

1) ການພັດທະນາຂະບວນການຊຸກຍູ້ ສົ່ງເສີມ (ປະຕິບັດຕາມ ແຜນດຳເນີນງານປ່າໄມ້ເຂດຮ້ອນ).
2) ສ້າງຄວາມເຂັ້ມແຂງ ດ້ານພື້ນຖານຊັບພະຍາກອນມະນຸດ (ການພັດທະນາບຸກຄະລາກອນ).
3) ການຫັນປ່ຽນ ຫຼື ຈັດສັນອາຊີບໃໝ່ ແທນການຖາງປ່າເຮັດໄຮ່.
4) ອະນຸລັກ ແລະ ປ້ອງກັນແຫຼ່ງນ້ຳ.
5) ການນຳໃຊ້ ປ່າໄມ້ ແບບຍືນນານ.
6) ການພັດທະນາ ການປູກໄມ້.

ແຜນດຳເນີນງານປ່າໄມ້ແຫ່ງຊາດ ໄດ້ສະເໜີ ຄວາມຕ້ອງການງົບປະມານ 230 ລ້ານ ໂດລາ ເພື່ອການລົງທຶນ ໃນໄລຍະເວລາແຕ່ ປີ 1990 ຫາ 2000, ໃນນັ້ນ 40 ລ້ານ ໂດລາ ສຳລັບການຊ່ວຍເຫຼືອທາງວິຊາການ. ແຜນດຳເນີນງານປ່າໄມ້ແຫ່ງຊາດ ໄດ້ຮັບການສະໜອງຕອບ ຈາກອົງການຈັດຕັ້ງສາກົນ, ອົງການຊ່ວຍເຫຼືອສອງຝ່າຍ, ທະນາຄານພັດທະນາ ແລະ ອົງການທີ່ບໍ່ແມ່ນຂອງລັດຖະບານ. ທັງ 6 ແຜນງານ ໄດ້ຮັບການຈັດຕັ້ງປະຕິບັດ ໂດຍ ລັດຖະບານ ຮ່ວມກັບ ອົງການສາກົນ ແລະ ພາກເອກະຊົນ ໃນລະດັບທີ່ແຕກຕ່າງກັນ. ຜົນສຳເລັດຕົ້ນຕໍ ທີ່ໄດ້ຮັບຈາກການຮ່ວມມື ລະຫວ່າງ ລັດຖະບານ ແລະ ອົງການສາກົນ ສາມາດ ສັງລວມ ໄດ້ດັ່ງນີ້:

- *ການພັດທະນາຊັບພະຍາກອນມະນຸດ:* ການສຶກສາລະດັບມະຫາວິທະຍາໄລ ແລະ ເໜືອມະຫາວິທະຍາໄລຢູ່ຕ່າງປະເທດ, ສ້າງຫຼັກສູດປະລິນຍາຕີດ້ານປ່າໄມ້, ການຝຶກອົບຮົມວິຊາຊີບດ້ານຕ່າງໆ.

- *ການພັດທະນາວຽກງານນິຕິກຳ:* ຊຸກຍູ້ການສ້າງລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ ຫຼາຍສະບັບ ເພື່ອຈັດຕັ້ງປະຕິບັດກົດໝາຍປ່າໄມ້, ຈັດພິມ ແລະ ເຜີຍແຜ່ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບປ່າໄມ້.
- *ສ້າງຄວາມເຂັ້ມແຂງຂອງອົງການຈັດຕັ້ງ:* ສ້າງຄູ່ມືຕ່າງໆ ແລະ ຈັດຊຸດຝຶກອົບຮົມພະນັກງານ ສຳລັບການມອບດິນ-ມອບປ່າ ແລະ ການຄຸ້ມຄອງປ່າສະຫງວນແຫ່ງຊາດ.
- *ການພັດທະນາຮູບແບບ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ:* ການວາງແຜນການນຳໃຊ້ທີ່ດິນ, ການຄຸ້ມຄອງປ່າຜະລິດ, ການຄຸ້ມຄອງປ່າໄມ້ຂັ້ນບ້ານ, ການຄຸ້ມຄອງເຄື່ອງປ່າຂອງດົງ ແລະ ການຄຸ້ມຄອງປ່າສະຫງວນ.
- *ການຄົ້ນຄວ້າ ແລະ ຄວາມຮູ້ພື້ນຖານ:* ການອະນຸລັກ ແລະ ການຜະລິດແກ່ນພັນໄມ້, ການພັດທະນາລະບົບການຜະລິດ ແບບໝັ້ນຄົງຍືນນານ ໃນເຂດພູດອຍ.
- *ການປູກໄມ້.* ການລົງທຶນປູກໄມ້ ເພື່ອຈຸດປະສົງດ້ານການຄ້າ, ລະບົບນະໂຍບາຍ ເພື່ອກະຕຸກຊຸກຍູ້ ການປູກໄມ້ຂອງຊາວກະສິກອນ.

## 2.4. ບົດບາດ ຂອງປ່າໄມ້ ແລະ ວຽກງານປ່າໄມ້ ຢູ່ ສປປ ລາວ

### 2.4.1. ການປະກອບສ່ວນຂອງວຽກງານປ່າໄມ້ ໃນການພັດທະນາເສດຖະກິດ-ສັງຄົມ

ໃນຊຸມປີ 1990, ຂະແໜງປ່າໄມ້ ເຕີບໃຫຍ່ ໄວກວ່າ ຂະແໜງການເສດຖະກິດອື່ນໆ ຊຶ່ງສະແດງວ່າ ການຂຸດຄົ້ນໄມ້ ໄດ້ເພີ່ມຂຶ້ນ ຄື: ຈາກ 300,000 ມ$^3$ ໃນປີ 1990 ເຖິງ 734,000 ມ$^3$ ໃນປີ 1998. ແຕ່ແນວໃດກໍຕາມ ຫຼັງຈາກນັ້ນ ລັດຖະບານ ໄດ້ຫຼຸດຜ່ອນການຂຸດຄົ້ນໄມ້ໃນແຕ່ລະປີ ໃນລະຫວ່າງ ປະມານ 260,000 ມ$^3$ ໃນສົກ 2000/2001 ແລະ 2001/2002, ໃນຕໍ່ໜ້າ ລັດຖະບານ ຈະສືບຕໍ່ຫຼຸດຜ່ອນການຂຸດຄົ້ນໄມ້ຈາກປ່າທຳມະຊາດ ແລະ ໃນເວລາດຽວກັນນັ້ນ ກໍຈະສົ່ງເສີມການປຸງແຕ່ງໄມ້ສຳເລັດຮູບ. ການປູກໄມ້ ໃນໄລຍະຜ່ານມາ ເຖິງວ່າໄດ້ຮັບການສົ່ງເສີມຢ່າງແຂງແຮງ ກໍຕາມ, ແຕ່ການປູກໄມ້ຕົວຈິງ ຍັງຢູ່ໃນໄລຍະຂັ້ນຕົ້ນ. ດ້ວຍເງື່ອນໄຂທີ່ເໝາະສົມ ທັງພູມອາກາດ ແລະ ມີທີ່ດິນພຽງພໍ ແລະ ຄວາມຕ້ອງການໄມ້ ຢູ່ໃນພາກພື້ນໄດ້ເພີ່ມຂຶ້ນ, ຄາດວ່າ ໄມ້ປູກ ຈະມີບົດບາດສຳຄັນຫຼາຍກວ່າເກົ່າ ໃນອານາຄົດ.

ນອກຈາກນັ້ນ ປ່າໄມ້ ຍັງປະກອບສ່ວນ ຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດຂອງປະຊາຊົນ ໃນເຂດຊົນນະບົດ. ຄອບຄົວຊົນນະບົດ ສ່ວນຫຼວງຫຼາຍ ແລະ ໂດຍສະເພາະ ຜູ້ທຸກຍາກ ທີ່ດຳລົງຊີວິດໂດຍອີງອາໃສໃສ່ປ່າໄມ້ເປັນຕົ້ນຕໍ ບໍ່ພຽງແຕ່ ຊົມໃຊ້ໄມ້ ເພື່ອປຸກສ້າງເຮືອນຊານເທົ່ານັ້ນ, ແຕ່ຍັງອາໃສປ່າໄມ້ ເປັນແຫຼ່ງສະບຽງອາຫານ, ເປັນອາຫານສັດ, ເຮັດຮົ້ວ, ຢາປົວພະຍາດ ແລະ ເຄື່ອງປຸງແຕ່ງອາຫານອີກດ້ວຍ. ເຂົາເຈົ້າຍັງສ້າງລາຍຮັບ ຈາກການຂາຍເຄື່ອງປ່າຂອງດົງ, ໃນຫຼາຍໆກໍລະນີ ການຂຸດຄົ້ນຊັບພະຍາກອນປ່າໄມ້ ແມ່ນກິດຈະກຳສຳຄັນທາງດ້ານເສດຖະກິດ ທີ່ມີຢູ່ໃນປະຈຸບັນ, ການຊົມໃຊ້ ແລະ ການຂາຍເຄື່ອງປ່າຂອງດົງ ໄດ້ສ້າງລາຍຮັບ ຫຼາຍກວ່າເຄິ່ງໜຶ່ງ ຂອງລາຍຮັບຂອງຄອບຄົວ.

ໃນປີ 2001 ປ່າໄມ້ ປະກອບສ່ວນ 3,2% ຂອງລວມຍອດຜະລິດຕະພັນພາຍໃນ ໂດຍສະເພາະ ແມ່ນໄມ້. ນອກຈາກນັ້ນ, ຜະລິດຕະພັນໄມ້ ຍັງປະກອບສ່ວນ ປະມານ 25% ຂອງມູນຄ່າສົ່ງອອກທັງໝົດ ແລະ ເປັນການປະກອບສ່ວນ ສຳຄັນຕໍ່ງົບປະມານແຫ່ງຊາດ. ໃນສົກປີ 2001/2002 ຄ່າພັນທະໄມ້ທ່ອນ ປະກອບສ່ວນ 15% ຂອງລາຍຮັບປະຈຳປີ ທັງໝົດ.

ໃນປະຈຸບັນ ອັດຕາການເກັບຄ່າພັນທະໄມ້ ແມ່ນຕ່ຳ ຊຶ່ງໄດ້ເລີ່ມຫຼຸດລົງ ແຕ່ກາງຊຸມປີ 1990 ແລະ ມີການປະເມີນວ່າ ໃນທ້າຍຊຸມປີ 1990 ແມ່ນ ຕ່ຳເຖິງ 50%. ດັ່ງນັ້ນ ລັດຖະບານ ໄດ້ອອກຄຳສັ່ງແນະນຳຢ່າງຕໍ່ເນື່ອງ ແນໃສ່ ກວດກາພັນທະໄມ້ ແລະ ກົນໄກການເກັບພັນທະ ຢ່າງເຂັ້ມງວດ.

ວຽກງານປ່າໄມ້ ແມ່ນ ຂະແໜງໜຶ່ງທີ່ສຳຄັນ ໃນການສ້າງວຽກເຮັດງານທຳ ໃຫ້ແກ່ປະຊາຊົນ ຫຼາຍໆພັນຄົນ ໃນກິດຈະກຳການປູກໄມ້, ຂຸດຄົ້ນໄມ້, ການຂົນສົ່ງ ແລະ ການປຸງແຕ່ງໄມ້. ປະຊາຊົນໃນເຂດຊົນນະບົດ ຈຳນວນຫຼາຍ ໄດ້ຮັບຜົນປະໂຫຍດ ຈາກການສ້າງງານດ້ານປ່າໄມ້. ສະເພາະໃນຂົງເຂດ ອຸດສາຫະກຳປຸງແຕ່ງໄມ້ ໄດ້ປະກອບອາຊີບ ໃຫ້ແກ່ ຄົນພາຍໃນ ປະມານ 22.000 ຄົນ ຊຶ່ງ ເທົ່າກັບປະມານ $^{1}/_{4}$ ຂອງຈຳນວນ ຜູ້ປະກອບອາຊີບທັງໝົດ 93.400 ຄົນ ໃນຂະແໜງອຸດສາຫະກຳ ທົ່ວປະເທດ.

ໃນບາງກໍລະນີ, ການຂຸດຄົ້ນໄມ້ ກໍໄດ້ສົ່ງຜົນກະທົບໄປໃນທາງລົບ ຕໍ່ປະຊາຊົນ ໂດຍສະເພາະແມ່ນການຂຸດຄົ້ນໄມ້ ໃນເຂດປ່າ ທີ່ເຂົາເຈົ້າເຄີຍໄດ້ເພິ່ງພາອາໄສ ແລະ ທຳມາຫາກິນເພື່ອລ້ຽງຊີບ. ສະນັ້ນ, ລັດຖະບານ ຈຶ່ງໄດ້ເອົາໃຈໃສ່ ຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້ ທັງ ສົ່ງເສີມ ໃຫ້ປະຊາຊົນມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ ແນໃສ່ເພື່ອປັບປຸງຊີວິດການເປັນຢູ່ ຂອງປະຊາຊົນທີ່ທຸກຍາກ ໂດຍກົງ.

ໃນດ້ານ ການອະນຸລັກຊັບພະຍາກອນທຳມະຊາດ, ປ່າໄມ້ ຢູ່ເຂດຍອດນ້ຳ ມີຄວາມສຳຄັນ ສຳລັບ ການອະນຸລັກນ້ຳ ແລະ ດິນ, ການສະກັດກັ້ນ ຫຼື ຫຼຸດຜ່ອນ ຄວາມສ່ຽງ ຂອງໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ການຕົກຕະກອນ ແລະ ການຮັກສານ້ຳໃຫ້ຢູ່ໃນລະດັບທີ່ສະໝ່ຳສະເໝີ, ການປັບປຸງຄຸນນະພາບ ຂອງນ້ຳດື່ມ, ການສ້າງພະລັງງານໄຟຟ້າ, ຊົນລະປະທານ, ການຄົມມະນາຄົມທາງນ້ຳ ແລະ ການລ້ຽງປາ. ໄປຄຽງຄູ່ກັນນັ້ນ, ປ່າສະຫງວນແຫ່ງຊາດ ແລະ ການນຳໃຊ້ປ່າໄມ້ ທີ່ມີຢູ່ໃນປະຈຸບັນ ແບບຍືນນານ ໄດ້ປະກອບສ່ວນຢ່າງຫຼວງຫຼາຍ ເຂົ້າໃນການປົກປັກຮັກສາລະບົບນິເວດ ທີ່ສຳຄັນ ລວມທັງ ຊະນິດພັນພືດ ແລະ ພັນສັດທີ່ຫາຍາກ.

### 2.4.2. ບົດບາດຂອງຂະແໜງປ່າໄມ້ ໃນ ສປປ ລາວ

ນອກຈາກການປະກອບສ່ວນ ຂອງປ່າໄມ້ ຕໍ່ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ດັ່ງກ່າວມາຂ້າງເທິງນັ້ນ, ຂະແໜງປ່າໄມ້ ຍັງມີບົດບາດສຳຄັນ ຄື:

1. ຂະແໜງປ່າໄມ້ ແມ່ນຂະແໜງການເສດຖະກິດໜຶ່ງ ທີ່ເຕີບໃຫຍ່ໄວ, ເປັນແຫຼ່ງວັດຖຸດິບ, ສ້າງອາຊີບໃຫ້ແກ່ຄົນພາຍໃນ ແລະ ສະໜອງງົບປະມານ ທີ່ສຳຄັນ ໃຫ້ແກ່ຂະແໜງການຂອງລັດ ແລະ ເອກະຊົນ. ດັ່ງທີ່ກ່າວມາຂ້າງເທິງນັ້ນ, ຂະແໜງປ່າໄມ້ ຍັງເປັນ ແຫຼ່ງເງິນຕາຕ່າງປະເທດ ແລະ ແຫຼ່ງລາຍຮັບເຂົ້າງົບປະມານທີ່ສຳຄັນ.
2. ປ່າໄມ້ ມີບົດບາດຮັບປະກັນ ໃນການດຳລົງຊີວິດ ໃຫ້ແກ່ປະຊາຊົນ ໃນເຂດຊົນນະບົດ ດ້ວຍການສະໜອງໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຊົມໃຊ້ພາຍໃນຄອບຄົວ ແລະ ຂາຍເພື່ອເປັນລາຍຮັບໃຫ້ແກ່ຄອບຄົວ.
3. ປ່າໄມ້ ເປັນທ່າແຮງພື້ນຖານໃຫ້ແກ່ການພັດທະນາ ຂະແໜງການອື່ນ ເຊັ່ນ: ການສ້າງພະລັງງານໄຟຟ້ານ້ຳຕົກ, ການຄົມມະນາຄົມຂົນສົ່ງທາງນ້ຳ, ການກະສິກຳ ແລະ ການປະມົງ ໂດຍການອະນຸລັກດິນໃຫ້ອຸດົມສົມບູນ, ການປັບປຸງກະແສການໄຫຼວຽນຂອງນ້ຳ, ການປ້ອງກັນ ແລະ ຫຼຸດຜ່ອນ ໄພພິບັດທາງທຳມະຊາດ.
4. ປ່າໄມ້ ມີບົດບາດໃນການປົກປັກຮັກສາ ສິ່ງແວດລ້ອມ ແລະ ຊີວະນາໆພັນ ທີ່ສຳຄັນ ໃນລະດັບຊາດ, ໃນລະດັບພາກພື້ນ ແລະ ໃນລະດັບໂລກ.

ບົດບາດຂອງປ່າໄມ້ ຈະປ່ຽນແປງ ໃນເມື່ອເງື່ອນໄຂທາງດ້ານ ເສດຖະກິດ-ສັງຄົມ ຢູ່ພາຍໃນປະເທດ ແລະ ສາກົນ ມີການປ່ຽນແປງ. ຕົວຢ່າງ ເມື່ອເສດຖະກິດຕະຫຼາດ ໄດ້ຂະຫຍາຍຕົວໄປເຖິງ ເຂດຊົນນະບົດ ຫຼື ການເຕີບໃຫ່ຍຂະຫຍາຍຕົວຂອງຂະແໜງອຸດສາຫະກຳ ຈະນຳໄປສູ່ ການດຶງດູດເອົາແຮງງານ ຈາກເຂດຊົນນະບົດຫຼາຍຂຶ້ນ ແລະ ຈະເຮັດໃຫ້ ການເພິ່ງພາອາໃສໃສ່ປ່າໄມ້ເພື່ອການດຳລົງຊີວິດຂອງປະຊາຊົນ ຫຼຸດລົງ. ເຊັ່ນດຽວກັນ ການພັດທະນາເຕັກໂນໂລຊີ ໃນການປຸງແຕ່ງໄມ້ ອາດ ທັນປ່ຽນ ຄວາມຕ້ອງການວັດຖຸດິບ ຈາກຊະນິດໄມ້ ຈຳນວນໜ້ອຍ ໄປສູ່ ຫຼາຍໆຊະນິດພັນ ທີ່ມີຄຸນຄ່າຕ່ຳກວ່າ ຫຼື ເວົ້າອີກດ້ານໜຶ່ງ ແມ່ນຈາກຊະນິດພັນໄມ້ທຳມະຊາດ ໄປສູ່ ໄມ້ປູກ ແລະ ອື່ນໆ. ອີກປະການໜຶ່ງ ຍອ້ນການຂະຫຍາຍຕົວທາງດ້ານເສດຖະກິດ ເຮັດໃຫ້ຄວາມຕອ້ງການ ໃນການອະນຸລັກຊີວະນາໆພັນ ແລະ ຄວາມຕອ້ງການ ທາງດ້ານການສະໜອງນ້ຳ ຍິ່ງເພີ່ມຂຶ້ນ.

ບົດບາດທາງດ້ານເສດຖະກິດຂອງປ່າໄມ້ ທີ່ກ່າວມາຂ້າງເທິງ ບາງຄັ້ງອາດຈະຖືກຂົມຂູ່ ຈາກການຂຸດຄົ້ນເກີນຄວາມສາມາດໃນການສະໜອງ ຂອງຊັບພະຍາກອນປ່າໄມ້ ທີ່ມີຢູ່ໃນປະຈຸບັນ. ປ່າໄມ້ ທີ່ຖືກທຳລາຍ ຫຼື ຊຸດໂຊມຢ່າງໜັກໜ່ວງ ອາດບໍ່ສາມາດສະໜອງໄມ້ ທີ່ມີຄຸນຄ່າທາງການຄ້າ, ເຄື່ອງປ່າຂອງດົງ ແລະ ບໍ່ສາມາດ ປົກປັກຮັກສາຊີວະນາໆພັນ, ນ້ຳ, ດິນ ແລະ ສິ່ງແວດລ້ອມ ໄດ້ຕໍ່ໄປອີກ. ບົດຮຽນ ຈາກປະເທດໃກ້ຄຽງ ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງ ຄື ການເກີດອຸທົກກະໄພ ແລະ ໄພແຫ້ງແລ້ງ ເປັນປະຈຳ ຊຶ່ງສາຍເຫດທີ່ສຳຄັນສ່ວນໜຶ່ງ ອາດເກີດມາຈາກການສູນເສຍປ່າໄມ້ ແລະ ອາດຈະໃຊ້ເວລາຫຼາຍໆປີ ທີ່ຈະເຮັດໃຫ້ບົດບາດຂອງຊັບພະຍາກອນປ່າໄມ້ ກັບຄືນມາສູ່ສະພາບເດີມ ຫຼືບໍ່ ກໍບໍ່ອາດເຮັດໃຫ້ຟື້ນຕົວຄືນໄດ້.

# 3. ສະຖານະພາບ ແລະ ບັນຫາ

## 3.1. ການນຳໃຊ້ທີ່ດິນ ແລະ ປ່າໄມ້

### 3.1.1. ລະບົບການນຳໃຊ້ທີ່ດິນ

#### 3.1.1.1 ກຳມະສິດທີ່ດິນ ແລະ ປ່າໄມ້

ທີ່ດິນ ເປັນກຳມະສິດຂອງວົງສາຄະນະຍາດແຫ່ງຊາດ, ລັດ ຮັບປະກັນສິດ ນຳໃຊ້, ສິດໂອນ ແລະ ສິດສືບທອດ ທີ່ດິນ ຕາມກົດໝາຍ (ລັດຖະທຳມະນູນ, ມາດຕາ 17). ຢູ່ເຂດຕົວເມືອງ ແລະ ເຂດຊານເມືອງ ໃນຫຼາຍໆແຂວງ ໄດ້ມີການອອກໃບຕາດິນ ສຳລັບ ທີ່ດິນປຸກສ້າງ, ທີ່ດິນກະສິກຳ ແລະ ທີ່ດິນທີ່ໄດ້ມາຈາກການຊື້ຂາຍ ແລະ ຮັບປະກັນ ສິດນຳໃຊ້ຍາວນານ ລວມທັງ ສິດໂອນ ແລະ ສິດສືບທອດ.

ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ ເປັນກຳມະສິດ ຂອງວົງສາຄະນະຍາດແຫ່ງຊາດ, ຊຶ່ງລັດເປັນຕົວແທນ ໃນການຄຸ້ມຄອງ ແລະ ແບ່ງປັນ ປ່າໄມ້ ໃຫ້ບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ ຢ່າງສົມເຫດສົມຜົນ ຍາວນານ ແລະ ໄປຄຽງຄູ່ກັບການປົກປັກຮັກສາ. ບຸກຄົນ ແລະ ການຈັດຕັ້ງ ມີສິດຄອບຄອງ ຕົ້ນໄມ້, ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ໄດ້ ກໍຕໍ່ເມື່ອ ເຂົາເຈົ້າ ໄດ້ຮັບການອະນຸຍາດ ຈາກການຈັດຕັ້ງທີ່ຮັບຜິດຊອບເທົ່ານັ້ນ (ມາດຕາ 5, ກົດໝາຍປ່າໄມ້). ໃນໄລຍະຜ່ານມາ ໄດ້ມີການມອບ ທີ່ດິນກະສິກຳ ແລະ ທີ່ດິນປ່າໄມ້ທີ່ເຊື່ອມໂຊມ ໃຫ້ປະຊາຊົນ ເພື່ອ ປູກຝັງ, ລ້ຽງສັດ ແລະ ປູກຕົ້ນໄມ້. ລັດໄດ້ມອບ ໃບຢັ້ງຢືນການນຳໃຊ້ທີ່ດິນຊົ່ວຄາວ ໃນໄລຍະເວລາ 3 ປີ ແລະ ຫຼັງຈາກນັ້ນ ອາດຈະພິຈາລະນາ ອອກໃບອະນຸຍາດຮັບຮູ້ ສິດນຳໃຊ້ຖາວອນ ຖ້າວ່າ ທີ່ດິນທີ່ໄດ້ມອບໃຫ້ນັ້ນ ໄດ້ດຳເນີນການຜະລິດ ແລະ ນຳໃຊ້ຢ່າງຖືກຕ້ອງຕາມ ວັດຖຸປະສົງທີ່ໄດ້ກຳນົດໄວ້.

ສິດນຳໃຊ້ປ່າໄມ້ທຳມະຊາດ ໃນໄລຍະຍາວນານ ສາມາດມອບ ໃຫ້ບຸກຄົນ ແລະ ການຈັດຕັ້ງໄດ້ ຕາມກົດໝາຍປ່າໄມ້ (ມາດຕາ 5). ນອກຈາກນັ້ນ, ປ່າໄມ້ທຳມະຊາດ ຍັງສາມາດ ໃຫ້ເຊົ່າ ຫຼື ສຳປະທານ ເພື່ອປົກປັກຮັກສາ ແລະ ຂຸດຄົ້ນ (ກົດໝາຍປ່າໄມ້, ມາດຕາ 56). ແຕ່ແນວໃດກໍຕາມ ໃນໄລຍະທີ່ຜ່ານມາ, ລັດຖະບານໄດ້ມອບພຽງແຕ່ ປ່າໄມ້ທຳມະຊາດ ສະເພາະ ໃຫ້ບ້ານ ຄຸ້ມຄອງ ແລະ ນຳໃຊ້ ຕາມໂຄງການ ມອບດິນ-ມອບປ່າເທົ່ານັ້ນ.

ບຸກຄົນ ແລະ ການຈັດຕັ້ງ ທີ່ລັດຖະບານໄດ້ມອບ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ປົກປັກຮັກສາ, ອະນຸລັກ ແລະ ຄຸ້ມຄອງ ມີສິດໄດ້ຮັບຜົນຕອບແທນຕ່າງໆ ເຊັ່ນ: ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ຕາມລະບຽບການ ທີ່ອີງການຈັດຕັ້ງກ່ຽວຂ້ອງ ໄດ້ວາງອອກ (ກົດໝາຍປ່າໄມ້, ມາດຕາ 7).

ປ່າປູກ ຫຼື ປ່າທີ່ຟື້ນຟູ ໂດຍບຸກຄົນ ຫຼື ການຈັດຕັ້ງ ດ້ວຍເຫື່ອແຮງ ຫຼື ທຶນຮອນຂອງເຂົາເຈົ້າ ເປັນກຳມະສິດຂອງຜູ້ປູກ ຫຼື ຜູ້ຟື້ນຟູ. ຜູ້ປູກ ຫຼື ຜູ້ຟື້ນຟູ ມີສິດຄອບຄອງ, ສິດນຳໃຊ້, ສິດໂອນ ແລະ ສິດສືບທອດ ຕາມກົດໝາຍ ແລະ ລະບຽບການ (ກົດໝາຍປ່າໄມ້, ມາດຕາ 5).

#### 3.1.1.2. ລະບົບການຈັດແບ່ງທີ່ດິນ ແລະ ການວາງແຜນການນຳໃຊ້ທີ່ດິນ

ອີງຕາມກົດໝາຍ ທີ່ດິນ (ມາດຕາ 11), ທີ່ດິນ ແບ່ງອອກເປັນ 8 ປະເພດ ຄື: ທີ່ດິນກະສິກຳ, ທີ່ດິນປ່າໄມ້, ທີ່ດິນບໍລິເວນນ້ຳ, ທີ່ດິນອຸດສາຫະກຳ, ທີ່ດິນຄົມມະນາຄົມ, ທີ່ດິນວັດທະນະທຳ, ທີ່ດິນປ້ອງກັນຊາດ ປອ້ງກັນຄວາມສະຫງົບ ແລະ ທີ່ດິນປຸກສ້າງ. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບ ໃນການຈັດແບ່ງ, ການຄຸ້ມຄອງ ແລະ ການພັດທະນາ ທີ່ດິນກະສິກຳ, ທີ່ດິນປ່າໄມ້ ແລະ ທີ່ດິນບໍລິເວນນ້ຳ.

ກົດໝາຍທີ່ດິນ (ມາດຕາ 12) ກຳນົດວ່າ ລັດຖະບານເປັນຜູ້ຈັດສັນ ແລະ ຈັດແບ່ງຂອບເຂດ ທີ່ດິນແຕ່ລະປະເພດ ໃນຂອບເຂດທົ່ວປະເທດ. ແຕ່ແນວໃດກໍຕາມ, ເນື່ອງຈາກຂາດລະບົບການປະສານງານ, ການວາງແຜນນຳໃຊ້ທີ່ດິນແຕ່ລະປະເພດ ຈຶ່ງຍັງຈະຕອ້ງໄດ້ຮັບການພັດທະນາ ທັງໃນລະດັບມະຫາພາກ ແລະ ຈຸລະພາກ.

## 3.1.2. ການຈັດແບ່ງປະເພດປ່າ

ປ່າໄມ້ຢູ່ ສປປ ລາວ ແບ່ງອອກເປັນ 5 ປະເພດ, 3 ປະເພດທຳອິດແມ່ນ ຈັດແບ່ງຕາມໜ້າທີ່ຂອງປ່າໄມ້, ສ່ວນ 2 ປະເພດສຸດທ້າຍ ຈັດແບ່ງຕາມສະພາບປະຈຸບັນຂອງປ່າ (ກົດໝາຍປ່າໄມ້, ມາດຕາ 16-21):

1) **ປ່າຜະລິດ** ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ດ້ານໄມ້ ແລະ ຜະລິດຕະພົນປ່າໄມ້ອື່ນໆ ຢ່າງເປັນປົກກະຕິຕະຫຼອດໄປ ເຊິ່ງບໍ່ມີຜົນກະທົບຢ່າງຮ້າຍແຮງຕໍ່ສິ່ງແວດລ້ອມ.
2) **ປ່າສະຫງວນ** ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງ ເພື່ອຈຸດປະສົງ ໃນການປົກປັກຮັກສາ ພັນສັດ, ພັນພືດ, ຖິ່ນອາໃສ, ທຳມະຊາດ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າທາງດ້ານປະຫວັດສາດ, ວັດທະນາທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ.
3) **ປ່າປ້ອງກັນ** ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງເພື່ອຈຸດປະສົງປ້ອງກັນແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນຂອງດິນ, ເຂດຍຸດທະສາດ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.
4) **ປ່າຟື້ນຟູ** ແມ່ນປ່າທີ່ຢູ່ໃນສະພາບເປັນປ່າເຫຼົ່າອ່ອນ ທີ່ໄດ້ຈັດແບ່ງໄວ້ ເພື່ອຟື້ນຟູ, ບູລະນະ ໃຫ້ກາຍເປັນປ່າແກ່ ແລະ ກາຍເປັນປ່າທຳມະຊາດທີ່ສົມບູນຄືນໄດ້.
5) **ປ່າຊຸດໂຊມ** ແມ່ນປ່າໄມ້ທີ່ຖືກທຳລາຍຢ່າງໜັກ ເຊັ່ນ: ເນື້ອທີ່ດິນບໍ່ມີປ່າ ຫຼື ເນື້ອທີ່ດິນປອກໂລ້ນ ທີ່ຖືກຈັດແບ່ງໄວ້ປູກຕົ້ນໄມ້ຄືນໃໝ່ ຫຼື ມອບໃຫ້ບຸກຄົນ ແລະ ການຈັດຕັ້ງນຳໃຊ້ເຂົ້າໃນການປູກຕົ້ນໄມ້, ການຜະລິດກະສິກຳ-ປ່າໄມ້-ລ້ຽງສັດ ແບບຖາວອນ ຫຼື ນຳໃຊ້ເຂົ້າໃນເປົ້າໝາຍອື່ນ ຕາມແຜນພັດທະນາເສດຖະກິດແຫ່ງຊາດ.

ຈຸດພິເສດຂອງລະບົບການຈັດແບ່ງປະເພດປ່າໃນ ສປປ ລາວ ໄດ້ສະແດງອອກ ຢູ່ໃນສອງປະເພດສຸດທ້າຍ. ການທີ່ມີເນື້ອທີ່ປ່າຟື້ນຟູ ແລະ ປ່າຊຸດໂຊມ ຢູ່ ສປປ ລາວ ແມ່ນມີຈຸດປະສົງ ເພື່ອ ຟື້ນຟູ ປ່າເຫຼົ່າອ່ອນ ໃຫ້ກາຍເປັນປ່າໄມ້ທຳມະຊາດທີ່ອຸດົມສົມບູນ ດ້ວຍການຢຸດຕິການຖາງປ່າເຮັດໄຮ່ ແລະ ເພື່ອນຳໃຊ້ເນື້ອທີ່ດິນປ່າຊຸດໂຊມ ໃຫ້ເກີດຜົນປະໂຫຍດຫຼາຍກວ່າເກົ່າ ໂດຍການມອບທີ່ດິນປ່າໄມ້ທີ່ຊຸດໂຊມ ໃຫ້ຊາວກະສິກອນ ແລະ ການຈັດຕັ້ງ ເພື່ອລົງທຶນປູກໄມ້.

### 3.1.2.1. ລະບຽບການ ແລະ ການຈັດແບ່ງປະເພດປ່າໄມ້ ໃນພື້ນທີ່ຕົວຈິງ

ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກ ລະບຽບການ ວ່າດ້ວຍການການຄຸ້ມຄອງ ປ່າສະຫງວນແຫ່ງຊາດ, ສັດປ່າ ແລະ ສັດນ້ຳ ສະບັບເລກທີ 0360/ກປ ແລະ ລະບຽບການ ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງປ່າຜະລິດແບບຍືນນານ ສະບັບເລກທີ 0204/ກປ ໃນປີ 2003, ແລະ ກຳລັງກະກຽມ ລະບຽບການ ກ່ຽວກັບປ່າຟື້ນຟູ. ແຕ່ແນວໃດກໍຕາມ ການຈັດແບ່ງຕົວຈິງ ແມ່ນ ອີງໃສ່ ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 169/1993, ດຳລັດ 164/1993 ແລະ ນິຕິກຳອື່ນໆ ໂດຍປາສະຈາກ ຄຳແນະນຳລະອຽດ ກ່ຽວກັບ ມາດຖານການຈັດແບ່ງ ແລະ ຂະບວນການຈັດແບ່ງ ໃນພາກສະໜາມ, ຂໍ້ຫ້າມຕ່າງໆ, ສິ່ງກະຕຸກຊຸກຍູ້ ແລະ ອື່ນໆ. ອີງຕາມ ສະຖິຕິ ຂອງກະຊວງກະສິກຳ ແລະ ປ່າໄມ້, ປ່າໄມ້ 3 ປະເພດ ທຳອິດ ໄດ້ສະແດງໃນຕາຕະລາງ ທີ 1 ລຸ່ມນີ້:



FS2020 of the Lao PDR (July 2005)

ຕາຕະລາງ 1: ປ່າຜະລິດ, ປ່າສະຫງວນ ແລະ ປ່າປ້ອງກັນ ໃນ ສປປ ລາວ

| ປະເພດປ່າ | ລະດັບ | ຈຳນວນ | ເນື້ອທີ່ |
|---|---|---|---|
| 1. **ປ່າຜະລິດ** | ແຫ່ງຊາດ | 106 ແຫ່ງ | 3.207.000 ເຮັກຕາ |
| 2. **ປ່າປ້ອງກັນ** | ແຂວງ | 23 ແຫ່ງ | 461.000 ເຮັກຕາ |
| | ເມືອງ | 52 ແຫ່ງ | 56.000 ເຮັກຕາ |
| | *ລວມ* | *75 ແຫ່ງ* | *517.000 ເຮັກຕາ* |
| 3. **ປ່າສະຫງວນ ແລະ ເຂດເຊື່ອມຕໍ່** | ແຫ່ງຊາດ | 20 ແຫ່ງ ແລະ ເຂດເຊື່ອມຕໍ່ 2 ແຫ່ງ | 3.391.000 ເຮັກຕາ |
| | ແຂວງ | 57 ແຫ່ງ | 932.000 ເຮັກຕາ |
| | ເມືອງ | 144 ແຫ່ງ | 504.000 ເຮັກຕາ |
| | *ລວມ* | *223 ແຫ່ງ* | *4.826.000 ເຮັກຕາ* |
| *ລ ວ ມ* | | | *8.550.000 ເຮັກຕາ* |

*ໝາຍເຫດ: ປ່າຟື້ນຟູ ແລະ ປ່າຊຸດໂຊມ ໄດ້ກຳນົດອອກ ໃນເວລາຈັດຕັ້ງປະຕິບັດ ການມອບດິນ-ມອບປ່າ ຢູ່ຂັ້ນບ້ານ, ແຕ່ ບໍ່ມີຂໍ້ມູນລະອຽດ.*

### 3.1.2.2. ຄວາມຊ້ຳຊ້ອນ ກັບການນຳໃຊ້ເນື້ອທີ່ດິນ ປະເພດອື່ນ

ການໝາຍເຂດແດນຂອງ 3 ປະເພດປ່າທຳອິດ ໂດຍສະເພາະ ໃນລະດັບຊາດ ແລະ ລະດັບແຂວງ ໄດ້ໝາຍໃນແຜນທີ່ ມາດຕາສ່ວນໃຫຍ່ ແລະ ໄດ້ກວມເອົາເນື້ອທີ່ປະເພດການນຳໃຊ້ທີ່ດິນອື່ນໆ ຊຶ່ງບໍ່ສະເພາະແຕ່ເນື້ອທີ່ປ່າໄມ້ເທົ່ານັ້ນ. ໃນຕົວຈິງ ອາດມີຄວາມເປັນໄປໄດ້ຍາກ ທີ່ຈະໝາຍຂອບເຂດປະເພດປ່າ ໃຫ້ເປັນໄປຕາມທີ່ໄດ້ກຳນົດຢູ່ໃນກົດໝາຍປ່າໄມ້. ເນື່ອງຈາກວ່າ ຍັງຂາດແຜນທີ່ລະອຽດ, ປະຊາກອນເພີ່ມຂຶ້ນ ໃນອັດຕາທີ່ສູງ ແລະ ເຮັດໃຫ້ມີການປ່ຽນແປງການນຳໃຊ້ທີ່ດິນຢ່າງວ່ອງໄວ. ສະນັ້ນ ໃນປະຈຸບັນ ບໍ່ອາດສາມາດ ໝາຍຂອບເຂດປ່າໄມ້ ໄດ້ຢ່າງລະອຽດ ເພື່ອຄຸ້ມຄອງ ຕາມຈຸດປະສົງທີ່ໄດ້ກຳນົດໄວ້. ພ້ອມກັນນັ້ນ, ການປະສານງານ ລະຫວ່າງຂະແໜງການທີ່ກ່ຽວຂ້ອງກ່ຽວກັບການຄຸ້ມຄອງແຕ່ລະປະເພດປ່ານັ້ນ ຍັງບໍ່ພຽງພໍ ແລະ ໃນບາງແຫ່ງ ແມ່ນຍັງບໍ່ທັນມີໜ່ວຍງານຄຸ້ມຄອງປ່າສະຫງວນ ໂດຍສະເພາະ ໃນພາກສະໜາມ, ການທຳລາຍ ປ່າໄມ້ ຢູ່ຫຼາຍໆເຂດ ອາດເກີດຂຶ້ນໄດ້ສະເໝີ ຕົວຢ່າງ ລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 360/2003 ກ່ຽວກັບ ການຄຸ້ມຄອງປ່າສະຫງວນແຫ່ງຊາດ, ສັດປ່າ ແລະ ສັດນ້ຳ ເຊິ່ງໄດ້ຫ້າມ ການຂະຫຍາຍເນື້ອທີ່ນາ ຢູ່ໃນເຂດປ່າສະຫງວນ, ແຕ່ແນວໃດກໍຕາມ ການບັງຄັບໃຊ້ ຫຼື ການເກືອດຫ້າມຢ່າງເຂັ້ມງວດນັ້ນ ແມ່ນເປັນໄປໄດ້ຍາກ ຍ້ອນວ່າ ໃນຕົວຈິງ ປະຊາກອນເພີ່ມຂຶ້ນ ແລະ ມີການເຄື່ອນຍ້າຍເປັນປະຈຳ.

### 3.1.2.3 ຄວາມຊ້ຳຊ້ອນ ກັບເນື້ອທີ່ດິນຂອງບ້ານ

ການມອບດິນ-ມອບປ່າ ໄດ້ກຳນົດເຂດແດນບ້ານ, ທີ່ດິນກະສິກຳ ແລະ ທີ່ດິນປ່າໄມ້ຂອງບ້ານ, ປ່າໄມ້ບ້ານກໍ່ໄດ້ຈັດແບ່ງ ເປັນ ປະເພດປ່າໃດໜຶ່ງໃນຈຳນວນ 5 ປະເພດປ່າ ດັ່ງທີ່ໄດ້ກ່າວມາຂ້າງເທິງ. ສະເພາະປ່າຜະລິດ

ເອີ້ນວ່າ **ປ່າຜະລິດຂອງບ້ານ**[3] *(ມາດຕາ 2, ລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0535/2001)* ຊຶ່ງ ຊາວບ້ານສາມາດເກັບກູ້ ແລະ ຊົມໃຊ້ ເຄື່ອງປ່າຂອງດົງ ແລະ ຕັດໄມ້ເພື່ອຊົມໃຊ້ພາຍໃນບ້ານເທົ່ານັ້ນ. ຍ້ອນແນວນັ້ນ ຢູ່ໃນ ເຂດປ່າສະຫງວນແຫ່ງຊາດ, ປ່າສະຫງວນຂອງແຂວງ, ປ່າຜະລິດ ຫຼື ປ່າປ້ອງກັນ ຈຶ່ງລວມມີ ປ່າປ້ອງກັນ ແລະ ປ່າຜະລິດຂອງບ້ານ. ການຈັດແບ່ງປ່າໄມ້ຊ້ຳຊ້ອນກັນຄືແນວນັ້ນ ແມ່ນສະແດງໃຫ້ເຫັນເຖິງສະພາບຕົວຈິງ ຈຶ່ງຈຳເປັນໄດ້ຮັກສາໄວ້ ໄລຍະໜຶ່ງ ໃນອານາຄົດ. ແຕ່ແນວໃດກໍຕາມ ໃນປະຈຸບັນນີ້ ຍັງບໍ່ມີມາດຖານທີ່ຊັດເຈນ ສຳລັບ ການໝາຍເຂດແດນ ທີ່ດິນກະສິກຳ ແລະ ການຈັດແບ່ງ ປ່າໄມ້ບ້ານ.

## 3.1.3. ການປ່ຽນແປງການນຳໃຊ້ທີ່ດິນ ແລະ ສາເຫດຕົ້ນຕໍ

### 3.1.3.1. ການປ່ຽນແປງການນຳໃຊ້ທີ່ດິນ ແລະ ເນື້ອທີ່ປ່າໄມ້

ຜົນການສຶກສາຄັ້ງສຸດທ້າຍ ເພື່ອສົມທຽບການປ່ຽນແປງການນຳໃຊ້ທີ່ດິນ ແລະ ເນື້ອທີ່ປ່າໄມ້ ທີ່ໄດ້ດຳເນີນມາແຕ່ທ້າຍ ປີ 2002 ເຖິງ ຕົ້ນປີ 2003 ຊີ້ໃຫ້ເຫັນວ່າ ເນື້ອທີ່ໆມີປ່າໄມ້ປົກຫຸ້ມ ກວມປະມານ 71,6% (17 ລ້ານ ເຮັກຕາ) ຂອງເນື້ອທີ່ທົ່ວປະເທດ, ໃນນີ້ລວມມີ:

① ປ່າໄມ້ ທີ່ຂອັນຂ້າງອຸດົມສົມບູນ ແລະ ມີລະດັບຄວາມໜາແໜ້ນຂອງຊັ້ນເຮືອນຍອດ ປົກຄຸມ ຫຼາຍກວ່າ 20% ຂຶ້ນໄປ[4] ກວມປະມານ 41,5% (9.824.700 ເຮັກຕາ) ສົມທຽບໃສ່ປີ 1992 ກວມປະມານ 47% (11.168.000 ເຮັກຕາ) ເຫັນວ່າຫຼຸດລົງ.

② ປ່າໄມ້ປອ່ງ ກວມປະມານ 2,3% (539.000 ເຮັກຕາ).

③ ປ່າເຊື່ອມໂຊມ ກວມປະມານ 25,6% (6.057.780 ເຮັກຕາ).

④ ປ່າເລົ່າ ຫຼື ໄຮ່ເກົ່າ ກວມປະມານ 2,2% (516.900 ເຮັກຕາ).

ສຳລັບປ່າຊຸດໂຊມ ແລະ ປ່າເລົ່າ ຫຼື ໄຮ່ເກົ່າ ດັ່ງທີ່ກ່າວຂ້າງເທິງນີ້ ແມ່ນມີຄວາມສາມາດຟື້ນຟູຄືນໄດ້ຕາມທຳມະຊາດ ແລະ ສາມາດກາຍເປັນປ່າທີ່ອຸດົມສົມບູນໄດ້ ໃນອະນາຄົດ ຖ້າຫາກມີການຄຸ້ມຄອງ ແລະ ປົກປັກຮັກສາ ທີ່ເໝາະສົມ.

ຄຽງຄູ່ກັບການປ່ຽນແປງທາງດ້ານປະລິມານນັ້ນ, ຄຸນນະພາບຂອງປ່າໄມ້ ກໍໄດ້ເຊື່ອມໂຊມລົງເຊັ່ນດຽວກັນ. ການເຊື່ອມໂຊມຂອງປ່າໄມ້ ປະກອບດ້ວຍ ການຫຼຸດລົງ ທັງທາງດ້ານຄວາມໜາແໜ້ນຂອງບໍລິມາດໄມ້, ການປ່ຽນແປງທາງດ້ານໂຄງປະກອບຂອງຊະນິດພັນໄມ້ ແລະ ໂຄງສ້າງຂອງປ່າໄມ້ ແລະ ການຫຼຸດລົງ ຂອງປະຊາກອນສັດປ່າ ແລະ ພືດ. ເນື້ອທີ່ປ່າໄມ້ ໄດ້ຖືກຕັດແຍກອອກເປັນຕອນນ້ອຍໆ ຫຼາຍຂຶ້ນ, ເນື້ອທີ່ປ່າຂະໜາດນ້ອຍ (ນ້ອຍກວ່າ 10 ເຮັກຕາ) ເພີ່ມຂຶ້ນ ຈາກ 0,9% ໃນປີ 1992 ເປັນ 6,7% ໃນປີ 2002, ໃນຂະນະທີ່ ເນື້ອທີ່ປ່າໄມ້ຂະໜາດໃຫຍ່ (ໃຫຍ່ກວ່າ 1.000 ເຮັກຕາ) ຫຼຸດລົງ ຈາກ 88% ໃນປີ 1992 ມາເປັນ 54% ໃນປະຈຸບັນ. ເຊັ່ນດຽວກັນ, ຄວາມໜາ

---

[3] ນິຍາມ: ***ປ່າຜະລິດຂອງບ້ານ*** *ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງ ເພື່ອການຊົມໃຊ້ຊັບພະຍາກອນປ່າໄມ້ ຕາມປະເພນີ, ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 28 ຂອງກົດໝາຍປ່າໄມ້, ຊຶ່ງອະນຸຍາດໃຫ້ຊຸດຄົ້ນໄມ້ ປະເພດບໍ່ຫວງຫ້າມ ແລະ ເກັບກູ້ຜະລິດຕະຜົນປ່າໄມ້ ເພື່ອໃຊ້ສອຍພາຍໃນຄອບຄົວ ແນໃສ່ ຮັບປະກັນ ການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ຢ່າງເປັນປົກກະຕິ ແລະ ຍືນນານ. ໃນປະຈຸບັນ ເພື່ອບໍ່ໃຫ້ສັບສົນກັບ ປ່າຜະລິດແຫ່ງຊາດ ຈຶ່ງໃຊ້ຄຳວ່າ* ***"ປ່າຊົມໃຊ້ຂອງບ້ານ"***.

[4] **ນິຍາມ:** *ເນື້ອທີ່ປ່າໄມ້ ແມ່ນລວມທັງປ່າທຳມະຊາດ ແລະ ປ່າປູກ ຊຶ່ງມີຄວາມໜາແໜ້ນຂອງເຮືອນຍອດຂອງຕົ້ນໄມ້ ຫຼາຍກວ່າ 20% ຂຶ້ນໄປ, ມີເນື້ອທີ່ ໃຫ່ຍກ່ວາ 0,5 ແຮັກຕາ ແລະ ຕົ້ນໄມ້ຕ້ອງມີລະດັບລວງສູງ ຢ່າງໜ້ອຍ 5 ແມັດຂຶ້ນໄປ. ເນື້ອທີ່ປ່າໄມ້ ໃນນີ້ ບໍ່ໄດ້ລວມເອົາ ປ່າໄມ້ປອ່ງ, ປ່າເລົ່າໄຮ່, ປ່າໄມ້ພຸ່ມ ແລະ ປ່າຊຸດໂຊມ ທີ່ມີລະດັບຄວາມໜາແໜ້ນຂອງຊັ້ນເຮືອນຍອດຂອງຕົ້ນໄມ້ໃຫ່ຍ ຕ່ຳກວ່າ 20% ລົງມາ.*

ແໜ້ນ ຂອງຊັ້ນເຮືອນຍອດ ຫຼຸດລົງ ຢ່າງວ່ອງໄວ, ປ່າຕຶບໜາ ຫຼຸດລົງ ຈາກ 29% ມາເປັນ 8,2%, ໃນຂະນະທີ່ປ່າຫ່າງ ເພີ່ມຂຶ້ນ ຈາກ 16% ເປັນ 24,5%. ກ່ຽວກັບໂຄງສ້າງຂອງປ່າໄມ້ ກໍມີການປ່ຽນແປງ, ປ່າທີ່ມີຕົ້ນໄມ້ຂະໜາດໃຫຍ່ ຫຼຸດລົງ ຈາກ 5% ໃນປີ 1992 ມາເປັນ 3% ໃນປີ 2002 ແລະ ປ່າທີ່ມີຕົ້ນໄມ້ ຂະໜາດນ້ອຍ ກໍຫຼຸດລົງເຊັ່ນດຽວກັນ ຄືຈາກ 44% ມາເປັນ 42%, ໃນຂະນະທີ່ປ່າ ທີ່ມີໄມ້ ຂະໜາດກາງ ເພີ່ມຂຶ້ນ ຈາກ 51% ເປັນ 56%.

### 3.1.3.2. ປັດໃຈທີ່ພາໃຫ້ປ່າໄມ້ຫຼຸດລົງ

***<u>ສາຍເຫດນອກຕົວ</u>***

- ຄວາມຕ້ອງການໄມ້ ແລະ ເຄື່ອງປ່າຂອງດົງ ຂອງຕະຫຼາດ ໃນບັນດາປະເທດທີ່ຂາດເຂີນໄມ້ ທີ່ຢູ່ໃກ້ຄຽງ ແລະ ບັນດາປະເທດ ໃນພູມີພາກ ສົມທົບກັບການປິດປ່າ ໃນບາງປະເທດອ້ອມຂ້າງ ໄດ້ກາຍເປັນແຮງກົດດັນ ຕໍ່ຊັບພະຍາກອນປ່າໄມ້ ໃນ ສປປ ລາວ.

***<u>ສາຍເຫດໃນຕົວ</u>***

- ການຖາງປ່າເຮັດໄຮ່ ແລະ ໄຟໄໝ້ປ່າ ຍັງແມ່ນສາຍເຫດຕົ້ນຕໍ ຂອງການທຳລາຍປ່າໄມ້ ໂດຍສະເພາະ ແມ່ນເຂດພາກເໜືອ.
- ການຂຸດຄົ້ນໄມ້ໃນເຂດປ່າຜະລິດແບບບໍ່ຍືນນານ ແມ່ນສາຍເຫດໜຶ່ງທີ່ເຮັດໃຫ້ປ່າໄມ້ເຊື່ອມໂຊມລົງ ເຊັ່ນ: ໃນບັນດາແຂວງພາກກາງ ແລະ ພາກໃຕ້, ພ້ອມກັນນັ້ນ ຍັງມີການຂຸດຄົ້ນໄມ້ ໃນເຂດປ່າໄມ້ ທີ່ໄດ້ມອບໃຫ້ບ້ານ (ປ່າຊົມໃຊ້ຂອງບ້ານ) ຢ່າງຊະຊາຍ.
- ການຫຼຸດລົງຂອງເນື້ອທີ່ປ່າໄມ້ ທີ່ມີຄວາມໜາແໜ້ນຂອງຊັ້ນເຮືອນຍອດຫຼາຍກວ່າ 20% ໃນເຂດພາກກາງ ແລະ ພາກໃຕ້ ສ່ວນໜຶ່ງແມ່ນຜົນເນື່ອງມາຈາກ ການຂະຫຍາຍເນື້ອທີ່ການຜະລິດກະສິກຳ ແລະ ການກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງ.
- ການເຜີຍແຜ່ ແລະ ເຊື່ອມຊຶມ ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບປ່າໄມ້ ໃຫ້ສັງຄົມ ແລະ ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ຍັງບໍ່ທັນເລິກເຊິ່ງເຖິງຖອງ ແລະ ມີປະສິດທິຜົນເທົ່າທີ່ຄວນ ແລະ ການຈັດຕັ້ງປະຕິບັດກົດໝາຍ ຍັງບໍ່ທັນເຂັ້ມງວດ.

**<u>ສາຍເຫດຕົ້ນຕໍ</u>**

***ສາຍເຫດທຳອິດ*** ທີ່ເປັນພື້ນຖານ ແມ່ນ ***ຄວາມທຸກຍາກ ແລະ ການເພີ່ມຂຶ້ນຂອງປະຊາກອນ ຢ່າງວ່ອງໄວ*** ຢູ່ໃນເຂດຊົນນະບົດ, ການທັບປ່ຽນທີ່ດິນປ່າໄມ້ ໄປຮັບໃຊ້ການຜະລິດກະສິກຳ ແລະ ການຖາງປ່າເຮັດໄຮ່ ຊຶ່ງເປັນການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ. ສ່ວນໜຶ່ງທີ່ເປັນສາຍເຫດ ໃນການທຳລາຍປ່າໄມ້ ແມ່ນສົງຄາມຮຸກຮານ ທີ່ຍືດເຍື້ອຍາວນານ ເປັນເວລາຫຼາຍສິບປີ ກໍຄືຜົນສະທ້ອນພາຍຫຼັງ ສົງຄາມສິ້ນສຸດ. ພາຍຫຼັງໄດ້ຮັບສັນຕິພາບ ລັດຖະບານ ໄດ້ວາງແນວທາງ ແລະ ບຸກລະດົມຂົນຂວາຍ ແນໃສ່ຢຸດຕິການຖາງປ່າເຮັດໄຮ່ ແລະ ການປູກຝິ່ນ ໂດຍຈັດຕັ້ງປະຕິບັດ ແຜນງານລຶບລ້າງຄວາມທຸກຍາກ. ຄວາມພະຍາຍາມ ໃນການຫຼຸດຜ່ອນການຖາງປ່າເຮັດໄຮ່ ຢູ່ໃນ 2 ທົດສະວັດຜ່ານມາ ກໍໄດ້ຮັບໝາກຜົນໃນລະດັບໃດໜຶ່ງ ເປັນຕົ້ນ ແມ່ນສາມາດຫຼຸດຜ່ອນ ເນື້ອທີ່ການຖາງປ່າເຮັດໄຮ່ ແລະ ປູກຝິ່ນ ໄດ້ເປັນຈຳນວນຫຼາຍ. ໃນອານາຄົດ ລັດຖະບານ ມີຈຸດສຸມແນ່ໃສ່ ລຶບລ້າງຄວາມຄວາມທຸກຍາກ ຕາມຍຸດທະສາດຂະຫຍາຍຕົວ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES) ເພື່ອຫຼຸດຜ່ອນຜົນກະທົບໃນທາງລົບຈາກການຖາງປ່າເຮັດໄຮ່ ຕໍ່ຊັບພະຍາກອນປ່າໄມ້. ຄຽງຄູ່ກັນນັ້ນ, ການນຳໃຊ້ປ່າໄມ້ ແລະ ຜະລິດຕະພົນປ່າໄມ້ ແລະ ການສົ່ງເສີມ ການປູກ ແລະ ການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຜະລິດເປັນສິນຄ້າ ແມ່ນວິທີການໜຶ່ງ ເພື່ອສ້າງລາຍຮັບ ແລະ ນຳໄປສູ່ການລຶບລ້າງຄວາມທຸກຍາກ ຂອງປະຊາຊົນ ໃນເຂດຊົນນະບົດ ເທື່ອລະກ້າວ.

**<u>ສາຍເຫດທີ່ສອງ</u>** ທີ່ພົວພັນ ແລະ ເຮັດໃຫ້ ເນື້ອທີ່ປ່າໄມ້ ຫຼຸດລົງ ແມ່ນການຂຸດຄົ້ນໄມ້ ເກີນຄວາມສາມາດໃນການສະໜອງຂອງປ່າໄມ້:

- ໂຮງງານປຸງແຕ່ງໄມ້ ໂດຍສະເພາະແມ່ນໂຮງເລື່ອຍ ມີຈຳນວນຫຼາຍ ຊຶ່ງເປັນແຮງກົດດັນ ເຮັດໃຫ້ມີການຂຸດຄົ້ນໄມ້ເພີ່ມຂຶ້ນ ແລະ ໃນບາງທ້ອງຖິ່ນ ຈຳນວນໂຮງງານປຸງແຕ່ງໄມ້ ບໍ່ສົມດູນກັບ ແຫຼ່ງຊັບພະຍາກອນປ່າໄມ້ທີ່ມີ. ຢ່າງໃດກໍ່ດີ, ລັດຖະບານ ກໍໄດ້ພະຍາຍາມ ນຳໃຊ້ມາດຕະການແກ້ໄຂ ທັງໃນໄລຍະສັ້ນ ແລະ ໄລຍະຍາວ.
- ອົງການປົກຄອງ ແຂວງ ແລະ ເມືອງ ເຄີຍອະນຸມັດແຜນການຂຸດຄົ້ນໄມ້ ໃຫ້ແກ່ນັກທຸລະກິດ ເພື່ອແລກປ່ຽນກັບການກໍ່ສ້າງພື້ນຖານໂຄງລ່າງ ຫຼື ຄ່າພັນທະພັດທະນາບ້ານ, ໃນປີ 2002 ລັດຖະບານ ໄດ້ຫ້າມການດຳເນີນການກໍ່ສ້າງພື້ນຖານໂຄງລ່າງ ທີ່ບໍ່ໄດ້ຮັບອະນຸມັດ ແລະ ຮັບຮອງໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.
- ແຜນການຂຸດຄົ້ນໄມ້ປະຈຳປີ ແມ່ນອີງໃສ່ ການປະເມີນບໍລິມາດໄມ້ ທີ່ເກີນຄວາມສາມາດໃນການສະໜອງໄມ້ຂອງປ່າ.
- ລັດຖະບານ ນຳໃຊ້ ລະບົບຄ່າພັນທະການຂຸດຄົ້ນ ແລະ ລະບົບຂໍ້ມູນຂ່າວສານທີ່ຈຳກັດ ຊຶ່ງເຮັດໃຫ້ ລາຄາໄມ້ແຕກຕ່າງກັບ ລາຄາໄມ້ຂອງສາກົນ ຢ່າງຈະແຈ້ງ. ໃນປະຈຸບັນ ການກຳນົດຄ່າພັນທະໄມ້ ກຳລັງໄດ້ຮັບການທົບທວນຄືນໃໝ່.

***ສາຍເຫດທີ່ສາມ*** ກ່ຽວກັບການຄຸ້ມຄອງ:

- ຄວາມສາມາດຂອງໜ່ວຍງານລັດ ໃນການວາງແຜນ, ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດແຜນການພັດທະນາປ່າໄມ້ ຍັງຈຳກັດຫຼາຍ ທັງໃນດ້ານ ຈຳນວນພະນັກງານລວມ ແລະ ພະນັກງານສະເພາະດ້ານ ແລະ ທັງໃນດ້ານ ວັດຖຸ ແລະ ງົບປະມານ. ການຊ່ວຍເຫຼືອ ຂອງຜູ້ໃຫ້ທຶນຕ່າງໆ ເຊັ່ນ: ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ແລະ ການຮ່ວມມືສອງຝ່າຍກັບ ຊູແອດ, ຍີ່ປຸ່ນ, ຟິນແລນ, ເດນມາກ, ເຢຍລະມັນ ແລະ ການຮ່ວມມື ຫຼາຍຝ່າຍ ໄດ້ຊ່ວຍແກ້ໄຂ ຂໍ້ຫຍຸ້ງຍາກເຫຼົ່ານີ້ ໄດ້ໃນລະດັບໜຶ່ງ.
- ນິຕິກຳ ແລະ ລະບຽບການ ຍັງຢູ່ໃນໄລຍະຂັ້ນຕົ້ນ ແລະ ຍັງບໍ່ທັນຄົບຖ້ວນ. ຕົວຢ່າງ ກົດໝາຍປ່າໄມ້ ໄດ້ຖືກຮັບຮອງເອົາໂດຍ ສະພາແຫ່ງຊາດ ໃນປີ 1996 ແລະ ດຳລັດ ຂອງນາຍົກລັດຖະມົນຕີ ເພື່ອຈັດຕັ້ງປະຕິບັດກົດໝາຍປ່າໄມ້ ໄດ້ປະກາດອອກ ໃນທ້າຍປີ 1999. ອີກປະການໜຶ່ງ ກົດໝາຍປ່າໄມ້ ແລະ ກົດໝາຍອຸດສາຫະກຳ ຍັງມີບາງຈຸດຂັດກັນ ໂດຍສະເພາະ ແມ່ນການອະນຸຍາດດຳເນີນທຸລະກິດອຸດສາຫະກຳໄມ້ ຢູ່ໃນຂັ້ນແຂວງ. ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະກາດໃຊ້ລະບຽບການຫຼາຍສະບັບ ແຕ່ຍັງກໍບໍ່ທັນຄົບຖ້ວນສົມບູນ. ຄຳສັ່ງ ຂອງນາຍົກລັດຖະມົນຕີ ໄດ້ກຳນົດອອກເປັນແຕ່ລະປີ ເພື່ອແກ້ໄຂ ຊ່ອງຫວ່າງ ແລະ ບັນຫາ ທີ່ເກີດຂຶ້ນ, ພ້ອມກັນນັ້ນ ໃນແຕ່ລະປີ ກໍໄດ້ມີຄວາມພະຍາຍາມໃນການປັບປຸງບັນດາລະບຽບການຕ່າງໆໃຫ້ຄົບຖ້ວນ ແລະ ສົມບູນຂຶ້ນ ໂດຍການຮ່ວມມື ແລະ ສະໜັບສະໜູນຈາກອົງການຈັດຕັ້ງສາກົນ, ສະຖາບັນການເງິນສາກົນ ແລະ ອົງການຜູ້ໃຫ້ທຶນຕ່າງໆ.
- ການວາງແຜນນຳໃຊ້ທີ່ດິນ ແລະ ມອບດິນ-ມອບປ່າໃນລະດັບບ້ານ ຍັງຂາດພະນັກງານທີ່ມີລະດັບ ແລະ ປະສົບການ, ຂາດເຂີນອຸປະກອນ, ເຄື່ອງມື ແລະ ງົບປະມານທີ່ຈຳເປັນ ໃນການຈັດຕັ້ງປະຕິບັດ. ຕົວຢ່າງ: ການມອບດິນ-ມອບປ່າໃນລະດັບບ້ານ ສ່ວນຫຼາຍ ໄດ້ດຳເນີນໄປ ໂດຍປາສະຈາກການຝຶກອົບຮົມພະນັກງານທ້ອງຖິ່ນຢ່າງພຽງພໍ, ພ້ອມກັນນັ້ນ ການສະໜັບສະໜູນ ຊຸກຍູ້ ທາງດ້ານວິຊາການ ແລະ ການເງິນ ພາຍຫຼັງການມອບດິນ-ມອບປ່າ ແມ່ນຍັງຂາດເຂີນ, ຊຶ່ງເຮັດໃຫ້ການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ມອບ ມີລັກສະນະບໍ່ຍືນນານ ແລະ ຊາວບ້ານ ບໍ່ຮູ້ສຶກໃນຄວາມເປັນເຈົ້າການຮັບຜິດຊອບ ແລະ ໃນທີ່ສຸດ ກໍ່ເຮັດໃຫ້ຄວາມພະຍາຍາມ ໃນການຢຸດຕິການຖາງປ່າເຮັດໄຮ່ ບໍ່ສາມາດບັນລຸໄດ້ຕາມເປົ້າໝາຍ.

## 3.1.4. ບັນຫາທີ່ຕອ້ງໄດ້ປັບປຸງ ໃນການນໍາໃຊ້ທີ່ດິນ ແລະ ປ່າໄມ້

### 3.1.4.1. ການວາງແຜນການນໍາໃຊ້ທີ່ດິນ ແລະ ການປະສານງານລະຫວ່າງ ພາກສ່ວນກ່ຽວຂ້ອງ

ໃນປະຈຸບັນ ເນື້ອທີ່ໆມີປ່າໄມ້ປົກຫຸ້ມທັງໝົດ ກວມປະມານ 71,6% (ເທົ່າກັບ 17 ລ້ານ ເຮັກຕາ) ຂອງເນື້ອທີ່ທົ່ວປະເທດ ໃນນັ້ນ ລວມທັງ ປ່າດົງດິບທີ່ອຸດົມສົມບູນ, ປ່າປູກ, ປ່າໄມ້ປອ່ງ, ປ່າເຊື່ອມໂຊມ ແລະ ປ່າເລົ່າ. ແຕ່ແນວໃດກໍຕາມ ການນໍາໃຊ້ ທີ່ດິນເຫຼົ່ານີ້ ແມ່ນມີ ຫຼາຍຈຸດປະສົງ ແລະ ສ່ວນຫຼາຍແມ່ນມີຄວາມຂັດແຍ່ງກັນ. ນອກຈາກນັ້ນ, ມັນ ຍັງເປັນແຫຼ່ງດຽວກັນ ສໍາລັບການນໍາໃຊ້ປະເພດອື່ນໆ. ເຖິງວ່າ ມີການປະກາດສ້າງຕັ້ງ ປ່າສະຫງວນແຫ່ງຊາດ ຫຼື ປ່າຜະລິດ ກໍຕາມ, ກິດຈະກໍາການພັດທະນາ ລວມທັງ ການເຄື່ອນຍ້າຍ, ການຂະຫຍາຍເນື້ອທີ່ດິນກະສິກໍາ, ການບຸກເບີກເສັ້ນທາງ ແລະ ອື່ນໆ, ຍັງສືບຕໍ່ ຊຶ່ງ ບາງຄັ້ງກໍມີແຜນການ ແລະ ບາງຄັ້ງກໍບໍ່ມີແຜນການລະອຽດ.

ການປົກປັກຮັກສາປ່າໄມ້ ບໍ່ສາມາດບັນລຸຜົນໄດ້ ໂດຍອີງອາໃສແຕ່ ນິຕິກໍາປ່າໄມ້ ຫຼື ຄວາມພະຍາຍາມຂອງພະນັກງານປ່າໄມ້ຢູ່ທ້ອງຖິ່ນ ແຕ່ດ້ານດຽວ ແລະ ກົດໝາຍທີ່ດິນ ປະຈຸບັນ ຍັງຂາດການກໍານົດ ຫຼື ບັນຍັດ ກ່ຽວກັບການວາງແຜນ ແລະ ການປະສານງານການນໍາໃຊ້ທີ່ດິນ ລະຫວ່າງ ບັນດາຂະແໜງການທີ່ກ່ຽວຂ້ອງ ທັງຢູ່ໃນລະດັບມະຫາພາກ ແລະ ຈຸລະພາກ. ເພື່ອປັບປຸງແກ້ໄຂບັນຫາດັ່ງກ່າວ, ຕ້ອງມີ ກົນໄກປະສານງານ ແລະ ການຮ່ວມມືລະຫວ່າງຂະແໜງການທີ່ກ່ຽວຂ້ອງ ຊຶ່ງເລີ່ມຈາກ ການກະກຽມບັນດານິຕິກໍາ ທີ່ກ່ຽວຂ້ອງກັບທີ່ດິນ ຈົນເຖິງ ການຈັດຕັ້ງປະຕິບັດຢູ່ໃນລະດັບພາກສະໜາມ.

### 3.1.4.2. ການສ້າງລະບຽບການ ສໍາລັບການຈັດແບ່ງປ່າໄມ້

ຄອບຄົວ ແລະ ການຈັດຕັ້ງ ທີ່ ຟື້ນຟູປ່າເຫຼົ່າ, ປົກປັກຮັກສາ ປ່າໄມ້ ແລະ ບໍ່ຕັດປໍ້າຕົ້ນໄມ້ ຫຼື ບໍ່ຈູດປ່າໄມ້ຈະໄດ້ຮັບນະໂຍບາຍພິເສດ ເຊັ່ນ: ໄດ້ຮັບສິດກູ້ຢືມເງິນ, ການຍົກເວັ້ນພາສີ, ເງິນລາງວັນ, ການຕໍ່ເວລາສໍາປະທານ ຫຼື ເພີ່ມເນື້ອທີ່ສໍາປະທານ (ກົດໝາຍປ່າໄມ້, ມາດຕາ 35 ແລະ 68). ແຕ່ຢ່າງໃດກໍຕາມ ການມອບກໍາມະສິດ ກ່ຽວກັບຕົ້ນໄມ້ທີ່ໄດ້ຟື້ນຟູ ຍັງບໍ່ທັນໄດ້ກໍານົດ ຢູ່ໃນລະບຽບການຈັດຕັ້ງປະຕິບັດ ແລະ ບໍ່ທັນມີຂັ້ນຕອນ ສໍາລັບການມອບກໍາມະສິດ ຕົ້ນໄມ້ທີ່ໄດ້ຟື້ນຟູ ແລະ ຕົ້ນໄມ້ປູກ ທີ່ຕ້ອງໄດ້ຂຶ້ນທະບຽນ ຢູ່ຫ້ອງການກະສິກໍາ ແລະ ປ່າໄມ້ ເພື່ອຮັບປະກັນ ກໍາມະສິດ. ອີກປະການໜຶ່ງ ກໍມີຄວາມຈໍາເປັນທີ່ຈະຕອ້ງສ້າງໃຫ້ມີ ລະບຽບການກ່ຽວກັບປ່າປອ້ງກັນ ຂອງກະຊວງກະສິກໍາ ແລະ ປ່າໄມ້ ເຊັ່ນດຽວກັນ.

### 3.1.4.3. ຄວາມຈໍາເປັນ ໃນການເຊື່ອມປະສານ ລະຫວ່າງການຈັດແບ່ງປ່າໄມ້ ຢູ່ລະດັບມະຫາພາກ ແລະ ລະດັບບ້ານ

ອີງຕາມກົດໝາຍແລ້ວ, ເນື້ອທີ່ດິນ ແລະ ປ່າໄມ້ ບໍ່ພຽງແຕ່ ໄດ້ກໍານົດ ເປັນປ່າສະຫງວນ ຫຼື ປ່າຜະລິດ ເທົ່ານັ້ນ ແຕ່ຍັງໄດ້ກໍານົດ ເປັນເຂດຂຸດຄົ້ນບໍ່ແຮ່ ຫຼື ໃຫ້ເຊົ່າ ເພື່ອການປູກໄມ້. ເນື້ອທີ່ດິນ ແລະ ປ່າໄມ້ເຫຼົ່ານີ້ ສ່ວນໃຫຍ່ແມ່ນປະຊາຊົນທ້ອງຖິ່ນ ເປັນຜູ້ນໍາໃຊ້, ດັ່ງນັ້ນ ການມີສ່ວນຮ່ວມ ແລະ ການໃຫ້ຄວາມຮ່ວມມືຂອງປະຊາຊົນທອ້ງຖິ່ນໃນການຄຸ້ມຄອງ ແລະ ພັດທະນາ ໃນເຂດພື້ນທີ່ດິນດັ່ງກ່າວ ແມ່ນເປັນສິ່ງທີ່ບໍ່ອາດຫຼີກລ້ຽງໄດ້ ເນື່ອງຈາກວ່າເຂດດັ່ງກ່າວ ແມ່ນນອນຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງບ້ານເຂົາເຈົ້າ. ຄຽງຄູ່ກັນນັ້ນ, ກໍເປັນໂອກາດໜຶ່ງເພື່ອໃຫ້ປະຊາຊົນໄດ້ມີສ່ວນຮ່ວມ ຫຼື ໄດ້ຮັບຜົນປະໂຫຍດ ຫຼື ໃນກໍລະນີ ທີ່ຕ້ອງມີການທົດແທນຄືນ ໃຫ້ເຂົາເຈົ້າ. ເພື່ອຮັບປະກັນ ເຮັດໃຫ້ການຄຸ້ມຄອງເນື້ອທີ່ດິນເຫຼົ່ານີ້ ສາມາດປະກອບສ່ວນ ເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ຕ້ອງກໍານົດ ນິຍາມ ຂອງເນື້ອທີ່ດິນຂອງບ້ານ ແລະ ສິດ ແລະ ຄວາມຮັບຜິດຊອບ ຂອງ

ເຂົາເຈົ້າ ຕໍ່ທີ່ດິນ ແລະ ປ່າໄມ້ ຢູ່ພາຍໃນບ້ານຂອງເຂົາເຈົ້າໃຫ້ຈະແຈ້ງຕື່ມ ຢູ່ໃນ ກົດໝາຍ ທີ່ກ່ຽວຂ້ອງ ລວມທັງ ກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້.

#### 3.1.4.4. ປັດໃຈ ຂອງການທຳລາຍ ແລະ ການເຊື່ອມໂຊມຂອງປ່າໄມ້

ດັ່ງໄດ້ເວົ້າມາຂ້າງເທິງ, ປັດໃຈຂອງການທຳລາຍ ແລະ ການເຊື່ອມໂຊມ ຂອງປ່າໄມ້ ແມ່ນສັບສົນ ແລະ ມີການພົວພັນເຊິ່ງກັນ ແລະ ກັນ ແລະ ສິ່ງສຳຄັນກວ່າໝູ່ ບັນດາປັດໄຈເຫຼົ່ານັ້ນ ສ່ວນຫຼວງຫຼາຍ ແມ່ນຢູ່ນອກຂອບເຂດຄວາມຮັບຜິດຊອບ ຂອງຂະແໜງປ່າໄມ້ ຫຼື ວ່າແມ່ນບັນຫາທົ່ວໄປ ທີ່ກ່ຽວຂ້ອງກັບ ການບໍລິຫານ ຫຼື ແມ່ນບັນຫາສັງຄົມ. ຄ້າຍກັບວ່າ ຜົນກະທົບຂອງການທຳລາຍປ່າໄມ້ ຕໍ່ເສດຖະກິດ-ສັງຄົມ ຫຼື ສິ່ງແວດລ້ອມ ແມ່ນເກີນຂອບເຂດຄວາມຮັບຜິດຊອບ ຂອງຂະແໜງການກະສິກຳ ແລະ ປ່າໄມ້.

ຖ້າວ່າ ປ່າໄມ້ ຫາກຍັງສືບຕໍ່ຖືກທຳລາຍ ໃນອັດຕາ ຄືດັ່ງໃນປະຈຸບັນ ມີການປະເມີນວ່າ ໃນປີ 2020 ສປປ ລາວ ຈະມີເນື້ອທີ່ປ່າໄມ້ທີ່ອຸດົມສົມບູນ ແລະ ປ່າທີ່ເປັນເສດຖະກິດ ກວມພຽງແຕ່ 7,4 ລ້ານ ເຮັກຕາ ຫຼື ຫຼາຍກວ່າ 30% ໜ້ອຍໜຶ່ງ ຂອງ ເນື້ອທີ່ທົ່ວປະເທດ. ຜົນກະທົບຕົວຈິງ ຈາກການຫຼຸດລົງທັງທາງດ້ານປະລິມານ ແລະ ຄຸນນະພາບຂອງປ່າໄມ້ນີ້ ຍັງບໍ່ສາມາດຄາດຄະເນໄດ້, ແຕ່ຈາກບົດຮຽນຢູ່ໃນບັນດາປະເທດອາຊີ ຜົນກະທົບນັ້ນອາດມີຢ່າງໃຫຍ່ຫຼວງ ແລະ ໄພພິບັດທາງທຳມະຊາດ ອາດເກີດຂຶ້ນໄດ້ຢ່າງກະທັນຫັນກໍອາດເປັນໄປໄດ້.

ຄຽງຄູ່ກັບ ຄວາມພະຍາຍາມ ໃນລະດັບຊາດ ເພື່ອ ລຶບລ້າງຄວາມທຸກຍາກ, ການປັບປຸງ ການບໍລິຫານ ແລະ ການສົ່ງເສີມ ກົນໄກເສດຖະກິດ ທີ່ອີງໃສ່ຕະຫຼາດ ເພື່ອໃຫ້ມີປະສິດທິຜົນ, ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຄວນໄດ້ຮັບການຕິດຕາມກວດກາຢ່າງສະໝ່ຳສະເໝີ, ຕ້ອງໄດ້ດຳເນີນການ ວິເຄາະ ວິໄຈ ສາເຫດຕົ້ນຕໍ ຂອງການຫຼຸດລົງຂອງປ່າໄມ້ ຢູ່ໃນເຂດພື້ນທີ່ສະເພາະ ແລະ ຕ້ອງສ້າງນະໂຍບາຍການນຳໃຊ້ທີ່ດິນ ລວມທັງປ່າໄມ້ ບົນພື້ນຖານ ການວິເຄາະວິໄຈ ຂໍ້ມູນ ຕົວຈິງທີ່ມີ ແລະ ຈາກຜົນການສຶກສາທີ່ດຳເນີນ ຄັ້ງທ້າຍສຸດ.

## 3.2. ປ່າຜະລິດ

ໃນປະຈຸບັນນີ້, ໄມ້ ແລະ ຜະລິດຕະພົນປ່າໄມ້ປະເພດອື່ນ ໄດ້ມາຈາກຫຼາຍແຫຼ່ງ ໃນນັ້ນ ລວມທັງປ່າຜະລິດ, ເຂດທີ່ຈະຫັນປ່ຽນໄປສູ່ຮູບແບບການນຳໃຊ້ອື່ນໆ (ເຊັ່ນ: ເຂື່ອນໄຟຟ້ານ້ຳຕົກ, ເສັ້ນທາງ ແລະ ໂຄງການພັດທະນາຊົນນະບົດ) ແລະ ໄດ້ມາຈາກ ການຂຸດຄົ້ນ ທີ່ບໍ່ໄດ້ຮັບອະນຸຍາດ ຢູ່ໃນເຂດປ່າສະຫງວນແຫ່ງຊາດ ແລະ ປ່າປ້ອງກັນບາງແຫ່ງ. ໃນເມື່ອ ການຂຸດຄົ້ນໄມ້ ໃນເຂດກໍ່ສ້າງພື້ນຖານໂຄງລ່າງ ໃກ້ຈະສິ້ນສຸດ ແລະ ບັນດາກິດຈະກຳຂຸດຄົ້ນຊະຊາຍ ໄດ້ຮັບການຄວບຄຸມຢ່າງເຂັ້ມງວດ, ປ່າຜະລິດ ຈະກາຍເປັນແຫຼ່ງສະໜອງໄມ້ ຕົ້ນຕໍ ຢູ່ ສປປ ລາວ[5].

### 3.2.1. ສະພາບປະຈຸບັນຂອງປ່າຜະລິດ

ຢູ່ ສປປ ລາວ ມີປ່າຜະລິດ ທີ່ໄດ້ຮັບການສ້າງຕັ້ງຢ່າງບໍ່ທັນເປັນທາງການ ປະມານ 106 ແຫ່ງ ມີເນື້ອທີ່ທັງໝົດປະມານ 3.207.000 ເຮັກຕາ. ແຂວງທີ່ມີ ເຂດປ່າຜະລິດຫຼາຍແມ່ນ ແຂວງວຽງຈັນ (ມີ 8 ແຫ່ງ, ມີເນື້ອທີ່ 503.000 ເຮັກຕາ), ແຂວງສະຫວັນນະເຂດ (ມີ 8 ແຫ່ງ, ມີເນື້ອທີ່ 428.000 ເຮັກຕາ), ແຂວງບໍລິຄຳໄຊ (ມີ 11 ແຫ່ງ, ມີເນື້ອທີ່ 359.000 ເຮັກຕາ) ແລະ ແຂວງ ໄຊຍະບູລີ (ມີ 13 ແຫ່ງ, ມີເນື້ອທີ່ 350.000 ເຮັກຕາ). ຈຳນວນ

5 *"ປ່າຜະລິດ" ຫຼື "ເຂດປ່າຜະລິດ" ໃນນີ້ ແມ່ນເຈາະຈົງສະເພາະໃສ່ແຕ່ປ່າໄມ້ທຳມະຊາດ ເຊິ່ງບໍ່ໄດ້ກວມເອົາປ່າປູກ.*

ເກືອບເຄິ່ງໜຶ່ງຂອງປ່າຜະລິດເຫຼົ່ານີ້ (ຫຼື ປະມານ 1,55 ລ້ານ ເຮັກຕາ) ແມ່ນໄດ້ມີການວາງແຜນຄຸ້ມຄອງ ຈັດສັນແລ້ວ ໃນນັ້ນ ເນື້ອທີ່ ທີ່ໃຫຍ່ກວ່າໝູ່ ແມ່ນຢູ່ ແຂວງສະຫວັນນະເຂດ (7 ແຫ່ງ, ມີເນື້ອທີ່ 148.000 ເຮັກຕາ), ແຂວງຄຳມ່ວນ (6 ແຫ່ງ, ມີເນື້ອທີ່ 309.000 ເຮັກຕາ), ແຂວງອຸດົມໄຊ (5 ແຫ່ງ, ມີ ເນື້ອທີ່ 148.000 ເຮັກຕາ) ແລະ ແຂວງໄຊຍະບຸລີ (7 ແຫ່ງ, ມີເນື້ອທີ່ 105.000 ເຮັກຕາ).

ຍ້ອນຂາດພື້ນຖານທາງນິຕິກຳ ທີ່ຊັດເຈນ ສຳລັບການກຳນົດຂອບເຂດແດນ ແລະ ການວາງແຜນຄຸ້ມຄອງປ່າໄມ້ເຫຼົ່ານັ້ນ, ຍົກເວັ້ນ ຢູ່ ແຂວງສະຫວັນນະເຂດ ແລະ ຄຳມ່ວນ, ແມ່ນບໍ່ໄດ້ມີການຄຸ້ມຄອງຢ່າງເປັນລະບົບ ແລະ ຂໍ້ມູນກ່ຽວກັບປ່າຜະລິດເຫຼົ່ານັ້ນ ກໍມີພຽງເລັກນ້ອຍເທົ່ານັ້ນ. ຈາກການປະເມີນຜົນ ໃຫ້ຮູ້ວ່າ ເນື້ອທີ່ປ່າໄມ້ທີ່ມີລັກສະນະກະແຈກກະຈາຍ ໄດ້ເພີ່ມຂຶ້ນ, ຄວາມໜາແໜ້ນໄດ້ຫຼຸດລົງຢ່າງຫຼວງຫຼາຍ ແລະ ເນື້ອທີ່ໆປົກຄຸມໄປດ້ວຍຕົ້ນໄມ້ໃຫຍ່ ແລະ ປານກາງນັ້ນຫຼຸດລົງ ໃນຂະນະດຽວກັນ ເນື້ອທີ່ໆມີຕົ້ນໄມ້ນ້ອຍ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ. ໂດຍທົ່ວໄປແລ້ວເຫັນວ່າ ອັດຕາສ່ວນການທຳລາຍປ່າໄມ້ນັ້ນສູງ ແລະ ມີທ່າອ່ຽງເພີ່ມຂຶ້ນ ແລະ ຂະຫຍາຍຢ່າງວ່ອງໄວ.

### 3.2.2. ດຳລັດຂອງນາຍົກລັດຖະມົນຕີ ເລກທີ 59/2002 ວ່າດ້ວຍ ການຄຸ້ມຄອງປ່າຜະລິດແບບຍືນນານ

ເພື່ອແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງ ທີ່ມີຢູ່ໃນປະຈຸບັນ ກ່ຽວກັບ ປ່າຜະລິດ, ລັດຖະບານໄດ້ອອກ ດຳລັດ ເລກທີ 59/ນຍ ວ່າດ້ວຍ ການຄຸ້ມຄອງປ່າຜະລິດແບບຍືນນານ ໃນເດືອນ ພຶດສະພາ ປີ 2002. ດຳລັດສະບັບນີ້ ກຳນົດ ຫຼັກການພື້ນຖານ ສຳລັບການສ້າງຕັ້ງ ແລະ ຄຸ້ມຄອງ ເຂດປ່າຜະລິດ ແລະ ເພື່ອຜັນຂະຫຍາຍດຳລັດດັ່ງກ່າວ, ກະຊວງກະສິກຳ ແລະ ປ່າໄມ້ ກໍໄດ້ອອກລະບຽບການ ສະບັບເລກທີ 0204/ກປ.2003 ເພື່ອຈັດຕັ້ງປະຕິບັດ ຢູ່ໃນລະດັບພາກສະໜາມ.

ອີງຕາມດຳລັດຂອງນາຍົກລັດຖະມົນຕີ ແລະ ລະບຽບການ ຂອງ ກະຊວງກະສິກຳ ແລະ ປ່າໄມ້, ສຳນັກງານນາຍົກລັດຖະມົນຕີ ເປັນຜູ້ອະນຸມັດ ສ້າງຕັ້ງເຂດປ່າຜະລິດ ຕາມການສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້. ນອກຈາກນັ້ນ, ດຳລັດ ຍັງກຳນົດໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ໃນການກະກຽມ ແຜນຄຸ້ມຄອງແບບຍືນນານ ໂດຍປະສານງານ ກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການກຳນົດຂັ້ນຕອນ ແລະ ລະບຽບການຈັດຕັ້ງປະຕິບັດ ອັນລະອຽດ ແລະ ກຳນົດ ຫຼັກການ ເພື່ອກະກຽມ ແລະ ຮັບຮອງ ແຜນຄຸ້ມຄອງປ່າຜະລິດ ຢ່າງລະອຽດ. ເຂດປ່າຜະລິດ ແຕ່ລະເຂດ ຕ້ອງດຳເນີນ ຕາມແຜນການຄຸ້ມຄອງສະເພາະ ຕາມຂໍ້ມູນຕົວຈິງ ທີ່ກວມເອົາປ່າທຸກປະເພດ ແລະ ທີ່ຖືກຕ້ອງກັບມາດຖານໃນການຄຸ້ມຄອງແບບຍືນນານ.

ພາຍໃນກະຊວງ ກະສິກຳ ແລະ ປ່າໄມ້, ກົມປ່າໄມ້ ມີຄວາມຮັບຜິດຊອບ ເພື່ອປະສານງານ ໃນການກະກຽມແຜນຄຸ້ມຄອງ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ. ພະແນກກະສິກຳ ແລະ ປ່າໄມ້ແຂວງຮ່ວມກັບ ອົງການປົກຄອງທ້ອງຖິ່ນ ດຳເນີນ ການສຳຫຼວດພາກສະໜາມ ແລະ ເກັບກຳຂໍ້ມູນ ທີ່ຕ້ອງການ ສຳລັບການສ້າງແຜນການ ແລະ ຫຼັງຈາກນັ້ນ ມີໜ້າທີ່ແນະນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຕົວຈິງ. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຕ້ອງຈັດຕັ້ງປະຕິບັດ ແຜນຄຸ້ມຄອງປ່າຜະລິດ ໂດຍມອບ ຄວາມຮັບຜິດຊອບ ໃຫ້ໜ່ວຍຄຸ້ມຄອງປ່າຜະລິດ ທີ່ຂຶ້ນກັບໜ່ວຍງານປ່າໄມ້. ການຈັດຕັ້ງປ່າໄມ້ບ້ານ ມີໜ້າທີ່ນຳພາ ປະຊາຊົນ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ກິດຈະກຳຄຸ້ມຄອງປ່າຜະລິດ ແບບຍືນນານ ທຸກຢ່າງ ພາຍໃຕ້ ການຕົກລົງຮ່ວມ ກ່ຽວກັບການຄຸ້ມຄອງປ່າໄມ້ ທີ່ໄດ້ເຊັນກັນ ລະຫວ່າງ ການຈັດຕັ້ງປ່າໄມ້ບ້ານ ແລະ ໜ່ວຍຄຸ້ມຄອງປ່າຜະລິດ ທີ່ຮັບຜິດຊອບ. ຂໍ້ຕົກ

ລົງຮ່ວມ ກ່ຽວກັບການຄຸ້ມຄອງປ່າໄມ້ ຕ້ອງກຳນົດ ສິດ ແລະ ໜ້າທີ່ ຂອງທັງສອງພາກສ່ວນ, ຂອບເຂດ ຂອງການມີສ່ວນຮ່ວມ ແລະ ການແບ່ງປັນຜົນປະໂຫຍດ.

ບັນຫາລະອຽດຕ່າງໆ ໄດ້ກຳນົດໄວ້ ໃນເອກະສານອື່ນໆ ເຊັ່ນ: ລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0221/ກປ.2000 ວ່າດ້ວຍການຄຸ້ມຄອງການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ແລະ ສະບັບເລກທີ 0060/ກປ.03 ທີ່ກຳນົດ ຫຼັກການ ແລະ ອະທິບາຍທາງດ້ານວິຊາການ ກ່ຽວກັບມາດຖານ ສຳລັບການຕັດປ້ຳໄມ້ຢືນຕົ້ນຈາກປ່າທຳມະຊາດ, ການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນພາຍໃນ ແລະ ອອກຕ່າງປະເທດ, ການວັດແທກໄມ້ກິ່ງງ່າ, ຕໍໄມ້ ແລະ ປູດໄມ້, ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

ເພື່ອປັບປຸງ ມາດຕະຖານ ແລະ ການປະຕິບັດຕົວຈິງ ໃນການຂຸດຄົ້ນໄມ້, ກະຊວງກະສິກຳ ແລະ ປ່າໄມ້ (ກົມປ່າໄມ້) ກະກຽມ ບົດແນະນຳດ້ານວິຊາການ ໃນການຕັດປ້ຳ, ການຂຸດຄົ້ນ, ການສ້າງເສັ້ນທາງຂຸດຄົ້ນ ແລະ ການຂົນສົ່ງໄມ້ທ່ອນ. ການຈັດຕັ້ງປະຕິບັດ ບົດແນະນຳດັ່ງກ່າວ ຈະເປັນທັນທາງໜຶ່ງ ເພື່ອຫຼຸດຜ່ອນ ການສູນເສຍໄມ້ ຢູ່ໃນປ່າ ກໍຄືຜົນກະທົບ ຕໍ່ສິ່ງແວດລ້ອມ ທີ່ອາດເກີດຂຶ້ນ ໃນໄລຍະການຂຸດຄົ້ນ ແລະ ພາຍຫຼັງການຂຸດຄົ້ນ.

## 3.2.3. ບັນຫາສຳລັບການຄຸ້ມຄອງປ່າຜະລິດແບບຍືນນານ

### 3.2.3.1. ການຄຸ້ມຄອງປ່າຜະລິດ

ການຄຸ້ມຄອງປ່າຜະລິດແຫ່ງຊາດ ແບບວິທະຍາສາດວິທະຍາການນັ້ນ ແມ່ນສິ່ງທ້າທາຍອັນໜັກໜ່ວງ ຊຶ່ງຮຽກຮ້ອງໃຫ້ມີຄວາມພະຍາຍາມຢ່າງຈິງຈັງ ຈາກໜ່ວຍງານຂອງລັດ. ບັນຫາທີ່ຄວນເອົາໃຈໃສ່ ກ່ອນອື່ນໝົດນັ້ນແມ່ນ ***ຄວາມສາມາດ***. ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ມີໜ້າທີ່ຮັບຜິດຊອບໃນການວາງແຜນຄຸ້ມຄອງປ່າໄມ້. ໜ່ວຍງານດັ່ງກ່າວ ບໍ່ແມ່ນແຕ່ມີຄວາມກຽມພ້ອມເທົ່ານັ້ນ ຫາກຍັງຕ້ອງມີຄວາມສາມາດ, ມີອຸປະກອນ ແລະ ມີພາຫະນະຢ່າງພຽງພໍ ເພື່ອຈະສ້າງແຜນຈັດສັນ, ຄຸ້ມຄອງ ສຳລັບທຸກປະເພດປ່າ ໃນກຳນົດເວລາອັນຈຳກັດ.

ບັນຫາທີສອງ ຫຼື ບຸລິມະສິດທີສອງ ທີ່ຄວນເອົາໃຈໃສ່ ແມ່ນ ***ຄຸນນະພາບ***. ໂດຍທົ່ວໄປແລ້ວ, ຂໍ້ມູນທີ່ມີສຳລັບການວາງແຜນຄຸ້ມຄອງປ່າໄມ້ ແມ່ນມີຈຳກັດ ແລະ ຄຸນນະພາບຕ່ຳ. ຂໍ້ມູນທີ່ສຳຄັນຕົ້ນຕໍ ເຊັ່ນ: ອັດຕາການເຕີບໃຫຍ່ ຂອງແຕ່ລະຊະນິດໄມ້ ແລະ ຂອງປ່າປະເພດຕ່າງໆ ແລະ ເງື່ອນໄຂ ທາງນິເວດນັ້ນ ແມ່ນຫາໄດ້ຍາກ ແລະ ມີຄວາມຊັດເຈນຕ່ຳ. ຍ້ອນແນວນັ້ນ, ແຜນຄຸ້ມຄອງ ຈຶ່ງໄດ້ຮັບການເອົາໃຈໃສ່ແຕ່ດ້ານດຽວ ຄື: ບໍລິມາດຂອງໄມ້ບາງຊະນິດ ທີ່ມີຄວາມຕອ້ງການຂອງຕະຫຼາດສູງເທົ່ານັ້ນ.

ບັນຫາທີສາມ ຫຼື ບຸລິມະສິດທີສາມ ທີ່ ຕ້ອງພະຍາຍາມເອົາໃຈໃສ່ ຢ່າງຈິງຈັງ ແມ່ນ ***ການບັງຄັບໃຊ້ ແລະ ສະຕິໃນການການເຄົາລົບ ຫຼື ປະຕິບັດກົດໝາຍ ແລະ ລະບຽບການ***. ບາງກໍລະນີ ຕາມການລາຍງານ ແມ່ນ ບໍ່ສາມາດຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າໄມ້ໄດ້ ຫຼືວ່າ ພາຍຫຼັງສຳເລັດ ການສຳຫຼວດຈັດສັນ ແມ່ນດຳເນີນການຂຸດຄົ້ນເລີຍ ໂດຍບໍ່ຜ່ານ ຂັ້ນຕອນ ການສຳຫຼວດກ່ອນການຂຸດຄົ້ນ ແລະ ໝາຍຕົ້ນຕັດ ຫຼື ເຖິງແມ່ນວ່າ ແຜນຄຸ້ມຄອງ ຈະກຳນົດລະອຽດ ເຊັ່ນ: ຮອບວຽນການຂຸດຄົ້ນ, ເນື້ອທີ່ໆອະນຸຍາດໃຫ້ຂຸດຄົ້ນປະຈຳປີ ແລະ ແຜນຂຸດຄົ້ນໄລຍະຍາວ ກໍຕາມແຕ່ ການຂຸດຄົ້ນຕົວຈິງ ສ່ວນຫຼາຍ ດຳເນີນໄປ ໃນເຂດທີ່ສາມາດເຂົ້າເຖິງໄດ້ງ່າຍ, ໃນເຂດ ທີ່ມີພື້ນຖານໂຄງລ່າງສະດວກ ແລະ ຂຸດຄົ້ນເອົາແຕ່ຊະນິດໄມ້ ທີ່ມີຄຸນຄ່າທາງດ້ານເສດຖະກິດສູງເທົ່ານັ້ນ.

ບັນຫາທີສີ່ ຫຼື ບຸລິມະສິດທີສີ່ ທີ່ ຕ້ອງ ພະຍາຍາມເອົາໃຈໃສ່ ຢ່າງເຂັ້ມງວດ ນັ້ນແມ່ນ ***ການຕິດຕາມ ແລະ ການກວດກາ***. ຂະແໜງການກະສິກຳ ແລະ ປ່າໄມ້ ຍັງບໍ່ທັນສາມາດນຳເອົາລະບົບການກວດກາ ຕິດຕາມ, ການກຳນົດເງື່ອນໄຂຕ່າງໆ ໄປນຳໃຊ້ໃນການຄຸ້ມຄອງປ່າໄມ້ຕາມຫຼັກວິຊາການ, ຕົວຢ່າງ: ຂັ້ນຕອນຂອງການຂຸດຄົ້ນໄມ້, ການປູກໄມ້ໃນເນື້ອທີ່ໆໄດ້ທຳການຂຸດຄົ້ນແລ້ວ, ຜົນກະທົບຂອງການຂຸດຄົ້ນໄມ້ ຕໍ່ປ່າໄມ້ ແລະ ສິ່ງແວດລ້ອມ ເຊັ່ນ: ລັກສະນະຂອງເສັ້ນທາງ, ແຫຼ່ງນ້ຳ ແລະ ການທຳລາຍ ຫຼື ເຊາະເຈື່ອນດິນ, ຊີວະນາໆພັນ, ເຄື່ອງມືອຸປະກອນຂຸດຄົ້ນທີ່ດີ ແລະ ແທດເໝາະ (ຂະໜາດ, ຄວາມກວ້າງ, ນ້ຳໜັກ, ຕີນ ຫຼື ຮອ່ງຮອຍ ຂອງເຄື່ອງຈັກຂຸດຄົ້ນ) ແລະ ເນື້ອທີ່ຂຸດຄົ້ນ ຖືກຕອ້ງກັບແຜນຄຸ້ມຄອງ/ຈັດສັນ ຫຼືບໍ່.

### 3.2.3.2. ການຢັ້ງຢືນປ່າຜະລິດ

ແຕ່ປີ 1975 ການຜະລິດໄມ້ແບບຍືນນານ ແມ່ນຈຸດປະສົງອັນສຳຄັນຢູ່ໃນນະໂຍບາຍ ຂອງລັດຖະບານ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ນຳໃຊ້ມາດຕະການທີ່ສຳຄັນ ແລະ ຈຳເປັນ ຈຳນວນໜຶ່ງ ເພື່ອເຮັດໃຫ້ປ່າໄມ້ທຳມະຊາດ ທີ່ຍັງເຫຼືອໃນປະຈຸບັນ ຢູ່ພາຍໃຕ້ ການຄຸ້ມຄອງແບບຍືນນານ. ປະຈຸບັນ ລັດຖະບານໄດ້ເລີ່ມຕົ້ນກະກຽມສຳລັບການຢັ້ງຢືນການຄຸ້ມຄອງປ່າໄມ້ ໂດຍການຮວ່ມມືຂອງອົງການຢັ້ງຢືນສາກົນ ພາຍໃຕ້ມາດຖານສາກົນທີ່ສາມາດຮັບຮອງໄດ້. ການຢັ້ງຢືນການຄຸ້ມຄອງປ່າໄມ້ ແມ່ນເຄື່ອງມື ເພື່ອຮັບປະກັນຜະລິດຕະພັນໄມ້ ວ່າ ມາຈາກປ່າໄມ້ ທີ່ມີການຄຸ້ມຄອງແບບຍືນນານ ແລະ ສາມາດຂາຍໃນລາຄາສູງໄດ້. ຍິ່ງໄປກວ່ານັ້ນ ຢູ່ບາງຕະຫຼາດ ຈະເປັນວິທີດຽວເທົ່ານັ້ນ ທີ່ ຜະລິດພັນໄມ້ ຈະສາມາດຖືກຍອມຮັບໄດ້.

ຢູ່ ສປປລາວ, ມາດຖານ ແລະ ຕົວຊີ້ບອກ ສຳລັບ ການຄຸ້ມຄອງປ່າໄມ້ ແບບຍືນນານ ໄດ້ສ້າງຂຶ້ນໃນສົກປີ 1999-2000 ແລະ ໂຄງການທົດລອງການຢັ້ງຢືນປ່າໄມ້ ໄດ້ດຳເນີນການທົດລອງຢູ່ ແຂວງ ສະຫວັນນະເຂດ ແລະ ຄຳມ່ວນ ເປັນເວລາ 1 ປີ ໂດຍນຳໃຊ້ ມາດຖານ ຂອງສະພາບໍລິຫານປ່າໄມ້ ແລະ ສາມາດຖອດຖອນໄດ້ບົດຮຽນຈຳນວນໜຶ່ງ.

### 3.2.3.3. ການມີສ່ວນຮ່ວມຂອງບ້ານ ໃນການຄຸ້ມຄອງປ່າຜະລິດ

ເພື່ອຍົກສູງພາລະບົດບາດ ຂອງວຽກງານປ່າໄມ້ ເຂົ້າໃນການລຶບລ້າງຄວາມທຸກຍາກ, ລັດຖະບານ ໄດ້ກຳນົດນະໂຍບາຍ ສຳລັບປະຊາຊົນຢູ່ໃນເຂດປ່າຜະລິດ ທີ່ໄດ້ຈັດຕັ້ງເປັນອົງການຈັດຕັ້ງປ່າໄມ້ບ້ານ ຄວນໄດ້ເຂົ້າຮ່ວມໃນການວາງແຜນ ແລະ ການດຳເນີນງານ ຢູ່ພາກສະໜາມ ແລະ ຄວນໄດ້ຮັບຜົນປະໂຫຍດ ຈາກການດຳເນີນກິດຈະການດັ່ງກ່າວ.

ມີການສາທິດ ຢູ່ ສປປ ລາວ ທີ່ ສາມາດເອົາ ປະຊາຊົນເຂົ້າຮ່ວມ ໃນການຄຸ້ມຄອງປ່າໄມ້ ທຸກໆດ້ານ ຢ່າງໄດ້ຮັບຜົນ ເຊັ່ນ: ການໝາຍຂອບເຂດ, ການສ້າງແຜນທີ່ ແລະ ການວາງແຜນ ການນຳໃຊ້ທີ່ດິນ, ການສຳຫຼວດປ່າໄມ້, ການວາງແຜນຄຸ້ມຄອງ, ການຂຸດຄົ້ນ ແລະ ການຂາຍ ຜະລິດຕະຜົນປ່າໄມ້. ສອງໂຄງການທົດລອງ ເຊັ່ນ: ໂຄງການຈັດສັນປ່າໄມ້ຮ່ວມ ທີ່ດຳເນີນ ໃນປີ 1993 ໂດຍ ໂຄງການຮ່ວມມືປ່າໄມ້ລາວ-ຊູແອດ ເຊິ່ງໄດ້ຮັບການຊວ່ຍເຫຼືອ ຈາກອົງການຊີດາ ແລະ ໂຄງການຈັດສັນປ່າຜະລິດ ແລະ ອະນຸລັກປ່າໄມ້ ທີ່ໄດ້ຮັບທຶນກູ້ຢືມ ຈາກອົງການ IDA ແລະ ທຶນຊ່ວຍເຫຼືອ ຈາກ ປະເທດຟິນແລນ. ທັງສອງໂຄງການ ໄດ້ຝຶກອົບຮົມພະນັກງານ ແລະ ສ້າງຄູ່ມື ສຳລັບ ການສຳຫຼວດ, ການຄຸ້ມຄອງ ແລະ ການໝາຍຕົ້ນໄມ້ ລວມທັງ ຄູ່ມື ແລະ ບົດແນະນຳ ວິຊາການອື່ນໆ. ເຖິງແນວໃດກໍຕາມ ໂຄງການດັ່ງກ່າວ ແລະ ປະຊາຊົນທີ່ມີສ່ວນກ່ຽວຂອ້ງ ໄດ້ໃຫ້ຄວາມສົນໃຈແຕ່ການຂຸດຄົ້ນໄມ້

ແລະ ການສ້າງລາຍຮັບເທົ່ານັ້ນ ບໍ່ໄດ້ໃຫ້ຄວາມສົນໃຈຕໍ່ການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງ ແລະ ການປູກໄມ້ພໍເທົ່າໃດ.

ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຈະກຳນົດ ທາງເລືອກຕ່າງໆ ເພື່ອໃຫ້ປະຊາຊົນເປົ້າໝາຍ ເຂົ້າຮ່ວມ ກິດຈະກຳການວາງແຜນທຸກຢ່າງ ແລະ ການປະຕິບັດຕົວຈິງ, ເຮັດວຽກຮ່ວມກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ພາຍໃຕ້ກອບ ທີ່ໄດ້ກຳນົດໄວ້ ຢູ່ໃນຄຳສັ່ງ ເລກທີ 01/ນຍ ກ່ຽວກັບ ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍແຜນການ ແລະ ການເງິນ ແລະ ບ້ານເປັນຫົວໜ່ວຍຈັດຕັ້ງປະຕິບັດ. ເພື່ອ ປັບປຸງການຄຸ້ມຄອງ ແລະ ຄວາມສາມາດທາງດ້ານວິຊາການ ທີ່ມີຢູ່ໃນປະຈຸບັນ ຈະແບ່ງປັນ ຊັບພະຍາກອນຊຸກຍູ້ສະເພາະເພື່ອ ຍົກສູງຄວາມສາມາດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແລະ ການຈັດຕັ້ງປ່າໄມ້ບ້ານ ທີ່ກ່ຽວຂ້ອງ.

#### 3.2.3.4. ການເພີ່ມຄວາມກົດດັນ ຕໍ່ ເຂດປ່າສະຫງວນແຫ່ງຊາດ ແລະ ປ່າປະເພດອື່ນໆ

ໃນຂະນະທີ່ມີຄວາມຄາດຫວັງວ່າ ການຄຸ້ມຄອງປ່າຜະລິດແບບຍືນນານ ຈະຄ່ອຍໆໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ, ປ່າໄມ້ທີ່ຍັງເຫຼືອຢູ່ ຈະໄດ້ຮັບຄວາມກົດດັນຕື່ມອີກ ຈາກ ອຸດສາຫະກຳປ່າໄມ້ ຢູ່ພາຍໃນ ທີ່ມີຄວາມສາມາດສູງ ແລະ ຈາກຄວາມຕ້ອງການ ຂອງປະເທດໃກ້ຄຽງ. ໃນຄວາມເປັນຈິງແລ້ວ ການຂຸດຄົ້ນ ຢູ່ໃນຂອບເຂດປ່າສະຫງວນແຫ່ງຊາດ ແລະ ປ່າປະເພດອື່ນໆ ທີ່ອຸດົມສົມບູນ ແມ່ນໄດ້ເກີດຂຶ້ນແລ້ວ. ໄມ້ທ່ອນ ຈາກແຫຼ່ງ ທີ່ບໍ່ໄດ້ຮັບອະນຸຍາດ ຈະ ມີລາຄາຖືກກວ່າ ໄມ້ທ່ອນຈາກເຂດທີ່ມີການກວດກາ ແລະ ປະກົດການດັ່ງກ່າວນີ້ ມັນໄດ້ສົ່ງຜົນກະທົບ ຕໍ່ຄວາມເປັນໄປໄດ້ ທາງດ້ານເສດຖະກິດ ຂອງການຄຸ້ມຄອງ ຈັດສັນປ່າໄມ້ ຢູ່ໃນເຂດປ່າຜະລິດ. ດ້ວຍເຫດນັ້ນ ການກວດກາການຂຸດຄົ້ນໄມ້ ຢູ່ໃນເຂດທີ່ບໍ່ໄດ້ຮັບອະນຸຍາດ ຍັງຈຳເປັນຕອ້ງໄດ້ມີການປັບປຸງໃຫ້ເຂັ້ມແຂງ ແລະ ຕອ້ງວາງມາດຕະການ ເພື່ອສະກັດກັ້ນ ການຂຸດຄົ້ນໄມ້ທີ່ບໍ່ມີການອະນຸຍາດ.

## 3.3. ເຄື່ອງປ່າຂອງດົງ

### 3.3.1. ຄວາມສຳຄັນຂອງເຄື່ອງປ່າຂອງດົງ ຕໍ່ເສດຖະກິດໃນເຂດຊົນນະບົດ

ເຄື່ອງປ່າຂອງດົງ ມີບົດບາດສຳຄັນຕໍ່ເສດຖະກິດໃນເຂດຊົນນະບົດ ຢູ່ ສປປ ລາວ, ຍ້ອນວ່າເຄື່ອງປ່າຂອງດົງໄດ້ສະໜອງ:

- ທາດໂປຣເຕອິນ (ຈາກຊີ້ນສັດປ່າ, ປາ/ປາຝາ, ກົບ, ກຸ້ງ, ກະປູ ແລະ ຫອຍຊະນິດຕ່າງໆ).
- ທາດ ກະລໍລີ, ວິຕະມິນ, ແລະ ເສັ້ນໄຍ ທີ່ເປັນອາຫານ (ຈາກ ເຫັດ, ໜໍ່ໄມ້, ໝາກໄມ້, ຜັກ ແລະ ນ້ຳເຜີ້ງ).
- ວັດຖຸ ສຳລັບກໍ່ສ້າງເຮືອນ ແລະ ການຜະລິດຫັດຖະກຳ (ໄມ້ປ່ອງ, ຫວາຍ, ເຕີຍ, ຫຍ້າແຂມ ແລະ ປໍສາ).
- ຢາພື້ນເມືອງ.
- ລາຍຮັບເປັນເງິນສົດ (ຈາກການຂາຍ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນຈາກເຄື່ອງປ່າຂອງດົງ).

ລາຍຮັບຈາກການຂາຍເຄື່ອງປ່າຂອງດົງ ອາດມີມູນຄ່າ ຫຼາຍກ່ວາ 1/3 ຂອງລາຍຮັບເປັນເງິນສົດຂອງບ້ານ, ໃນເຂດທີ່ມີປ່າໄມ້ອຸດົມສົມບູນ ລາຍຮັບດັ່ງກ່າວ ອາດເພີ່ມຂຶ້ນຫຼາຍກ່ວາເຄິ່ງໜຶ່ງຂອງລາຍຮັບຂອງບ້ານ. ຕາມການປະເມີນໃຫ້ຮູ້ວ່າ ໃນລະດັບຊາດ ເຄື່ອງປ່າຂອງດົງ ມີມູນຄ່າ ປະມານ 320 ໂດລາ ຕໍ່ ປີ ຕໍ່ຄອບຄົວໃນເຂດຊົນນະບົດ ແລະ ລວມທັງໝົດເຄື່ອງປ່າຂອງດົງ ອາດມີມູນຄ່າ ເຖິງ 1.837 ຕື້ ກີບຕໍ່ປີ (ຫຼື ປະມານ 183,7 ລ້ານໂດລາສະຫະລັດ, ໂດຍບໍ່ຄິດໄລ່ ການຊົມໃຊ້ ໄມ້ຟືນ, ປາ, ແລະ ສັດນ້ຳອື່ນໆ).

## 3.3.2. ຄວາມສຳຄັນຂອງເຄື່ອງປ່າຂອງດົງ ຕໍ່ເສດຖະກິດແຫ່ງຊາດ

### 3.3.2.1 ການຜະລິດ ແລະ ການສົ່ງອອກຕ່າງປະເທດ

ສປປ ລາວ ຜະລິດເຄື່ອງປ່າຂອງດົງ ທີ່ມີມູນຄ່າທາງການຄ້າ ເປັນຈຳນວນຫຼວງຫຼາຍ ລວມທັງ ໝາກແໜ່ງ, ໄມ້ເກດສະໜາ, ໄມ້ປ່ອງ, ຫວາຍ, ຂີ້ຊີ, ຢານ, ນ້ຳມັນຍາງ, ໝາກຕາວ ແລະ ໝາກຈອງບານ. ໃນລະຫວ່າງປີ 1994-1998 ການສົ່ງ ເຄື່ອງປ່າຂອງດົງ ອອກຕ່າງປະເທດ ມີມູນຄ່າ ໂດຍສະເລ່ຍ 31,8 ລ້ານ ໂດລາ ຕໍ່ປີ ເຖິງແມ່ນວ່າ ມູນຄ່າການສົ່ງອອກແຕ່ລະປີ ມີຄວາມຜິດດ່ຽງກັນຫຼາຍ (ລະຫວ່າງ 1,1 ລ້ານ ໂດລາ ຫາ 73,2 ລ້ານ ໂດລາ). ໃນບາງປີ ການສົ່ງເຄື່ອງປ່າຂອງດົງອອກຕ່າງປະເທດ ບັນລຸເຖິງ ເຄິ່ງໜຶ່ງ ຂອງການສົ່ງຜະລິດຕະຜົນປ່າໄມ້ອອກຕ່າງປະເທດທັງໝົດ ແລະ ໃນປະຈຸບັນ ການສົ່ງເຄື່ອງປ່າຂອງດົງອອກຕ່າງປະເທດ ຫຼຸດລົງ ຢ່າງຕໍ່ເນື່ອງ ຊຶ່ງມູນຄ່າການສົ່ງອອກ ຢູ່ລະຫວ່າງ 6-7 ລ້ານ ໂດລາ ຕໍ່ປີ.

ເຖິງວ່າ ການປຸງແຕ່ງເຄື່ອງປ່າຂອງດົງທີ່ມີມູນຄ່າທາງດ້ານການຄ້າ ຍັງບໍ່ທັນໄດ້ຮັບການພັດທະນາກໍຕາມ ແຕ່ກໍຍັງມີອຸດສາຫະກຳປຸງແຕ່ງ ຂະໜາດນ້ອຍ ແລະ ຂະໜາດກາງ, ເປັນຕົ້ນ ໂຮງງານຫວາຍ ແລະ ໄມ້ປ່ອງ, ໂຮງງານຜະລິດທູບ, ໂຮງງານສະກັດນ້ຳມັນໄມ້ເກດສະໜາ, ໂຮງງານຜະລິດຢາ, ອຸດສາຫະກຳປໍສາ ຂະໜາດນ້ອຍ ແລະ ໂຮງງານ ສະກັດນ້ຳມັນປຸງແຕ່ງອາຫານ.

### 3.3.2.2 ການຄ້າຂາຍສັດປ່າ

ການຄ້າຂາຍສັດປ່າ ເກີດຂຶ້ນຢ່າງຫຼວງຫຼາຍ, ຕາມການປະເມີນໃຫ້ຮູ້ວ່າ ໃນປີ 2000 ການຄ້າຂາຍສັດປ່າ ມີມູນຄ່າເຖິງ 11,8 ລ້ານໂດລາສະຫະລັດ. ການຄ້າຂາຍສັດປ່າ ໄດ້ເພີ່ມຂຶ້ນ ອັນເນື່ອງມາຈາກ ການເປີດກ້ວາງຕະຫຼາດພາຍໃນ ແລະ ຕະຫຼາດສາກົນ, ເສັ້ນທາງໄປສູ່ເຂດຊົນນະບົດໄດ້ຮັບການປັບປຸງ ແລະ ການເພີ່ມຂຶ້ນຂອງຈຳນວນນັກທ່ອງທ່ຽວຕ່າງປະເທດ. ການຄ້າຂາຍສັດປ່າ ສ່ວນຫຼາຍ ແມ່ນ ເກີດຈາກຄວາມຕ້ອງການຂອງຕະຫຼາດຕ່າງປະເທດ. ການຄ້າຂາຍສັດປ່າ ສ່ວນຫຼາຍ ແມ່ນສົ່ງອອກສູ່ປະເທດໃກ້ຄຽງ ທີ່ມີຄວາມຕ້ອງການຜະລິດຕະພັນສັດປ່າສູງ ເພື່ອເປັນເຄື່ອງປະດັບ, ເພື່ອການບໍລິໂພກ, ເພື່ອລ້ຽງ ແລະ ເພື່ອການປຸງແຕ່ງເປັນຢາພື້ນເມືອງ. ການຄ້າຂາຍ ແລະ ການບໍລິໂພກສັດປ່າ ຢູ່ພາຍໃນປະເທດ ເຖິງວ່າຈະເປັນໄພຂົ່ມຂູ່ຕໍ່ຊີວະນາໆພັນໜ້ອຍກວ່າ ການຄ້າຂາຍລະຫ່ວາງປະເທດກໍຕາມ, ແຕ່ກໍຍັງເປັນບັນຫາຫຍຸ້ງຍາກໃນການຄຸ້ມຄອງຢູ່.

## 3.3.3. ຄວາມສຳຄັນຂອງເຄື່ອງປ່າຂອງດົງ ຕໍ່ ການພັດທະນາປ່າໄມ້ ແລະ ການອະນຸລັກຊີວະນາໆພັນ

ເຄື່ອງປ່າຂອງດົງ ມີບົດບາດສຳຄັນ ຕໍ່ລະບົບນິເວດທຳມະຊາດ ແລະ ການອະນຸລັກເຄື່ອງປ່າຂອງດົງ ແມ່ນມີຄວາມສຳຄັນທີ່ສຸດ ສຳລັບ ການຮັກສາຄວາມສົມດູນຂອງລະບົບນິເວດ ເພື່ອຜົນປະໂຫຍດ ທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ. ຍ້ອນແນວນັ້ນ ລັດຖະບານ ໄດ້ຈຳກັດ ຊະນິດພັນ ໃນການອະນຸຍາດໃຫ້ເກັບກູ້, ລະດູການເກັບກູ້ ແລະ ວິທີການ ເກັບກູ້. ລະບຽບການ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0360/ກປ.2003 ເກືອດຫ້າມການຂຸດຄົ້ນ ເຄື່ອງປ່າຂອງດົງ ຢູ່ໃນເຂດປ່າສະຫງວນແຫ່ງຊາດ ຍົກເວັ້ນການນຳໃຊ້ຕາມປະເພນີ ຂອງປະຊາຊົນ ຢູ່ພາຍໃນທ້ອງຖິ່ນ. ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 164/ນຍ.1993 ເກືອດຫ້າມ ການນຳໃຊ້ ເຄື່ອງປ່າຂອງດົງອື່ນໆ ຢູ່ໃນເຂດປ່າສະຫງວນແຫ່ງຊາດ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ລະບຽບການສະເພາະ ໄດ້ຈຳກັດ ຫຼື ເກືອດຫ້າມການນຳໃຊ້ ເຄື່ອງປ່າຂອງດົງບາງຊະນິດ ໂດຍສະເພາະແມ່ນ ສັດປ່າ ແລະ ປາ.

### 3.3.4. ທ່າອ່ຽງໃນປະຈຸບັນ ສຳລັບການຄົງຕົວ ແລະ ການນຳໃຊ້ ເຄື່ອງປ່າຂອງດົງ

ມີທ່າອ່ຽງສຳຄັນບາງຢ່າງ ທີ່ສະແດງໃຫ້ເຫັນວ່າ ມີການຫັນຄວາມສົນໃຈ ມາໃສ່ການອະນຸລັກ ແລະ ການພັດທະນາ ເຄື່ອງປ່າຂອງດົງ ຫຼາຍຂຶ້ນກວ່າເກົ່າ:

- ປະຊາຊົນທ້ອງຖິ່ນ ໄດ້ເລີ່ມ ເອົາເຄື່ອງປ່າຂອງດົງຈຳນວນໜຶ່ງ ມາປູກເປັນສວນ ແລະ ປູກແບບປະສົມປະສານ.
- ບັນດາບ້ານ ໄດ້ສະແດງຄວາມສາມາດ ໃນການສ້າງຕັ້ງ ແລະ ດຳເນີນ ລະບົບການຄຸ້ມຄອງ ເຄື່ອງປ່າຂອງດົງ ຢ່າງມີປະສິດທິຜົນ.
- ນະໂຍບາຍ ທີ່ເນັ້ນໃສ່ ການຄຸ້ມຄອງປ່າໄມ້ແບບຍືນນານ ໄດ້ເພີ່ມທະວີຄວາມເຂັ້ມແຂງ ໃຫ້ແກ່ການຄຸ້ມຄອງເຄື່ອງປ່າຂອງດົງ.
- ພາກສ່ວນເອກະຊົນ ໄດ້ເລີ່ມຕົ້ນ ລົງທຶນ ໃສ່ອຸດສາຫະກຳປຸງແຕ່ງ ເຄື່ອງປ່າຂອງດົງ ຂະໜາດນ້ອຍ.

ໃນເວລາດຽວກັນນັ້ນ, ກໍມີທ່າອ່ຽງຈຳນວນໜຶ່ງ ທີ່ອາດສົ່ງຜົນໃນແງ່ລົບ ຕໍ່ການຄົງຕົວ ແລະ ຂະຫຍາຍຕົວຂອງເຄື່ອງປ່າຂອງດົງ ເຊັ່ນ:

- ການທຳລາຍປ່າໄມ້ຢ່າງວ່ອງໄວ ດ້ວຍການຫັນປ່ຽນຮູບແບບການນຳໃຊ້ທີ່ດິນ ເພື່ອການກະສິກຳ ແລະ ການສ້າງອ່າງເກັບນ້ຳ, ການຂຸດຄົ້ນທີ່ບໍ່ໄດ້ຮັບອະນຸຍາດ, ໄຟປ່າ ແລະ ການລົບກວນອື່ນໆ.
- ຕະຫຼາດໄດ້ເປີດກ້ວາງ ແລະ ຄວາມຕ້ອງການຜະລິດຕະພັນເຄື່ອງປ່າຂອງດົງໄດ້ເພີ່ມຂຶ້ນ ໃນສະພາບທີ່ ຂາດລະບຽບການ ທີ່ຈະແຈ້ງ ກ່ຽວກັບການຄຸ້ມຄອງເຄື່ອງປ່າຂອງດົງ, ການຮັບປະກັນສິດນຳໃຊ້ ແລະ ລະບົບການຄຸ້ມຄອງ ແບບຍືນນານ.
- ຄວາມຮູ້ທົ່ວໄປ (ພູມປັນຍາທ້ອງຖິ່ນ) ກ່ຽວກັບເຄື່ອງປ່າຂອງດົງ ສ່ວນຫຼາຍ ແມ່ນຢູ່ນຳຄົນລຸ້ນອະວຸໂສ-ເຖົ້າແກ່ ແລະ ມີຄວາມສ່ຽງ ຕໍ່ການສູນເສຍ ຍ້ອນການຍົກຍ້າຍ ແລະ ການປ່ຽນແປງຮູບແບບການດຳລົງຊີວິດຂອງຄົນລຸ້ນໜຸ່ມ.

### 3.3.5. ນິຕິກຳ ກ່ຽວກັບ ເຄື່ອງປ່າຂອງດົງ

#### 3.3.5.1 ສິດນຳໃຊ້ເຄື່ອງປ່າຂອງດົງ ຕາມປະເພນີ

ນິຕິກຳ ທີ່ມີໃນປະຈຸບັນ ຮັບປະກັນ ສິດນຳໃຊ້ ເຄື່ອງປ່າຂອງດົງ ຂອງປະຊາຊົນ ແລະ ສິດນຳໃຊ້ ເຄື່ອງປ່າຂອງດົງຕາມປະເພນີ ຖືກຮັບຮູ້ ຢູ່ໃນກົດໝາຍປ່າໄມ້ ແລະ ໄດ້ກຳນົດ ຢູ່ໃນຂໍ້ຕົກລົງ ເລກທີ 54/ກປ.1996 ແລະ ບົດແນະນຳ ເລກທີ 377/ກປ.1996 ຂອງກະຊວງກະສິກຳ ແລະ ປ່າໄມ້. ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ມີບົດບາດໜ້າທີ່ ໃນການປະຕິບັດ ເພື່ອຈຳກັດ ການນຳໃຊ້ ທີ່ຂັດກັບສິດຕາມປະເພນີ ເຊັ່ນ: ການຖາງປ່າເຮັດໄຮ່, ໄຟປ່າ, ການເຮັດກັບດັກປາ ແລະ ອື່ນໆ.

ພ້ອມກັນນັ້ນ, ປະຊາຊົນ ໄດ້ຮັບການຍົກເວັ້ນ ພາສີຊັບພະຍາກອນທຳມະຊາດ ແລະ ການຂາຍ ເຄື່ອງປ່າຂອງດົງ ແມ່ນໄດ້ຮັບອະນຸຍາດ ຖ້າວ່າ ປະຊາຊົນ ໄດ້ຈັດຕັ້ງກັນ ເປັນກຸ່ມ ຫຼື ເປັນສະມາຄົມ ເພື່ອເກັບກູ້ ສຳລັບການຄ້າ ແລະ ກິດຈະກຳນັ້ນ ຖືກຕ້ອງຕາມແຜນຄຸ້ມຄອງ ທີ່ຮັບຮອງເອົາ ໂດຍ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ນັ້ນແມ່ນການຮັບຮູ້ທາງດ້ານຫຼັກການ ທີ່ສຳຄັນ ແຕ່ກໍມີຄວາມຫຍຸ້ງຍາກ ໃນການສ້າງແຜນຄຸ້ມຄອງ ທີ່ມີລັກສະນະວິທະຍາສາດ.

#### 3.3.5.2 ການຂຸດຄົ້ນເພື່ອການຄ້າ

ໃນລະບຽບການ ແລະ ເງື່ອນໄຂ ການຄ້າຂາຍເຄື່ອງປ່າຂອງດົງ ແມ່ນ ຄືກັບ ການຂາຍໄມ້ ເຊັ່ນ: ຕ້ອງມີແຜນການຂຸດຄົ້ນ, ຕ້ອງມີສັນຍາການຂຸດຄົ້ນ, ການຈ່າຍຄ່າພັນທະ ແລະ ຄ່າທຳນຽມ. ການຂຸດຄົ້ນເຄື່ອງປ່າຂອງດົງ ສາມາດດຳເນີນ ສະເພາະ ຢູ່ໃນເຂດປ່າໄມ້ທີ່ໄດ້ຜ່ານການສຳຫຼວດ ແລະ ມີແຜນຄຸ້ມຄອງເທົ່ານັ້ນ. ພ້ອມກັນນັ້ນ, ຜູ້ຂຸດຄົ້ນເຄື່ອງປ່າຂອງດົງ ຕ້ອງປູກຄືນ ໃນຈຳນວນ ຕາມຫົວໜ່ວຍ ເຄື່ອງປ່າຂອງດົງ ທີ່ໄດ້ຂຸດຄົ້ນ ຫຼື ຈ່າຍພັນທະປູກທົດແທນ. ຄຳສັ່ງຂອງ ນາຍົກລັດຖະມົນຕີ ເລກທີ 10/ນຍ.2000, ຄຳສັ່ງແນະນຳ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1848/ກປ.1999 ແລະ ຂໍ້ກຳນົດຊົ່ວຄາວ ຂອງກະຊວງການເງິນ ເລກທີ 111/ກງ.2000 ໄດ້ຄວບຄຸມ ການຈັດຕັ້ງ ການປູກໄມ້ ແລະ ການຈ່າຍທົດແທນ ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຈາກປ່າທຳມະຊາດ. ສະເພາະການຂຸດຄົ້ນ ເຄື່ອງປ່າຂອງດົງ ຈາກປ່າປູກ ແມ່ນໄດ້ຍົກເວັ້ນຄ່າພັນທະປະເພດນີ້.

#### 3.3.5.3 ແຜນການຂຸດຄົ້ນ ແລະ ການຄ້າຂາຍ ເຄື່ອງປ່າຂອງດົງ

ແຜນການຂຸດຄົ້ນເຄື່ອງປ່າຂອງດົງແຕ່ລະຊະນິດ ໄດ້ຮັບການອະນຸມັດໃນແຕ່ລະປີ ດ້ວຍຄຳສັ່ງຂອງນາຍົກລັດຖະມົນຕີ ແລະ ໄດ້ມອບໝາຍໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ ຈັດແບ່ງໃຫ້ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ. ຂັ້ນຕອນຂອງການອະນຸມັດ ແມ່ນອີງໃສ່ຂໍ້ມູນຈາກການປະເມີນ (ຄິດໄລ່) ຂອງຂະແໜງປ່າໄມ້ແຂວງ.

ການຂາຍ ແລະ ການຂົນສົ່ງຢູ່ແຕ່ລະບ່ອນ, ຜູ້ຊື້-ຂາຍຕ້ອງຈ່າຍອາກອນ ແລະ ຄ່າທຳນຽມບໍລິການ ຊຶ່ງປະກອບດ້ວຍ ຄ່າພັນທະ ແລະ ຄ່າຊັກພິເສດ ໃຫ້ພະແນກການເງິນແຂວງ, ນອກຈາກນັ້ນ ຍັງມີການຈ່າຍເພີ່ມຈຳນວນໜຶ່ງ ໃຫ້ເມືອງ ແລະ ບ້ານ ເພື່ອສ້າງລາຍຮັບໃຫ້ແກ່ທອ້ງຖິ່ນ. ການສົ່ງເຄື່ອງປ່າຂອງດົງ ບາງປະເພດທີ່ບໍ່ໄດ້ປຸງແຕ່ງ ອອກຕ່າງປະເທດ ກໍມີການເກືອດຫ້າມເຊັ່ນດຽວກັນ, ເຊັ່ນ: ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 10/ນຍ.2000 ແລະ ເລກທີ 15/ນຍ.2001 ວ່າດ້ວຍການຫ້າມ ການສົ່ງໄມ້ເກດສະໜາ ແລະ ຫວາຍທຸກໆຊະນິດທີ່ບໍ່ໄດ້ປຸງແຕ່ງ ອອກຕ່າງປະເທດ.

## 3.3.6. ບັນຫາສຳລັບການພັດທະນາເຄື່ອງປ່າຂອງດົງ

### 3.3.6.1. ການຂາດຄວາມຮູ້ ສຳລັບການພັດທະນາເຄື່ອງປ່າຂອງດົງ

ຂໍ້ຫຍຸ້ງຍາກ ຕົ້ນຕໍ ໃນການນຳໃຊ້ ແລະ ການພັດທະນາ ເຄື່ອງປ່າຂອງດົງ ແມ່ນຄວາມຮູ້ ກ່ຽວກັບ ການຂະຫຍາຍພັນ, ດ້ານວະນະວັດວິທະຍາ, ການປູກເສີມ, ການຂຸດຄົ້ນ, ການນຳມາປູກ ແລະ ການຄຸ້ມຄອງເຄື່ອງປ່າຂອງດົງປະເພດຕ່າງໆ ໃນປ່າທຳມະຊາດແບບຍືນນານ ແມ່ນຍັງຢູ່ໃນຂີດຈຳກັດ. ໃນປະຈຸບັນ ແມ່ນມີຄວາມຈຳເປັນຢ່າງຍິ່ງ ທີ່ຈະຕ້ອງໄດ້ສຶກສາ ຊະນິດເຄື່ອງປ່າຂອງດົງ ທີ່ມີຄວາມສຳຄັນ ຕໍ່ການຄ້ຳປະກັນດ້ານສະບຽງອາຫານ, ດ້ານການຄ້າ ແລະ ການອະນຸລັກຊີວະນາໆພັນ ແລະ ຕ້ອງຮັບຮູ້ວ່າ ຊະນິດພັນໃດ ທີ່ໃກ້ຈະສູນພັນ ເພື່ອກຳນົດມາດຕະການທີ່ເໝາະສົມ ໃນການຄຸ້ມຄອງ. ນອກຈາກນັ້ນ, ຄວາມຮູ້ ເພື່ອພັດທະນາ ການອະນຸລັກເຄື່ອງປ່າຂອງດົງກັບທີ່ ກໍເຫັນວ່າມີຄວາມຈຳເປັນເຊັ່ນດຽວກັນ *(ລາຍລະອຽດ ເບິ່ງເອກະສານຕິດຄັດທີ 1).*

ຂະໜາດ ແລະ ຮູບແບບ ຂອງການນຳໃຊ້ເຄື່ອງປ່າຂອງດົງ, ການຄ້າ ແລະ ການຕະຫຼາດ ຢູ່ພາຍໃນປະເທດແມ່ນຍັງບໍ່ທັນຮູ້ ແນ່ນອນ. ຄວາມຮັບຮູ້ກ່ຽວກັບການຄ້າຂາຍເຄື່ອງປ່າຂອງດົງແບບຍືນນານ ສົມທຽບກັບການນຳໃຊ້ເຄື່ອງປ່າຂອງດົງແບບຍືນນານນັ້ນ ກໍເຫັນວ່າຍັງຈຳກັດຫຼາຍ ແລະ ຂໍ້ມູນຂ່າວສານກ່ຽວກັບ ລາຄາ, ມາດຕະຖານທາງດ້ານຄຸນນະພາບ ແລະ ເງື່ອນໄຂໃນການເຈາະຕະຫຼາດສາກົນ ສຳລັບເຄື່ອງປ່າຂອງດົງ ແມ່ນຍັງຈຳກັດຢູ່. ການ

ຂາດຄວາມອາດສາມາດ ໃນການຕີລາຄາ, ຈຳແນກ, ມາດຕະການ ແລະ ການກວດກາ ການຄ້າຂາຍເຄື່ອງປ່າຂອງດົງ ສິ່ງຜົນກະທົບໃນທາງລົບ ຕໍ່ການນຳໃຊ້ແບບຍືນນານ ອັນເປັນເງື່ອນໄຂ ກໍ່ໃຫ້ເກີດມີການຄ້າຂາຍ ເຄື່ອງປ່າຂອງດົງ ປະເພດຫວງຫ້າມ ດຳເນີນຕໍ່ໄປຢູ່.

### 3.3.6.2. ລະບຽບການດ້ານການຕະຫຼາດ ສຳລັບການພັດທະນາເຄື່ອງປ່າຂອງດົງ

ລະບຽບການ ສຳລັບການຜະລິດ ແລະ ການຕະຫຼາດ ເຄື່ອງປ່າຂອງດົງ ຕ້ອງດຸ່ນດ່ຽງກັບ ຄວາມຮັບຮູ້ທາງດ້ານການຕະຫຼາດ ແລະ ຄວາມຍືນນານຂອງຊັບພະຍາກອນ. ວິທີການກຳນົດຕົວເລກໃນການເກັບກູ້ ແລະ ການຕະຫຼາດ ສຳລັບເຄື່ອງປ່າຂອງດົງ ທີ່ມີລັກສະນະວິທະຍາສາດ ບົນພື້ນຖານຄວາມຍືນນານຂອງຊັບພະຍາກອນ ແລະ ການແຂ່ງຂັນ ຕາມກົນໄກຕະຫຼາດ ຈຳເປັນຕອ້ງໄດ້ຮັບການພັດທະນາ ເພື່ອປ່ຽນແທນ ລະບົບທີ່ນຳໃຊ້ ຢູ່ໃນປະຈຸບັນ ເຊິ່ງສວ່ນໃຫຍ່ ແມ່ນອີງໃສ່ແຕ່ຄວາມຕອ້ງການຂອງຕະຫຼາດແຕ່ດ້ານດຽວ.

### 3.3.6.3. ຂໍ້ຈຳກັດດ້ານຄວາມສາມາດ

ໃນປະຈຸບັນ ຈຳນວນພະນັກງານລັດ ທີ່ຮັບຜິດຊອບວຽກງານ ກ່ຽວກັບ ການພັດທະນາເຄື່ອງປ່າຂອງດົງ ທີ່ສັງກັດຢູ່ອົງການຈັດຕັ້ງຕ່າງໆນັ້ນ ມີຈຳນວນໜ້ອຍ ແລະ ຄວາມສາມາດຂອງອົງການເຫຼົ່ານັ້ນ ບໍ່ວ່າທາງດ້ານບຸກຄະລາກອນ ກໍຄືອຸປະກອນຮັບໃຊ້ ເພື່ອເຄື່ອນໄຫວຕາມພາລະບົດບາດຂອງຕົນນັ້ນ ກໍຍັງຈຳກັດຢູ່. ສະນັ້ນ ການຈັດຕັ້ງປະຕິບັດນະໂຍບາຍ ກ່ຽວກັບການຄຸ້ມຄອງການຕະຫຼາດ ແລະ ການພັດທະນາເຄື່ອງປ່າຂອງດົງ ຈະຕ້ອງຮຽກຮ້ອງ ໃຫ້ມີ ການຍົກລະດັບຄວາມສາມາດ ຂອງບຸກຄະລາກອນທີ່ສັງກັດລັດ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ ເຊັ່ນ: ປະຊາຊົນ, ຜູ້ຄ້າຂາຍ ແລະ ຜູ້ປຸງແຕ່ງ ເຄື່ອງປ່າຂອງດົງ.

## 3.4. ການພັດທະນາການປູກໄມ້[6]

### 3.4.1. ຄາດໝາຍ ແລະ ທ່າແຮງ ຂອງການປູກໄມ້ ຢູ່ ສ.ປ.ປ.ລາວ

ຄວາມຕ້ອງການ ຂອງຕະຫຼາດທີ່ກຳລັງເພີ່ມຂຶ້ນ ທັງຢູ່ໃນລະດັບພາກພື້ນ ແລະ ສາກົນນັ້ນ ແມ່ນແນໃສ່ຜະລິດຕະພັນໄມ້ຈາກປ່າປູກ (ສ່ວນໃຫຍ່ແລ້ວ ແມ່ນເພື່ອເປັນເສັ້ນໄຍເຍື່ອເຈັ້ຍ, ເຄື່ອງ ເຟີນີເຈີ ແລະ ອື່ນໆ). ອັດຕາ ການຂະຫຍາຍຕົວທາງເສດຖະກິດ ໃນລະດັບສູງ ຂອງປະເທດໃກ້ຄຽງ ເຊັ່ນ: ຫວຽດນາມ, ໄທ ແລະ ພາກໃຕ້ຂອງຈີນ ໃນປະຈຸບັນ ບວກກັບ ບໍລິມາດນຳໄມ້ເຂົ້າມາຈາກຕ່າງປະເທດ ຂອງຍີ່ປຸ່ນ ແລະ ການສະໜອງໄມ້ຈາກປ່າທຳມະຊາດ ຢູ່ໃນພາກພື້ນຫຼຸດລົງ ເປັນຕົວຊີ້ບອກໃຫ້ຮູ້ວ່າ ການປູກໄມ້ ຢູ່ ສປປ ລາວ ເປັນທ່າແຮງອັນໃຫຍ່ຫຼວງ ແລະ ສິ່ງໄດ້ປຽບຖ້າສົມທຽບໃສ່ບັນດາປະເທດໃກ້ຄຽງ.

ໂດຍລວມແລ້ວ, ທ່າແຮງຂອງເຂດປູກໄມ້ ຢູ່ ສປປລາວ ແມ່ນ ຢູ່ໃກ້ກັບຕະຫຼາດ ຂອງໄທ ແລະ ຫວຽດນາມ ແລະ ຖ້າສົ່ງອອກຜ່ານຫວຽດນາມ ກໍໃກ້ກັບຕະຫຼາດຂອງຍີ່ປຸ່ນ ແລະ ເຂດແຄມຝັ່ງທະເລ ຂອງ ສປ ຈີນ. ໃນປະຈຸບັນ, ຄ່າຂົນສົ່ງ ໄປຫາຕະຫຼາດເຫຼົ່ານັ້ນ ແມ່ນຍັງສູງສົມຄວນ ແຕ່ກໍອາດຫຼຸດລົງໄດ້, ຖ້າວ່າເສັ້ນທາງຂົນສົ່ງ ທີ່ສຳຄັນ ໄດ້ຮັບການພັດທະນາ ແລະ ປັບປຸງສຳເລັດ, ພ້ອມດຽວກັນກໍສາມາດນຳເອົາອຸປະກອນທີ່ທັນສະໄໝເຂົ້າມານຳໃຊ້ໄດ້.

---

6 *ພາກນີ້ ເລັ່ງໃສ່ ປ່າປູກ ເພື່ອຜະລິດ ຫຼື ສະໜອງໄມ້ ເປັນຕົ້ນຕໍ.*

### 3.4.2. ດ້ານນະໂຍບາຍ ແລະ ນິຕິກຳ

ການປູກໄມ້ ແມ່ນ ນະໂຍບາຍອັນເປັນບຸລິມະສິດທີ່ສຳຄັນ ຂອງຊາດ ນັບແຕ່ປະເທດຊາດ ໄດ້ຮັບການປົດປ່ອຍເປັນຕົ້ນມາ. ໃນປີ 1979, ຂໍ້ກຳນົດ ຂອງສະພາລັດຖະມົນຕີ ເລກທີ 74 ໄດ້ສົ່ງເສີມ ການປູກໄມ້ ໃສ່ດິນປອກໂຫຼ້ນ ແລະ ໃນຕົ້ນປີ 1980 ລັດຖະບານ ໄດ້ປະກາດເອົາ ວັນທີ 1 ເດືອນ ມິຖຸນາ ເປັນວັນປູກຕົ້ນໄມ້ແຫ່ງຊາດ. ໃນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 5 ປີ (2001-2005) ລັດໄດ້ຫັນນະໂຍບາຍ ການປູກໄມ້ເພື່ອເປັນສິນຄ້າ ຢ່າງກວ້າງຂວາງ ແລະ ໄດ້ຮັບການສົ່ງເສີມຢ່າງແຂງແຮງ, ຊຶ່ງມີຄາດໝາຍສູ້ຊົນ ໃຫ້ບັນລຸໄດ້ເນື້ອທີ່ປ່າປູກ ເຖິງ 134,000 ເຮັກຕາ.

ຄາດໝາຍສູ້ຊົນ ຂອງການປູກໄມ້ ແລະ ການຜະລິດເບ້ຍໄມ້ ໃນແຕ່ລະປີ ໄດ້ກຳນົດໄວ້ ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ມອບໃຫ້ ແຕ່ລະແຂວງ, ນະຄອນຫຼວງ ແລະ ເຂດພິເສດເປັນຜູ້ ຈັດຕັ້ງປະຕິບັດ.

ນອກຈາກກົດໝາຍປ່າໄມ້ແລ້ວ, ລະບຽບການ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 196/ກປ.2000 ວ່າດ້ວຍ ການພັດທະນາ ແລະ ສົ່ງເສີມ ການປູກໄມ້ ແບບຍາວນານ, ສະບັບເລກທີ 1849/ກປ.2000 ກ່ຽວກັບ ການຂຶ້ນທະບຽນສວນປູກໄມ້ ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີ ໃນແຕ່ລະປີ ກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ (ເລກທີ 11/ນຍ.1999, 10/ນຍ.2000, 15/ນຍ.2001, 18/ນຍ.2002, 28/ນຍ.2003 ແລະ 25/ນຍ.2004) ແມ່ນໄດ້ໃຫ້ຄວາມສຳຄັນ ແລະ ໃຫ້ການສະໜັບສະໜູນ ແກ່ການປູກໄມ້ ເປັນຢ່າງດີ.

ເພື່ອບັນລຸເປົ້າໝາຍດັ່ງກ່າວ, ລັດຖະບານສະໜອງນະໂຍບາຍຊຸກຍູ້ສົ່ງເສີມຕ່າງໆ, ໃນນັ້ນລວມມີ ການແບ່ງປັນ ຫຼື ການໃຫ້ເຊົ່າເນື້ອທີ່ດິນ ເພື່ອປູກໄມ້, ກຳມະສິດຕໍ່ຕົ້ນໄມ້ປູກ, ການຍົກເວັ້ນພາສີທີ່ດິນສຳລັບປ່າປູກ ທີ່ໄດ້ຂຶ້ນທະບຽນ ແລະ ການຢາຍເບ້ຍໄມ້ ໃຫ້ຊາວກະສິກອນ ແລະ ການຈັດຕັ້ງ ໂດຍບໍ່ຄິດໄລ່ມູນຄ່າ. ພັນທະປູກໄມ້ທົດແທນ ຖືກກຳນົດຕາມຈຳນວນໄມ້ທ່ອນ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນ ຈາກປ່າທຳມະຊາດ ແລະ ຖືກນຳໃຊ້ເພື່ອສ້າງສວນກ້າເບ້ຍໄມ້, ການຜະລິດເບ້ຍໄມ້, ການສົ່ງເສີມການປູກໄມ້ ແລະ ການພັດທະນາສວນປູກໄມ້. ນອກນັ້ນ, ລັດຖະບານ ຍັງໄດ້ ຈັດຕັ້ງປະຕິບັດ ໂຄງການປູກໄມ້ຕ່າງໆ ເຊັ່ນ: ໂຄງການປູກໄມ້ອຸດສາຫະກຳ ທີ່ໄດ້ຮັບທຶນກູ້ຢືມ ຈາກທະນາຄານພັດທະນາອາຊີ ແລະ ກຳລັງຮ່ວມມື ກັບອົງການໃຈກ່າ, ດານີດາ, ລັດຖະບານສະວິດເຊີແລນ, ລັດຖະບານເຢຍລະມັນ ແລະ ອົງການຜູ້ໃຫ້ທຶນອື່ນໆ ໃນຮູບການຕ່າງໆ ກ່ຽວກັບການສົ່ງເສີມການປູກໄມ້.

### 3.4.3. ສະພາບການປູກໄມ້ ໃນປະຈຸບັນ

#### 3.4.3.1. ເນື້ອທີ່ປ່າປູກ

ມາຮອດປະຈຸບັນ ເນື້ອທີ່ປ່າປູກທັງໝົດ ທົ່ວປະເທດ ມີປະມານ 146.600 ເຮັກຕາ ຊຶ່ງ ສ່ວນຫຼາຍຢູ່ໃນພາກກາງ. ຈາກການປະເມີນເຫັນວ່າ ໃນປະຈຸບັນ ເນື້ອທີ່ປ່າປູກທີ່ໄດ້ມາດຖານຂອງສວນປູກໄມ້ (ອັດຕາການລອດຕາຍສູງກວ່າ 70%) ມີປະມານ 66% ໃນທົ່ວປະເທດ.

ອີງຕາມຂໍ້ມູນ ຂອງໂຄງການປູກໄມ້ ລາວ-ທະນາຄານພັດທະນາອາຊີ ສະແດງໃຫ້ເຫັນວ່າ ຊາວກະສິກອນລາຍບຸກຄົນ ແລະ ບໍລິສັດ ມີເນື້ອທີ່ສວນປູກ ສະເລັ່ຍແຕ່ 20-30 ເຮັກຕາ ກວມເອົາເນື້ອທີ່ປ່າປູກເປັນສ່ວນໃຫຍ່ (47,5%). ໃນໂຄງການນີ້ ຊາວກະສິກອນຂະໜາດນ້ອຍ ທີ່ມີເນື້ອທີ່ສວນປູກສະເລັ່ຍ 1,8 ເຮັກຕາ/ຄອບຄົວ ແມ່ນເປັນເຈົ້າຂອງສວນປູກໃນຈຳນວນສູງ ກວມເອົາປະມານ 30% ຂອງເນື້ອທີ່ປ່າປູກ ຂອງໂຄງການ ທັງໝົດ.

ສ່ວນບໍລິສັດທີ່ມີເນື້ອທີ່ສວນປູກປະມານ 200 ເຮັກຕາ ກວມເອົາພຽງ 1% ຂອງ ຈຳນວນ ລູກຄ້າທັງໝົດ ແຕ່ ມີເນື້ອທີ່ສວນປູກກວມເອົາ 10%. ສ່ວນເຫຼືອນັ້ນ ແມ່ນການປະກອບສ່ວນຂອງຄອບຄົວ ຄື ປະມານ 13%.

### 3.4.3.2. ຜະລິດຕະພາບ ແລະ ຜົນໄດ້ຮັບຂອງສວນປູກໄມ້

ຈາກຜົນການສຳຫຼວດປ່າປູກ ໄມ້ວິກ ຢູ່ແຂວງວຽງຈັນ ແລະ ສະຫວັນນະເຂດ ໃນເດືອນ ພະຈິກ 2002 ສະແດງໃຫ້ເຫັນວ່າ ປ່າປູກດັ່ງກ່າວມີ ອັດຕາການເຕີບໃຫຍ່ສະເລັ່ຍແຕ່ລະປີ ເທົ່າກັບ 6,2 ມ$^3$/ເຮັກຕາ/ປີ ແລະ ມີຄ່າສະເລັ່ຍ ສູງກວ່າ 5 ມ$^3$/ເຮັກຕາ/ປີ ໜ້ອຍໜຶ່ງ. ໃນບັນດາຜູ້ລົງທຶນ ຫຼື ເຈົ້າຂອງສວນປູກໄມ້ທີ່ແຕກຕ່າງກັນ, ສວນປູກໄມ້ຂອງບໍລິສັດທີ່ປູກໄມ້ເພື່ອການຄ້າ ແລະ ສວນປູກຂອງບຸກຄົນ ທີ່ລົງທຶນດ້ວຍແຫຼ່ງທຶນຕົນເອງ ມີອັດຕາການເຕີບໃຫຍ່ ສູງກວ່າ 14ມ$^3$/ເຮັກຕາ/ປີ ແລະ 12 ມ$^3$/ເຮັກຕາ/ປີ ຕາມລຳດັບ. ເຈົ້າຂອງ ສວນປູກໄມ້ຂະໜາດໃຫຍ່ ຜູ້ທີ່ລົງທຶນສູງ ຕໍ່ຫົວໜ່ວຍເນື້ອທີ່ ແລະ ນຳໃຊ້ ຝຸ່ນວິທະຍາສາດ, ມີການກະກຽມເນື້ອທີ່, ກະກຽມດິນ ດ້ວຍກົນຈັກ ແລະ ມີການຄຸ້ມຄອງດີ, ອັດຕາ ການເຕີບໃຫຍ່ສະເລ່ຍແຕ່ລະປີ ແມ່ນສູງກວ່ານັ້ນ. ໃນຂະນະທີ່ເຈົ້າຂອງສວນປູກໄມ້ຂະໜາດ 10 ເຮັກຕາ ຫຼື ຫຼາຍກວ່າ ສ່ວນຫຼາຍ ອັດຕາການເຕີບໃຫຍ່ ແມ່ນຢູ່ໃນລະດັບ 9 ມ$^3$/ເຮັກຕາ/ປີ. ສວນປູກໄມ້ທີ່ມີເນື້ອທີ່ຂະໜາດນ້ອຍກວ່າ ແມ່ນມີອັດຕາການເຕີບໃຫຍ່ຕ່ຳກວ່າ. ສະນັ້ນ ຈຶ່ງສະຫຼຸບໄດ້ວ່າ ຜະລິດຕະພາບ ຂອງສວນປູກໄມ້ ທີ່ມີໃນປະຈຸບັນ ເວົ້າລວມ ແມ່ນຍັງຕ່ຳກວ່າທີ່ໄດ້ຄາດຄະເນໄວ້.

ຍ້ອນອັດຕາການເຕີບໃຫຍ່ ທີ່ຕ່ຳຄືດັ່ງກ່າວນັ້ນ ອາດເຮັດໃຫ້ການປູກໄມ້ ບໍ່ສາມາດຄົງຕົວຢູ່ໄດ້. ອີງຕາມການຄິດໄລ່ເບື້ອງຕົ້ນ ສະແດງໃຫ້ຮູ້ວ່າ: ລາຄາໄມ້ໃນປະຈຸບັນ ຢູ່ສວນປູກແຄມທາງ (ປະມານ 10 ໂດລາ/ມ$^3$), ເພື່ອຢາກເຮັດໃຫ້ ການປູກໄມ້ຄົງຕົວຢູ່ໄດ້ ແລະ ມີປະສິດຕິຜົນທາງດ້ານເສດຖະກິດນັ້ນ, ອັດຕາການເຕີບໃຫຍ່ຂອງໄມ້ໃນສວນປູກສະເລັ່ຍແຕ່ລະປີ ຕ່ຳສຸດຕ້ອງເທົ່າກັບ 20/ມ$^3$/ເຮັກຕາ/ປີ - ໃນການສຸ່ມຕົວຢ່າງ ໃນຈຳນວນສວນປູກໄມ້ 108 ຕອນ, ມີພຽງແຕ່ 1 ຕອນ ເທົ່ານັ້ນ ທີ່ມີອັດການເຕີບໃຫຍ່ສະເລັ່ຍແຕ່ລະປີ ໄດ້ມາດຖານຕາມຕົວເລກນີ້. ຕາມການປະເມີນໃຫ້ຮູ້ວ່າ ໃນລະດັບອັດຕາການເຕີບໃຫຍ່ສະເລັ່ຍຕໍ່ປີ ແລະ ໃນລາຄາດັ່ງທີ່ກ່າວມານີ້ ອັດຕາລາຍຮັບຕອບແທນພາຍໃນ ຂອງການລົງທຶນປູກໄມ້ ຈະເທົ່າກັບ 17% ຖ້າຫາກວ່າ ມູນຄ່າການລົງທຶນເທົ່າກັບ 600 ໂດລາ/ເຮັກຕາ ແລະ ຈະເທົ່າກັບ 9% ຖ້າວ່າ ມູນຄ່າການລົງທຶນ ເທົ່າກັບ 900 ໂດລາ/ເຮັກຕາ. ໃນອັດຕາການເຕີບໃຫຍ່ສະເລັ່ຍແຕ່ລະປີ ເທົ່າກັບ 10 ມ$^3$/ເຮັກຕາ/ປີ ນັ້ນ ລາຍຮັບຈາກການລົງທຶນ ຈະເທົ່າກັບ 3% (ສຳລັບມູນຄ່າການລົງທຶນ 600 ໂດລາ/ເຮັກຕາ) ແລະ 4% (ສຳລັບມູນຄ່າການລົງທຶນ 900 ໂດລາ/ເຮັກຕາ).

## 3.4.4. ທຶນ ສຳລັບ ການປູກໄມ້

ທຶນ ສຳລັບການປູກໄມ້ ສ່ວນໜຶ່ງ ແມ່ນໄດ້ມາຈາກ ມູນຄ່າຊັບສິນ ຫຼື ແຫຼ່ງເງິນສົດ ຂອງບໍລິສັດເອງ, ມາຈາກການສະສົມ ແລະ ແຮງງານ ຂອງ ຊາວກະສິກອນ ແລະ ສ່ວນໜຶ່ງ ແມ່ນເງິນກູ້ ຈາກທະນາຄານ. ໃນປັດຈຸບັນມີພຽງທະນາຄານດຽວເທົ່ານັ້ນ ຄື: ທະນາຄານສົ່ງເສີມ ກະສິກຳ ໄດ້ເຂົ້າຮ່ວມໃນການໃຫ້ເງິນກູ້ຢືມ ຂອງໂຄງການປູກໄມ້ອຸດສາຫະກຳ ລາວ-ທະນາຄານພັດທະນາອາຊີ, ສ່ວນ ທະນາຄານການຄ້າອື່ນໆ ຂອງ ສປປລາວ ໄດ້ຢຸດຕິການໃຫ້ເງິນກູ້ຢືມ ສຳລັບຈຸດປະສົງນີ້. ທະນາຄານສົ່ງເສີມກະສິກຳ ໄດ້ເກັບດອກເບັ້ຍ 7% ຈາກຜູ້ກູ້ຢືມ ແລະ ໃນຂະນະທີ່ເຂົາເຈົ້າຍັງເປັນລູກໜີ້ຢູ່ນັ້ນ ອັດຕາເງິນເຟີ້ ແມ່ນສູງຂຶ້ນເລື້ອຍໆ, ດັ່ງນັ້ນ ຈຶ່ງເຮັດໃຫ້ ກິດຈະການປ່ອຍເງິນ ຂອງທະນາຄານດັ່ງກ່າວ ບໍ່ມີຄວາມໝັ້ນຄົງ.

### 3.4.5. ການປະຕິບັດນະໂຍບາຍ ຕໍ່ ການປູກໄມ້

#### 3.4.5.1. ນະໂຍບາຍ ດ້ານພາສີອາກອນ

ກົດໝາຍປ່າໄມ້, ກົດໝາຍສ່ວຍສາອາກອນ ແລະ ດຳລັດ ເລກທີ 150/ນຍ.2000 ວ່າດ້ວຍ ພາສີທີ່ດິນ ໄດ້ກຳນົດການຍົກເວັ້ນ ພາສີ ແລະ ທຳນຽມທີ່ດິນ ສຳລັບປ່າປູກ ທີ່ໄດ້ຮັບການຂຶ້ນທະບຽນ ນຳຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຊຶ່ງເປັນໜ່ວຍງານ ອອກໃບຢັ້ງຢືນ ສິດນຳໃຊ້ທີ່ດິນ. ບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງລົງທຶນປູກໄມ້ເປັນສິນຄ້າ ຕ້ອງສະເໜີ ຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອກວດກາ ແລະ ອອກໃບຢັ້ງຢືນທີ່ດິນກ່ອນຈະດຳເນີນການປູກໄມ້.

#### 3.4.5.2. ການແບ່ງປັນຜົນປະໂຫຍດ

ລັດຖະບານ ໄດ້ລະດົມຊາວກະສິກອນ ຜູ້ບໍ່ມີທຶນຮອນ ຫຼື ຄວາມຮູ້ ດ້ານການປູກໄມ້ ເຂົ້າຮ່ວມໃນລະບົບການປູກໄມ້ ແບບແບ່ງປັນຜົນປະໂຫຍດ. ລະບົບດັ່ງກ່າວ ໄດ້ດຳເນີນມາແຕ່ 1997 ແລະ ໄດ້ທົດລອງ ຢູ່ 2 ຕົວເມືອງ ໃນແຂວງວຽງຈັນ ພາຍໃຕ້ ໂຄງການອະນຸລັກ ແລະ ຟື້ນຟູ ປ່າໄມ້ ທີ່ໄດ້ຮັບການຊ່ວຍ ເຫຼືອຈາກ ລັດຖະບານ ສປປ ລາວ ແລະ ອົງການໃຈກ່າ. ພາຍໃຕ້ລະບົບນີ້ ຊາວກະສິກອນ ແລະ ລັດ ໄດ້ສ້າງສວນປູກໄມ້ຮ່ວມກັນ ໂດຍແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ສະໜອງງົບປະມານເບື້ອງຕົ້ນ (ເປັນວັດຖຸ: ເບ້ຍໄມ້, ໜາມໝາກຈັບ, ເຕັກນິກວິຊາການ ແລະ ອື່ນໆ), ສ່ວນຊາວກະສິກອນ ຜູ້ເຂົ້າຮ່ວມ ໄດ້ສະໜອງຊັບພະຍາກອນຂອງຕົນເອງທີ່ມີ, ຊຶ່ງສ່ວນໃຫຍ່ ແມ່ນ ທີ່ດິນ, ແຮງງານສຳລັບປູກ ແລະ ບົວລະບັດຮັກສາຕົ້ນໄມ້. ເມື່ອປ່າປູກ ມີອາຍຸທີ່ສາມາດຕັດໄດ້ແລ້ວ, ຜົນປະໂຫຍດທີ່ໄດ້ຮັບ ລວມທັງ ຈາກການຕັດສາງ ແລະ ການຂຸດຄົ້ນ ຈະແບ່ງປັນຕາມອັດຕາສ່ວນ 20% ໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ 80% ໃຫ້ຊາວກະສິກອນ ຜູ້ເຂົ້າຮ່ວມ.

#### 3.4.5.3. ການປູກໄມ້ ຊະນິດພັນພື້ນເມືອງ: ສວນປູກໄມ້ສັກ ຂອງປະຊາຊົນ

ປະຊາຊົນ ຢູ່ແຂວງພາກເໜືອໄດ້ເລີ່ມປູກໄມ້ສັກ ມາແຕ່ 2 ຫາ 3 ທົດສະວັດ ຜ່ານມາ. ພວກເຂົາເຈົ້າປູກເປັນເນື້ອທີ່ນ້ອຍ ແຕ່ 0,1 ຫາ 1 ເຮັກຕາ ຕາມແຄມເສັ້ນທາງ, ແມ່ນ້ຳ ແລະ ຫ້ວຍຮ່ອງ, ແຄມທາງຍ່າງ ແລະ ຕາມແຄມຮົ້ວ (ເຮັດຮົ້ວຂຽວ), ລຽບເນື້ອທີ່ນາ ແລະ ແຄມເຮືອນ. ເນື້ອທີ່ປ່າປູກໄມ້ສັກ ທັງໝົດມີປະມານ 8.000 ເຮັກຕາ. ການຂຸດຄົ້ນໄມ້ປູກດັ່ງກ່າວ ໄດ້ດຳເນີນໄປ ດ້ວຍວິທີການຂຸດຄົ້ນ ແບບຕັດຍອນ ເປັນການຮັບປະກັນ ກະແສລາຍຮັບຢ່າງຕໍ່ເນື່ອງ ຕະຫຼອດປີ.

ໄມ້ສັກສ່ວນຫຼາຍ ແມ່ນ ໄດ້ປຸງແຕ່ງເປັນເຄື່ອງເຟີນີເຈີ, ໄມ້ປູພື້ນ ແລະ ເຄື່ອງປະດັບ ສຳລັບຕະຫຼາດພາຍໃນ ແລະ ປະຊາຊົນ ກໍສາມາດຂາຍໄມ້ທ່ອນຂອງເຂົາເຈົ້າ ໄດ້ຢ່າງສະດວກດີ, ຍ້ອນວ່າ ຄວາມຕ້ອງການໄມ້ສັກ ເພີ່ມຂຶ້ນເລື້ອຍໆ (ປະມານ 10.000 ມ$^3$ ໄມ້ທ່ອນ ຢູ່ໃນຈຳນວນປີມໍ່ໆນີ້), ສະນັ້ນ ຈຶ່ງເຫັນວ່າການປູກໄມ້ສັກ ມີອານາຄົດດີ, ມີຄວາມຕອ້ງການສູງຂອງຕະຫຼາດຕ່າງປະເທດ ໂດຍສະເພາະ ແມ່ນເຟີນີເຈີພາຍໃນສວນ (ລວມທັງ ເຟີນີເຈີໃນຮົ່ມ) ແມ່ນມີຄວາມຕອ້ງການສູງ. ຍິ່ງໄປກວ່ານັ້ນ ຖ້າໄມ້ປູກນັ້ນ ຫາກມາຈາກສວນປູກໄມ້ແບບຍືນນານ ກໍຍັງເປັນທີ່ນິຍົມສູງ ຢູ່ໃນຕະຫຼາດຕ່າງປະເທດ ໂດຍສະເພາະ ແມ່ນຕະຫຼາດຮ່ວມເອີຣົບ.

ດັ່ງນັ້ນ, ການປູກໄມ້ສັກ ຈຶ່ງແມ່ນທາງເລືອກທີ່ມີຄວາມຮັບປະກັນ ໃຫ້ແກ່ຊາວກະສິກອນ ແລະ ລັດຖະບານກຳລັງພິຈາລະນາ ໃຫ້ການສົ່ງເສີມ ຊຶ່ງໃນນັ້ນ ລວມທັງການປັບປຸງພັນ, ການຄຸ້ມຄອງປ່າປູກ ແລະ ວິທີການຕັດ; ການຊ່ວຍເຫຼືອ ໃນການຈັດຕັ້ງກຸ່ມຊາວກະສິກອນ, ການພັດທະນາການຕະຫຼາດ ແລະ ຜະລິດຕະພັນ; ແລະ ເພີ່ມເນື້ອ

ທີ່ດິນ ແລະ ງົບປະມານ ໃຫ້ ຊາວກະສິກອນ ເພື່ອປູກໄມ້ສັກ. ການສ້າງກຸ່ມ ຫຼື ສະມາຄົມຜູ້ປູກໄມ້ສັກ ຈະຊ່ວຍເຂົາເຈົ້າ ໃນການເຈລະຈາຕໍ່ລອງລາຄາທີ່ດີກວ່າ ກັບຜູ້ຊື້ ແລະ ໃນການແລກປ່ຽນຂໍ້ມູນຂ່າວສານ ດ້ານວິຊາການ ກ່ຽວກັບການຜະລິດໄມ້ສັກ.

## 3.4.6. ບັນຫາ ໃນການປັບປຸງການພັດທະນາການປູກໄມ້

### 3.4.6.1. ຜົນຮັບ ຈາກການປູກໄມ້ ຕ່ຳ

<u>**ການນຳໃຊ້ເຕັກນິກວິຊາການ ເຕັກໂນໂລຢີ ທີ່ບໍ່ເໝາະສົມ ແລະ ບໍ່ພຽງພໍ**</u>

ເພື່ອຢາກໃຫ້ອັດຕາການເຕີບໃຫຍ່ ຂອງໄມ້ປູກ ເປັນທີ່ໜ້າເພິ່ງພໍໃຈ ຈຳເປັນຕ້ອງໄດ້ມີ ການປູກ ແລະ ການຄຸ້ມຄອງປ່າປູກທີ່ດີ. ປ່າປູກ ຂອງບໍລິສັດ ໃນເນື້ອທີ່ຂະໜາດໃຫຍ່ ທີ່ມີການກະກຽມພື້ນທີ່ ດ້ວຍກົນຈັກ, ມີການໃສ່ຝຸ່ນ (ວິທະຍາສາດ), ມີການລິງທິນຫຼາຍ ຕໍ່ເຮັກຕາ ແລະ ມີການຄຸ້ມຄອງດີນັ້ນ ສະແດງໃຫ້ເຫັນວ່າ ການເຕີບໃຫຍ່ສະເລ່ຍແຕ່ລະປີ 10-15 ມ$^3$/ເຮັກຕາ/ປີ, ໃນຂະນະທີ່ຊາວກະສິກອນ ທີ່ປູກໃນເນື້ອທີ່ໜ້ອຍກວ່າ 2 ເຮັກຕາຕໍ່ຄອບຄົວ ຊຶ່ງສ່ວນຫຼາຍ ແມ່ນປູກຕາມແຄມຮົ້ວ ຫຼື ແຄມທາງ ແລະ ມີການຄຸ້ມຄອງບໍ່ດີ ຫຼື ບໍ່ມີການຄຸ້ມຄອງ ພາຍຫຼັງການປູກນັ້ນ ແມ່ນມີອັດຕາການເຕີບໃຫຍ່ ພຽງ 5 ມ$^3$/ເຮັກຕາ/ປີ.

ໃນທີ່ຜ່ານມາ ກໍໄດ້ມີຄວາມພະຍາຍາມບາງດ້ານມາແລ້ວ ເຊັ່ນ: ໂຄງການແກ່ນພັນ ຂອງສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ທີ່ມີຈຸດປະສົງ ເພື່ອກຳນົດ ແລະ ປົກປັກຮັກສາ ຕົ້ນໄມ້ແມ່ພັນ ຊຶ່ງເຮົາສາມາດເກັບແກ່ນ ທີ່ມີຄຸນນະພາບສູງ ແລະ ເພື່ອພັດທະນາ ສວນກ້າເບ້ຍໄມ້ ທີ່ມີເຕັກນິກ-ວິທະຍາການ ທີ່ດີກວ່າເກົ່າ. ໂຄງການອື່ນໆ ເຊັ່ນ: ໂຄງການປັບປຸງລະບົບການສົ່ງເສີມ (ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ແຫ່ງຊາດ-ສະວິດເຊີແລນ) ແລະ ໂຄງການສົ່ງເສີມການສຶກສາດ້ານປ່າໄມ້ (ມະຫາວິທະຍາໄລແຫ່ງຊາດ-ເຢຍລະມັນ).

<u>**ລາຄາຕົກຕ່ຳ**</u>

*ລາຄາຂາຍໄມ້ປູກໃນປະຈຸບັນ* ທີ່ຕ່ຳກວ່າຄ່າຊຸດຄົ້ນ ແລະ ຄ່າຂົນສົ່ງ ພາໃຫ້ຜູ້ປູກຫຼຸບທຶນ ຫຼື ກ້າວໄປເຖິງມີລາຄາຕິດລົບ ຢູ່ກັບປ່າປູກ. ສະນັ້ນ, ເພື່ອຢາກແກ້ໄຂບັນຫານີ້ ຕ້ອງໄດ້ດຳເນີນການສຶກສາຕະຫຼາດ ແລະ ການຕະຫຼາດ ເພື່ອກວດເບິ່ງເງື່ອນໄຂ ໃນການຂາຍຜະລິດຕະພັນປ່າປູກ, ກຳນົດ ແລະ ກວດກາ ຄຸນນະພາບ ແລະ ລາຄາ ແລະ ໃຫ້ມີການກຳນົດເງື່ອນໄຂທີ່ເໝາະສົມ ໃນການວາງລາຄາເພີ່ມຂຶ້ນ ຫຼື ຫຼຸດລາຄາຂອງສິນຄ້າລົງ.

### 3.4.6.2. ດ້ານນິຕິກຳ

ເບິ່ງລວມແລ້ວເຫັນວ່າ ບັນດາເອກະສານທາງດ້ານນິຕິກຳຕ່າງໆ ໃນປະຈຸບັນ ແມ່ນມີຄວາມເໝາະສົມ ແລະ ພຽງພໍແລ້ວ ເພາະວ່າໄດ້ມີການກຳນົດ ໃຫ້ຜູ້ປູກຕົ້ນໄມ້ ມີສິດຄອບຄອງ, ສິດນຳໃຊ້ , ສິດໄດ້ຮັບໝາກຜົນ, ສິດໂອນ ແລະ ສິດສືບທອດ ຕົ້ນໄມ້ ທີ່ເຂົາເຈົ້າໄດ້ປູກ ແລະ ທີ່ດິນປ່າໄມ້ ທີ່ເຂົາເຈົ້າຄອບຄອງ (ກົດໝາຍປ່າໄມ້, ມາດຕາ 49). ຍິ່ງໄປກວ່ານັ້ນ, ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ເລກທີ 03/ນຍ ວ່າດ້ວຍການສືບຕໍ່ຜັນຂະຫຍາຍ ວຽກງານ ການຈັດສັນທີ່ດິນ ແລະ ມອບດິນ-ມອບປ່າ ກຳນົດວ່າ ລັດຖະບານ ມອບເນື້ອທີ່ປ່າຊຸດໂຊມ ໃຫ້ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ເພື່ອປູກຕົ້ນໄມ້.

ເຖິງຢ່າງໃດກໍຕາມ ຍັງມີບາງຂອດ ຕ້ອງໄດ້ຮັບການປັບປຸງ: ***ກ່ອນອື່ນໝົດ*** ແມ່ນມີຄວາມຈຳເປັນ ຕ້ອງໄດ້ຈັດ ໃຫ້ເປັນລະບົບ ໂດຍຮັບໂຮມບັນດາລະບຽບກົດໝາຍຕ່າງໆ ທີ່ຍັງໃຊ້ໄດ້ເຂົ້າເປັນອັນດຽວກັນ ແລະ ລຶບລ້າງ ອັນທີ່ໃຊ້ ບໍ່ໄດ້ ຫຼື ຖືກລຶບລ້າງແລ້ວ ອອກໃຫ້ໝົດ. ***ບັນຫາທີສອງ***, ພາຍໃຕ້ ນິຕິກຳ ໃນປະຈຸບັນ ຜູ້ປູກໄມ້ຕ້ອງໄດ້ຮັບອະນຸຍາດ ຈາກຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ສຳລັບການປູກ, ການຕັດສາງ, ການຂຸດຄົ້ນ, ການຂາຍ ແລະ ການເຄື່ອນຍ້າຍໄມ້ທ່ອນ. ລັດ ຄວນສຶກສາເຖິງຄວາມເປັນໄປໄດ້ ໃນການເຮັດໃຫ້ລະບຽບການດັ່ງກ່າວນັ້ນ ກະທັດຮັດ ຫຼື ງ່າຍຂຶ້ນ ກວ່າເກົ່າ. ພ້ອມດຽວກັນ, ກໍຄວນລຶບລ້າງ ບັນດາຂໍ້ເກືອດຫ້າມຕ່າງໆ ສຳລັບການປຸງແຕ່ງໄມ້ປູກ ຂອງໂຮງງານປຸງແຕ່ງໄມ້. ***ບັນຫາທີສາມ***, ລັດ ຄວນສຶກສາ ວິທີທາງ ເພື່ອເຮັດໃຫ້ສິດທາງນິຕິກຳ ທີ່ຜູ້ປູກໄມ້ປະເພດຕ່າງໆມີ ຕໍ່ເນື້ອທີ່ດິນປູກໄມ້ ໃຫ້ເທົ່າທຽມກັນ. ປະຈຸບັນ ບໍລິສັດຕ່າງປະເທດ ອາດເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ໃນໄລຍະ ເວລາສູງສຸດບໍ່ເກີນ 30 ປີ (ມາດຕາ 65, ກົດໝາຍທີ່ດິນ), ໃນຂະນະທີ່ ປະຊາຊົນໄດ້ຮັບໃບຢັ້ງຢືນທີ່ດິນ (ຊົ່ວຄາວ) ເຊິ່ງມີກຳນົດພາຍໃນ 3 ປີ (ມາດຕາ 18, ກົດໝາຍທີ່ດິນ) ແລະ ຫຼັງຈາກໄດ້ຮັບການຢັ້ງຢືນໃນການຈັດຕັ້ງປະຕິບັດໃນ 3 ປີ ແລ້ວ ເຂົາເຈົ້າ ກໍຈະໄດ້ຮັບສິດ ຄຸ້ມຄອງທີ່ດິນແບບຖາວອນ. ດັ່ງນັ້ນ ຄວນຕ້ອງໄດ້ມີການພິຈາລະນາ ກ່ຽວກັບ ຂັ້ນຕອນ ເພື່ອປ່ຽນໃບຢັ້ງຢືນການນຳໃຊ້ທີ່ດິນຊົ່ວຄາວ ເປັນໃບຕາດິນຖາວອນ.

#### 3.4.6.3. ການສະໜອງທຶນ ແລະ ນະໂຍບາຍຕ່າງໆ

ທະນາຄານ ສົ່ງເສີມກະສິກຳ ໃຫ້ກູ້ຢືມທຶນ ຂອງໂຄງການປູກໄມ້ ລາວ-ທະນາຄານພັດທະນາອາຊີ ສຳລັບປູກ ໄມ້ອຸດສະຫະກຳ ແຕ່ໄດ້ສູນເສຍທຶນ ໃນການດຳເນີນງານແຕ່ລະຂັ້ນຕອນ, ດັ່ງນັ້ນ ໃນອະນາຄົດມໍ່ໆນີ້ ທະນາຄານດັ່ງກ່າວ ອາດຕ້ອງຢຸດເຊົາການໃຫ້ກູ້ຢືມເງິນ ຫຼື ອາດຈະເພີ້ມອັດຕາດອກເບ້ຍຂຶ້ນ ເພື່ອປ້ອງກັນ ສະຖານະພາບທາງການເງິນ ຂອງທະນາຄານເອງ ແລະ ສົ່ງເສີມໃຫ້ທະນາຄານຂອງລັດ ແລະ ທະນາຄານການຄ້າອື່ນໆ ປ່ອຍເງິນກູ້ ສຳລັບ ການປູກໄມ້. ລັດຖະບານ ຄວນພິຈາລະນາ ວິທີທາງ ໃນການປັບປຸງກົນໄກສະໜອງທຶນຮອນ ເພື່ອການປູກໄມ້.

ໃນປະຈຸບັນ, ປ່າປູກ ໄດ້ຮັບການຍົກເວັ້ນພາສີ ຫຼື ທຳນຽມທີ່ດິນ (ຍົກເວັ້ນຄ່າເຊົ່າ). ລັດຖະບານ ຈະສຶກສາ ເບິ່ງວ່າ ຈະສາມາດກຳນົດນະໂຍບາຍຊຸກຍູ້ ທາງດ້ານພາສີ ຫຼື ທາງອື່ນ ສຳລັບການປູກໄມ້ໄດ້ເພີ່ມອີກ ຫຼື ບໍ່ ແລະ ຈະມີຄວາມເປັນໄປໄດ້ ແລະ ມີຄວາມເໝາະສົມ ເພື່ອກຳນົດນະໂຍບາຍຊຸກຍູ້ ພາສີແບບພິເສດ ສຳລັບ ຜູ້ລົງທຶນຕ່າງປະເທດ ທີ່ໃຫ້ຄວາມສົນໃຈ ໃນການລົງທຶນປູກໄມ້.

## 3.5. ແຜນການຂຸດຄົ້ນ ແລະ ຄ່າພັນທະ

ເພື່ອຄວບຄຸມການຂຸດຄົ້ນໄມ້ ໃນແຕ່ລະປີ ລັດຖະບານ ໄດ້ກຳນົດແຜນການຂຸດຄົ້ນໄມ້ ແລະ ຄ່າພັນທະ ສຳລັບ ການຂຸດຄົ້ນໄມ້ທ່ອນ ແລະ ກຳນົດ ຫຼັກການ ສຳລັບການຂາຍໄມ້ ໂດຍອີງໃສ່ ຄຳສັ່ງຂອງນາຍົກລັດຖະມົນຕີ ທີ່ປະກາດໃຊ້ ໃນແຕ່ລະປີ [7].

### 3.5.1. ແຜນການຂຸດຄົ້ນ

ລັດຖະບານ ກຳນົດແຜນການຂຸດຄົ້ນໄມ້ ສຳລັບທົ່ວປະເທດ ຊຶ່ງແມ່ນສ່ວນໜຶ່ງ ຂອງແຜນພັດທະນາເສດຖະກິດ-ສັງຄົມ ທີ່ຮັບຮອງເອົາ ໂດຍ ສະພາແຫ່ງຊາດ. ຫຼັງຈາກການຮັບຮອງ, ລັດຖະບານ ໄດ້ແບ່ງປັນ ແຜນການຂຸດ

---

[7] *ບັນດາຄຳສັ່ງ ຂອງນາຍົກ ເລກທີ 11 (1999), 10 (2000), 15 (2001), 18 (2002), 28 (2003) ແລະ 25 (2004) ທີ່ກຳນົດ ກົດຈະກຳການຄຸ້ມຄອງ ແລະ ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໃນແຕ່ລະສົກປີ 1999/2000, 2000/20001, 2001/2002, 2002/2003, 2003/2004 ແລະ 2004/05 ຕາມລຳດັບ.*

ຄົ້ນ ໃຫ້ແຕ່ລະແຂວງ ແລະ ແຂວງ ແບ່ງປັນໃຫ້ ແຕ່ລະເມືອງ ໂດຍຜ່ານ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ແບ່ງປັນ ຕາມເຂດປ່າຜະລິດ ແຕ່ລະແຫ່ງ ໂດຍການຮ່ວມມື ກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

ແຜນການຂຸດຄົ້ນຂອງລັດຖະບານ ແມ່ນຖືກກຳນົດ ບົນພື້ນຖານການສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ (ກົມປ່າໄມ້) ຊຶ່ງອີງໃສ່ ການສະເໜີ ຂອງ ອົງການປົກຄອງແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ, ບວກກັບ ການພິຈາລະນາ ປັດໃຈອື່ນໆ ເຊັ່ນ: ຄວາມຈຳເປັນດ້ານການພັດທະນາ ແລະ ດ້ານງົບປະມານ, ຄວາມຕ້ອງການຈາກໂຮງງານປຸງແຕ່ງ ແລະ ອື່ນໆ.

ໃນອານາຄົດ ລັດຖະບານ ມີແຜນ ເພື່ອແບ່ງປັນ ບໍລິມາດຂຸດຄົ້ນ ຕາມແຜນຈັດສັນປ່າຜະລິດ. ແຕ່ແນວໃດກໍຕາມ, ໃນປະຈຸບັນນີ້ ແຜນຈັດສັນປ່າຜະລິດ ຍັງບໍ່ທັນໄດ້ຮັບຮູ້ ແລະ ເຂົ້າໃຈກັນເທົ່າທີ່ຄວນ ເພື່ອຈະນຳໃຊ້ ໃນການຂຸດຄົ້ນໄມ້ ແລະ ເຂດປ່າຜະລິດ ໃນທົ່ວປະເທດ ຫຼາຍກວ່າ ເຄິ່ງໜຶ່ງ ຍັງບໍ່ມີແຜນຄຸ້ມຄອງ ຈັດສັນ. ດັ່ງນັ້ນ, ອົງການປົກຄອງທ້ອງຖິ່ນ ຈຶ່ງນຳໃຊ້ ແຜນຈັດສັນປ່າຜະລິດເຫຼົ່ານັ້ນ ເປັນໜຶ່ງໃນຈຳນວນຫຼາຍໆເງື່ອນໄຂ ເພື່ອຈັດແບ່ງ ແຜນການຂຸດຄົ້ນໄມ້ ຂອງແຂວງ ໄປຕາມປ່າຜະລິດແຕ່ລະແຫ່ງ.

ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຈັດຕັ້ງການຕິດຕາມ ການຂຸດຄົ້ນໄມ້ ໃນພາກສະໜາມ ແລະ ລາຍງານໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ. ຢູ່ໃນແຂວງ ທີ່ມີກອງຂຸດຄົ້ນຂອງລັດ, ການດຳເນີນການຂຸດຄົ້ນໄມ້ຈົນເຖິງ ການເຄື່ອນຍ້າຍໄມ້ເຖິງ ສະໜາມ II ແມ່ນກອງຂຸດຄົ້ນຂອງລັດ ເປັນຜູ້ຈັດຕັ້ງປະຕິບັດ ແລະ ຢູ່ໃນແຂວງ ທີ່ບໍ່ມີກອງຂຸດຄົ້ນຂອງລັດ ການຂຸດຄົ້ນ ແມ່ນມອບໃຫ້ ບໍລິສັດເອກະຊົນ ເປັນຜູ້ຈັດຕັ້ງປະຕິບັດ ໂດຍພາຍໃຕ້ການຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງ. ການຂຸດຄົ້ນ ຕ້ອງດຳເນີນຢູ່ໃນຂອບເຂດຂອງປ່າຜະລິດ ທີ່ມີແຜນຄຸ້ມຄອງ ເທົ່ານັ້ນ; ກິດຈະກຳ ທີ່ບໍ່ນອນຢູ່ໃນ ແຜນຄຸ້ມຄອງ ຫຼື ເປັນການລະເມີດ ກົດໝາຍປ່າໄມ້ ແລະ ລະບຽບຈັດຕັ້ງປະຕິບັດກົດໝາຍປ່າໄມ້ ແມ່ນ ເກືອດຫ້າມ (ດຳລັດ ເລກທີ 59/ນຍ, ມາດຕາ 9 ແລະ 10).

### 3.5.2. ຄ່າພັນທະໄມ້ທ່ອນ ແລະ ພັນທະປູກໄມ້

ລັດຖະບານຮຽກຮ້ອງໃຫ້ ບໍລິສັດ ແລະ ບຸກຄົນ ຜູ້ໄດ້ຮັບແຜນການຂຸດຄົ້ນ ຈ່າຍຄ່າພັນທະ ຕໍ່ແມັດກ້ອນຂອງຈຳນວນໄມ້ທ່ອນ ຢູ່ສະໜາມ II[8]. ຍ້ອນວ່າ ໃນຊຸມປີ 1990, ເກັບຄ່າພັນທະ ໄດ້ພຽງແຕ່ ປະມານ 1/3 ເທົ່ານັ້ນ, ໃນໄລຍະບໍ່ດົນມານີ້ ລັດຖະບານ ໄດ້ມີມາດຕະການ ເພື່ອຕິດພັນ ບໍລິມາດຂຸດຄົ້ນຕົວຈິງ ເຂົ້າກັບການຈ່າຍຄ່າພັນທະຕົວຈິງ ຫຼາຍກວ່າເກົ່າ ແນ່ໃສ່ເພີ່ມທະວີ ການເກັບລາຍຮັບ ແລະ ການຫຼຸດຜ່ອນ ໜີ້ສິນ.

ຄ່າພັນທະໄມ້ທ່ອນ ໄດ້ກຳນົດ ແລະ ດັດປັບໃຫ້ທັນກັບສະພາບການ ໃນແຕ່ລະໄລຍະ ໂດຍ ກະຊວງການຄ້າ ຊຶ່ງອີງຕາມຊະນິດພັນໄມ້. ພ້ອມກັນນັ້ນ ຄ່າພັນທະ ຍັງໄດ້ພິຈາລະນາບັນຫາອື່ນໆ ເປັນຕົ້ນແມ່ນລາຄາໄມ້ ໃນຕະຫຼາດສາກົນ. ກະຊວງການຄ້າ ສົມທົບຢ່າງໃກ້ສິດ ກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ທະນາຄານໂລກ ໃນການສ້າງໂຄງການ ເພື່ອແກ້ໄຂ ຂໍ້ຈຳກັດທາງດ້ານຂໍ້ມູນຂ່າວສານ ທີ່ພົວພັນກັບຕະຫຼາດຜະລິດຕະພົນປ່າໄມ້ ໃນພາກພື້ນ ແລະ ສາກົນ.

---

8 *ນອກຈາກ ຄ່າພັນທະ ໃນລະດັບຊາດ ແລ້ວ ໂຮງງານປຸງແຕ່ງໄມ້ (ແລະ ບໍລິສັດຂຸດຄົ້ນເອກະຊົນ ບ່ອນທີ່ພວກເຂົາເຈົ້າ ດຳເນີນການຂຸດຄົ້ນ) ອາດຕ້ອງ ຈ່າຍຄ່າທຳນຽມ ເພື່ອປະກອບສ່ວນເຂົ້າໃນການພັດທະນາ ແຂວງ, ເມືອງ ແລະ ບ້ານ.*

ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 59/ນຍ.2002 ໄດ້ສົ່ງເສີມ ການນຳໃຊ້ກົນໄກການຕະຫຼາດ ເພື່ອຮັບປະກັນ ໃຫ້ໄດ້ລາຄາສູງກວ່າ ລາຄາທີ່ກຳນົດ ໂດຍ ກະຊວງການຄ້າ ແລະ ສ້າງ ໃຫ້ມີລາຍຮັບສູງສຸດ ສຳລັບ ລັດຖະບານ, ໜ່ວຍຄຸ້ມຄອງປ່າຜະລິດ ແລະ ປະຊາຊົນທີ່ເຂົ້າຮ່ວມ. ຈາກການ ນຳເອົາການປະມູນ ທີ່ອີງໃສ່ ຕະຫຼາດມານຳໃຊ້ ຢູ່ຫຼາຍແຂວງ ຄ່າພັນທະ ຖືເປັນລາຄາພື້ນຖານ ເພື່ອຮັບປະກັນ ການເກັບລາຍຮັບທີ່ຕ່ຳສຸດ ຢູ່ ໃນລະດັບແຂວງ.

ເພື່ອປົກປັກຮັກສາປ່າໄມ້ໃຫ້ຍືນນານ ລັດຖະບານ ໄດ້ກຳນົດ ພັນທະປູກໄມ້ທົດແທນ ທີ່ເກັບຈາກ ການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອໃຊ້ຈ່າຍ ໃນກິດຈະກຳຟື້ນຟູປ່າໄມ້. ອີງຕາມ ຂໍ້ 2 ຂອງ ຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 11/ນຍ.1999, ຕົ້ນໄມ້ ທີ່ຂຸດຄົ້ນ ຕ້ອງປູກທົດແທນ ຫຼື ຈ່າຍພັນທະປູກທົດແທນ ໃຫ້ລັດຖະບານ ເພື່ອສາມາດປູກໄມ້ຄືນໃໝ່. ຕັດໄມ້ ຕົ້ນໜຶ່ງ ຕ້ອງ ປູກແທນ 20 ຕົ້ນ ພາຍໃຕ້ການຄຸ້ມຄອງຂອງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງ. ບໍລິສັດປຸງແຕ່ງໄມ້ ທີ່ໄດ້ຮັບການແບ່ງປັນໄມ້ທ່ອນ ຈາກລັດຖະບານ ຈະຕ້ອງໄດ້ຈ່າຍຄ່າພັນທະປູກໄມ້ຕາມອັດຕາ ດັ່ງລຸ່ມນີ້:

1) ຊະນິດໄມ້ຫວງຫ້າມ I ແລະ II ຕ້ອງຈ່າຍ 3 ໂດລາ ຕໍ່ 1 ແມັດກອ້ນ
2) ຊະນິດໄມ້ຄຸ້ມຄອງ I ຕ້ອງຈ່າຍ 2 ໂດລາ ຕໍ່ 1 ແມັດກອ້ນ
3) ຊະນິດໄມ້ຄຸ້ມຄອງ II ຕ້ອງຈ່າຍ 1 ໂດລາ ຕໍ່ 1 ແມັດກອ້ນ

ຍິ່ງໄປກ່ວານັ້ນ, ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 18/ນຍ.2002 ໄດ້ລະບຸໄວ້ວ່າ ນອກຈາກການຈ່າຍຄ່າພັນທະປູກໄມ້ແລ້ວ ບໍລິສັດປຸງແຕ່ງໄມ້ ຍັງຈະຕ້ອງໄດ້ລົງທຶນປູກໄມ້ ເປັນຂອງຕົນເອງ ເພື່ອຮັບປະກັນການສະໜອງວັດຖຸດິບ ໃນອານາຄົດ. ຄຳສັ່ງແນະນຳ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1848/ກປ.1999 ກໍສາມາດນຳໃຊ້ ເພື່ອເກັບຄ່າພັນທະຈາກການຂຸດຄົ້ນເຄື່ອງປ່າຂອງດົງ ໄດ້ເຊັ່ນດຽວກັນ; ຕົວຢ່າງ: ຂຸດຄົ້ນ ຫວາຍ 1 ໂຕນ ຕ້ອງປູກແທນ 10 ຕົ້ນ ຫຼື ຈ່າຍ 6 ໂດລາ/ໂຕນ ແລະ ຖ້າຂຸດຄົ້ນນ້ຳມັນຍາງ 1 ໂຕນ ຕ້ອງປູກແທນ 50 ຕົ້ນ ຫຼື ຈ່າຍ 10 ໂດລາ/ໂຕນ.

### 3.5.3. ການຂາຍໄມ້ທ່ອນ ແລະ ເຄື່ອງປ່າຂອງດົງ

ລະບົບມາດຖານການຂາຍໄມ້ທ່ອນ ແມ່ນ ຜ່ານການເຈລະຈາ ຫຼື ການຕໍ່ລອງລາຄາ, ແຕ່ ໃນບາງກໍລະນີ ກໍໄດ້ດຳເນີນການປະມູນ ຢູ່ ສະໜາມ II. ສຳລັບການປະມູນ, ກະຊວງ ທີ່ກ່ຽວຂ້ອງ ປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງການປະມູນ ໂດຍອີງຕາມຂໍ້ມູນສຳຫຼວດ ທີ່ສະໜອງໃຫ້ ໂດຍຂະແໜງປ່າໄມ້ແຂວງ. ຜູ້ຊະນະການປະມູນ ເຈລະຈາ ແລະ ເຊັນສັນຍາຊື້ຂາຍ ກັບພະແນກການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ; ເຊັນສັນຍາປູກໄມ້ ກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ; ຈ່າຍ ຄ່າຄ້ຳປະກັນໄມ້ທ່ອນ ແລະ ຈ່າຍພັນທະປູກໄມ້ທົດແທນຄືນທັງໝົດ. ແຕ່ແນວໃດກໍຕາມ ເຫັນວ່າ ລະບົບການປະມູນ ບໍ່ເໝາະສົມ ກັບເງື່ອນໄຂໃນປະຈຸບັນ ແລະ ຜູ້ເຂົ້າຮ່ວມການປະມູນ ມີຈຳນວນໜ້ອຍ. ດັ່ງນັ້ນ ຈິ່ງນຳໃຊ້ ລະບົບການເຈລະຈາຕໍ່ລອງລາຄາ[9].

ໃນປະຈຸບັນ ດຳລັດ ແລະ ຄຳສັ່ງຂອງລັດຖະບານໄດ້ກຳນົດໄວ້ວ່າ ໄມ້ທ່ອນ ແລະ ເຄື່ອງປ່າຂອງດົງ ຕ້ອງຂາຍ ໃຫ້ໂຮງງານປຸງແຕ່ງ ເປັນແຕ່ລະປີໄປ ໂດຍຜ່ານ ວິທີການແຂ່ງຂັນລາຄາ, ຕາມກົນໄກຕະຫຼາດ ແລະ ມີຄວາມໂປ່ງໃສ ເພື່ອຮັບປະກັນໃຫ້ໄດ້ລາຄາສູງສຸດ ແນໃສ່ສ້າງລາຍຮັບສູງສຸດ ໃຫ້ແກ່ລັດຖະບານ ແລະ ປະຊາຊົນ.

---

[9] *ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 41/ນຍ.2002 ທີ່ດັດແກ້ ມາດຕາ 5 ຂອງ ຂໍ້ຕົກລົງ ເລກທີ 60/ນຍ.2001 ສະແດງໃຫ້ຮູ້ວ່າ ລະບົບປະມູນຖືກທົດແທນ ໂດຍລະບົບການເຈລະຈາ, ການຕໍ່ລອງລາຄາ.*

ການຂາຍໄມ້ທ່ອນ ຈະແມ່ນ ໜ່ວຍງານຂາຍໄມ້ທ່ອນ ຂອງ ແຕ່ລະແຂວງເປັນຜູ້ດຳເນີນ ໂດຍພາຍໃຕ້ການຊີ້ນຳຂອງ ເຈົ້າຄອງ, ເຈົ້າແຂວງ ແລະ ຫົວໜ້າເຂດພິເສດ (ດຳລັດເລກທີ 59/ນຍ, 2002, ມາດຕາ 11). ເພື່ອຮັບປະກັນ ໃຫ້ມີ ຄວາມໂປ່ງໃສ ໜ່ວຍງານຂາຍໄມ້ ຕ້ອງປະກອບດ້ວຍ ການມີສ່ວນຮ່ວມ ຂອງທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງ ຜູ້ຕາງໜ້າ ຂອງການຈັດຕັ້ງປ່າໄມ້ບ້ານທີ່ນອນຢູ່ໃນເຂດປ່າຜະລິດ. ລາຍຮັບຈາກການຂາຍໄມ້ທ່ອນທັງໝົດ ຈະນຳໃຊ້ ສຳລັບ: 1) ມອບເຂົ້າງົບປະມານແຫ່ງຊາດ, 2) ປະກອບສ່ວນເປັນກອງທຶນພັດທະນາປ່າໄມ້, 3) ເປັນລາຍຈ່າຍ ສຳລັບ ການດຳເນີນກິດຈະກຳປ່າໄມ້ ແລະ 4) ເປັນກອງທຶນພັດທະນາທ້ອງຖິ່ນ ລວມທັງ ກິດຈະກຳພັດທະນາບ້ານ (ດຳລັດ 59/ນຍ, ມາດຕາ 12).

### 3.5.4. ບັນຫາສຳລັບການປັບປຸງລະບົບ ແຜນການຂຸດຄົ້ນ ແລະ ການຂາຍໄມ້ທ່ອນ

#### 3.5.4.1. ການຫັນໄປສູ່ ການຂຸດຄົ້ນໄມ້ຈາກປ່າຜະລິດ ແລະ ການຂາຍໄມ້

ເມື່ອໃດ ລະບົບປ່າຜະລິດຫາກໄດ້ຮັບການສ້າງຕັ້ງຂຶ້ນ ໃນຂອບເຂດທົ່ວປະເທດ ແລະ ມີແຜນການຄຸ້ມຄອງແບບຍືນນານ, ແຜນການຂຸດຄົ້ນ ແລະ ລະບົບການແບ່ງປັນແຜນການຂຸດຄົ້ນ ໃຫ້ບັນດາແຂວງນັ້ນ ຈະໄດ້ຢຸດຕິລົງ ເນື່ອງຈາກວ່າ ການຂຸດຄົ້ນໄມ້ທັງໝົດ ຈະດຳເນີນໄປຕາມການຄຳນວນບໍລິມາດ ທີ່ສາມາດຂຸດຄົ້ນໄດ້ໃນແຕ່ລະປີ ທີ່ມີລັກສະນະວິທະຍາສາດ-ວິທະຍາການ. ການຂຸດຄົ້ນ ແລະ ການຂາຍໄມ້ທ່ອນ ຈະດຳເນີນໄປ ສຳລັບ ແຕ່ລະເຂດປ່າຜະລິດ ຫຼື ເຂດຍ່ອຍ ຂອງປ່າຜະລິດ ໂດຍການຈັດຕັ້ງທ້ອງຖິ່ນ ທີ່ກ່ຽວຂ້ອງ. ການຫັນປ່ຽນຈາກລະບົບການຂຸດຄົ້ນໄມ້ ທີ່ກຳນົດແຜນການ ໄປສູ່ລະບົບການຂຸດຄົ້ນ ທີ່ອີງໃສ່ແຜນຈັດສັນຈະຄ່ອຍໆເປັນໄປ ແລະ ເພາະສະນັ້ນ ຈະບໍ່ສ້າງບັນຫາໃຫ້ແກ່ລັດຖະບານ. ຢ່າງໃດກໍດີ, ຈະຕ້ອງໄດ້ມີການຕັດສິນໃຈຢ່າງເດັດດ່ຽວ ເພື່ອຮັບປະກັນໃຫ້ ການຫັນປ່ຽນດັ່ງກ່າວ ໄດ້ດຳເນີນໄປ ຢ່າງສະເໝີຕົ້ນສະເໝີປາຍ ແລະ ບໍ່ໃຫ້ກາຍເປັນບັນຫາຫຍໍ້ທໍ້.

#### 3.5.4.2. ການສ້າງຄວາມເຂັ້ມແຂງທາງການຈັດຕັ້ງ ສຳລັບ ການຂາຍໄມ້ທ່ອນ ທີ່ມີການແຂ່ງຂັນ

ການຂາຍໄມ້ທ່ອນ ທີ່ຂຸດຄົ້ນ ຈາກ ເຂດປ່າຜະລິດ ຕ້ອງດຳເນີນໄປ ບົນພື້ນຖານການແຂ່ງຂັນ ທີ່ອີງໃສ່ກົນໄກການຕະຫຼາດ ທີ່ມີຄວາມໂປ່ງໃສ. ເພື່ອຮັບປະກັນໃຫ້ໄດ້ ລາຄາທີ່ສູງກວ່າ (ດຳລັດ 59/ນຍ.2002). ເພື່ອໃຫ້ໄດ້ຕາມເງື່ອນໄຂ ທີ່ກ່າວມານັ້ນ ລັດຖະບານ ຕ້ອງກຳນົດວິທີການຂາຍໄມ້ ແລະ ຕ້ອງສ້າງຂໍ້ແນະນຳອອກຢ່າງລະອຽດຈະແຈ້ງ. ນອກຈາກນັ້ນ ແມ່ນມີຄວາມຈຳເປັນ ຕ້ອງໄດ້ ຍົກລະດັບຄວາມສາມາດ ຂອງອົງການຈັດຕັ້ງ ແລະ ພະນັກງານທີ່ກ່ຽວຂ້ອງ ກ່ອນການຈັດຕັ້ງປະຕິບັດ.

## 3.6. ອຸດສາຫະກຳການປຸງແຕ່ງໄມ້

### 3.6.1. ສັງເກດລວມ ກ່ຽວກັບ ອຸດສາຫະກຳການປຸງແຕ່ງໄມ້

#### 3.6.1.1. ການປະກອບສ່ວນ ທາງດ້ານເສດຖະກິດ ແລະ ວຽກເຮັດງານທຳ

ການປຸງແຕ່ງໄມ້ ຢູ່ ສປປ ລາວ ໄດ້ປະກອບສ່ວນທີ່ສຳຄັນ ທັງຕໍ່ເສດຖະກິດ ແລະ ການປະກອບອາຊີບຂອງທ້ອງຖິ່ນ ຄືດັ່ງນີ້:

- ຕາມການຄາດຄະເນ, ຂະແໜງປຸງແຕ່ງໄມ້ ປະກອບສ່ວນ ປະມານ 6% ຂອງ ລວມຍອດຜະລິດຕະພັນພາຍໃນ GDP ແລະ 32% ຂອງ ມູນຄ່າ ການຜະລິດອຸດສາຫະກຳປຸງແຕ່ງ.
- ໃນປີ 2001, ຄ່າພັນທະໄມ້ ສະໜອງ 15% ຂອງ ລາຍຮັບແຫ່ງຊາດ.

- ການສົ່ງຜະລິດຕະພັນໄມ້ ອອກຕ່າງປະເທດ ມີມູນຄ່າ 78 ລ້ານ ໂດລາ ຫຼື ເທົ່າກັບ 25% ຂອງ ມູນຄ່າສົ່ງອອກ (ລວມທັງ ການສົ່ງໄມ້ທ່ອນ).
- ເຮັດໃຫ້ ປະຊາຊົນ ປະມານ 22.000 ຄົນ ມີ ວຽກເຮັດງານທຳ ຊຶ່ງຫຼາຍກວ່າ 20% ຂອງ ຈຳນວນຜູ້ອອກແຮງງານທັງໝົດ ຢູ່ໃນ ຂະແໜງອຸດສາຫະກຳປຸງແຕ່ງ.

### 3.6.1.2. ໂຄງສ້າງ ແລະ ກຳມະສິດອຸດສາຫະກຳ

ໃນປີ 2001, ທົ່ວປະເທດ ມີໂຮງເລື່ອຍທັງໝົດ 160 ໂຮງ ແລະ ໂຮງງານໄມ້ອັດ 2 ແຫ່ງ ຊຶ່ງອີງຕາມ ການປະເມີນ ມີຄວາມສາມາດຮັບເອົາໄມ້ທ່ອນ ປະມານ 1 ລ້ານ ແມັດກ້ອນ ຕໍ່ປີ, ໃນນັ້ນ ມີໂຮງງານ ຈຳນວນ 20% ຂອງໂຮງງານທັງໝົດ ສາມາດທຳການຜະລິດໄດ້ ມາດຕະຖານ. ໂຮງງານຂະໜາດໃຫຍ່ເຫຼົ່ານີ້ ສ່ວນຫຼາຍ ຕັ້ງຢູ່ແຂວງພາກກາງ ແລະ ພາກໃຕ້ ແລະ ສ່ວນຫຼາຍ ແມ່ນດຳເນີນຂັ້ນຕອນການຜະລິດແບບຕໍ່ເນື່ອງໂສ້ ຄື: ມີໂຮງເລື່ອຍ, ໂຮງອົບແຫ້ງ ແລະ ໂຮງງານປຸງແຕ່ງໄມ້ສຳເລັດຮູບ. ຂີ້ເລື່ອຍ ແລະ ໄມ້ເສດພາຍໃນໂຮງເລື່ອຍ ຖືກນຳໃຊ້ ເປັນພະລັງງານ ຢູ່ໃນໂຮງອົບໄມ້ ແຕ່ໃນຂະນະດຽວກັນ ໂຮງງານຂະໜາດນ້ອຍຫຼາຍແຫ່ງ (ທີ່ມີຄວາມຕອ້ງການໄມ້ທອ່ນໜອ້ຍກວ່າ 5.000 ມ$^3$/ປີ) ແມ່ນທຳການຈູດຖິ້ມ ຫຼືບໍ່ ກໍແມ່ນປະຊາຊົນນຳໄປໃຊ້ເຮັດຟືນ.

ໂຮງງານປຸງແຕ່ງໄມ້ ສ່ວນຫຼາຍ ແມ່ນກຳມະສິດຂອງເອກະຊົນ ເຖິງວ່າຈະມີຫຸ້ນສ່ວນຈຳນວນໜ້ອຍ ກັບບໍລິສັດຂອງລັດຈຳນວນໜຶ່ງ. ຍັງບໍ່ທັນມີບໍລິສັດໃຫຍ່ ທີ່ຈະດຳເນີນບົດບາດນຳພາ ໃນວຽກງານອຸດສາຫະກຳປຸງແຕ່ງໄມ້, ແຕ່ມີໂຮງງານໃຫຍ່ໆຈຳນວນໜຶ່ງ ຢູ່ທາງພາກກາງ ແລະ ພາກໃຕ້ ໄດ້ສ້າງຄວາມກົດດັນ ຕໍ່ຊັບພະຍາກອນປ່າໄມ້.

ໃນໄລຍະຜ່ານມາ, ຂະແໜງປຸງແຕ່ງໄມ້ ໄດ້ສ້າງຕັ້ງ ກຸ່ມຜູ້ຜະລິດໄມ້ ເພື່ອແລກປ່ຽນ ຂໍ້ມູນຂ່າວສານ ກ່ຽວກັບບັນຫາທາງດ້ານການຄ້າ ແລະ ໄດ້ຈັດຕັ້ງ ການຝຶກອົບຮົມ. ກຸ່ມດັ່ງກ່າວ ສາມາດຈັດຕັ້ງ ເພື່ອລິເລີ່ມກິດຈະກຳຕ່າງໆ ເພື່ອສົ່ງເສີມການຕະຫຼາດ ຢູ່ໃນຂົງເຂດທີ່ເມື່ອກອ່ນແມ່ນພໍ່ຄ້າໄມ້ ຢູ່ໃນບັນດາປະເທດໃກ້ຄຽງເປັນຜູ້ຄວບຄຸມ.

### 3.6.1.3. ການແຂ່ງຂັນ ແລະ ການຈຳໜ່າຍ

ອຸດສາຫະກຳປຸງແຕ່ງໄມ້ ຂອງ ສປປ ລາວ ມີຄວາມຫຍຸ້ງຍາກ ໃນການແຂ່ງຂັນ ກັບສິ່ງອຳນວຍຄວາມສະດວກ ທີ່ມີຢູ່ໃນປະເທດໃກ້ຄຽງ ກ່ຽວກັບການຈ່າຍຄ່າໄມ້ທ່ອນ ໃນລາຄາຕະຫຼາດສາກົນ. ດັ່ງນັ້ນ, ການສົ່ງ ຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ອອກຕ່າງປະເທດ ຈຶ່ງມີຂໍ້ຈຳກັດຫຼາຍ. ໃນຂະນະທີ່ປະເທດເຫຼົ່ານັ້ນ ປຸງແຕ່ງໄມ້ທ່ອນ ແລະ ໄມ້ເລື່ອຍ ທີ່ນຳເຂົ້າຈາກ ສປປ ລາວ ແລະ ສົ່ງຜະລິດຕະພັນສຳເລັດຮູບ ອອກໄປສູ່ຕະຫຼາດທີ່ມີລາຄາສູງ ຢູ່ຍີ່ປຸ່ນ, ເອີຣົບ ແລະ ອາເມຣິກາເໜືອ. ສຳລັບໂຮງເລື່ອຍບາງແຫ່ງ ທີ່ເຈົ້າຂອງເປັນຄົນຕ່າງປະເທດ ແມ່ນມີທາງເຂົ້າສູ່ ຕະຫຼາດໂດຍກົງໄດ້. ແຕ່ເຖິງຢ່າງໃດກໍຕາມ, ໂຮງເລື່ອຍຫຼາຍໂຮງ ນຳໃຊ້ພໍ່ຄ້າໄມ້ຈາກໄທ ເພື່ອຂາຍຜະລິດຕະພັນຂອງເຂົາເຈົ້າ ແລະ ດັ່ງນັ້ນ ຈຶ່ງພາໃຫ້ຂາດຄວາມຮູ້ ກ່ຽວກັບລາຄາ ແລະ ການເໜັງຕີງ ຂອງຕະຫຼາດ.

ໃນປັດຈຸບັນ ຍັງມີທ່າດີຢູ່ບ່ອນວ່າ, ຜູ້ຈຳໜ່າຍຂະໜາດໃຫຍ່ ເຊັ່ນ: ບໍລິສັດ ສະແກນຄອມ, ໂຮມດີປອົດ, ແລະ ໄອເກຍ ກຳລັງ ຊອກຫາຜະລິດຜະພັນ ຢູ່ອາຊີຕາເວັນອອກສ່ຽງໃຕ້ ຢ່າງຈິງຈັງ ແລະ ບໍລິສັດເຫຼົ່ານີ້ ກໍໃຫ້ການຊ່ວຍເຫຼືອ ແກ່ອຸດສາຫະກຳ ທີ່ນຳໃຊ້ໄມ້ປູກ ອີກດ້ວຍ. ອີກດ້ານໜຶ່ງແຜນງານ ປັບປຸງເສັ້ນທາງ ແລະ ຂົວຂ້າມແມ່ນ້ຳຂອງ ແຫ່ງທີສອງ ຈະຊ່ວຍໃຫ້ມີຊ່ອງທາງ ເຂົ້າສູ່ຕະຫຼາດ ແລະ ການແຂ່ງຂັນຂຶ້ນຕື່ມ. ນອກຈາກນັ້ນ ກໍຍັງເປັນໂອກາດດີ ສຳລັບ ການລິເລີ່ມ ຂອງສປປ ລາວ ເພື່ອຫຼຸດຜ່ອນຄ່າສິ້ນເປືອງ ໂດຍສະເພາະແມ່ນການນຳໃຊ້ທາງຜ່ານທີ່ເຊື່ອມຕໍ່ ລະຫວ່າງ ສປປ ລາວ ໄປຫາ ທ່າກຳປັ່ນ ຢູ່ປະເທດໄທ.

#### 3.6.1.4. ການຜະລິດ, ການຊົມໃຊ້ ແລະ ການສົ່ງອອກ

ອີງຕາມການລາຍງານ ໃນໄລຍະ 5 ປີ ຜ່ານມາ ຊີ້ໃຫ້ເຫັນວ່າ ການຜະລິດໄມ້ເລື່ອຍ ແມ່ນບໍ່ເປັນປົກກະຕິ, ບໍລິມາດຂຶ້ນໆ ລົງໆ, ແຕ່ໂດຍ ສະເລ່ຍແລ້ວ ແມ່ນຢູ່ໃນລະຫວ່າງ 230.000 ມ$^3$ ຕໍ່ປີ. ເມື່ອເບິ່ງທາງດ້ານສະມັດຖະພາບຂອງໂຮງງານປຸງແຕ່ງ ທີ່ຢູ່ໃນລະດັບ 50% ແລ້ວ ຈຶ່ງສາມາດເວົ້າໄດ້ວ່າ ຈຳນວນໄມ້ທ່ອນ ທີ່ຮັບເຂົ້າມາເລື່ອຍ ມີປະມານ 460.000 ມ$^3$ ຕໍ່ ປີ ຫຼື ມີການປຸງແຕ່ງ ຕ່ຳກວ່າ 50% ຂອງ ຄວາມສາມາດທີ່ມີຢູ່ໃນປະຈຸບັນ.

ສາເຫດ ທີ່ພາໃຫ້ເກີດ ສະມັດຖະພາບໃນການປຸງແຕ່ງຕ່ຳ ແມ່ນຍ້ອນ:

- ການສະໜອງໄມ້ທ່ອນ ບໍ່ຮັບປະກັນ.
- ບໍ່ມີເຄື່ອງອາໄຫຼ່.
- ເສຍເວລາຫຼາຍໃນຂອດການປຸງແຕ່ງ ຍ້ອນໂຮງງານເກົ່າ, ເຄື່ອງຈັກເກົ່າແກ່.

ປະລິມານ ການຊົມໃຊ້ຜະລິດຕະພັນໄມ້ ຢູ່ພາຍໃນ ບໍ່ມີຄວາມຊັດເຈນ ຍ້ອນວ່າ ມີຄວາມຫຍຸ້ງຍາກ ໃນການປະເມີນ ຈຳນວນໄມ້ເລື່ອຍ ທີ່ປະຊາຊົນເລື່ອຍເອງ. ເຖິງວ່າ ຈະມີຂໍ້ຈຳກັດນີ້ກໍຕາມ, ປະລິມານການຊົມໃຊ້ ຢູ່ພາຍໃນຖືກປະເມີນຢູ່ໃນລະຫວ່າງ 200.000 ມ$^3$ ຕໍ່ປີ ຊຶ່ງເທົ່າກັບປະມານ 37 ມ$^3$ ຕໍ່ 1.000 ຄົນ ຕໍ່ປີ.

ຕາມການຄາດຄະເນ ຊີ້ໃຫ້ເຫັນວ່າ 90% ຂອງການຜະລິດໄມ້ເລື່ອຍຂອງບັນດາໂຮງເລື່ອຍທີ່ໄດ້ຮັບການລາຍງານ ແມ່ນເພື່ອການສົ່ງອອກ ແລະ ສ່ວນທີ່ເຫຼືອ 10% (ຫຼື ປະມານ 23.000 ມ$^3$) ແມ່ນສຳລັບການຊົມໃຊ້ຢູ່ພາຍໃນ. ສິ່ງເຫຼົ່ານີ້ ໄດ້ບົ່ງບອກວ່າ ໄມ້ເລື່ອຍທີ່ຊົມໃຊ້ຢູ່ພາຍໃນ ສ່ວນຫຼາຍ ແມ່ນໄດ້ມາຈາກການເລື່ອຍມື ຊຶ່ງແມ່ນໂຮງງານເຟີນີເຈີ ນຳມາປຸງແຕ່ງເປັນເຄື່ອງເຟີນີເຈີ, ປະຕູ ແລະ ເຄື່ອງປະດັບ ອື່ນໆ ສຳລັບໃຊ້ສອຍໃນເຮືອນ. ໃນປັດຈຸບັນ ມີໂຮງງານເຟີນີເຈີ ຈຳນວນຫຼາຍກວ່າ 900 ແຫ່ງ ທຳການຜະລິດເຄື່ອງໃຊ້ເຫຼົ່ານີ້. ດັ່ງນັ້ນ, ເມື່ອໂຮມຈຳນວນໄມ້ເລື່ອຍຈາກສອງຢ່າງ (ເລື່ອຍຢູ່ໂຮງງານປຸງແຕ່ງ ແລະ ເລື່ອຍດ້ວຍມື) ເຂົ້າກັນແລ້ວ ຈະເຫັນໄດ້ວ່າ ຄວາມຕ້ອງການໄມ້ທ່ອນທັງໝົດ ເພື່ອປຸງແຕ່ງ ມີປະມານ 800.000 ມ$^3$ ຕໍ່ປີ.

#### 3.6.1.5. ການສະໜອງ ແລະ ຄວາມຕ້ອງການ ໃນອານາຄົດ

ເຖິງປີ 2020 ການຊົມໃຊ້ ໄມ້ເລື່ອຍ ແລະ ໄມ້ອັດ ຢູ່ພາຍໃນຈະເພີ່ມຂຶ້ນເຖິງ ປະມານ 300.000 ມ$^3$ ຖ້າວ່າປະລິມານ ຫຼື ອັດຕາການຊົມໃຊ້ ຫາກຍັງຄືເກົ່າ. ດັ່ງນັ້ນ, ຄວາມຕ້ອງການໄມ້ທ່ອນ ຈະມີປະມານ 600.000 ມ$^3$ ຕໍ່ປີ ເພື່ອປຸງແຕ່ງຮັບໃຊ້ຢູ່ພາຍໃນ ຖ້າສະມັດຕະພາບໃນການປຸງແຕ່ງ ຫາກຍັງຮັກສາຢູ່ໃນລະດັບ 50%. ຖ້າວ່າ ລະດັບການສົ່ງໄມ້ອອກຕ່າງປະເທດຍັງຄືປັດຈຸບັນ, ຈະຕ້ອງການໄມ້ທ່ອນທັງໝົດ ຈຳນວນຫຼາຍກວ່າ 1 ລ້ານແມັດກອັນ. ເມື່ອ ພິຈາລະນາເຖິງຄວາມສາມາດ ໃນການສະໜອງໄມ້ຈາກປ່າທຳມະຊາດແບບຍືນນານ ເຊິ່ງສາມາດຂຸດຄົ້ນໄດ້ປະມານ 300.000ມ$^3$ ຕໍ່ປີ ແລ້ວ ເຫັນວ່າ ສ່ວນທີ່ເກີນຈາກການສະໜອງຂອງປ່າທຳມະຊາດນັ້ນ ສວນປູກໄມ້ ຈະຕ້ອງສະໜອງ ໄມ້ທ່ອນຈຳນວນຫຼວງຫຼາຍ ເພື່ອຊົມໃຊ້ພາຍໃນ ແລະ ການສົ່ງອອກ.

### 3.6.2. ອົງການຈັດຕັ້ງ ແລະ ກອບທາງດ້ານນິຕິກຳ

ຢູ່ໃນ ສປປ ລາວ, ການຄຸ້ມຄອງໂຮງງານປຸງແຕ່ງໄມ້ ສ່ວນຫຼວງຫຼາຍ ແມ່ນຢູ່ພາຍໃຕ້ ລະບຽບການ ເລກທີ 261/ກປ.2000 ຂອງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ການກຳນົດສະເພາະ ຢູ່ໃນກົດໝາຍປ່າໄມ້, ກົດໝາຍການ

ລົງທຶນຕ່າງປະເທດ, ດຳລັດຈັດຕັ້ງປະຕິບັດ ກົດໝາຍການລົງທຶນຕ່າງປະເທດ ຂອງນາຍົກລັດຖະມົນຕີ ເລກທີ 46/ນຍ ແລະ ກົດໝາຍອຸດສາຫະກຳປຸງແຕ່ງ.

ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ມີສິດຄຸ້ມຄອງໂຮງງານປຸງແຕ່ງ. ກະຊວງກະສິກຳ ແລະ ປ່າໄມ້ ມີຄວາມຮັບຜິດຊອບ ຕໍ່ໂຮງງານ ແລະ ເຄື່ອງຈັກ ປຸງແຕ່ງໄມ້ ຕາມທີ່ກຳນົດໃນກົດໝາຍປ່າໄມ້, ສ່ວນກະຊວງອຸດສາຫະກຳ ແລະ ຫັດຖະກຳ ມີຄວາມຮັບຜິດຊອບ ຕໍ່ມາດຕາ 44 ຂອງ ກົດໝາຍອຸດສາຫະກຳປຸງແຕ່ງ. ການທີ່ ທັງສອງກະຊວງນີ້ ມີ ຄວາມຮັບຜິດຊອບໃນການກຳນົດມາດຕະຖານ ແລະ ອະນຸຍາດການດຳເນີນງານ ຂອງໂຮງງານປຸງແຕ່ງ ຈຶ່ງເຫັນວ່າຍັງມີຄວາມສັບສົນ. ສະນັ້ນ ທັງສອງກະຊວງນີ້ ຄວນມີການສືບຕໍ່ປຶກສາຫາລືກັນ ເພື່ອປັບປຸງການຄຸ້ມຄອງຕື່ມອີກ.

ໃນການສ້າງຕັ້ງໂຮງງານປຸງແຕ່ງໄມ້ ຢູ່ໃນ ສປປ ລາວ, ນັກລົງທຶນພາຍໃນ ຕ້ອງມີ ໃບທະບຽນວິສະຫະກິດຈາກກະຊວງການຄ້າ, ໃບແຈ້ງເສຍອາກອນຈາກກົມພາສີ, ກະຊວງການເງິນ ແລະ ໃບອະນຸຍາດດຳເນີນກິດຈະການຈາກກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງ ອຸດສາຫະກຳ ແລະ ຫັດຖະກຳ. ສຳລັບນັກລົງທຶນຕ່າງປະເທດນັ້ນ, ນອກຈາກ ຈະມີທຸກໆເອກະສານ ທີ່ກ່າວມາແລ້ວ ກໍຕ້ອງມີໃບອະນຸຍາດການລົງທຶນຕ່າງປະເທດ ຈາກຄະນະຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ຕື່ມອີກ. ລະບຽບການ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 261/ກປ ຮຽກຮ້ອງໃຫ້ ໂຮງງານປຸງແຕ່ງໄມ້ ຕອ້ງມີໃບອະນຸຍາດດຳເນີນ ການຜະລິດ ໃນແຕ່ລະປີ. ໂຮງງານປຸງແຕ່ງໄມ້ ຕ້ອງ ສະເໜີ ຂໍຕໍ່ໃບອະນຸຍາດ ໃນເດືອນ ກັນຍາຂອງແຕ່ລະປີ ເພື່ອສາມາດເຂົ້າຮ່ວມເຈລະຈາ ຊື້-ຂາຍໄມ້ *(ຄຳສັ່ງ ເລກທີ 15/ນຍ, ມາດ 12).*

ອີງຕາມ ກົດໝາຍປ່າໄມ້, ມາດຕາ 22 ແລະ ລະບຽບການ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 261/ກປ ການປຸງແຕ່ງໄມ້ ແມ່ນ ກິດຈະກຳປ່າໄມ້ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງກະສິກຳ ແລະ ປ່າໄມ້. ໂດຍສະເພາະແລ້ວ, ກະຊວງກະສິກຳ ແລະ ປ່າໄມ້ ແມ່ນເປັນຜູ້ຄຸ້ມຄອງການຂຶ້ນທະບຽນ ແລະ ການອອກໃບອະນຸຍາດໃຫ້ໂຮງງານປຸງແຕ່ງໄມ້ ພ້ອມທັງການປ່ຽນແປງ, ການໂອນ ຫຼື ການລົບລ້າງ ກຳມະສິດໂຮງງານ. ພະແນກກະສິກຳ ແລະ ປ່າໄມ້ແຂວງ ຕ້ອງຂຶ້ນທະບຽນເຄື່ອງຈັກ ແລະ ໃບອະນຸຍາດທັງໝົດ ແລະ ຕິດຕາມການນຳເຂົ້າ ແລະ ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ຂອງໂຮງງານ. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຕ້ອງຕິດຕາມ ແລະ ກວດກາໂຮງງານ ຕາມລະບຽບການ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 261/ກປ, ມາດຕາ 23 ກ່ຽວກັບການເກືອດຫ້າມ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ ແລະ ລາຍງານ ໃຫ້ກະຊວງກະສິກຳ ແລະ ປ່າໄມ້.

### 3.6.3. ນະໂຍບາຍຂອງລັດຖະບານ

ລັດຖະບານ ມີນະໂຍບາຍ ສົ່ງເສີມການປຸງແຕ່ງໄມ້ພາຍໃນ ໂດຍຕິດພັນ ລະບຽບການກ່ຽວກັບ ສິ່ງອຳນວຍຄວາມສະດວກ ໃນການປຸງແຕ່ງ ກັບ ແຜນການຂຸດຄົ້ນ ແລະ ສົ່ງເສີມການສົ່ງຜະລິດຕະພັນໄມ້ສຳເລັດຮູບ ອອກຕ່າງປະເທດ. ໃນໄລຍະຜ່ານມາ ກໍໄດ້ດຳເນີນນະໂຍບາຍດັດສົມໂຮງງານ ເພື່ອແກ້ໄຂບັນຫາ ການຜະລິດເກີນຄວາມສາມາດໃນການສະໜອງຂອງປ່າທຳມະຊາດ ແລະ ເພື່ອປັບປຸງວິທະຍາການ ແລະ ມາດຕະຖານ, ເພື່ອຫັນປ່ຽນຈາກການສະໜອງໄມ້ທ່ອນ ແລະ ໄມ້ເລື່ອຍ ຈາກປ່າໄມ້ທຳມະຊາດ ອອກຕ່າງປະເທດ ໄປສູ່ ການສ້າງຄວາມໄດ້ປຽບໃນການແຂ່ງຂັນ ໃນການປຸງແຕ່ງຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ທີ່ນຳໃຊ້ໄມ້ປູກ ເປັນວັດຖຸດິບຫຼາຍຂຶ້ນ.

### 3.6.3.1. **ບັນຫາ ການຜະລິດເກີນຄວາມສາມາດ**

ລັດຖະບານ ໄດ້ນຳໃຊ້ວິທີການດັດສົມ ທັງດ້ວຍຮູບການຫຼຸດຂະໜາດ ແລະ ທັງປັບປຸງຂະແໜງການອຸດສາຫະກຳໄມ້ ໂດຍຜ່ານການເລືອກເຟັ້ນ ໂຮງງານປຸງແຕ່ງໄມ້ ທີ່ຖືກຕ້ອງ ກັບເງື່ອນໄຂອັນແນ່ນອນ (ຄຳສັ່ງ ເລກທີ 10/ນຍ, ໃນປີ 2000 ແລະ ຄຳສັ່ງແນະນຳ ເລກທີ 267/ກປ.2000). ເງື່ອນໄຂສຳຄັນ ມີດັ່ງນີ້:

1) ປຸງແຕ່ງຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ.
2) ນຳໃຊ້ເຄື່ອງຈັກ ທີ່ທັນສະໄໝ, ມີສະມັດຕະພາບສູງ ແລະ ເໝາະສົມ ເພື່ອປຸງແຕ່ງຜະລິດຕະພັນ ເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ.
3) ນຳໃຊ້ວິທີ ການປ້ອງກັນສິ່ງແວດລ້ອມ ທີ່ດີ, ຮັບປະກັນຄວາມປອດໄພ ແລະ ສຸຂະອະນາໄມ ທີ່ດີ.
4) ດຳເນີນການຄຸ້ມຄອງ ດ້ວຍຮູບແບບ ທີ່ເໝາະສົມ.
5) ຫຼີກລ້ຽງ ຈາກການລະເມີດລະບຽບກົດໝາຍ.

ອີງຕາມຂະບວນການເລືອກເຟັ້ນດັ່ງທີ່ກ່າວມານີ້, ລັດຖະບານ ໄດ້ແນະນຳ ໃຫ້ປິດໂຮງງານ 26 ແຫ່ງ ໃນຈຳນວນ 130 ແຫ່ງ ແລະ ໂຮງເຟີນີເຈີ 169 ແຫ່ງ ໃນ ຈຳນວນ 918 ແຫ່ງ. ຄຳສັ່ງ ຂອງນາຍົກ ລັດຖະມົນຕີ ເລກທີ 18/ນຍ.2002 ໄດ້ອອກຄຳສັ່ງໃຫ້ ໂຮງງານເຫຼົ່ານີ້ ຢຸດຕິການດຳເນີນກິດຈະການ.

### 3.6.3.2. **ການສົ່ງເສີມ ການສົ່ງຜະລິດຕະພັນໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ອອກຕ່າງປະເທດ**

ເພື່ອສົ່ງເສີມ ການສົ່ງຜະລິດຕະພັນໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ອອກຕ່າງປະເທດ, ນາຍົກລັດຖະມົນຕີ ໄດ້ອອກຄຳສັ່ງ ສະບັບເລກທີ 11/ນຍ.1999, ເລກທີ 10/ນຍ.2000 ແລະ ເລກທີ 15/ນຍ.2001 ໂດຍໄດ້ເກືອດຫ້າມ ການສົ່ງໄມ້ທ່ອນ ແລະ ຫຼຸດຜ່ອນການສົ່ງໄມ້ເລື່ອຍ ອອກຕ່າງປະເທດ. ຖັດຈາກນັ້ນມາ, ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 18/2002 ແມ່ນໄດ້ເກືອດຫ້າມ ການສົ່ງໄມ້ເລື່ອຍ ອອກຕ່າງປະເທດ ແລະ ຕໍ່ມາ ຄຳສັ່ງເລກທີ 25/ນຍ.2004 ແມ່ນໄດ້ອະນຸຍາດສົ່ງອອກສະເພາະແຕ່ໄມ້ເຄິ່ງສຳເລັດຮູບຈຳນວນໜຶ່ງເທົ່ານັ້ນ. ຄຳສັ່ງເຫຼົ່ານີ້ ໄດ້ຮັບການຈັດຕັ້ງປະຕິບັດເປັນກ້າວໆມາ.

ຄຽງຄູ່ກັນນັ້ນ, ເພື່ອປົກປອ້ງຜູ້ທີ່ໄດ້ລົງທຶນ ເຂົ້າໃນການປຸງແຕ່ງໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດຮູບພາຍໃນ ແລະ ເພື່ອຫຼີກເວັ້ນ ບໍ່ໃຫ້ມີຄວາມກົດດັນຕໍ່ຊັບພະຍາກອນທຳມະຊາດ, ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 46/ນຍ (2001) ໄດ້ຫ້າມບໍ່ໃຫ້ມີການອະນຸຍາດ ໃຫ້ນັກລົງທຶນຕ່າງປະເທດ ລົງທຶນເຂົ້າໃສ່ການປຸງແຕ່ງໄມ້ຂັ້ນສອງ ທີ່ອີງໃສ່ວັດຖຸດິບຈາກປ່າໄມ້ທຳມະຊາດ, ຍົກເວັ້ນແຕ່ການລົງທຶນໃສ່ໂຮງງານເຟີນີເຈີ ເທົ່ານັ້ນ.

ເພື່ອເປັນການຮອງຮັບ ລະບົບພາສີອາກອນ ຕາມຄວາມນິຍົມທີ່ມີປະສິດທິຜົນທົ່ວໄປ, ຜະລິດຕະພັນໄມ້ຫຼາຍປະເພດ ໄດ້ຮັບການປ່ຽນຈາກບັນຊີ ***ໂຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ*** *(Temporary Exclusion List)* ມາເປັນ ***ບັນຊີຫຼຸດຜ່ອນອັດຕາພາສີ*** *(Inclusion List)*, ໝາຍຄວາມວ່າ ອັດຕາພາສີນຳເຂົ້າ ຂອງຜະລິດຕະພັນເຫຼົ່ານັ້ນ ຈະຫຼຸດລົງຈາກ 5-40% ມາເປັນ 0-10% ໃນປີ 2008. ສິ່ງເຫຼົ່ານີ້ ແມ່ນບາດກ້າວໜຶ່ງອີກ ເພື່ອ ເຮັດໃຫ້ອຸດສາຫະກຳໄມ້ ຂອງ ສປປ ລາວ ມີການແຂ່ງຂັນ ຫຼາຍກວ່າເກົ່າ ຢູ່ໃນຕະຫຼາດພາກພື້ນ.

### 3.6.3.3. ໄລຍະຂ້າມຜ່ານ ໄປສູ່ການປຸງແຕ່ງໄມ້ປູກ

ນອກຈາກລະບົບຕ່າງໆ ທີ່ໄດ້ລະບຸໄວ້ ຢູ່ໃນຂໍ້ 3.4 ເພື່ອສົ່ງເສີມການປູກໄມ້ ໃຫ້ເປັນພື້ນຖານ ໃນການສະໜອງໄມ້ ໃນອານາຄົດແລ້ວ, ຍັງໄດ້ວາງມາດຕະການສະເພາະ ຈຳນວນໜຶ່ງ ສຳລັບຂະແໜງອຸດສາຫະກຳໄມ້. ອັນທີໜຶ່ງ ແມ່ນຕ້ອງເປີດກວ້າງ ການລົງທຶນເຂົ້າໃສ່ການປຸງແຕ່ງໄມ້ທຸກປະເພດ ທີ່ນຳໃຊ້ໄມ້ປູກ (ດຳລັດ ຂອງນາຍົກ ລັດຖະມົນຕີ ເລກທີ 46/ນຍ-2001) ແລະ ອັນທີສອງ ແມ່ນ ກຳນົດໃຫ້ເຈົ້າຂອງໂຮງງານປຸງແຕ່ງໄມ້ ສ້າງສວນປູກໄມ້ເປັນຂອງຕົນເອງ ຕາມຂະໜາດຂອງໂຮງງານ (ຄຳສັ່ງ ຂອງ ນາຍົກລັດຖະມົນຕີ ເລກທີ 18/ນຍ.2002).

## 3.6.4. ບັນຫາຕ່າງໆ ຂອງອຸດສາຫະກຳປຸງແຕ່ງໄມ້

### 3.6.4.1. ຂັ້ນຕອນ ທີ່ຫຍຸ້ງຍາກ ໃນການດຳເນີນ ໂຮງງານ

ລະບຽບການຕ່າງໆ ທີ່ມີແລ້ວ ມີຄວາມຈຳເປັນຕອ້ງໄດ້ຮັບການປັບປຸງຄືນໃໝ່ ຕາມທິດໃຫ້ກະທັດຮັດ ເພື່ອເອື້ອອຳນວຍໃຫ້ແກ່ການດຳເນີນງານ ແລະ ການຂະຫຍາຍຕົວ ຂອງອຸດສາຫະກຳປຸງແຕ່ງໄມ້ ໃຫ້ໄດ້ຮັບຜົນດີ. ທັງນີ້ກໍຍອ້ນວ່າ ຈາກການທີ່ຕ້ອງມີໃບອະນຸຍາດຫຼາຍຢ່າງ ທີ່ຈຳເປັນ ເພື່ອດຳເນີນ ແລະ ສືບຕໍ່ດຳເນີນທຸລະກິດ ຫຼື ກິດຈະການນັ້ນ, ຕ້ອງເສຍເວລາ ແລະ ຄ່າສິ້ນເປືອງຫຼາຍ. ຍິ່ງໄປກວ່ານັ້ນ, ມາດຖານ ໃນການອອກອະນຸຍາດ ຍັງບໍ່ທັນມີຄວາມໂປ່ງໃສພຽງພໍ ແລະ ສິ່ງດັ່ງກ່າວນີ້ ເຮັດໃຫ້ການລົງທຶນໃໝ່ ເຂົ້າໃນຂະແໜງການປຸງແຕ່ງໄມ້ ທີ່ມີປະສິດທິພາບສູງກວ່າເກົ່າ ແມ່ນຍັງຖືກຈຳກັດ.

### 3.6.4.2. ວິທີການບໍລິຫານ ເພື່ອຫຼຸດຜ່ອນ ຈຳນວນໂຮງງານປຸງແຕ່ງໄມ້

ເພື່ອແກ້ໄຂຈຸດອອ່ນ ຂອງກົງຈັກການຈັດຕັ້ງທີ່ຄຸ້ມຄອງການຂຸດຄົ້ນໄມ້ ແລະ ພອ້ມນີ້ ກໍເພື່ອເຮັດໃຫ້ ຄວາມຕອ້ງການໄມ້ ຂອງບັນດາໂຮງງານປຸງແຕ່ງໄມ້ ທີ່ມີຢູ່ພາຍໃນປະເທດ ສົມດູນ ກັບຄວາມສາມາດໃນການສະໜອງໄມ້ຂອງປ່າໄມ້ ທີ່ມີຢູ່ໃນປະຈຸບັນ ເຫັນວ່າມີຄວາມຈຳເປັນ ຕອ້ງໄດ້ຫຼຸດຈຳນວນໂຮງງານປຸງແຕ່ງໄມ້ລົງຕື່ມ ດ້ວຍການນຳໃຊ້ມາດຕະການດ້ານບໍລິຫານ, ແຕ່ຂັ້ນຕອນໃນການຄັດເລືອກໂຮງງານ ທີ່ຈະຮັກສາໄວ້ ຕອ້ງດຳເນີນໄປ ດ້ວຍຄວາມໂປ່ງໃສ. ພອ້ມນີ້ ຕອ້ງໄດ້ນຳໃຊ້ມາດຕະການອື່ນເຂົ້າຊ່ວຍ ເປັນຕົ້ນ ແມ່ນການປະມູນຂາຍໄມ້ທອ່ນ, ການຄວບຄຸມການຂຸດຄົ້ນໄມ້, ການສະໜອງໄມ້ ໃຫ້ແກ່ໂຮງງານປຸງແຕ່ງໄມ້ ທີ່ມີການຄຸ້ມຄອງຢ່າງເຂັ້ມງວດ ແລະ ກ້າວໄປເຖິງການ ປະກາດປິດປ່າ ແບບຊົ່ວຄາວ ເປັນເຂດໆໄປ ໂດຍສະເພາະ ແມ່ນເຂດທີ່ມີການ ຂຸດຄົ້ນໄມ້ຢ່າງໜັກໜ່ວງ ເກີນຄວາມສາມາດໃນການສະໜອງຂອງປ່າໄມ້ ແລະ ເຂດທີ່ມີການຖາງປ່າເຮັດໄຮ່ມາໄດ້ຫຼາຍປີແລ້ວ ແລະ ການປິດປ່າແບບຖາວອນ ໃນເຂດທີ່ເປັນຕົ້ນນ້ຳລຳທານ ຫຼື ເຂດອ່າງໂຕ່ງ.

### 3.6.4.3. ການຂາດປະສິດທິພາບ ໃນການປຸງແຕ່ງໄມ້

ໂຮງງານຫຼາຍແຫ່ງ ດຳເນີນການຜະລິດ ທີ່ຕ່ຳກວ່າເຄິ່ງໜຶ່ງ ຂອງຄວາມສາມາດ ຂອງເຄື່ອງຈັກທີ່ໄດ້ຕິດຕັ້ງ ແລະ ອັດຕາການນຳໃຊ້ໄມ້ ກໍມີປະມານ 50%, ແຕ່ໂຮງງານເຫຼົ່ານີ້ ຍັງສາມາດດຳເນີນທຸລະກິດຂອງຕົນ ໄດ້ຢູ່ ທັງນີ້ກໍຍອ້ນວ່າ ອັດຕາການເກັບຄ່າພັນທະຂອງລັດ ແມ່ນຍັງຕ່ຳ ແລະ ເວລາຈ່າຍຄ່າພັນທະ ກໍຕ່ຳກວ່າອັດຕາທີ່ທາງການວາງອອກ ຫຼື ອັດຕາຕະຫຼາດຕົວຈິງ. ບັນຫານີ້ ດ້ານໜຶ່ງ ແມ່ນຍ້ອນການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ບໍ່ຖືກຕອ້ງ ຕາມຫຼັກວິຊາການ, ມີໄມ້ທ່ອນທີ່ຖືກຈັດໃຫ້ຕົກປະເພດ ເປັນຈຳນວນຫຼາຍ ເພື່ອຊື້ໃນລາຄາຖືກ ຫຼື ບາງກໍລະນີ ກໍບໍ່ຈ່າຍ ຄ່າພັນທະເລີຍ. ແຕ່ຕາມຫຼັກການ ແລະ ຕາມລະບຽບການແລ້ວ ແມ່ນອະນຸຍາດ ໃຫ້ແຕ່ໂຮງງານທີ່ມີປະສິດທິພາບເທົ່ານັ້ນ ສາມາດ ສືບຕໍ່ ດຳເນີນກິດຈະການໄດ້. ສະນັ້ນ ເພື່ອແກ້ໄຂບັນຫານີ້ ຕອ້ງເຮັດໃຫ້ບັນດາລະບຽບການ, ກົດລະບຽບ ແລະ ບົດແນະນຳທາງດ້ານວິຊາການ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

### 3.6.4.4. ຜະລິດຕະພັນໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ບໍ່ທັນໄດ້ຮັບການສົ່ງເສີມຢ່າງພຽງພໍ ໃນການປຸງແຕ່ງ ແລະ ສົ່ງອອກຕ່າງປະເທດ

ລັດຖະບານ ໄດ້ພະຍາຍາມເກືອດຫ້າມຢ່າງເຂັ້ມງວດ ຕໍ່ການສົ່ງໄມ້ທ່ອນ ແລະ ໄມ້ເລື່ອຍ ອອກຕ່າງປະເທດ. ແຕ່ຢ່າງໃດກໍດີ ການປະຕິບັດມາດຕະການອັນນີ້ ຢ່າງດຽວ ອາດບໍ່ພຽງພໍ ເພື່ອຊຸກຍູ້ຂະແໜງອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ທີ່ມີການແຂ່ງຂັນ ແລະ ທຸລະກິດການສົ່ງຜະລິດຕະພັນໄມ້ດັ່ງກ່າວອອກຕ່າງປະເທດ ທັງນີ້ ກໍຍ້ອນວ່າ ຂະແໜງອຸດສາຫະກຳປຸງແຕ່ງໄມ້ຢູ່ປະເທດເຮົາ ຍັງຂາດ ເຕັກນິກວິທະຍາການທີ່ທັນສະໄໝ, ກຳມະກອນທີ່ຊຳນານງານ, ຄວາມຮູ້ໃນການອອກແບບສິນຄ້າ ແລະ ປະສົບການ ທາງດ້ານການຕະຫຼາດໃນຕ່າງປະເທດ. ສະນັ້ນ, ຕອ້ງໄດ້ພິຈາລະນາ ແລະ ຈັດຕັ້ງປະຕິບັດ ມາດຕະການອື່ນ ຢ່າງທັນການ ເທົ່າທີ່ຈະເຮັດໄດ້.

## 3.7. ການອະນຸລັກຊີວະນາໆພັນ

### 3.7.1 ຊີວະນາໆພັນ ຢູ່ໃນ ສປປ ລາວ

#### 3.7.1.1. ຄວາມຫຼາກຫຼາຍທາງຖິ່ນອາໃສ

ຢູ່ໃນ ສປປລາວ ມີຖິ່ນອາໃສ ທີ່ມີຄວາມສຳຄັນຕໍ່ການອະນຸລັກ ໃນລະດັບສາກົນ ລວມທັງໝົດ 7 ເຂດ ຄື:

- ເຂດປ່າດົງດິບ ຕາມບໍລິເວນ ແລະ ຕີນສາຍພູຫຼວງ.
- ເຂດປ່າພູຫີນປູນ ໃນພາກກາງອິນດູຈີນ.
- ເຂດປ່າໂຄກ ໃນເຂດທົ່ງພຽງແມ່ນ້ຳຂອງ.
- ເຂດພູພຽງບໍລະເວນ.
- ເຂດພູສູງ ທາງພາກເໜືອ.
- ເຂດສາຍແມ່ນ້ຳຂອງ.
- ເຂດແມ່ນ້ຳ ແລະ ຫ້ວຍນ້ຳ ອື່ນໆ.

#### 3.7.1.2. ຄວາມຫຼາກຫຼາຍທາງດ້ານຊະນິດພັນ

ສປປ ລາວ ອຸດົມສົມບູນ ໄປດ້ວຍ ບັນດາຊະນິດພັນ ທີ່ສາມາດຈັດລະດັບ ໃຫ້ເປັນຊະນິດພັນສະເພາະຖິ່ນ ແລະ ມີຄວາມເປັນເອກະລັກ ທາງນິເວດວິທະຍາສູງ ເຊັ່ນ: ມີ ພືດປະມານ 8.100 ຊະນິດ, ສັດເລືອຄານ ແລະ ສັດເຄິ່ງບົກເຄິ່ງນ້ຳ 166 ຊະນິດ, ນົກ 700 ຊະນິດ ແລະ ສັດລ້ຽງລູກດ້ວຍນ້ຳນົມປະມານ 100 ຊະນິດ. ສະເພາະ ຢູ່ເຂດປ່າສະຫງວນ ນາກາຍ-ນ້ຳເທີນ ຕາມການສຶກສາຕົວຈິງ ມີ ນົກຫຼາຍກວ່າ 430 ຊະນິດ, ຊຶ່ງເທົ່າກັບ $^1/_{25}$ ຂອງຊະນິດນົກທັງໝົດ ຢູ່ໃນໂລກ ແລະ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຊະນິດນົກທັງໝົດນີ້ ແມ່ນອາໃສຢູ່ເຂດຕອນລຸ່ມຂອງອ່າງແມ່ນ້ຳຂອງ. ນອກຈາກນັ້ນແລ້ວ ຍັງໄດ້ພົບປາ ຈຳນວນ 87 ຕະກຸນ ທີ່ເປັນທີ່ຮັບຮູ້ດີ ຢູ່ໃນພາກພື້ນອິນດູຈີນ, ໃນນັ້ນມີ 74 ຕະກຸນ ໄດ້ຖືກພົບເຫັນ ຢູ່ໃນທະວີບອາຟຼິກກາ ແລະ 60 ຕະກຸນ ພົບເຫັນຢູ່ໃນອາເມຣິກາໃຕ້.

#### 3.7.1.3. ຄວາມຫຼາກຫຼາຍ ທາງດ້ານວັດທະນະທຳ

ສປປ ລາວ ມີຫຼາຍເຜົ່າຊົນແຕກຕ່າງກັນ, ໃນນັ້ນລວມທັງ ທາງດ້ານຈຳນວນຂອງເຜົ່າຊົນ ແລະ ທາງດ້ານການຈັດແບ່ງພາສາຂອງເຂົາເຈົ້າ. ໄດ້ມີການຈຳແນກວ່າ ມີ ພາສາເວົ້າ ຫຼາຍກວ່າ 230 ພາສາ ທີ່ຂຶ້ນກັບ 4 ໝວດພາສາຕົ້ນຕໍ. ດັ່ງນັ້ນ, ຈຶ່ງເຮັດໃຫ້ ສປປ ລາວ ເປັນປະເທດໜຶ່ງ ທີ່ມີຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ

ເຜົ່າຊົນ. ຄວາມຫຼາກຫຼາຍນີ້ ສ່ວນໃຫຍ່ ແມ່ນ ປະກົດມີ ຢູ່ໃນເຂດພູດອຍ ຫ່າງໄກສອກຫຼີກ, ໂດຍສະເພາະ ຢູ່ໃນເຂດປ່າສະຫງວນແຫ່ງຊາດ.

### 3.7.2. ລະບົບການອະນຸລັກຊີວະນາໆພັນ

ການສ້າງຕັ້ງປ່າສະຫງວນແຫ່ງຊາດ ໄດ້ລິເລີ່ມ ແຕ່ປີ 1989. ຈາກນັ້ນ, ໃນປີ 1993 ຈຶ່ງມີດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 164/ນຍ ກ່ຽວກັບການປະກາດສ້າງຕັ້ງ ປ່າສະຫງວນແຫ່ງຊາດ 18 ແຫ່ງໃນເບື້ອງຕົ້ນ, ຕໍ່ມາໄດ້ປະກາດເພີ້ມເປັນ 20 ແຫ່ງ ແລະ ເຂດເຊື່ອມຕໍ່ອີກ 2 ເຂດ. ເນື້ອທີ່ປ່າສະຫງວນແຫ່ງຊາດທັງໝົດໃນປະຈຸບັນມີປະມານ 3,4 ລ້ານ ເຮັກຕາ ຫຼື ເທົ່າກັບ 14,3% ຂອງເນື້ອທີ່ທົ່ວປະເທດ. ນອກຈາກນັ້ນ ແຂວງ ແລະ ເມືອງ ຍັງໄດ້ສ້າງຕັ້ງ ປ່າສະຫງວນ[10] ແລະ ປ່າປ້ອງກັນ[11] ຢູ່ໃນທ້ອງຖິ່ນຂອງຕົນ ເຊິ່ງໃນທົ່ວປະເທດ ມີເນື້ອທີ່ ປ່າສະຫງວນ ແລະ ປ່າປອ້ງກັນ ທັງໝົດປະມານ 5,3 ລ້ານ ເຮັກຕາ ຫຼື ເທົ່າກັບ 22,6% ຂອງເນື້ອທີ່ທັງໝົດທົ່ວປະເທດ.

### 3.7.3. ກອບທາງດ້ານນິຕິກຳ

ອີງປະກອບທາງດ້ານ ນິຕິກຳ ທີ່ສຳຄັນທີ່ສຸດ 3 ຢ່າງ ຄື: ດຳລັດ ເລກທີ 164/ນຍ ປີ 1993, ກົດໝາຍປ່າໄມ້ ປີ 1996 ແລະ ລະບຽບການ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0360/ກປ.2003 ກ່ຽວກັບການຄຸ້ມຄອງປ່າສະຫງວນແຫ່ງຊາດ, ສັດປ່າ ແລະ ສັດນ້ຳ, ທັງໝົດນັ້ນແມ່ນ ເຄື່ອງມືມະຫາພາກ ອັນລະອຽດ ໃນການຈັດຕັ້ງປະຕິບັດ. ບັນດາຂໍ້ກຳນົດ ແລະ ລະບຽບການຕ່າງໆອັນຄົບຖ້ວນ ໄດ້ສະແດງຢູ່ໃນບົດລາຍງານ ກ່ຽວກັບກອບທາງດ້ານນິຕິກຳ ຂອງຂະແໜງປ່າໄມ້ (2003) ກະກຽມ ໂດຍກົມປ່າໄມ້ ໂດຍການສະໜັບສະໜູນ ຈາກອົງການຊີດາ.

***ດຳລັດເລກທີ 164/ນຍ ປີ 1993*** ແມ່ນດຳລັດ ວ່າດ້ວຍການສ້າງຕັ້ງປ່າສະຫງວນແຫ່ງຊາດ[12]. ປ່າສະຫງວນແຫ່ງຊາດແມ່ນເຂດທີ່ໄດ້ຈັດສັນໃນລະດັບຊາດ ເພື່ອການອະນຸລັກທຳມະຊາດ. ຢູ່ໃນ ສປປ ລາວ ຍັງບໍ່ທັນມີອຸທະຍານແຫ່ງຊາດ, ເຂດອະນຸລັກສັດປ່າ ຫຼື ນົກ, ເຂດສະຫງວນພັນສັດນ້ຳ ຫຼື ເຂດທີ່ຄ້າຍຄື.

***ກົດໝາຍປ່າໄມ້ ເລກທີ 01/1996*** ໄດ້ກຳນົດຮູບແບບ, ໜ້າທີ່, ຈຸດປະສົງ ແລະ ຖານະທາງດ້ານນິຕິກຳ ຂອງ ປ່າສະຫງວນ[13] ແລະ ຮຽກຮ້ອງໃຫ້ລັດຖະບານ ດຳເນີນການຄຸ້ມຄອງປ່າສະຫງວນແຫ່ງຊາດແບບມີສ່ວນຮ່ວມ ຂອງປະຊາຊົນໃນເຂດທ້ອງຖິ່ນ. ກົດໝາຍປ່າໄມ້ ຍັງເປັນບ່ອນອີງ ສຳລັບການຈັດແບ່ງເຂດ ຢູ່ພາຍໃນປ່າສະຫງວນແຫ່ງຊາດ ອອກເປັນ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ແລະ ເຂດເຊື່ອມຕໍ່ອື່ນໆ.

---

[10] *ປ່າສະຫງວນຂອງແຂວງມີ 57 ແຫ່ງ, ມີເນື້ອທີ່ 932.000 ເຮັກຕາ ແລະ ຂອງເມືອງ 144 ແຫ່ງ, ມີເນື້ອທີ່ 504.000 ເຮັກຕາ.*

[11] *ປ່າປອ້ງກັນຂອງແຂວງ ມີ 23 ແຫ່ງ, ມີເນື້ອທີ່ 461.000 ເຮັກຕາ ແລະ ຂອງເມືອງ ມີ 52 ແຫ່ງ, ມີເນື້ອທີ່ 56.000 ເຮັກຕາ.*

[12] *ໃນຕົວຈິງ ຄຳວ່າ "ປ່າສະຫງວນແຫ່ງຊາດ" ໃນພາສາລາວ ໝາຍເຖິງ "National Conservation Forest". ເພື່ອຈຳແນກ ຈາກປ່າສະຫງວນປະເພດອື່ນໆ ໃນພາສາອັງກິດ ໄດ້ນຳໃຊ້ ຄຳວ່າ 'National Biodiversity Conservation Area" ຊຶ່ງຖືກກັບ ຄວາມພະຍາຍາມຂອງລັດຖະບານ ກ່ຽວກັບການໃຫ້ຊື່ດຳລັດ (Berkmller ແລະ ຄະນະ 1995). ປ່າສະຫງວນ ສາມາດປະກາດສ້າງຕັ້ງ ຢູ່ໃນລະດັບແຂວງ, ເມືອງ ແລະ ບ້ານ)*

[13] *ກົດໝາຍປ່າໄມ້ ກຳນົດ ປ່າປ້ອງກັນ ເປັນປ່າປະເພດໜຶ່ງໃນ 5 ປະເພດປ່າ (ມາດຕາ 17), ເຊິ່ງປ່າປະເພດນີ້ ບໍ່ມີເປົ້າໝາຍ ເພື່ອແນໃສ່ປ້ອງກັນຊີວະນາໆພັນ, ຄຸນຄ່າທາງສິ່ງແວດລ້ອມ ແລະ ວັດທະນາທຳ ພຽງແຕ່ແນໃສ່ ປ້ອງກັນ ແຫຼ່ງນ້ຳ, ຄວບຄຸມການເຊາະເຈື່ອນ, ປ້ອງກັນຊາດ ແລະ ສະກັດກັ້ນໄພທຳມະຊາດ ຫຼາຍກວ່າ.*

***ລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0524/ກປ.2001*** ຊຶ່ງຖືກປ່ຽນແທນໂດຍ ***ລະບຽບການ ສະບັບ ເລກທີ 0360/ກປ.2003*** ວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດ, ສັດປ່າ ແລະ ສັດນ້ຳ. ລະບຽບການດັ່ງກ່າວນີ້ ໄດ້ກຳນົດລາຍລະອຽດ ກ່ຽວກັບການສ້າງຕັ້ງ ແລະ ຄຸ້ມຄອງປ່າສະຫງວນແຫ່ງຊາດ, ການຄຸ້ມຄອງສັດປ່າ ແລະ ສັດນ້ຳ ລວມທັງການຂຶ້ນບັນຊີສັດປ່າ ແລະ ສັດນ້ຳປະເພດຫວງຫ້າມ ແລະ ປະເພດຄຸ້ມຄອງ, ກອງທຶນພັດທະນາປ່າສະຫງວນແຫ່ງຊາດ, ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງລັດ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ, ສັດປ່າ ແລະ ສັດນ້ຳ.

## 3.7.4. ການຈັດຕັ້ງ ສຳລັບຄຸ້ມຄອງປ່າສະຫງວນແຫ່ງຊາດ

### 3.7.4.1. ຄວາມຮັບຜິດຊອບຂອງສະຖາບັນ

ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບ ຕໍ່ການຄຸ້ມຄອງປ່າທຸກປະເພດ ລວມທັງປ່າສະຫງວນ ແລະ ໄດ້ມອບຄວາມຮັບຜິດຊອບດັ່ງກ່າວ ໃຫ້ກົມປ່າໄມ້ ໂດຍມີກອງອະນຸລັກຊັບພະຍາກອນປ່າໄມ້ ເປັນຫົວໜ່ວຍວິຊາການ ແລະ ຈາກກົມປ່າໄມ້ (ກອງອະນຸລັກຊັບພະຍາກອນປ່າໄມ້) ໄປສູ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຊຶ່ງເປັນຜູ້ຈັດຕັ້ງປະຕິບັດຕົວຈິງ ໃນການຄຸ້ມຄອງປ່າສະຫງວນ, ສັດນ້ຳ ແລະ ສັດປ່າ ຢູ່ໃນທ້ອງຖິ່ນຂອງຕົນ. ການແບ່ງຄວາມຮັບຜິດຊອບເຫຼົ່ານີ້ ແມ່ນຕ້ອງໄດ້ມີການປະສານສົມທົບ ກັບ ປະຊາຊົນ ທີ່ດຳລົງຊີວິດຢູ່ພາຍໃນ ແລະ ນອກເຂດປ່າສະຫງວນ.

### 3.7.4.2. ຍຸດທະສາດການຄຸ້ມຄອງປ່າສະຫງວນແຫ່ງຊາດ

ລະບົບການຄຸ້ມຄອງປ່າສະຫງວນ ສາມາດ ແບ່ງອອກ ເປັນ 2 ຮູບແບບ ຄື: ***1) ວິທີການອະນຸລັກ ແລະ ພັດທະນາ ແບບປະສົມປະສານ, 2) ວິທີການຄຸ້ມຄອງ ແບບມີສ່ວນຮ່ວມ***. ໂດຍລວມແລ້ວ ຮູບແບບທີ 1; “***ການອະນຸລັກ ແລະ ພັດທະນາ ແບບປະສົມປະສານ***” ແມ່ນມີຄວາມເໝາະສົມ ສຳລັບ ສ.ປ.ປ.ລາວ ຫຼາຍກວ່າ ເພາະວ່າ ລະບົບການດຳລົງຊີວິດຂອງປະຊາຊົນໃນປະຈຸບັນ ແມ່ນ ສ້າງຄວາມກົດດັນ ຕໍ່ຊີວະນາໆພັນ, ພ້ອມດຽວກັນນັ້ນ ການພັດທະນາແບບມີຈຸດສຸມ ກໍສາມາດ ຫຼຸດຜ່ອນຄວາມທຸກຍາກ ຂອງປະຊາຊົນໃນທ້ອງຖິ່ນໄດ້. ວິທີການຄຸ້ມຄອງແບບມີສ່ວນຮ່ວມ ໄດ້ຮັບຮອງເອົາ ໂດຍລັດຖະບານ ເພື່ອເອົາປະຊາຊົນ ເຂົ້າຮ່ວມໃນກິດຈະກຳການອະນຸລັກ ແລະ ການຕັດສິນບັນຫາ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ ເພາະວ່າ ພວກເຂົາເຈົ້າ ໄດ້ຄຸ້ມຄອງຊັບພະຍາກອນປ່າໄມ້ ຢູ່ໃນທ້ອງຖິ່ນນັ້ນມາແລ້ວ ແລະ ກໍເຫັນວ່າມີຄວາມຍືນນານເປັນສ່ວນຫຼາຍ.

ທັງສອງຮູບແບບ ທີ່ກ່າວມານັ້ນ ແມ່ນສາມາດນຳໃຊ້ສັບປ່ຽນກັນໄດ້ ແລະ ສອດຄ່ອງກັບນະໂຍບາຍ ເປັນຢ່າງດີ, ທັງນີ້ ກໍເພື່ອ ເປັນການແບ່ງປັນຄວາມຮັບຜິດຊອບ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ ໃຫ້ແກ່ທ້ອງຖິ່ນ. ໃນຕົວຈິງແລ້ວ ໃນທຸກໆໂຄງການຄຸ້ມຄອງປ່າສະຫງວນແຫ່ງຊາດ ແມ່ນໄດ້ນຳໃຊ້ບາງວິທີການຄຸ້ມຄອງ ແບບມີສ່ວນຮ່ວມ. ແຕ່ຍ້ອນວ່າ ມີຄວາມກົດດັນຈາກທາງນອກເຂດປ່າສະຫງວນ ແລະ ການມີສ່ວນຮ່ວມຂອງສະເພາະແຕ່ປະຊາຊົນ ທີ່ດຳລົງຊີວິດຢູ່ໃນນັ້ນ ແມ່ນບໍ່ພຽງພໍ, ດັ່ງນັ້ນ ຈຶ່ງຄວນ ຜັນຂະຫຍາຍວິທີການຄຸ້ມຄອງແບບມີສ່ວນຮ່ວມ ຕື່ມອີກ ເພື່ອສົ່ງເສີມ ໃຫ້ຜູ້ມີສ່ວນກ່ຽວຂ້ອງທັງໝົດ ເຂົ້າຮ່ວມຂະບວນການຄຸ້ມຄອງ ເປັນຢ່າງດີ.

### 3.7.4.3. ການຮ່ວມມືກັບສາກົນ

ການຮ່ວມມືກັບສາກົນ ສ່ວນຫຼາຍ ແມ່ນການຮ່ວມມືໃນການຄົ້ນຄວ້າວິທະຍາສາດ, ພັດທະນາວິຊາການ ແລະ ການກໍ່ສ້າງຄວາມສາມາດຂອງພະນັກງານ. ການຄຸ້ມຄອງປ່າສະຫງວນແຫ່ງຊາດ ໄດ້ດຳເນີນໄປ ໂດຍຜູ້ໃຫ້ທຶນ ແຕ່ລະ

ອົງການ ຫຼື ຮ່ວມກັນ ເຊັ່ນ: ອົງການ Sida, DANIDA, ປະເທດ ການາດາ, IUCN, WWF, WCS, GTZ, GEF, FINNIDA, AFD, JICA, TRAFFIC, ທະນາຄານໂລກ ແລະ ອື່ນໆ.

ນອກຈາກນັ້ນ ກໍເພີ່ມທະວີການຮ່ວມມືກັບບັນດາປະເທດເພື່ອນບ້ານໃກ້ຄຽງ ໂດຍສະເພາະ ໃນເຂດເນື້ອທີ່ປ່າສະຫງວນລຽບຕາມຊາຍແດນ, ເຂດດ່ານກວດກາລະຫວ່າງຊາດ ທີ່ດໍາເນີນການກວດກາຕາມປົກກະຕິ ຊຶ່ງການຮ່ວມມືດັ່ງກ່າວແມ່ນປະສົບຜົນສໍາເລັດ ໃນການປະກອບສ່ວນ ເຂົ້າໃສ່ການອະນຸລັກປ່າສະຫງວນ ແຕ່ລະເຂດທີ່ສໍາຄັນ ຊຶ່ງສາມາດເຮັດໃຫ້ແຫຼ່ງພັນທຸກໍາ ຂະຫຍາຍຕົວຂຶ້ນ ແລະ ຈໍານວນຊະນິດພັນເພີ່ມຂຶ້ນ ເຮັດໃຫ້ເຂດກັນຊົນ ມີຄວາມເຂັ້ມແຂງ ສາມາດຕ້ານທານຕໍ່ການລົບກວນ ຫຼື ໄພຂົ່ມຂູ່ ຫຼາຍຂຶ້ນ.

### 3.7.5. ບັນຫາ ແລະ ໄພຂົ່ມຂູ່ ຕໍ່ປ່າສະຫງວນ, ສັດປ່າ ແລະ ສັດນໍ້າ

ເຖິງແມ່ນວ່າ ໃນໄລຍະຜ່ານມາ ລັດຖະບານ ໄດ້ມີຄວາມພະຍາຍາມ ປັບປຸງກອບທາງດ້ານນິຕິກໍາ, ປັບປຸງການຈັດຕັ້ງ ແລະ ກວດກາກິດຈະກໍາ ທີ່ບໍ່ໄດ້ຮັບອະນຸຍາດ ຢ່າງເຂັ້ມງວດກໍຕາມ, ແຕ່ປ່າສະຫງວນ ຍັງສືບຕໍ່ເຊື່ອມໂຊມລົງ ແລະ ສັດປ່າ-ສັດນໍ້າ ທີ່ມີຄ່າ ກໍຍັງສືບຕໍ່ ຫຼຸດລົງ. ການເຊື່ອມໂຊມ ຂອງຖິ່ນຢູ່ອາໃສ ແລະ ການຫັນປ່ຽນປ່າໄມ້ ໄປຮັບໃຊ້ກິດຈະກໍາອື່ນ ຢູ່ໃນປ່າສະຫງວນແຫ່ງຊາດ ເຊັ່ນ: ດົງພູວຽງ ແລະ ພູພະນັງ ແມ່ນໜັກໜ່ວງ ຈົນບາງສ່ວນ ຂອງປ່າສະຫງວນແຫ່ງຊາດດັ່ງກ່າວ ຈະບໍ່ສາມາດຮັບປະກັນ ໃຫ້ແກ່ການອະນຸລັກ ໄດ້ເລີຍ. ປ່າສະຫງວນແຫ່ງຊາດອື່ນໆ ບາງແຫ່ງ ທີ່ມີການປົກປັກຮັກສາດີ, ແຕ່ກໍຍັງໄດ້ຮັບ ຄວາມກົດດັນອັນໃຫຍ່ຫຼວງ ຈາກບັນດາກິດຈະກໍາທີ່ຜິດກົດໝາຍ ແລະ ກິດຈະກໍາພັດທະນາຕ່າງໆ. ບັນດາໄພຂົ່ມຂູ່ຕ່າງໆ ທີ່ມີຕໍ່ປ່າສະຫງວນແຫ່ງຊາດ, ສັດປ່າ ແລະ ສັດນໍ້າ ທີ່ຈໍາເປັນຕ້ອງໄດ້ຮັບການພິຈາລະນາ ຢ່າງຮີບດ່ວນ ໄດ້ສະແດງອອກຢູ່ຂ້າງລຸ່ມນີ້.

#### 3.7.5.1. ການເຊື່ອມໂຊມ ຂອງຖິ່ນອາໃສຂອງພືດພັນ, ສັດປ່າ-ສັດນໍ້າ

***ການປູກຝັງ:*** ປະຊາຊົນ ທີ່ຕັ້ງຖິ່ນຖານ ຢູ່ພາຍໃນ ຫຼື ອ້ອມຂ້າງປ່າສະຫງວນບາງແຫ່ງ ໄດ້ຂະຫຍາຍເນື້ອທີ່ທໍາການຜະລິດກະສິກໍາ ແລະ ເນື້ອທີ່ປູກພືດອຸດສາຫະກໍາ. ການຖາງປ່າເຮັດໄຮ່ ຕາມປະເພນີ ກໍຍັງດໍາເນີນຢູ່ໃນເຂດປ່າສະຫງວນບາງແຫ່ງ ແລະ ບາງຄັ້ງ ກໍເຮັດໃຫ້ເກີດໄຟໄໝ້ລາມປ່າ ຕາມໜ້າດິນ ຊຶ່ງໄດ້ສ້າງຄວາມເສຍຫາຍ ຢ່າງຫຼວງຫຼາຍ.

***ການລ້ຽງສັດ:*** ຢູ່ໃນລະດູແລ້ງ, ປະຊາຊົນ ສ່ວນຫຼາຍ ໄດ້ປ່ອຍສັດໃຫຍ່ ເຂົ້າໄປໃນປ່າໄມ້. ປະຊາຊົນ ຈູດປ່າໄມ້ເພື່ອກະຕຸ້ນໃຫ້ຫຍ້າເກີດ ແລະ ທໍາລາຍສັດກິນຊີ້ນ ປະເພດໃຫຍ່ ເຊັ່ນ: ເສືອ ເພື່ອປ້ອງກັນສັດລ້ຽງ. ຍິ່ງໄປກວ່ານັ້ນ, ສັດລ້ຽງ ກໍຍັງກິນເບ້ຍໄມ້ ແລະ ຕົ້ນໄມ້ນ້ອຍ, ພ້ອມດຽວກັນ ກໍອາດສາມາດ ນໍາເຊື້ອພະຍາດ ໄປສູ່ສັດປ່າໄດ້.

#### 3.7.5.2. ກິດຈະກໍາ ຂຸດຄົ້ນຊັບພະຍາກອນ ແລະ ການຂາດຄວາມສາມາດ ໃນການຄວບຄຸມ

***ການລ່າເນື້ອ ແລະ ການຄ້າຂາຍສັດປ່າ.*** ສ່ວນຫຼາຍ ປະຊາຊົນຢູ່ໃນຊົນນະບົດ ລ່າສັດປ່າເພື່ອບໍລິໂພກໃນຄອບຄົວ ແຕ່ພວກເຂົາເຈົ້າ ຍັງຂາຍຊີ້ນ ແລະ ສິ້ນສ່ວນສັດປ່າ ຢູ່ຕາມຕະຫຼາດທ້ອງຖິ່ນ. ການລ່າສັດ ແລະ ການຫາປາ ເພື່ອການຄ້າ ແມ່ນສາມາດນໍາໄປສູ່ການທໍາລາຍຊັບພະຍາກອນເຫຼົ່ານັ້ນ ຢ່າງຫຼວງຫຼາຍ, ຈາກຜົນກະທົບດັ່ງກ່າວ ຈຶ່ງເຮັດໃຫ້ສັດປ່າບາງຊະນິດ ໃນ ສປປ ລາວ ເຊັ່ນ: ແຮດ ແລະ ເຕົ່າບາງຊະນິດ ຕົກຢູ່ໃນສະພາບທີ່ໃກ້ຈະສູນພັນ. ຍອັນວ່າ ປາ ມີຄວາມຊົນເຄີຍໃນການດໍາລົງຊີວິດຢູ່ໃນ ຖິ່ນອາໃສ ຫຼື ສາຍນໍ້າ ທີ່ແຄບ, ສະນັ້ນມັນຈຶ່ງສາມາດຖືກຈັບໄດ້ ເປັນຈໍານວນຫຼວງຫຼາຍ ກວ່າ ສັດປ່າຊະນິດອື່ນໆ.

ໃນປະຈຸບັນ ການບັງຄັບໃຊ້ກົດໝາຍ ແລະ ລະບຽບການ ເພື່ອປອ້ງກັນ ການນຳໃຊ້ສັດປ່າທີ່ບໍ່ຖືກຕອ້ງຕາມກົດໝາຍ ແລະ ລະບຽບການນັ້ນ ຍັງເຮັດບໍ່ທັນເຂັ້ມງວດ ແລະ ຄວາມຮັບຮູ້ ແລະ ປະສົບການຂອງພະນັກງານຕະຫຼອດຮອດງົບປະມານ, ວັດຖຸອຸປະກອນຮັບໃຊ້ ແລະ ເງື່ອນໄຂຂໍ້ສະດວກຕ່າງໆ ກໍຍັງຈຳກັດຢູ່. ຕໍ່ບັນຫາດັ່ງກ່າວ ມັງຮຽກຮອ້ງການຊ່ວຍເຫຼືອ ຈາກອົງການຈັດຕັ້ງພາຍໃນ ແລະ ສາກົນຢ່າງຮີບດ່ວນ.

***ການນຳໃຊ້ທາດເບື່ອ.*** ການທຳລາຍຖິ່ນທີ່ຢູ່ອາໃສ ທັງທາງບົກ ແລະ ທາງນ້ຳ ເພື່ອລ່າສັດປ່າ ແລະ ສັດນ້ຳຢູ່ໃນບາງທອ້ງຖິ່ນ ຍັງມີຢູ່. ລະບຽບການ ຂອງລັດ ແມ່ນເກືອດຫ້າມ ການກະທຳດັ່ງກ່າວ, ແຕ່ຄວາມຮັບຮູ້ ແລະ ຈິດສຳນຶກຂອງສັງຄົມທົ່ວໄປ ຕໍ່ກັບຜົນກະທົບ ຈາກການໃຊ້ທາດເບື່ອ ໃນການລ່າສັດປ່າ ແລະ ສັດນ້ຳ ແມ່ນ ຍັງຕ່ຳຢູ່, ເມື່ອເປັນເຊັ່ນນັ້ນ ຈຶ່ງຈຳເປັນຕອ້ງໄດ້ເພີ່ມທະວີ ການສຶກສາອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຜົນສະທອ້ນອັນບໍ່ດີ ໃຫ້ສັງຄົມຮັບຮູ້.

***ການຂຸດຄົ້ນ ເຄື່ອງປ່າຂອງດົງ.*** ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ເຄື່ອງປ່າຂອງດົງ ເປັນແຫຼ່ງສະບຽງອາຫານ, ອາຫານສັດ, ຟືນ, ວັດສະດຸປຸກສ້າງເຮືອນ ແລະ ອື່ນໆ ທີ່ສຳຄັນ. ເຖິງຢ່າງໃດກໍຕາມ ຍັງມີການຂຸດຄົ້ນ ເຄື່ອງປ່າຂອງດົງ ເພື່ອການຄ້າ ຊຶ່ງສ່ວນຫຼາຍ ແມ່ນດຳເນີນໄປດ້ວຍຮູບແບບ ແລະ ປະລິມານ ທີ່ມີລັກສະນະບໍ່ຍືນນານ.

***ການຂຸດຄົ້ນໄມ້, ທີ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຮັບອະນຸຍາດ.*** ການຂຸດຄົ້ນໄມ້ ໃນຮູບແບບທີ່ບໍ່ຍືນນານ ເຮັດໃຫ້ເນື້ອທີ່ປ່າຂະໜາດໃຫຍ່ ທີ່ມີຄວາມອຸດົມສົມບູນດີ ຖືກຕັດຢອນ ຫຼື ກາຍເປັນປ່າຊຸດໂຊມ ທີ່ມີພຽງແຕ່ຊະນິດພັນໄມ້ທີ່ບໍ່ມີຄຸນຄ່າສູງທາງດ້ານການຄ້າ ແລະ ຍັງເຫຼືອພຽງແຕ່ຕົ້ນໄມ້ນອ້ຍ ທີ່ມີອາຍຸອ່ອນຈຳນວນໜຶ່ງເທົ່ານັ້ນ. ເສັ້ນທາງຂຸດຄົ້ນ ເຮັດໃຫ້ ນັກລ່າສັດ, ຜູ້ເກັບກູ້ເຄື່ອງປ່າຂອງດົງ ແລະ ປະຊາຊົນທ້ອງຖິ່ນ ເຂົ້າເຖິງໄດ້ງ່າຍ. ເຖິງຢ່າງໃດກໍຕາມ ລັດຖະບານ ກໍໄດ້ພະຍາຍາມ ປັບປຸງນະໂຍບາຍ ແລະ ການບັງຄັບໃຊ້ລະບຽບການ ທີ່ຮຽກຮ້ອງໃຫ້ບໍລິສັດຂຸດຄົ້ນໄມ້ ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

***ຄວາມຂັດແຍ່ງ ລະຫວ່າງ ຄົນ ແລະ ສັດປ່າ.*** ສັດປ່າບາງຊະນິດ ຖືກຂ້າຍ້ອນວ່າ ພວກມັນທຳລາຍຄົນ, ທຳລາຍສັດລ້ຽງ, ພືດກະສິກຳ ແລະ ບັນດາກິດຈະກຳ ຂອງມະນຸດ ເຊັ່ນ: ການຂຸດຄົ້ນໄມ້, ການເກັບກູ້ເຄື່ອງປ່າຂອງດົງ ແລະ ການຖາກຖາງ/ບຸກເບີກພື້ນທີ່ ເພື່ອທຳການຜະລິດກະສິກຳ ຫຼື ການພັດທະນາ ຊຶ່ງເຮັດໃຫ້ຖິ່ນອາໃສ ແລະ ແຫຼ່ງອາຫານທຳມະຊາດ ຂອງສັດປ່າ ເຊັ່ນ: ຊ້າງ, ເສືອ ແລະ ສັດປ່າຊະນິດອື່ນໆ ຫຼຸດລົງ ແລະ ນອກຈາກນັ້ນ ຍັງເຮັດໃຫ້ສັດປ່າບາງຊະນິດ ມີຄວາມໂຫດຮ້າຍເພີ່ມຂຶ້ນ ຍອ້ນຖືກກົດດັນ ຈາກການດຳເນີນບັນດາກິດຈະກຳຕ່າງໆ ຂອງຄົນ ຊຶ່ງນຳໄປສູ່ ການເກີດຄວາມຂັດແຍ່ງ ແລະ ທຳລາຍເຊິ່ງກັນ ແລະ ກັນ ລະຫວ່າງ ສັດປ່າ ກັບມະນຸດ.

### 3.7.5.3. ໂຄງການພັດທະນາ

ການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ອາດເປັນໄປໄດ້ທັງສອງດ້ານ ຄື: ທັງເປັນການຂົ່ມຂູ່ ແລະ ທັງເປັນຜົນປະໂຫຍດ ຕໍ່ລະບົບຊີວະນາໆພັນ. ພື້ນທີ່ຂະໜາດໃຫຍ່ ຖືກນ້ຳຖ້ວມ ພາຍຫຼັງການກໍ່ສ້າງເຂື່ອນ ຊຶ່ງເປັນການທຳລາຍຖິ່ນຢູ່ອາໃສ ແລະ ປະຊາກອນຂອງພືດ ແລະ ເຮັດໃຫ້ສັດປ່າອົບພະຍົບໄປຢູ່ບ່ອນອື່ນ, ແຕ່ຖ້າວ່າໂຄງການພະລັງງານໄຟຟ້າດັ່ງກ່າວ ຫາກຖືກຮຽກຮ້ອງ ໃຫ້ມີການພັດທະນາກົນໄກດ້ານງົບປະມານທີ່ເໝາະສົມ ສຳລັບການອະນຸລັກຊີວະນາໆພັນຄຽງຄູ່ກັນໄປນຳ ເຫັນວ່າ ອາດເປັນຜົນດີ ໃຫ້ແກ່ວຽກງານອະນຸລັກ, ຕົວຢ່າງ: ໃນໄລຍະຜ່ານມາ ລາຍ

ຮັບ 1% ຈາກ ການຂາຍໄຟຟ້າ ຂອງໂຄງການເຂື່ອນໄຟຟ້ານ້ຳເລີກ ໄດ້ນຳໃຊ້ ເຂົ້າໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ ພູເຂົາຄວາຍ.

#### 3.7.5.4. ປັດໃຈທາງດ້ານເສດຖະກິດ-ສັງຄົມ

***ຄວາມທຸກຍາກ.*** ຄວາມທຸກຍາກ ຢູ່ໃນ ສ.ປ.ປ.ລາວ ຍັງແມ່ນບັນຫາທີ່ສຳຄັນ ໂດຍສະເພາະ ແມ່ນຢູ່ໃນເຂດຫ່າງໄກສອກຫຼີກ ຊຶ່ງ ຄົນສ່ວນໃຫຍ່ ເຫັນວ່າ ປ່າໄມ້ ແມ່ນແຫຼ່ງອາຫານ ແລະ ສິນຄ້າ ທີ່ໄດ້ມາໂດຍບໍ່ໄດ້ເສັຽຄ່າ.

***ຄວາມໜາແໜ້ນຂອງປະຊາກອນ:*** ຄວາມໜາແໜ້ນຂອງປະຊາກອນໃນ ສ.ປ.ປ.ລາວ ຍັງຕ່ຳຢູ່, ການເຕີບໃຫຍ່ຂະຫຍາຍຕົວຂອງປະຊາກອນໃນລາວ ໄດ້ຄາດຄະເນວ່າ ຈະເພີ່ມຂຶ້ນ ເຖິງ 6,7 ລ້ານ ຄົນ ໃນປີ 2010 ແລະເພີ່ມເປັນ 8,3 ລ້ານຄົນ ໃນປີ 2020. ຖ້າບໍ່ມີລະດັບຄາດໝາຍ ໃນການຫຼຸດຜ່ອນຄວາມທຸກຍາກໃນໄລຍະດັ່ງກ່າວຄວາມກົດດັນຕໍ່ຊັບພະຍາກອນປ່າໄມ້ ແມ່ນຈະເກີດຂຶ້ນຢ່າງວອ່ງໄວ ເຊິ່ງອາດນຳໄປສູ່ໄພພິບັດທາງທຳມະຊາດ ອັນໃຫຍ່ຫຼວງ ແລະ ສິ່ງຜົນສະທອ້ນອັນບໍ່ດີ ຕໍ່ປະຊາຊົນໃນເຂດຊົນນະບົດ.

#### 3.7.5.5. ຈິດສຳນຶກ ແລະ ຄວາມຮັບຮູ້ຂອງສັງຄົມ

ລັດຖະບານ ໄດ້ພະຍາຍາມເອົາໃຈໃສ່ ຢູ່ຕະຫຼອດມາ ເພື່ອເຮັດໃຫ້ປະຊາຊົນ ເຂົ້າໃຈເຖິງຄວາມສຳຄັນຂອງຊີວະນາໆພັນ ແລະ ເພື່ອສຶກສາມະຫາຊົນ ໃຫ້ຮັກຫອມ ແລະ ປົກປັກຮັກສາພືດ ແລະ ສັດ ຊຶ່ງແມ່ນ ມໍລະດົກອັນລ້ຳຄ່າຂອງຊາດ. ຄວາມພະຍາຍາມດັ່ງກ່າວ ໄດ້ດຳເນີນໄປ ດ້ວຍຫຼາຍຮູບຫຼາຍແບບແຕກຕ່າງກັນ ເຊັ່ນ: ການພິມເຜີຍແຜ່ຂໍ້ມູນຂ່າວສານທີ່ສຳຄັນ, ຈັດພິມຮູບພາບ ຂອງສັດປ່າ, ລົງໜັງສືພິມ ແລະ ອອກຂ່າວວິທະຍຸ ແລະ ໂທລະພາບ ແລະ ຈັດລາຍການສະຫຼອງ ວັນທີ 13 ເດືອນກໍລະກົດ ຊຶ່ງແມ່ນວັນປ່ອຍປາ ແລະ ອະນຸລັກສັດປ່າແຫ່ງຊາດ. ທີ່ສຳຄັນໄປກວ່ານັ້ນ, ໃນໄລຍະຜ່ານມາມໍ່ໆນີ້ ລັດຖະບານ ໄດ້ຕັດສິນໃຈເຂົ້າຮ່ວມເປັນສະມາຊິກ ຂອງສົນທິສັນຍາສາກົນວ່າດ້ວຍ ການຄ້າຂາຍຊະນິດພັນພືດ ແລະ ສັດປ່າ ທີ່ໃກ້ຈະສູນພັນ.

## 3.8. ປ່າປ້ອງກັນ ແລະ ການຄຸ້ມຄອງ-ຈັດສັນອ່າງໂຕ່ງ

### 3.8.1. ສະພາບຂອງອ່າງໂຕ່ງ ແລະ ປ່າປ້ອງກັນ

ມີການຄາດຄະເນວ່າ, ໃນປະຈຸບັນ ປ່າປ້ອງກັນຂອງແຂວງ ແລະ ເມືອງ ມີເນື້ອທີ່ປະມານ 0,6 ລ້ານເຮັກຕາ. ໃນເຂດປ່າດັ່ງກ່າວ ແມ່ນເກືອດຫ້າມການດຳເນີນກິດຈະກຳຕ່າງໆ ເຊັ່ນ: ການຖາງປ່າເຮັດໄຮ່, ການຕັດໄມ້, ການຈູດຕົ້ນໄມ້ ແລະ ປ່າໄມ້, ການເຄື່ອນຍ້າຍຕົ້ນໄມ້, ການຕັດຟືນ, ການລ້ຽງສັດ, ການປຸກສ້າງເຮືອນ ຫຼື ພື້ນຖານໂຄງລ່າງອື່ນໆ ແລະ ການດຳເນີນກິດຈະກຳຕ່າງໆ ເຊັ່ນ: ການຂຸດຄົ້ນເອົາດິນ, ຫີນ ຫຼື ແຮ່ທາດຕ່າງໆ, ການລ່າສັດ ແລະການເກັບກູ້ ຜະລິດຕະພົນປ່າໄມ້ ປະເພດຫວງຫ້າມ (ກົດໝາຍປ່າໄມ້, ມາດຕາ 41).

ອ່າງໂຕ່ງ ປະເພດ 1, 2 ແລະ 3 ກວມເອົາ 74% ຂອງເນື້ອທີ່ທົ່ວປະເທດ. ອ່າງໂຕ່ງເຫຼົ່ານີ້, ສ່ວນໃຫຍ່ແມ່ນຊຸດໂຊມລົງ ຢ່າງໜັກໜ່ວງ: ໃນປີ 1993 ມີແຕ່ 11% ເທົ່ານັ້ນ ທີ່ປົກຫຸ້ມດ້ວຍປ່າຕຶບໜາ, ສ່ວນອີກ 44% ແມ່ນເຂດທີ່ຂາດປ່າ ຫຼື ບໍ່ມີປ່າປົກຫຸ້ມເລີຍ.

### 3.8.2. ນະໂຍບາຍກ່ຽວກັບການຄຸ້ມຄອງ-ຈັດສັນອ່າງໂຕ່ງ

ກົມແຜນການ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ສົ່ງເສີມ ການຄຸ້ມຄອງຈັດສັນອ່າງໂຕ່ງ ແບບປະສົມປະສານ ທີ່ຖືກຕ້ອງກັບນະໂຍບາຍ ກະຈາຍອຳນາດລົງສູ່ທ້ອງຖິ່ນ. ໃນ ເດືອນ ເມສາ 2002, ກອງປະຊຸມກະສິກຳ ແລະ ປ່າໄມ້ທົ່ວປະເທດ ຕົກລົງວ່າ: ທຸກໆເມືອງ ຕ້ອງນຳໃຊ້ວິທີການຄຸ້ມຄອງຈັດສັນອ່າງໂຕ່ງ ແບບມີສ່ວນຮ່ວມ, ທັງນີ້ ກໍເພື່ອຄຸ້ມຄອງຊັບພະຍາກອນປ່າໄມ້ ແບບຍືນນານ. ກະຊວງກະສິກຳ ແລະ ປ່າໄມ້ ໄດ້ສົ່ງເສີມການພັດທະນາ ຕາມຮູບແບບ ການຄຸ້ມຄອງ-ຈັດສັນອ່າງໂຕ່ງ ແບບປະສົມປະສານ ແລະ ມີແຕ່ການດຳເນີນເຊັ່ນນີ້ ຈຶ່ງພາໃຫ້ມີ ແຜນການຄຸ້ມຄອງ-ຈັດສັນອ່າງໂຕ່ງ ແບບປະສົມປະສານ (ຕົວຢ່າງ ຢູ່ ນ້ຳທອງ, ປ່າສະຫງວນແຫ່ງຊາດ ນ້ຳແອດ-ພູເລີຍ ແລະ ອ່າງ ນ້ຳເງີນ). ຍ້ອນວ່າ ປ່າປ້ອງກັນມີຄວາມສຳຄັນ ຕໍ່ການຄຸ້ມຄອງອ່າງໂຕ່ງ, ສະນັ້ນ ຕ້ອງໄດ້ພິຈາລະນາ ແລະ ນຳໃຊ້ ເປັນອົງປະກອບໜຶ່ງ ຂອງລະບົບການຄຸ້ມຄອງ-ຈັດສັນອ່າງໂຕ່ງ ແບບປະສົມປະສານ. ຜ່ານມາ ໄດ້ມີຂໍ້ສະເໜີວ່າ ໂຄງການໄຟຟ້ານ້ຳຕົກ ແລະ ໂຄງການຊົນລະປະທານ ທັງໝົດ ຄວນປະກອບໃຫ້ມີແຜນການຄຸ້ມຄອງອ່າງໂຕ່ງແບບປະສົມປະສານ ຫຼື ແຜນຄຸ້ມຄອງອ່າງໂຕ່ງ ສຳລັບປ່າປ້ອງກັນແຫຼ່ງນ້ຳທັງໝົດ ບ່ອນທີ່ໂຄງການເຫຼົ່ານັ້ນດຳເນີນຢູ່.

### 3.8.3. ອົງການຈັດຕັ້ງ ສຳລັບຄຸ້ມຄອງອ່າງໂຕ່ງ

ອົງການຈັດຕັ້ງຕົ້ນຕໍ ທີ່ຮັບຜິດຊອບ ຕໍ່ການຄຸ້ມຄອງປ່າປ້ອງກັນ ແມ່ນກອງອະນຸລັກຊັບພະຍາກອນປ່າໄມ້ ຂອງກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ຊຶ່ງຮັບຜິດຊອບ ຕໍ່ ການຂຶ້ນແຜນ, ການປະສານງານ, ການຊຸກຍູ້ທາງວິຊາການ ແລະ ກິດຈະກຳອື່ນໆ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງປ່າປ້ອງກັນເຫຼົ່ານັ້ນ. ການຈັດຕັ້ງປະຕິບັດໂຄງການ ແລະ ກິດຈະກຳ ຢູ່ພາກສະໜາມ ແມ່ນ ຄວາມຮັບຜິດຊອບ ຂອງພະແນກ ກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ສຳລັບການຄຸ້ມຄອງ-ຈັດສັນອ່າງໂຕ່ງແບບປະສົມປະສານ, ມີໜ່ວຍງານຂອງລັດຫຼາຍໜ່ວຍງານ ທີ່ຮັບຜິດຊອບ ເຊັ່ນ: ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີໜ້າທີ່ປະສານງານລວມ, ກະຊວງກະສິກຳ ແລະ ປ່າໄມ້ ທີ່ເປັນອົງການນຳໜ້າ, ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ ແລະ ສາຂາຂອງອົງການເຫຼົ່ານີ້ຢູ່ໃນທ້ອງຖິ່ນ ເປັນໜ່ວຍງານຈັດຕັ້ງປະຕິບັດຕົວຈິງ ຢູ່ໃນພາກສະໜາມ.

### 3.8.4. ການມີສ່ວນຮ່ວມຂອງທ້ອງຖິ່ນ

ດັ່ງທີ່ໄດ້ກ່າວມາແລ້ວ, ວິທີການພັດທະນາ ແລະ ຄຸ້ມຄອງແບບມີສ່ວນຮ່ວມ ແມ່ນນະໂຍບາຍຂອງລັດຖະບານ ສປປ ລາວ ຊຶ່ງປະກອບມີ ກົດໝາຍປ່າໄມ້, ກົດໝາຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ແລະ ກົດໝາຍ, ດຳລັດ ແລະ ບົດແນະນຳອື່ນໆທີ່ກ່ຽວຂ້ອງທັງໝົດ ເປັນເຄື່ອງມື ໃນການຈັດຕັ້ງປະຕິບັດ. ບັນດາເອກະສານນິຕິກຳເຫຼົ່ານີ້ ສາມາດນຳໃຊ້ ເປັນບ່ອນອີງ ໃນການຄຸ້ມຄອງ-ຈັດສັນອ່າງໂຕ່ງ ແບບປະສົມປະສານ ແລະ ປ່າປ້ອງກັນ ໄດ້ທັງໝົດ.

### 3.8.5. ບັນຫາສຳລັບ ການຄຸ້ມຄອງ-ຈັດສັນອ່າງໂຕ່ງ

#### 3.8.5.1. ງົບປະມານ ສຳລັບການຄຸ້ມຄອງ-ຈັດສັນອ່າງໂຕ່ງ

ຍ້ອນວ່າ ລາຍຮັບຂອງລັດຖະບານ ມີຈຳນວນຈຳກັດ, ການສະໜອງງົບປະມານ ທີ່ເໝາະສົມ ສຳລັບການສ້າງຕັ້ງ, ການໝາຍເຂດແດນ ແລະ ການຄຸ້ມຄອງປ່າໄມ້ ທຸກປະເພດ ຍັງພົບບັນຫາຫຍຸ້ງຍາກຢູ່. ແຕ່ແນວໃດກໍຕາມ ບັນຫາເຫຼົ່ານັ້ນ ອາດຖືກແກ້ໄຂໄດ້ ດ້ວຍການນຳເອົາບັນຫາດັ່ງກ່າວເຂົ້າຢູ່ໃນການວາງແຜນການກໍ່ສ້າງພື້ນຖານໂຄງລ່າງຕ່າງໆ, ຕົວຢ່າງ: ລັດຖະບານ ໄດ້ຕັດສິນໃຈຫັກເອົາລາຍຮັບຈາກຄ່າໄຟຟ້າ ທີ່ໄດ້ຈາກເຂື່ອນນ້ຳງື່ມ ຈຳນວນ 1%

ເພື່ອພັດທະນາ ແລະ ປົກປັກຮັກສາສ່ວນເທິງຂອງແຫຼ່ງນ້ຳດັ່ງກ່າວ. ການຕັດສິນໃຈດັ່ງກ່າວ ສາມາດສະໜອງ ງົບປະມານ ໄດ້ປະມານ 125 ລ້ານ ໂດລາ ຢູ່ໃນໄລຍະ 40 ປີ.

#### 3.8.5.2. ການປະສານງານ ລະຫວ່າງອົງການທີ່ກ່ຽວຂ້ອງ

ການຂາດການປະສານງານ ພາຍໃນຂະແໜງການ ແລະ ການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແມ່ນບັນຫາທົ່ວໄປ ຢູ່ໃນໂລກ. ຂໍ້ຂັດແຍ່ງພາຍໃນຂະແໜງການ ແລະ ການຂາດການຮ່ວມມື ຈາກຂະແໜງການອື່ນທີ່ກ່ຽວຂ້ອງນັ້ນ ອາດນຳໄປສູ່ຜົນກະທົບ ຂອງຄວາມພະຍາຍາມ ເພື່ອບັນລຸ ບັນດາວັດຖຸປະສົງ ຮ່ວມກັນ. ດ້ວຍເຫດນັ້ນ ລັດຖະບານ ຈະຊຸກຍູ້ ສົ່ງເສີມ ໃຫ້ເພີ່ມທະວີການຮ່ວມມືພາຍໃນໃຫ້ຫຼາຍຂຶ້ນ ລວມທັງການເຊັນສັນຍາ ກ່ຽວກັບການຮ່ວມມືດ້ວຍກັນ ລະຫວ່າງກະຊວງ, ຂະແໜງການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ, ກຳນົດສິດໜ້າທີ່ ແລະ ຂອບເຂດການພົວພັນ ໂດຍຜ່ານອຳນາດການປົກຄອງແຂວງ ແລະ ອົງການຄຸ້ມຄອງອ່າງໂຕ່ງສະເພາະ. ຄືດັ່ງຄວາມພະຍາຍາມເບື້ອງຕົ້ນ, ລັດຖະບານ ກຳລັງມີການວາງແຜນປັບປຸງຄືນ ພາລະບົດບາດ ຂອງຄະນະປະສານງານຄຸ້ມຄອງອ່າງໂຕ່ງ ຂອງອົງການວິທະຍາສາດ ເຕັກໂນໂລຢີ ແລະ ສິ່ງແວດລ້ອມ ແລະ ເພື່ອຈັດຕັ້ງປະຕິບັດ ການຄຸ້ມຄອງອ່າງໂຕ່ງແບບປະສົມປະສານ ໃນນີ້ ລວມທັງການຄຸ້ມຄອງເຂື່ອນ, ການພັດທະນາກະສິກຳ ແລະ ປ່າໄມ້ ແລະ ການພັດທະນາພື້ນຖານໂຄງລ່າງ ໂດຍການສະໜັບສະໜູນທຶນ ຈາກທະນາຄານພັດທະນາອາຊີ, ຢູ່ໃນເຂດອ່າງນ້ຳງື່ມ.

#### 3.8.5.3. ການຟື້ນຟູປ່າໄມ້ ໃນເຂດອ່າງໂຕ່ງ ທີ່ເຊື່ອມໂຊມ

ພື້ນທີ່ອ່າງໂຕ່ງຕົ້ນຕໍ ແລະ ສຳຄັນ ບາງແຫ່ງ ໄດ້ຊຸດໂຊມລົງຢ່າງໜັກໜ່ວງ ເຊັ່ນ: ອ່າງນ້ຳງື່ມ ແລະ ມີຫຼາຍເຂດ ທີ່ສາມາດຟື້ນຟູດ້ວຍທຳມະຊາດ, ການປູກເສີມ ແລະ ກໍແມ່ນວິທີທາງດຽວເທົ່ານັ້ນ ທີ່ເຫັນວ່າມີຄວາມເໝາະສົມສຳລັບການຟື້ນຟູຄວາມປົກຫຸ້ມຂອງປ່າໄມ້ ຄືນໃໝ່ໄດ້. ນອກຈາກ ກິດຈະກຳຄຸ້ມຄອງຈັດສັນອ່າງໂຕ່ງ ທີ່ໄດ້ກ່າວມາຂ້າງເທິງແລ້ວ ຕ້ອງໄດ້ສ້າງ ແລະ ຈັດຕັ້ງປະຕິບັດ ວິທີການຟື້ນຟູ ແບບໃໝ່ ທີ່ມີສ່ວນຮ່ວມຢ່າງຈິງຈັງຂອງປະຊາຊົນທ້ອງຖິ່ນ ເພື່ອຟື້ນຟູເຂດເຫຼົ່ານັ້ນ. ລະບົບ ***"ນ້ຳ ເພື່ອ ຕົ້ນໄມ້"*** ເຊັ່ນຕົວຢ່າງ ປະຊາຊົນທອ້ງຖິ່ນ ໄດ້ມີການປູກຕົ້ນໄມ້ ເພື່ອແລກກັບລະບົບການສະໜອງນ້ຳໃຊ້ ແລະ ນ້ຳລິນ ຢູ່ໃນເຂດອ່າງໂຕ່ງ, ແນວຄວາມຄິດນີ້ ຫຼື ວິທີການດັ່ງກ່າວນີ້ ໄດ້ທົດລອງປະຕິບັດ ຢູ່ແຂວງວຽງຈັນ ເຫັນວ່າມີເງື່ອນໄຂປະຕິບັດໄດ້ດີ ແລະ ໄດ້ຮັບຜົນດີ.

## 3.9. ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ເພື່ອລຶບລ້າງຄວາມທຸກຍາກ

### 3.9.1. ຄວາມທຸກຍາກ ແລະ ປ່າໄມ້

ປະມານ $^1/_3$ ຂອງປະຊາຊົນ ໃນເຂດຊົນນະບົດ ທີ່ດຳລົງຊີວິດຢູ່ລຽບຕາມແມ່ນ້ຳຂອງ (ເຂດທົ່ງພຽງແມ່ນ້ຳຂອງ) ແລະ ປະມານ $^1/_2$ ຂອງປະຊາຊົນທີ່ອາໃສຢູ່ໃນເຂດພູດອຍ ແລະ ຫ່າງໄກສອກຫຼີກ (ເຂດເນີນສູງ) ແມ່ນຍັງດຳລົງຊີວິດ ຕ່ຳກວ່າ ເສັ້ນລະດັບຄວາມທຸກຍາກຂັ້ນພື້ນຖານ. ສະພາບຄວາມທຸກຍາກ ຂອງປະຊາຊົນໃນເຂດທົ່ງພຽງ ໄດ້ຮັບການປັບປຸງຫຼາຍສົມຄວນ ຄືຈາກ $^1/_2$ ຂອງຈຳນວນທີ່ດຳລົງຊີວິດ ຢູ່ໃນລະດັບຕ່ຳກວ່າລະດັບຂີດຄວາມທຸກຍາກພື້ນຖານ ໃນກາງຊຸມປີ 1980 ໄດ້ປ່ຽນມາເປັນ $^1/_3$ ໃນກາງຊຸມປີ 1990. ແຕ່ການດຳລົງຊີວິດຂອງປະຊາຊົນທີ່ອາໃສຢູ່ ເຂດພູດອຍ ຫ່າງໄກສອກຫຼີກ ເວົ້າລວມ ແມ່ນຍັງບໍ່ມີການປ່ຽນແປງ ແຕ່ຢ່າງໃດເລີຍ.

ປະຊາຊົນ ທັງໝົດ 2 ໝວດ ທີ່ກ່າວມາຂ້າງເທິງນີ້, ໂດຍສະເພາະ ແມ່ນປະຊາຊົນເຂດພູດອຍ ແມ່ນມີການດຳລົງຊີວິດ ອາໃສປ່າໄມ້ໂດຍກົງ ເພື່ອການຫາລ້ຽງຊີບ ແລະ ເພື່ອສ້າງລາຍຮັບພຽງເລັກນ້ອຍ ແຕ່ກໍແມ່ນລາຍຮັບເປັນ

ເງິນສົດທີ່ສຳຄັນຂອງເຂົາເຈົ້າ. ຜົນປະໂຫຍດຂອງເຂົາເຈົ້າ ທີ່ໄດ້ມາຈາກປ່າໄມ້ ແມ່ນລວມທັງ ໄມ້ສຳລັບປຸກສ້າງເຮືອນ, ອາຫານ ແລະ ພະລັງງານ ສຳລັບນຳໃຊ້ໃນຄອບຄົວ, ລາຍຮັບຈາກການຂາຍເຄື່ອງປ່າຂອງດົງ ແລະ ຄ່າແຮງງານຈາກກິດຈະກຳປ່າໄມ້ຕ່າງໆ, ເນື້ອທີ່ດິນສຳລັບປູກຝັງ ຊຶ່ງລວມທັງການເຮັດໄຮ່ ແລະ ການປູກຕົ້ນໄມ້ ຫຼື ຟື້ນຟູປ່າ ແລະ ບັນດາປັດໃຈຂາເຂົ້າຕ່າງໆ ສຳລັບການປູກຝັງ ແລະ ລ້ຽງສັດ.

ໄພຂົ່ມຂູ່ ຕໍ່ການປະກອບສ່ວນຂອງປ່າໄມ້ ໃຫ້ແກ່ການດຳລົງຊີວິດ ແລະ ສະຫວັດດີການ ຂອງປະຊາຊົນ ທີ່ຢູ່ໃນຊົນນະບົດ ແມ່ນມີຫຼາຍຮູບແບບ, ໄພຂົ່ມຂູ່ຕົ້ນຕໍ ແມ່ນ: 1) ການສູນເສຍ ແລະ ການເຊື່ອມໂຊມລົງຂອງປ່າໄມ້ ພາໃຫ້ເຄື່ອງປ່າຂອງດົງ ທີ່ມີຢູ່ໃນປະຈຸບັນ ນັບມື້ນັບ ຫຼຸດລົງເລື້ອຍໆ, 2) ໃນບາງເຂດ, ປ່າໄມ້ບາງປະເພດ ປະຊາຊົນບໍ່ສາມາດນຳໃຊ້ໄດ້ ຍອ້ນມີການສ້າງຕັ້ງປ່າປ້ອງກັນ ຫຼື ປ່າສະຫງວນ, ການຍົກຍ້າຍ ຍ້ອນມີການກໍ່ສ້າງພື້ນຖານໂຄງລ່າງ ຫຼື ການຈັດສັນບ້ານຄືນໃໝ່ ແລະ ຜົນສະທອ້ນ ຈາກສົງຄາມ, ຜົນກະທົບຈາກສານເຄມີທີ່ເຮັດໃຫ້ໃບໄມ້ຫຼົ່ນໃນປາງສົງຄາມ, ການຖິ້ມລະເບີດ ແລະ ສະພາບລູກລະເບີດທີຍັງບໍ່ທັນແຕກໃນປະຈຸບັນ, 3) ໄພພິບັດທາງທຳມະຊາດ ເຊັ່ນ: ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ ໄດ້ບັງຄັບໃຫ້ປະຊາຊົນທຳລາຍຊັບພະຍາກອນເຄື່ອງປ່າຂອງດົງ ເກີນຂອບເຂດ ແລະ 4) ການຂຸດຄົ້ນໄມ້ ແບບຊະຊາຍ ຫຼື ບໍ່ໄດ້ຮັບອະນຸຍາດ ພາໃຫ້ສູນເສຍຊະນິດພັນໄມ້ ແລະ ຕົ້ນໄມ້ທີ່ມີຄ່າ ແລະ ສິ່ງແວດລ້ອມເຊື່ອມໂຊມ.

ຍອ້ນເຫັນໄດ້ ຄວາມຮຽກຮອ້ງຕອ້ງການ ແລະ ຮັບຮູ້ໄດ້ວ່າ ການເຊື່ອມໂຊມຂອງປ່າໄມ້, ເນື້ອທີ່ດິນປ່າໄມ້ ແລະ ເນື້ອທີ່ດິນປະເພດອື່ນ ທີ່ປະຊາຊົນນຳໃຊ້ນັ້ນ ມີການເພີ່ມຂຶ້ນ, ລັດຖະບານ ໄດ້ອອກນິຕິກຳຫຼາຍຢ່າງ ທີ່ກ່ຽວຂ້ອງກັບວຽກງານປ່າໄມ້, ນິຕິກຳສູງສຸດ ແມ່ນກົດໝາຍປ່າໄມ້ ປີ 1996 ແລະ ນອກຈາກນັ້ນ ລັດຖະບານ ຍັງສືບຕໍ່ກຳນົດນະໂຍບາຍ, ກົດໝາຍ ແລະ ບັນດາລະບຽບການຕ່າງໆ ຕື່ມອີກ, ໃນນັ້ນ ລວມທັງຄວາມພະຍາຍາມ ໃນການຄວບຄຸມ ແລະ ຢຸດຕິການເຊື່ອມໂຊມຂອງປ່າໄມ້ ເພື່ອຟື້ນຟູຊັບພະຍາກອນປ່າໄມ້, ປັບປຸງການບໍລິການ ດ້ານພື້ນຖານຂອງສັງຄົມ ແລະ ການພັດທະນາຕ່າງໆ ເພື່ອຍົກສູງມາດຖານຊີວິດການເປັນຢູ່ຂອງປະຊາຊົນ. ບັນດາແຜນງານ ແລະ ໂຄງການບຸລິມະສິດຂອງລັດຖະບານ ມີດັ່ງລຸ່ມນີ້:

- ໂຄງການສ້າງ ແລະ ຄຸ້ມຄອງປ່າສະຫງວນແຫ່ງຊາດ (ເລີ້ມ ຈັດຕັ້ງປະຕິບັດ ແຕ່ປີ 1988)
- ແຜນງານຢຸດຕິການຖາງປ່າເຮັດໄຮ່ (ເລີ້ມ ຈັດຕັ້ງປະຕິບັດ ແຕ່ປີ 1989)
- ໂຄງການມອບດິນ-ມອບປ່າ (ເລີ້ມ ຈັດຕັ້ງປະຕິບັດ ແຕ່ປີ 1993)
- ໂຄງການຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ (ເລີ້ມ ຈັດຕັ້ງປະຕິບັດ ແຕ່ປີ 1993)
- ຍຸດທະສາດ ເຂດຈຸດສຸມ ແລະ ໂຄງການ ຈັດສັນບ້ານຄືນໃໝ່ (ເລີ້ມປີ 1994/1995, ຈັດຕັ້ງໃໝ່ 1998)

### 3.9.2. ກອບທາງດ້ານນິຕິກຳ ກ່ຽວກັບການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ

ຍ້ອນວ່າ ລັດຖະບານ ໄດ້ມີຄວາມພະຍາຍາມ ໃນໄລຍະຜ່ານມາ ແລະ ໃນປະຈຸບັນ ຈຶ່ງມີກອບທາງດ້ານນິຕິກຳ ກ່ຽວກັບການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ທີ່ມີຄວາມຊັດເຈນດີ ພໍສົມຄວນ. ນິຕິກຳ ທີ່ສຳຄັນທີ່ສຸດ ແມ່ນກົດໝາຍປ່າໄມ້, ບົດແນະນຳເລກທີ 822/ກປ.1996 ແລະ ລະບຽບການ ເລກທີ 353/ກປ.2001 ຂອງກະຊວງກະສິກຳ ແລະ ປ່າໄມ້. ພາຍຫຼັງ ການມອບດິນ-ມອບປ່າ ຢູ່ໃນຂອບເຂດບ້ານ ຊຶ່ງລວມທັງ ເນື້ອທີ່ປ່າໄມ້ ໄດ້ຖືກໝາຍຂອບເຂດ ເປັນທາງການ ແລະ ມີການຮັບຮູ້ຈາກບ້ານໃກ້ຄຽງ. ປ່າໄມ້ບ້ານ ໄດ້ຖືກຈັດແບ່ງອອກເປັນປະເພດຕ່າງໆ ແລະ ມີການຕົກລົງ ກ່ຽວກັບລະບຽບການ ໃນການນຳໃຊ້ ປ່າໄມ້ແຕ່ລະປະເພດ ໂດຍການມີສ່ວນຮ່ວມຢ່າງເຕັມສ່ວນຂອງປະຊາຊົນ.

ປະຊາຊົນ ໄດ້ຮັບອະນຸຍາດ ໃຫ້ເກັບກູ້ ແລະ ຂາຍເຄື່ອງປ່າຂອງດົງ ແລະ ຕັດໄມ້ ເພື່ອໃຊ້ສອຍໃນຄອບຄົວ. ພວກເຂົາເຈົ້າສາມາດໄດ້ຮັບເນື້ອທີ່ດິນເພື່ອປູກໄມ້ ແລະ ຟື້ນຟູປ່າ ຊຶ່ງມີການຮັບປະກັນກຳມະສິດ ຕໍ່ຕົ້ນໄມ້ທີ່ໄດ້ປູກ ຫຼື ຟື້ນຟູ ໂດຍການຂຶ້ນທະບຽນ ຖືກຕ້ອງຕາມລະບຽບການ ແລະ ຍິ່ງໄປກວ່ານັ້ນ ສວນປູກໄມ້ທີ່ຖືກຕ້ອງຕາມເງື່ອນໄຂ ແມ່ນໄດ້ຮັບການຍົກເວັ້ນພາສີທີ່ດິນ.

## 3.9.3. ຜົນໄດ້ຈາກການປະຕິບັດແຜນງານ ແລະ ໂຄງການຕ່າງໆ ກ່ຽວກັບ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ ແລະ ການລຶບລ້າງຄວາມທຸກຍາກ

### 3.9.3.1. ໂຄງການຄຸ້ມຄອງ ປ່າສະຫງວນແຫ່ງຊາດ

ຈຸດປະສົງຂອງໂຄງການ ແມ່ນ ເພື່ອອະນຸລັກ ຄວາມຫຼາກຫຼາຍທາງດ້ານພືດພັນ ແລະ ສັດ, ຄວາມໝັ້ນຄົງທາງດ້ານນິເວດ, ປອ້ງກັນແຫຼ່ງນ້ຳ, ປົກປັກຮັກສາເຂດທີ່ຫຼໍ່ແຫຼມ, ມີຄວາມສຳຄັນ (ຄຸນຄ່າ) ທາງດ້ານປະຫັວດສາດ, ຄວາມສວຍງາມທາງທຳມະຊາດ, ຄຸນຄ່າທາງດ້ານວັດທະນະທຳ ຫຼື ຄວາມສຳຄັນທາງດ້ານວິທະຍາສາດ. ຈຸດປະສົງຂອງໂຄງການ ຈະຖືວ່າປະສົບຜົນສຳເລັດໄດ້ ກໍ່ຕໍ່ເມື່ອ ມີການຄຸ້ມຄອງແບບມີສ່ວນຮ່ວມຂອງທ້ອງຖິ່ນ ບົນພື້ນຖານການແບ່ງປັນຜົນປະໂຫຍດໃຫ້ປະຊາຊົນພາຍໃນເຂດປ່າສະຫງວນ. ບັນດາບ້ານ ທີ່ພົວພັນກັບປ່າສະຫງວນ ໄດ້ຖືກຈັດແບ່ງ ເປັນແຕ່ລະປະເພດ ດັ່ງນີ້:

- ບ້ານຢູ່ໃນເຂດປ່າສະຫງວນ ແມ່ນບ້ານທີ່ຕັ້ງຢູ່ໃນປ່າສະຫງວນ (ມີເນື້ອທີ່ບ້ານ ແລະ ເຂດທຳມາຫາກິນ ລວມທັງປ່າຊົມໃຊ້ຂອງບ້ານ ຢູ່ໃນຂອບເຂດປ່າສະຫງວນ).
- ບ້ານທີ່ຢູ່ລຽບເຂດປ່າສະຫງວນ (ເນື້ອທີ່ປຸກສ້າງຂອງບ້ານ ອາດຢູ່ນອກເຂດປ່າສະຫງວນ ແຕ່ ປ່າຊົມໃຊ້ຂອງບ້ານ ບາງສ່ວນ ຫຼື ສ່ວນຫຼາຍ ຢູ່ໃນຂອບເຂດປ່າສະຫງວນ).
- ບ້ານທີ່ຢູ່ຕິດກັບປ່າສະຫງວນ (ເນື້ອທີ່ປຸກສ້າງ ແລະ/ຫຼື ເນື້ອທີ່ປ່າຜະລິດຂອງບ້ານ ອາດຕິດກັບເຂດປ່າສະຫງວນ ແຕ່ບໍ່ນອນໃນ ຫຼື ກວມເອົາເຂດປ່າສະຫງວນ).
- ບ້ານຢູ່ນອກ ເຂດປ່າສະຫງວນ (ກິດຈະກຳຂອງບ້ານນີ້ ມີຜົນກະທົບ ຕໍ່ປ່າສະຫງວນແຫ່ງຊາດ).

ການສ້າງຕັ້ງປ່າສະຫງວນ ກໍອາດສົ່ງຜົນກະທົບແກ່ປະຊາຊົນ ກ່ຽວກັບການເຂົ້າໄປຊົມໃຊ້ ຊັບພະຍາກອນປ່າໄມ້ ໄດ້ເຊັ່ນດຽວກັນ, ຍິ່ງໄປກວ່ານັ້ນ ແມ່ນຜົນກະທົບຕໍ່ການດຳລົງຊີວິດປະຈຳວັນ ຂອງເຂົາເຈົ້າ. ບ້ານໜຶ່ງໆ ອາດມີຄວາມຫຍຸ້ງຍາກ ຫຼື ບໍ່ກໍມີການເກືອດຫ້າມ ສິດນຳໃຊ້ຕາມປະເພນີ ຊຶ່ງແຕ່ກ່ອນ ການສ້າງຕັ້ງບ້ານເຫຼົ່ານັ້ນ ໄດ້ນຳໃຊ້ປ່າໄມ້ ຫຼື ໄດ້ມີກິດຈະກຳ ທີ່ສ້າງລາຍຮັບຈາກການດຳເນີນກິດຈະກຳປ່າໄມ້. ດ້ວຍເຫດນັ້ນ, ການຄຸ້ມຄອງປ່າສະຫງວນແບບມີສ່ວນຮ່ວມ ຂອງຊາວບ້ານທີ່ກ່ຽວຂ້ອງ ຈຶ່ງເຫັນສົມຄວນໄດ້ເອົາໃຈໃສ່ ເພື່ອຮັບປະກັນວ່າ ຊາວບ້ານ ຈະສາມາດເຂົ້າເຖິງແຫຼ່ງລາຍຮັບໃໝ່ ຈາກການເຂົ້າຮ່ວມ ໃນການຄຸ້ມຄອງປ່າສະຫງວນແຫ່ງຊາດນຳລັດ. ຕົວຢ່າງ ໃນນີ້ລວມທັງການນຳໃຊ້ທີ່ດີກວ່າ ໃນເຂດຄຸ້ມຄອງ, ມີລາຍໄດ້ ຈາກການເຝົ້າຍາມ ຫຼື ການນຳທ່ຽວ, ມີລາຍຮັບຈາກການເຊັນສັນຍາຜູກພັນ ກ່ຽວກັບການສ້າງຕັ້ງ, ຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ, ການຂາຍເຄື່ອງຫັດຖະກຳ-ຈັກສານ ແລະ ການບໍລິການດ້ານການພັກເຊົາ, ການບໍລິການດ້ານອາຫານແກ່ນັກທ່ອງທ່ຽວ ແລະ ອື່ນໆ. ແຕ່ເຖິງຢ່າງໃດກໍຕາມ ການລົງທຶນເບື້ອງຕົ້ນ ໃນນັ້ນ ລວມທັງ ການຝຶກອົບຮົມບາງດ້ານທີ່ຈຳເປັນ ຄວນໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນທີ່ໄດ້ຮັບຜົນປະໂຫຍດຈາກການອະນຸລັກປ່າສະຫງວນ ອາດຈະແມ່ນລັດຖະບານ ຫຼື ອົງການຈັດຕັ້ງສາກົນ.

**3.9.3.2. ແຜນງານຢຸດຕິການຖາງປ່າເຮັດໄຮ່ ແລະ ຈັດສັນອາຊີບຄົງທີ່**

ລັດຖະບານ ໄດ້ເອົາໃຈໃສ່ ບັນຫານີ້ ນັບແຕ່ ປະເທດຊາດໄດ້ຮັບການປົດປ່ອຍ ເປັນຕົ້ນມາ. ແຜນງານນີ້ ໄດ້ເລີ້ມຕົ້ນ ແຕ່ປີ 1989 (ດຳລັດຂອງນາຍົກລັດຖະມົນຕີ ເລກທີ 117/ນຍ.1989). ຈຸດປະສົງຂອງແຜນງານ ແມ່ນ ເພື່ອ:

- ຢຸດຕິການຖາງປ່າເຮັດໄຮ່.
- ຢຸດຕິການຂຸດຄົ້ນໄມ້ຊະຊາຍ ແລະ ເພື່ອຟື້ນຟູ ປ່າໄມ້.
- ປັບປຸງ ລະດັບຊີວິດການເປັນຢູ່ ຂອງປະຊາຊົນເຂດພູດອຍ ດ້ວຍການນຳໃຊ້ ລະບົບການນຳໃຊ້ທີ່ດິນ ແບບຄົງທີ່.

ຍຸດທະສາດ ໄດ້ເອົາໃຈໃສ່ກ່ຽວກັບການຢຸດຕິການຖາງປ່າເຮັດໄຮ່ ດັ່ງທີ່ໄດ້ກຳນົດໄວ້ ຢູ່ໃນຍຸດທະສາດຂະແໜງກະສິກຳ, 1999, ຊຶ່ງປະກອບມີ ບັນດາກິດຈະກຳ ໃນຂົງເຂດວຽກງານ ດັ່ງຕໍ່ໄປນີ້:

- ຈັດແບ່ງເຂດການນຳໃຊ້ທີ່ດິນ ອີງຕາມ ຄວາມຄ້ອຍຊັນ ແລະ ຄວາມສາມາດ ຫຼື ຄວາມເໝາະສົມຂອງດິນ.
- ທຳການຜະລິດກະສິກຳແບບຄົງທີ່ ໃນພື້ນທີ່ຄ້ອຍຊັນ ດ້ວຍການນຳເອົາລະບົບການຜະລິດຫຼາຍຮູບແບບ ມານຳໃຊ້ ແລະ ການພັດທະນາ ລະບົບກະສິກຳ-ປ່າໄມ້ແບບປະສົມປະສານ.
- ເຂົ້າສູ່ ຕະຫຼາດ ດ້ວຍການສ້າງເສັ້ນທາງເຊື່ອມຕໍ່ ແລະ ການສະໜອງຂໍ້ມູນດ້ານການຕະຫຼາດ ໃຫ້ຫຼາຍຂຶ້ນ.
- ລະດົມທຶນອອມຊັບ ແລະ ທຶນສິນເຊື່ອຊົນນະບົດ.
- ການມອບດິນ ແລະ ການໃຫ້ສິດຄອບຄອງ ການນຳໃຊ້ທີ່ດິນ.

ດ້ານຕັ້ງໜ້າ ໃນການກຳນົດນະໂຍບາຍ ແມ່ນການຈຳແນກ ລະຫວ່າງ **"ໄຮ່ເຄື່ອນຍ້າຍ"**[14] ທີ່ມີການຖາງເນື້ອທີ່ປ່າໄມ້ຕຶບໜາ ເພື່ອການປູກຝັງ ແລະ ສືບຕໍ່ໃນເນື້ອທີ່ອື່ນຕໍ່ໆໄປ ຊຶ່ງເປັນການທຳລາຍປ່າໄມ້ຈຳນວນຫຼາຍ ໃນແຕ່ລະປີ ແລະ **"ໄຮ່ໝູນວຽນ"** ໂດຍມີການກັບຄືນມາ ປູກຝັງ ໃສ່ເນື້ອທີ່ເກົ່າ ພາຍຫຼັງປະໃຫ້ເປັນປ່າເລົ່າໃນໄລຍະເວລາໃດໜຶ່ງທີ່ເໝາະສົມ (ຕາມທຳມະດາ, 7-12 ປີ ເພື່ອຟື້ນຟູ ຄວາມອຸດົມສົມບູນຂອງດິນ ແລະ ຄວບຄຸມ ຫຍ້າ). ກົງກັນຂ້າມ ກັບການເຮັດໄຮ່ເຄື່ອນຍ້າຍ, ການເຮັດໄຮ່ໝູນວຽນ ແມ່ນບໍ່ມີການ ບຸກລຸກ ປ່າໄມ້ທີ່ຕຶບໜາ.

ອີງຕາມຂໍ້ມູນຕົວຈິງ ສະແດງໃຫ້ເຫັນວ່າ ຄອບຄົວເຮັດໄຮ່ ແລະ ເນື້ອທີ່ໄຮ່ຫຼຸດລົງ ເປັນຈຳນວນຫຼາຍ ນັບແຕ່ປີ 1990 ເປັນຕົ້ນມາ ຄື: ຈາກ 249.000 ເຮັກຕາ ແລະ 210.000 ຄອບຄົວ ໃນປີ 1990 ລົງມາເປັນ 93.900 ເຮັກຕາ ແລະ 134.000 ຄອບຄົວ ໃນປີ 2001 ແລະ ຫຼຸດລົງມາເປັນ 29.400 ເຮັກຕາ ແລະ 43.039 ຄອບຄົວ ໃນປີ 2005. ເປົ້າໝາຍຕົ້ນຕໍ ແມ່ນເພື່ອຫຼຸດຜ່ອນເນື້ອທີ່ໄຮ່ເຄື່ອນຍ້າຍ ໃຫ້ໄດ້ 70% ໃນປີ 2005 ແລະ ຢຸດຕິການເຮັດໄຮ່ເຄື່ອນຍ້າຍ ໃຫ້ໄດ້ຢ່າງສິ້ນເຊີງ ໃນປີ 2010. ເຂດຈຸດສຸມໃນການຢຸດຕິການຖາງປ່າເຮັດໄຮ່ ແມ່ນຢູ່ 5 ແຂວງ ພາກເໜືອ (ຫຼວງພະບາງ, ອຸດົມໄຊ, ຫົວພັນ, ຜົ້ງສາລີ ແລະ ຫຼວງນ້ຳທາ) ແລະ ກໍແມ່ນເປົ້າໝາຍຂອງການຫຼຸດຜ່ອນ ໃນແຕ່ລະປີ.

ການຜະລິດກະສິກຳເຂດເນີນສູງແບບໝູນວຽນ ຢູ່ໃນເນື້ອທີ່ໆໄດ້ມອບໃຫ້ ຕາມຂໍ້ຜູກພັນສັນຍາ ໂດຍບໍ່ບຸກລຸກເຂົ້າທຳລາຍເນື້ອທີ່ປ່າໄມ້ແຫ່ງໃໝ່ນັ້ນ ແມ່ນທາງເລືອກອັນໜຶ່ງ ຊຶ່ງເປັນທີ່ຍອມຮັບໄດ້, ເຖິງວ່າການດຳເນີນການຜະລິດຂັ້ນສອງ ໃນເນື້ອທີ່ເຂດເນີນສູງ ຫຼື ພື້ນທີ່ຄ້ອຍຊັນ ມີການນຳໃຊ້ວິທີການຜະລິດທີ່ມີການປັບປຸງ ແລະ ມີທັດສະນະ

[14] *ບຸກລຸກປ່າໄມ້ດ້ວຍການຖາງ, ຕັດ, ຈູດ ເພື່ອປູກຝັງໃນໄລຍະໃດໜຶ່ງ ຈາກນັ້ນ ຍ້ອນຄວາມອຸດົມສົມບູນຂອງດິນຫຼຸດລົງ ແລະ ມີຫຍ້າເກີດຂຶ້ນຫຼາຍ ປະຊາຊົນ ຈຶ່ງຈຳເປັນ ຕ້ອງປະປ່ອຍເນື້ອທີ່ປູກ ບ່ອນເກົ່າ ແລະ ສືບຕໍ່ບຸກລຸກ, ຖາງ, ຈູດປ່າໄມ້ ໃນພື້ນທີ່ໃໝ່ ແລະ ເຄື່ອນຍ້າຍໄປເລື້ອຍໆ.*

ອະນຸລັກນັ້ນ ຈະມີຄວາມນິຍົມກັນກໍຕາມ. ເຫັນວ່າ ການສົ່ງເສີມການປູກພືດທີ່ບໍ່ແມ່ນເຂົ້າ, ປູກຕົ້ນໄມ້ໃຫ້ໝາກ ແລະ ການປູກໄມ້ເສດຖະກິດ, ການລ້ຽງສັດໄຫຍ່ ແລະ ການລ້ຽງປາໃນໜອງ ແມ່ນທ່າແຮງ ແລະ ເປັນທາງເລືອກ ໃນການສະໜອງແຫຼ່ງອາຫານ (ທັນຍາຫານ) ແລະ ແຫຼ່ງລາຍຮັບ ສໍາລັບປະຊາຊົນ.

ລັດຖະບານ ໄດ້ແນະນໍາ ແລະ ຊ່ວຍເຫຼືອ ໃນການສ້າງຕັ້ງ ລະບົບການຜະລິດແບບໃໝ່ ເພື່ອທົດແທນການຖາງປ່າເຮັດໄຮ່ ໂດຍໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ການເງິນ ໃນບາງກໍລະນີ. ແຕ່ເຖິງຢ່າງໃດກໍຕາມ ຍັງບໍ່ທັນມີສະຖິຕິ ກ່ຽວກັບອາຊີບ ແລະ ການດໍາລົງຊີວິດແບບຄົງທີ່ ຂອງຊາວກະສິກອນ ຜູ້ໄດ້ຢຸດຕິການຖາງປ່າເຮັດໄຮ່. ຕາມການລາຍງານ ແມ່ນໄດ້ຮັບຜົນສໍາເລັດຫຼາຍຢ່າງ ແລະ ໄດ້ສົ່ງເສີມ ໃຫ້ເປັນ ຕົວແບບ ເຊັ່ນ: ການຜະລິດໝາກນັດ ຢູ່ຫຼວງພະບາງ ແລະ ໝາກແໜ່ງ ແລະ ເຄື່ອງປ່າຂອງດົງ ອື່ນໆ ຢູ່ແຂວງອຸດົມໄຊ.

ລັດຖະບານ ນໍາໃຊ້ ນະໂຍບາຍມອບດິນ-ມອບປ່າ (ຂໍ້ 3.9.3.3), ການຈັດສັນບ້ານຄືນໃໝ່ ແລະ ການລວມເອົາບ້ານນ້ອຍເຂົ້າກັນເປັນບ້ານໃຫຍ່ ເພື່ອເປັນກົນໄກຕົ້ນຕໍ ໃນການຢຸດຕິການເຮັດໄຮ່ເລື່ອນຍ້າຍ. ຜົນກະທົບຂອງການນໍາໃຊ້ມາດຕະການນີ້ ແມ່ນໄດ້ອະທິບາຍຂ້າງລຸ່ມນີ້.

### 3.9.3.3. ໂຄງການມອບດິນ-ມອບປ່າ

ກິດຈະກໍາກ່ຽວກັບການມອບດິນ-ມອບປ່າ ໄດ້ເລີ້ມຕົ້ນ ໃນຕົ້ນຊຸມປີ 1990 ແລະ ໄດ້ປັບປຸງ ເປັນນະໂຍບາຍ ແລະ ໂຄງການແຫ່ງຊາດ ພາຍໃຕ້ ຄໍາສັ່ງແນະນໍາ ຂອງ ນາຍົກລັດຖະມົນຕີ ເລກ ທີ 3/ນຍ.1996. ດໍາລັດ ສະເພາະສະບັບໜຶ່ງ ກ່ຽວກັບ ການມອບດິນ-ມອບປ່າ ເພື່ອ ການປູກໄມ້ ແລະ ປົກປັກຮັກສາປ່າໄມ້ (ດໍາລັດ ເລກທີ 186/ນຍ, ໃນປີ 1994) ເຮັດໃຫ້ການມອບດິນ-ມອບປ່າ ເພື່ອຈຸດປະສົງນີ້ ສາມາດຈັດຕັ້ງປະຕິບັດໄດ້. ບົດແນະນໍາ ຂອງ ກະຊວງກະສິກໍາ ແລະ ປ່າໄມ້ ເລກທີ 822/ກປ.1996 ໄດ້ກໍານົດ ຫຼັກການລວມ, ເປົ້າໝາຍສະເພາະ, ຂັ້ນຕອນການຈັດຕັ້ງປະຕິບັດ, ປະເພດ ທີ່ດິນ ທີ່ຈະແບ່ງ ຢູ່ ພາຍໃນບ້ານ, ແລະ ອົງການຈັດຕັ້ງທີ່ມີສິດ ແລະ ໜ້າທີ່ ໃນການມອບດິນ-ມອບປ່າ. ພາຍໃຕ້ ກົດໝາຍທີ່ດິນ (ສະບັບປັບປຸງ ເລກທີ 04/ສພຊ.2003, ມາດຕາ 17 ແລະ 21) ແຕ່ລະຄອບຄົວສາມາດໄດ້ຮັບ ເນື້ອທີ່ດິນ ເຖິງ 25 ເຮັກຕາ[15] ຕໍ່ແຮງງານໜຶ່ງ ສໍາລັບການຜະລິດກະສິກໍາ ແລະ ປ່າໄມ້.

ໂຄງການນີ້ ໄດ້ຖືກຈັດຕັ້ງປະຕິບັດ ຢ່າງຈິງຈັງ ພາຍໃຕ້ການຊີ້ນໍາ ນໍາພາຢ່າງແຂງແຮງ ຂອງຄະນະກໍາມະການ ມອບດິນ-ມອບປ່າ ຂັ້ນສູນກາງ ໂດຍມີກະຊວງກະສິກໍາ ແລະ ປ່າໄມ້ ເປັນອົງການນໍາໜ້າ. ເປົ້າໝາຍສູ້ຊົນ (ຈໍານວນຄອບຄົວ) ໃນແຕ່ລະປີ ແມ່ນແຂວງ ເປັນຜູ້ກໍານົດ ແລະ ໃນແຕ່ລະປີ ໄດ້ຈັດກອງປະຊຸມລະດັບຊາດ ເພື່ອທົບທວນຜົນໄດ້ຮັບ ແລະ ຕົກລົງ ກ່ຽວກັບເປົ້າໝາຍໃນປີຕໍ່ໄປ. ຕາຕະລາງຂ້າງລຸ່ມນີ້ ສະແດງໃຫ້ເຫັນ ຜົນຂອງການຈັດຕັ້ງປະຕິບັດວຽກງານມອບດິນ-ມອບປ່າ ແຕ່ລະປີ ໃນໄລຍະຜ່ານມາ.

---

15 *ແຮງງານໜຶ່ງ ສາມາດໄດ້ຮັບສິດນໍາໃຊ້ທີ່ດິນກະສິກໍາຫຼາຍປະເພດ ຖ້າຜູ້ກ່ຽວຫາກມີເງື່ອນໄຂ ແລະ ຄວາມສາມາດຕົວຈິງໃນການຜະລິດ, ໃນນັ້ນລວມມີ: 1 ເຮັກຕາ ສໍາລັບ ປູກເຂົ້າ ແລະ ລ້ຽງສັດ, 3 ເຮັກຕາ ສໍາລັບ ປູກພືດອຸດສາຫະກໍາ ແລະ ພືດລົ້ມລຸກ, 3 ເຮັກຕາ ສໍາລັບເຮັດສວນປູກຕົ້ນໄມ້ໃຫ້ໝາກ, 15 ເຮັກຕາ ດິນປອກໂລ້ນ ຫຼື ປ່າຫຍ້າ ສໍາລັບປູກພືດພັນຫຍ້າ ລ້ຽງສັດ ແລະ 3 ເຮັກຕາ ປ່າຊຸດໂຊມ ຫຼື ດິນປອກໂລ້ນ ສໍາລັບ ປູກໄມ້. ໃນກໍລະນີຫາກຕ້ອງການເນື້ອທີ່ ຫຼາຍກວ່ານີ້ ແມ່ນສາມາດ ສະເໜີ ເຊົ່າ ຫຼື ສໍາປະທານນໍາລັດໄດ້.*

ຕາຕະລາງ 2: ການຈັດຕັ້ງປະຕິບັດ ແຜນງານ ມອບດິນ-ມອບປ່າ ໃນແຕ່ລະປີ (ໄລຍະ 1996-2005)

| ປີ | ຈຳນນວນບ້ານ | ຈຳນວນຄອບຄົວ | ເນື້ອທີ່ທັງໝົດ |
|---|---|---|---|
| **1995-1996** | 1.242 | 82.206 | 879.595 |
| **1996-1997** | 1.327 | 40.158 | 329.580 |
| **1997-1998** | 1.232 | 95.659 | 3.244.576 |
| **1998-1999** | 1.009 | 90.886 | 855.527 |
| **1999-2000** | 555 | 21.789 | 823.460 |
| **2000-2001** | 508 | 29.361 | 673.992 |
| **2001-2002** | 315 | 19.231 | 1.358.978 |
| **2002-2003** | 322 | 22.027 | 495.627 |
| **2003-2004** | 320 | 19.538 | 474.105 |
| **2004-2005** | 300 | 19.316 | - |
| ***ລວມ*** | ***7.130*** | ***440.171*** | ***9.135.440*** |

*ໝາຍເຫດ: ໃນເນື້ອທີ່ທັງໝົດ 9.135.440 ຮຕ ປະກອບດ້ວຍ: ເນື້ອທີ່ເພື່ອຊ່າວນາ 314.197ຮຕ, ເນື້ອທີ່ປູກພືດອຸດສາຫະກຳ 419.701 ຮຕ, ເນື້ອທີ່ປູກໄມ້ໃຫ້ໝາກ ແລະ ໄມ້ອຸດສາຫະກຳ 62.772 ຮຕ, ທົ່ງຫຍ້າລ້ຽງສັດ 35.110 ຮຕ, ທີ່ດິນປ່າໄມ້ 8.210.803 ຮຕ, ທີ່ດິນເພື່ອການນຳໃຊ້ອື່ນໆ 92.857 ຮຕ (ລວມທັງທີ່ດິນປຸກສ້າງ).*

*ແຫຼ່ງຂໍ້ມູນ: ສູນສົ່ງເສີມຢຸດຕິການຖາງປ່າເຮັດໄຮ່, ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ (2004).*

ມາຮອດປະຈຸບັນ (1996-2004) ໄດ້ດຳເນີນ ການມອບດິນ-ມອບປ່າ ໃຫ້ບ້ານ ໄດ້ທັງໝົດ ຈຳນວນ 6.830 ບ້ານ ຊຶ່ງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນບ້ານທັງໝົດ ໃນທົ່ວປະເທດ ລວມທັງບ້ານໃນເຂດຕົວເມືອງ ແລະ ໄດ້ມອບໃຫ້ປະຊາຊົນ ໄດ້ 420.855 ຄອບຄົວ ຊຶ່ງຫຼາຍກວ່າ 60% ຂອງ ຄອບຄົວກະສິກຳທັງໝົດ, ເນື້ອທີ່ໆໄດ້ມອບ ທັງໝົດ ປະມານ 9.135.440 ເຮັກຕາ, ໂດຍສະເລ່ຍແລ້ວ ແຕ່ລະບ້ານໄດ້ຮັບເນື້ອທີ່ກະສິກຳ ແລະ ປ່າໄມ້ ປະມານ 1.300 ເຮັກຕາ. ຕາມການລາຍງານ ບອກວ່າ ການຂາດເຂີນງົບປະມານ, ອຸປະກອນ ແລະ ນັກວິຊາການ ແມ່ນສາເຫດຕົ້ນຕໍ ທີ່ພາໃຫ້ ການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ຊັກຊ້າ ແລະ ບໍ່ມີປະສິດທິຜົນ.

**ຜົນກະທົບ ຕໍ່ ຊັບພະຍາກອນປ່າໄມ້.** ການມອບ ຫຼື ການຈັດປະເພດ ປ່າໄມ້ ແລະ ຂໍ້ສັນຍາ ກ່ຽວກັບ ການນຳໃຊ້ປ່າໄມ້ແຕ່ລະປະເພດ ພາຍຫຼັງການມອບ ຫຼື ການຈັດປະເພດແລ້ວນັ້ນ ອາດເຮັດໃຫ້ ປ່າໄມ້ ຟື້ນຟູຄືນ ແລະ ເຮັດໃຫ້ຄຸນນະພາບ ຂອງຊັບພະຍາກອນປ່າໄມ້ ທີ່ມີຢູ່ໃນປະຈຸບັນ ຂອງປະຊາຊົນ ເພີ່ມຂຶ້ນ. ເຖິງຢ່າງໃດກໍຕາມ ປ່າໄມ້ທີ່ໄດ້ມອບໃຫ້ ສ່ວນຫຼາຍແບ່ງອອກເປັນປະເພດ ຫວງຫ້າມ (ປ່າສະຫງວນ, ປ່າປ້ອງກັນ, ປ່າຟື້ນຟູ), ຕົວຢ່າງ ໃນສົກປີ 2000-2001 ປ່າໄມ້ ຈຳນວນຫຼາຍກວ່າ 100.000 ເຮັກຕາ ທີ່ໄດ້ມອບໃຫ້ ພາຍໃຕ້ໂຄງການນີ້ ໄດ້ກຳນົດເປັນປະເພດ ຫວງຫ້າມ (ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຟື້ນຟູ) 91% ແລະ ພຽງແຕ່ 9% ເທົ່ານັ້ນ ເປັນປ່າຊົມໃຊ້ຂອງບ້ານ[16].

16 *ນອກຈາກນັ້ນ 6.006 ເຮັກຕາ ຫຼື 5% ຂອງ ເນື້ອທີ່ທັງໝົດ 115,800 ເຮັກຕາ ທີ່ໄດ້ມອບ ໃນສົກປີ 2000-2001 ໄດ້ກຳນົດ ເພື່ອການປູກຝັງ ແລະ ການລ້ຽງສັດ.*

ຜົນສຳເລັດຂອງມາດຕະການດັ່ງກ່າວນັ້ນ ແມ່ນ ເນື້ອທີ່ປົກຫຸ້ມຂອງປ່າໄມ້ ແລະ ຄວາມແໜ້ນໜາຂອງຊັ້ນເຮືອນຍອດເພີ່ມຂຶ້ນ ແລະ ໂຄງສ້າງຂອງປ່າໄດ້ຮັບການປັບປຸງ, ອາດຈະໄດ້ຮັບອິດທິພົນໂດຍລະບຽບການທີ່ກຳນົດ "5 ປີ" ເນື່ອງຈາກວ່າ ຜົນຂອງການບັງຄັບໃຊ້ໂດຍບໍ່ເຈດຕະນາ ເພື່ອໃຫ້ປະຊາຊົນ ດຳເນີນການຖາກຖາງ ໃນພື້ນທີ່ພາຍໃນ 3-4 ປີ ເພື່ອປ້ອງກັນ ເຂດພື້ນທີ່ໆຖືກປະປ່ອຍ 5 ປີ ຫຼື ຫຼາຍກວ່າ ທີ່ກຳນົດໃຫ້ເປັນປ່າຟື້ນຟູ. ເພາະສະນັ້ນ, ມັນອາດເຮັດໃຫ້ ເນື້ອທີ່ປ່າປະເພດສອງ ທີ່ມີ ອາຍຸຫຼາຍກວ່າ 5 ປີ ນັ້ນ ຫຼຸດລົງ. ດັ່ງນັ້ນ ຈຶ່ງສະເໜີວ່າ ກົດລະບຽບ ທີ່ກຳນົດ "5 ປີ"[17] ເຫັນວ່າບໍ່ແທດເໝາະ ແລະ ຄວນຖືກຍົກເລີກ.

**ຜົນກະທົບ ຕໍ່ ການດຳລົງຊີວິດຂອງປະຊາຊົນ ແລະ ການນຳໃຊ້ປ່າໄມ້.** ສິ່ງສຳຄັນທີ່ຕ້ອງໄດ້ເອົາໃຈໃສ່ຄື: ຕາມຫຼັກການແລ້ວ, ໂຄງການມອບດິນ-ມອບປ່າ ຈະຕ້ອງບໍ່ສ້າງຜົນກະທົບ ຫຼື ລ່ວງລະເມີດ ສິດຊົມໃຊ້ຂອງບ້ານ ສຳລັບການຂຸດຄົ້ນ ແລະ ຊົມໃຊ້ຊັບພະຍາກອນປ່າໄມ້ ພາຍໃນຂອບເຂດຂອງບ້ານ. ເຊັ່ນດຽວກັນ ຄື ຈະບໍ່ມີຜົນກະທົບ ຕໍ່ກົດລະບຽບ ຫຼື ລະບຽບການຂອງບ້ານ, ຖ້າວ່າ ມີການຈັດຕັ້ງປະຕິບັດ ຕາມວິທີການທີ່ມີສ່ວນຮ່ວມ ຢ່າງເໝາະສົມ. ເຖິງຢ່າງໃດກໍຕາມ ໃນຫຼາຍໆກໍລະນີ ການຈັດແບ່ງເຂດປ່າ ປະເພດຫວງຫ້າມ ແມ່ນກວມເອົາປ່າຊົມໃຊ້ຂອງບ້ານ ແລະ ເນື້ອທີ່ການຜະລິດ ຈຶ່ງເຮັດໃຫ້ການຊົມໃຊ້ປ່າໄມ້ຂອງປະຊາຊົນ ເຊັ່ນ: ການຫາຟືນ ແລະ ເກັບກູ້ເຄື່ອງປ່າຂອງດົງ ຍາກຂຶ້ນກວ່າເກົ່າ.

ນອກຈາກນັ້ນ, ການມອບທີ່ດິນ ເພື່ອເປົ້າໝາຍການຟື້ນຟູປ່າໄມ້ ເຮັດໃຫ້ເນື້ອທີ່ດິນ ສຳລັບການປູກຝັງຈຳກັດລົງ ອີກປະການໜຶ່ງ ຍັງເປັນການກົດດັນໃຫ້ປະຊາຊົນ ບຸກລຸກເນື້ອທີ່ດິນປ່າໄມ້ປະເພດອື່ນໆ ເພື່ອທຳການຜະລິດກະສິກຳ. ບັນຫາດັ່ງກ່າວ ຍັງເປັນການຈຳກັດ ການເຂົ້າສູ່ປ່າໄມ້ ຂອງປະຊາຊົນ ເພື່ອເກັບຟືນ ຫຼື ເຄື່ອງປ່າຂອງດົງ ເຊັ່ນດຽວກັນ.

ການປະເມີນຜົນກະທົບ ທີ່ໄດ້ດຳເນີນ ຢູ່ ແຂວງ ຫຼວງພະບາງ ພົບວ່າ ການມອບດິນ ມີຜົນເຮັດໃຫ້ ເນື້ອທີ່ປູກຝັງ ຂອງ ແຕ່ລະຄອບຄົວ ທີ່ມີໃນປະຈຸບັນ ຫຼຸດລົງ. ການສຶກສາ ພາຍໃຕ້ ໂຄງການຮ່ວມມືປ່າໄມ້ ລາວ-ຊູແອດ ໄລຍະ 4 ແລະ ການປະເມີນຄວາມທຸກຍາກ ແບບມີສ່ວນຮ່ວມ ໂດຍຄະນະກຳມະການແຜນການ ແລະ ການຮ່ວມມື-ທະນາຄານ ພັດທະນາອາຊີ ໄດ້ລາຍງານ ຜົນທີ່ຄ້າຍຄືກັນ. ນອກຈາກຜົນກະທົບທາງລົບ ຕໍ່ລາຍຮັບ ຂອງປະຊາຊົນແລ້ວ ອາດສ້າງ ຄວາມກົດດັນ ໃຫ້ປະຊາຊົນຖາງ ແລະ ຈູດເນື້ອທີ່ປ່າໄມ້ ຢູ່ອ້ອມຂ້າງ ກໍ່ເປັນໄດ້.

### 3.9.3.4. ການຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ

ໂຄງການຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ ໄດ້ລິເລີ່ມ ແຕ່ ປີ 1993. ໂຄງການດັ່ງກ່າວ ໄດ້ສຸມໃສ່ການຄຸ້ມຄອງປ່າໄມ້ ຂອງບ້ານ ເພື່ອການນຳໃຊ້ຂອງບ້ານ, ການຟື້ນຟູປ່າຊຸດໂຊມ ແລະ ການປູກ ຫຼື ການຄຸ້ມຄອງເຄື່ອງປ່າຂອງດົງ ກັບທີ່.

ໄດ້ມີການສະເໜີວ່າ ໂຄງການນີ້ ແມ່ນມີຜົນໃນການຊ່ວຍເຫຼືອ ອົງການປົກຄອງບ້ານ ໃນການຮ່າງ ຫຼື ປັບປຸງກົດລະບຽບຂອງບ້ານ ສຳລັບການຊົມໃຊ້ຂອງປະຊາຊົນ, ການຂຸດຄົ້ນໄມ້ເພື່ອປຸກສ້າງ ຫຼື ເກັບກູ້ເຄື່ອງປ່າຂອງດົງ.

---

[17] *ເອກະສານ ບົດລາຍງານການນຳໃຊ້ທີ່ດິນຂັ້ນບ້ານ ເພື່ອການສ້າງແຜນຍຸດທະສາດປ່າໄມ້ 2020 (ການປະກອບຄຳເຫັນໃຫ້ແກ່ເອກະສານສົນທະນາ).... ໜ້າທີ 37.*

ລະບຽບເຫຼົ່ານີ້ ອາດກວມເອົາ ນະໂຍບາຍຊຸກຍູ້ ສຳລັບການນຳໃຊ້ແບບຍືນນານ, ມາດຖານ ສຳລັບການມອບຊັບພະຍາກອນ ແລະ ສຳລັບການສະກັດກັ້ນ ວິທີການເກັບກູ້ ເຄື່ອງປ່າຂອງດົງ ແບບທີ່ບໍ່ຖືກຕ້ອງ ຫຼື ຫວງຫ້າມ. ນອກຈາກນັ້ນ, ຍັງອາດກວມເອົາລະບຽບການ ສຳລັບການຮັບຮູ້ ກຳມະສິດຕໍ່ຕົ້ນໄມ້ ຂອງຜູ້ທີ່ໄດ້ປູກ ແລະ ຟື້ນຟູ.

ໂຄງການ ອະນຸລັກ ແລະ ຟື້ນຟູ ປ່າໄມ້ (ແຂວງວຽງຈັນ) ໄດ້ຊ່ວຍເຫຼືອປະຊາຊົນ ສ້າງແຜນຄຸ້ມຄອງປ່າໄມ້ບ້ານ ທີ່ເລັ່ງໃສ່ການດຳເນີນງານ ຫຼາຍກວ່າ ການເກືອດຫ້າມ. ອີງໃສ່ ກົດລະບຽບ ແລະ ລະບຽບການ ທີ່ມີຢູ່ໃນປະຈຸບັນ ໂດຍການຊ່ວຍເຫຼືອຂອງໂຄງການ, ປະຊາຊົນໄດ້ປຶກສາຫາລື ກ່ຽວກັບສະພາບປະຈຸບັນ ແລະ ການນຳໃຊ້ປ່າໄມ້ຂອງເຂົາເຈົ້າ ແລະ ດຳເນີນການ ສຳລັບການຟື້ນຟູແຫຼ່ງນ້ຳ, ການເກັບກູ້ ແລະ ຂາຍເຄື່ອງປ່າຂອງດົງ, ການປູກໄມ້ຕາມໂຮງຮຽນ ແລະ ອື່ນໆ ເພື່ອໃຫ້ມີຜົນປະໂຫຍດສູງສຸດ ຈາກການຄຸ້ມຄອງປ່າໄມ້ ໃນໄລຍະຍາວ. ການຄຸ້ມຄອງເຄື່ອງປ່າຂອງດົງແບບລວມໝູ່ ໄດ້ທົດລອງ ຢູ່ໃນບາງທ້ອງຖິ່ນ ແລະ ອັນທີ່ເດັ່ນກວ່າໝູ່ ແມ່ນຢູ່ບ້ານນ້ຳແພ່ງ, ເມືອງນາໝໍ້, ແຂວງອຸດົມໄຊ ຊຶ່ງໄດ້ດຳເນີນ ໂດຍໂຄງການໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ຂອງໂຄງການຮ່ວມມືລາວ-IUCN.

## 3.9.4. ບັນຫາສຳລັບ ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ເພື່ອລຶບລ້າງຄວາມທຸກຍາກ

### 3.9.4.1. ການຄຸ້ມຄອງ ແລະ ສະຖານະພາບທາງດ້ານນິຕິໄນ ຂອງ ທີ່ດິນປ່າໄມ້ ແລະ ປ່າໄມ້ບ້ານ

ໃນເດືອນມິຖຸນາ ປີ 2001 ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກລະບຽບການກ່ຽວກັບການຄຸ້ມຄອງປ່າໄມ້ບ້ານ ສະບັບເລກທີ 0535/ກປ.2001 ເຊິ່ງໄດ້ກຳນົດລາຍລະອຽດກ່ຽວກັບສິດ ແລະ ຄວາມຮັບຜິດຊອບຂອງຊາວບ້ານ ໃນການຄຸ້ມຄອງ, ປ້ອງກັນ ແລະ ອະນຸລັກປ່າໄມ້ ພາຍໃນຂອບເຂດຂອງບ້ານ ຕະຫຼອດຮອດການຮັບຮອງສິດເປັນເຈົ້າ ໃນການຊົມໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມປະເພນີ. ການກຳນົດຂອບເຂດປ່າໄມ້ບ້ານແມ່ນໄດ້ດຳເນີນ ໂດຍຜ່ານໂຄງການວາງແຜນນຳໃຊ້ທີ່ດິນ ແລະ ມອບດິນ-ມອບປ່າ ບົນພື້ນຖານການເຫັນດີເປັນເອກະພາບ ຈາກອົງການປົກຄອງບ້ານ ແລະ ເມືອງ, ພ້ອມດຽວກັນນັ້ນ ການກຳນົດປະເພດປ່າຕາມກົດໝາຍ ປ່າໄມ້ໃນຂອບເຂດປ່າໄມ້ບ້ານ ກໍໄດ້ຖືກດຳເນີນການເຊັ່ນດຽວກັນ. ເຖິງວ່າລະບຽບການໄດ້ຖືກປະກາດໃຊ້ ແລະ ການກຳນົດພື້ນທີ່ຕົວຈິງໄດ້ຮັບການດຳເນີນການ ດັ່ງທີ່ກ່າວມາຂ້າງເທິງ ແຕ່ສະພາບການຄຸ້ມຄອງປ່າໄມ້ບ້ານ ຍັງບໍ່ທັນໄດ້ຮັບຜົນດີຢ່າງເປັນທີ່ໜ້າພໍໃຈ. ປະຊາຊົນຢູ່ໃນບ້ານສ່ວນໃຫຍ່ ຍັງນຳໃຊ້ປ່າໄມ້ຢູ່ໃນຂອບເຂດບ້ານ ຢ່າງຊະຊາຍ.

ເນື່ອງຈາກການພັດທະນາທາງດ້ານເສດຖະກິດ ເຮັດໃຫ້ຄວາມຕ້ອງການທີ່ດິນປ່າໄມ້ ເພື່ອເປົ້າໝາຍໃນການພັດທະນາດັ່ງກ່າວ ນັບມື້ນັບເພີ່ມຂຶ້ນ ລວມທັງ ການພັດທະນາພື້ນຖານໂຄງລ່າງ, ການດຳເນີນກິດຈະກຳການຄ້າ, ການປູກໄມ້ໃນພື້ນທີ່ຂະໜາດໃຫຍ່, ການຂຸດຄົ້ນບໍ່ແຮ່ ແລະ ອື່ນໆ, ແລະ ໂດຍສ່ວນໃຫຍ່ແລ້ວ ບັນດາກິດຈະການພັດທະນາຕ່າງໆເຫຼົ່ານັ້ນ ແມ່ນກ່ຽວພັນກັບທີ່ດິນປ່າໄມ້ ແລະ ປ່າໄມ້ບ້ານ. ເຖິງຢ່າງໃດກໍຕາມ, ເນື່ອງຈາກວ່າກົດໝາຍ ແລະ ລະບຽບການຕ່າງໆ ທີ່ມີໃນປະຈຸບັນ ແມ່ນຍັງຂາດມາດຕະການທີ່ຈຳເປັນ ກ່ຽວກັບການອະນຸລັກປ່າໄມ້ບ້ານ ເຊັ່ນ: ຂັ້ນຕອນໃນການປຶກສາຫາລື ລະຫວ່າງບ້ານ ແລະ ອົງການພັດທະນາອື່ນໆ ແລະ ການຊົດເຊີຍໃຫ້ປະຊາຊົນ ຕໍ່ການສູນເສັຽສິດໃນການຊົມໃຊ້ ຊັບພະຍາກອນພາຍໃນຂອບເຂດບ້ານ ທີ່ລັດຖະບານ ໄດ້ມອບໃຫ້. ສ.ປ.ປ.ລາວ ມີການຂະຫຍາຍຕົວທາງດ້ານເສດຖະກິດ ຢ່າງວອ່ງໄວ ແລະ ການປ່ຽນແປງທີ່ດິນປ່າໄມ້ ໄປສູ່ເປົ້າໝາຍການນຳໃຊ້ອື່ນ ທີ່ພົວພັນກັບປ່າໄມ້ບ້ານ ມີທ່າອ່ຽງເພີ່ມຂຶ້ນ, ມາດຕະການດັ່ງກ່າວ ຈຳເປັນຕອ້ງໄດ້ກະກຽມ ເພື່ອຫຼີກລ້ຽງບັນດາຂໍ້ຂັດແຍ່ງທີ່ອາດເກີດຂຶ້ນ.

#### 3.9.4.2. ໄພຂົ່ມຂູ່ຂອງການຖາງປ່າເຮັດໄຮ່ ຕໍ່ ປ່າໄມ້ ແລະ ສິ່ງແວດລ້ອມ

ສາມາດເວົ້າໄດ້ວ່າ ການເຮັດໄຮ່ເລື່ອນລອຍ ຫຼື ໄຮ່ເຄື່ອນຍ້າຍ ແມ່ນສາເຫດຕົ້ນຕໍ ຂອງການສູນເສຍປ່າໄມ້ ໃນໄລຍະຜ່ານມາ ໂດຍສະເພາະ ຢູ່ເຂດພາກເໜືອ. ຢ່າງໃດກໍດີ ຍັງມີການສັງເກດວ່າ ປ່າໄມ້ ຢູ່ໃນເນື້ອທີ່ໄຮ່ ທີ່ປະຊາຊົນປະປ່ອຍນັ້ນ ໄດ້ມີການຟື້ນຕົວຄືນ. ອີກດ້ານໜຶ່ງ, ການເຮັດໄຮ່ໝູນວຽນ ແມ່ນເປັນສິ່ງທີ່ຍອມຮັບເອົາໄດ້ ໃນທັດສະນະ ຂອງການປົກປັກຮັກສາປ່າໄມ້, ແຕ່ມັນກໍຍັງແມ່ນການທໍາລາຍສິ່ງແວດລ້ອມ ຫຼາຍທີ່ສຸດ, ຖ້າຫາກວ່າໄລຍະຮອບໝູນວຽນ ສັ້ນ ຄືພຽງແຕ່ 3 ຫຼື 4 ປີ ຊຶ່ງອາດພາໃຫ້ ສູນເສຍ ດິນ ແລະ ພືດ ຢ່າງວອງໄວ, ຍົກເວັ້ນ "ຫຍ້າຄາ". ຕາມສະພາບຄວາມເປັນຈິງ ສິ່ງແວດລອ້ມ ອາດສູນເສຍ ຈາກການເຮັດໄຮ່ເລື່ອນລອຍ ໜອ້ຍກວ່າ ການເຮັດໄຮ່ໝູນວຽນ ຖ້າຮອບໝູນວຽນຂອງການເຮັດໄຮ່ໝູນວຽນຫາກສັ້ນ ຊຶ່ງປ່າໄມ້ບໍ່ອາດຟື້ນຕົວຄືນໄດ້ທັນ. ສະນັ້ນ ຈໍາເປັນຕ້ອງມີຂໍ້ມູນ ແລະ ການວິໄຈລະອຽດ ເລິກເຊິ່ງກວ່າເກົ່າ ສໍາລັບໄພຂົ່ມຂູ່ຕົວຈິງ ຈາກການເຮັດໄຮ່ ຕໍ່ສະພາບປ່າໄມ້ ແລະ ສິ່ງແວດລ້ອມ.

#### 3.9.4.3. ການຢຸດຕິການຖາງປ່າເຮັດໄຮ່ ໂດຍການສ້າງລະບົບການດໍາລົງຊີວິດແບບຄົງທີ່

ນະໂຍບາຍກ່ຽວກັບບັນຫານີ້ ແມ່ນຈະແຈ້ງ ດັ່ງທີ່ໄດ້ກໍານົດ ຢູ່ໃນເອກະສານທາງການຫຼາຍເອກະສານ ເຊັ່ນ: ການຢຸດຕິການຖາງປ່າເຮັດໄຮ່ ໂດຍການຈັດສັນອາຊີບຄົງທີ່ ແລະ ການສົ່ງເສີມການຜະລິດກະສິກໍາຄົງທີ່. ເນື້ອທີ່ເປົ້າໝາຍຂອງການຫຼຸດຜ່ອນການຖາງປ່າເຮັດໄຮ່ ໄດ້ຖືກກໍານົດໃນແຕ່ລະປີ ໃນກອງປະຊຸມກະສິກໍາ ແລະ ປ່າໄມ້ປະຈໍາປີ. ຢ່າງໃດກໍຕາມ ໃນປັດຈຸບັນແມ່ນຍັງບໍ່ມີງົບປະມານ ແລະ ພະນັກງານພຽງພໍ ເພື່ອສ້າງລະບົບການດໍາລົງຊີວິດຄົງທີ່ ໃຫ້ແກ່ຜູ້ເຮັດໄຮ່ ແລະ ກຸ່ມເປົ້າໝາຍ ຢຸດຕິການຖາງປ່າເຮັດໄຮ່. ຈາກການຂາດເຂີນງົບປະມານ ແລະ ຈໍານວນພະນັກງານ ດັ່ງກ່າວ, ທາງແຂວງ ແລະ ເມືອງ ຈຶ່ງມີແນວໂນ້ມດໍາເນີນການແບບຟ້າວຟັ່ງ ເອົາແຕ່ປະລິມານເປັນຕົ້ນຕໍ ຫຼື ຂາດການວາງແຜນຢ່າງຮອບຄອບ, ຄົບຊຸດ ກ່ອນທໍາການຍົກຍ້າຍປະຊາຊົນ. ບັນຫາທີ່ຕາມມານັ້ນ ກໍແມ່ນຄວາມທຸກຍາກຂອງປະຊາຊົນ ໂດຍສະເພາະ ຢູ່ບັນດາແຂວງພາກເໜືອ, ເຊິ່ງໃນຄວາມເປັນຈິງແລ້ວ ແມ່ນຍອ້ນການຂາດເຂີນເນື້ອທີ່ດິນທີ່ເໝາະສົມ ເພື່ອດໍາເນີນການຜະລິດກະສິກໍາ ໃຫ້ມີປະສິດຕິພາບສູງນັ້ນເອງ.

#### 3.9.4.4. ວິທີການປັບຕົວເຂົ້າກັບເງື່ອນໄຂຈຸດພິເສດຂອງບ້ານ

ແຕ່ລະບ້ານ ແມ່ນມີເງື່ອນໄຂ ທາງທໍາມະຊາດ ແລະ ເສດຖະກິດສັງຄົມແຕກຕ່າງກັນ. ບ້ານທີ່ຢູ່ໃກ້ເສັ້ນທາງໃຫຍ່ ຫຼື ສາມາດເຂົ້າສູ່ຕະຫຼາດໄດ້ງ່າຍ ແມ່ນເໝາະສົມທີ່ສຸດ ສໍາລັບດໍາເນີນການກະສິກໍາຄົງທີ່ ຫຼື ການປູກຝັງທີ່ຜ່ານການມອບດິນ-ມອບປ່າ. ບ້ານທີ່ມີເນື້ອທີ່ຮາບພຽງ ກໍແມ່ນເປົ້າໝາຍ ຂອງການມອບດິນ-ມອບປ່າທີ່ເໝາະສົມ. ຢ່າງໃດກໍຕາມ ການມອບດິນ-ມອບປ່າ ຢູ່ບັນດາບ້ານ ໃນເຂດພູດອຍ ຫ່າງໄກສອກຫຼີກ ບ່ອນທີ່ມີການຖາງປ່າເຮັດໄຮ່ຢ່າງຫຼວງຫຼາຍນັ້ນ ຈະບໍ່ສາມາດບັນລຸຈຸດປະສົງໄດ້ ດ້ວຍການປູກຝັງໃນເນື້ອທີ່ ທີ່ໄດ້ມອບໃຫ້ ຍ້ອນວ່າເສັ້ນທາງເຊື່ອມຕໍ່ ຫຼື ເຂົ້າສູ່ຕະຫຼາດແມ່ນຍັງລໍາບາກ. ການຍົກຍ້າຍ ຫຼື ການລວມບ້ານ ໃນເຂດດັ່ງກ່າວ ແບບບໍ່ສະໝັກໃຈ ອາດຈະບໍ່ປະສົບຜົນສໍາເລັດ ຖ້າວ່າບໍ່ມີການກະກຽມທີ່ດີ ແລະ ບໍ່ມີການປຶກສາກັບປະຊາຊົນຢ່າງເຕັມສ່ວນ ລະຫວ່າງບ້ານທີ່ຢູ່ມາແຕ່ກ່ອນ ແລະ ບ້ານທີ່ຍ້າຍມາໃໝ່.

# 4. ຈຸດປະສົງຂອງຂະແໜງປ່າໄມ້

## 4.1. ສະພາບແວດລ້ອມ ໃນການກຳນົດນະໂຍບາຍ

ນະໂຍບາຍ, ຈຸດປະສົງ ແລະ ຍຸດທະສາດ ສຳລັບຂະແໜງປ່າໄມ້ ຂອງລັດຖະບານ ແມ່ນສອດຄ່ອງ ແລະ ນອນຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ຍຸດທະສາດການຂະຫຍາຍຕົວ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ, ແຜນງານພັດທະນາຊົນນະບົດ, ຍຸດທະສາດພັດທະນາການກະສິກຳ ແລະ ຍຸດທະສາດຊີວະນາໆພັນແຫ່ງ ຊາດ ແລະ ແຜນດຳເນີນງານ. ດ້ວຍເຫດນັ້ນ ການກຳນົດນະໂຍບາຍປ່າໄມ້ ຈະຕອ້ງກຳນົດບົນພື້ນຖານກາລະໂອ ກາດ ແລະ ເງື່ອນໄຂພາຍໃນ ແລະ ສາກົນ.

### 4.1.1. ຄວາມຕ້ອງການໃນການພັດທະນາ

ກາລະໂອກາດ ສຳລັບ ກິດຈະກຳທາງດ້ານເສດຖະກິດ, ກິດຈະກຳໃນການສ້າງລາຍຮັບແຫ່ງຊາດ ແລະ ລາຍ ຮັບເປັນເງິນຕາຕ່າງປະເທດ ຢູ່ ສ.ປ.ປ.ລາວ ໃນປະຈຸບັນ ແມ່ນຍັງຈຳກັດ. ຊັບພະຍາກອນບໍ່ແຮ່ ເຖິງວ່າສ່ວນຫຼາຍ ຍັງບໍ່ທັນໄດ້ຮັບການຂຸດຄົ້ນມານຳໃຊ້ ແຕ່ກໍມີຈຳກັດ ແລະ ເນື້ອທີ່ໆຮາບພຽງເໝາະສົມໃຫ້ແກ່ການຜະລິດກະສິກຳ ທີ່ສາມາດສ້າງວຽກເຮັດງານທຳ, ສ້າງລາຍຮັບ, ພາສີອາກອນ ແລະ ສິນຄ້າຂາອອກ ແມ່ນມີຈຳກັດ.

ເຖິງຢ່າງໃດກໍຕາມ ສ.ປ.ປ.ລາວ ມີຊາຍແດນຕິດກັບແມ່ນ້ຳຂອງ ເປັນໄລຍະຍາວແຕ່ເໜືອຮອດໃຕ້ ຊຶ່ງສ້າງ ກາລະໂອກາດອັນດີໃຫ້ແກ່ການປະມົງ ແລະ ການຄົມມະນາຄົມທາງນ້ຳ. ມີບາງເຂດ, ບາງທ້ອງຖິ່ນ ມີທ່າແຮງອັນ ໃຫຍ່ຫຼວງ ສຳລັບການສ້າງເຂື່ອນໄຟຟ້ານ້ຳຕົກ ເພື່ອສົ່ງກະແສໄຟຟ້າອອກຕ່າງປະເທດ ແລະ ອີກປະການໜຶ່ງ ສ.ປ.ປ.ລາວ ມີທີ່ຕັ້ງຢູ່ໃຈກາງຂອງພາກພື້ນ ເຮັດໃຫ້ ມີຄວາມສາມາດສ້າງລາຍຮັບສຳຄັນ ຈາກການບິນຜ່ານ ແລະ ຈາກການຂົນສົ່ງສາກົນ. ສ.ປ.ປ.ລາວ ຍັງມີທ່າແຮ່ງ ທີ່ສຳຄັນ ອັນໜຶ່ງ ສຳລັບການທ່ອງທ່ຽວທຳມະຊາດ ແລະ ທອ່ງທ່ຽວວິທະຍາສາດ. ແຕ່ແນວໃດກໍຕາມ ທັງໝົດ 3 ກິດຈະກຳທ່າແຮງ ທີກ່າວມານີ້ ສະໜອງ ກາລະໂອກາດໃນ ການສ້າງວຽກເຮັດງານທຳໃຫ້ປະຊາຊົນ ໃນຈຳນວນຈຳກັດ ຫຼື ພຽງແຕ່ຢູ່ໃນໄລຍະເວລາໃດໜຶ່ງເທົ່ານັ້ນ. ເມື່ອທຽບໃສ່ ຈຳນວນປະຊາກອນ ທີ່ຄາດຄະເນຈະເພີ້ມຂຶ້ນເຖິງ ປະມານ 8,3 ລ້ານ ຄົນ ໃນປີ 2020, ຄາດວ່າກາລະໂອກາດໃໝ່ ເພື່ອຮອງຮັບບັນຫາດັ່ງກ່າວນັ້ນກໍຄົງມີ ຫຼື ອາດຄົ້ນພົບໄດ້.

ຂະແໜງປ່າໄມ້ ເປັນຂະແໜງໜຶ່ງ ທີ່ຈະສະໜອງ ຄວາມເປັນໄປໄດ້ໃນລະດັບໃດໜຶ່ງ ສຳລັບການພັດທະນາ ເສດຖະກິດ-ສັງຄົມ ແບບຍືນນານ ແລະ ການສ້າງວຽກເຮັດງານທຳ ໃນຊຸມປີຕໍ່ໜ້າ ແລະ ບົນພື້ນຖານທ່າແຮງທາງ ດ້ານຊັບພະຍາກອນປ່າໄມ້ທີ່ມີໃນປະຈຸບັນ ແລະ ຄວາມຕອ້ງການໃນອະນາຄົດ ສຳລັບຜະລິດຕະພັນປ່າໄມ້ ໃນຂົງ ເຂດພາກພື້ນ, ກາລະໂອກາດດັ່ງກ່າວນັ້ນ ເປັນເງື່ອນໄຂທີ່ດີ ທີ່ບໍ່ອາດສາມາດປະປອ່ຍໃຫ້ຜ່ານໄປ ໂດຍບໍ່ມີການ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ.

### 4.1.2. ຂົງເຂດສາກົນ ແລະ ການປ່ຽນແປງໃນຂົງເຂດພາກພື້ນ

#### 4.1.2.1. ກອບລວມທາງດ້ານນະໂຍບາຍ

ສ.ປ.ປ.ລາວ ໄດ້ຄອ່ຍໆເຊື່ອມປະສານເຂົ້າກັບປະຊາຄົມໂລກ ແລະ ພາກພື້ນ ໂດຍການເປີດກວ້າງ ທາງ ດ້ານການຄ້າ, ການລົງທຶນ ແລະ ການຕິດຕໍ່ສື່ສານ ກັບພາຍນອກ. ຂະບວນການດັ່ງກ່າວ ໄດ້ຖືກຜັກດັນ ໂດຍການ ເຂົ້າຮ່ວມເປັນສະມາຊິກຂອງກຸ່ມປະເທດອາຊຽນ. ໃນຂົງເຂດປ່າໄມ້, ສ.ປ.ປ.ລາວ ແມ່ນປະເທດໜຶ່ງທີ່ໄດ້ ຮ່ວມ ລົງນາມ ແລະ ເຂົ້າເປັນສະມາຊິກ ໃນຫຼາຍສົນທິສັນຍາສາກົນທີ່ສຳຄັນ ລວມທັງ ສົນທິສັນຍາວ່າດ້ວຍຊີວະນາໆພັນ,

ສົນທິສັນຍາວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດ, ສົນທິສັນຍາວ່າດ້ວຍການປົກປັກຮັກສາມໍລະດົກ ທາງດ້ານວັດທະນະທຳ ແລະ ທຳມະຊາດຂອງໂລກ, ແລະ ສົນທິສັນຍາວ່າດ້ວຍການຄ້າສັດປ່າ ແລະ ພືດ ໃນສາກົນ. ພ້ອມດຽວກັນນັ້ນ ສ.ປ.ປ.ລາວ ກໍຍັງແມ່ນສະມາຊິກຂອງອົງການແມ່ນນ້ຳຂອງອີກດ້ວຍ. ເນື່ອງຈາກວ່າ ສ.ປ.ປ.ລາວ ມີທີ່ຕັ້ງທີ່ເປັນເອກະລັກ ແລະ ຂອ້ນຂ້າງອຸດົມຮັ່ງມີໄປດ້ວຍຊັບພະຍາກອນປ່າໄມ້, ສະນັ້ນ ຈຶ່ງສາມາດປະກອບສວ່ນໃຫ້ແກ່ການສະໜອງຜະລິດຕະພັນໄມ້ທີ່ມີຄຸນນະພາບ, ມີບົດບາດສຳຄັນ ໃນປະກອບສວ່ນ ໃຫ້ແກ່ການອະນຸລັກຊີວະນາໆພັນ ແລະ ການອະນຸລັກດິນ ແລະ ນ້ຳ ໃນຂົງເຂດສາກົນ ແລະ ພາກພື້ນ.

#### 4.1.2.2. ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ຄວາມເປັນໄປໄດ້ທາງດ້ານຕະຫຼາດ

ສ.ປ.ປ.ລາວ ຕັ້ງຢູ່ ໃຈກາງ ຂອງ ພາກພື້ນອາຊີຕາເວັນອອກສ່ຽງໃຕ້, ມີ ຊາຍແດນຕິດກັບ 5 ປະເທດ. ໃນນັ້ນ ໄທ, ຫວຽດນາມ ແລະ ພາກໃຕ້ຂອງຈີນ ແມ່ນ ຕະຫຼາດທີ່ສຳຄັນຕົ້ນຕໍ ສຳລັບ ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງຂອງລາວ (ທັງປຸງແຕ່ງ ແລະ ບໍ່ປຸງແຕ່ງ). ຍ້ອນວ່າ ປະເທດເຫຼົ່ານັ້ນ ຂາດແຄນໄມ້ ແລະ ເສດຖະກິດຂອງເຂົາເຈົ້າ ຂະຫຍາຍຕົວໄວ, ຄວາມຕ້ອງການທາງດ້ານຜະລິດຕະຜົນປ່າໄມ້ຈາກ ສ.ປ.ປ.ລາວເຮົາ ຂອງບັນດາປະເທດເຫຼົ່ານັ້ນ ແມ່ນນັບມື້ ຈະເພີ້ມຂຶ້ນ.

ຍ້ອນເຫັນໄດ້ທ່າແຮງ ແລະ ຄວາມສຳຄັນໃນການຂົນສົ່ງ ແລະ ແລກປ່ຽນສິນຄ້າກັບຕ່າງປະເທດ, ລັດຖະບານລາວ ຈຶ່ງໄດ້ປັບປຸງເສັ້ນທາງຄົມມະນາຄົມ ບໍ່ວາຢູ່ພາຍໃນ ແລະ ທີ່ເຊື່ອມຕໍ່ກັບບັນດາປະເທດເພື່ອນບ້ານ, ມູນຄ່າໃນການຂົນສົ່ງຈຶ່ງເຫັນວ່າຕ່ຳລົງ, ເຊິ່ງເປັນການແຂ່ງຂັນທີ່ໄດ້ປຽບ ແລະ ເປັນການສົ່ງເສີມ ການຄ້າຂອງລາວ. ການປັບປຸງ ສິ່ງອຳນວຍຄວາມສະດວກຕ່າງໆ ຢູ່ທ່າເຮືອໃນຫວຽດນາມ ກໍສາມາດ ປັບປຸງທີ່ຕັ້ງຂອງລາວ ໃນຕະຫຼາດການຄ້າທີ່ສຳຄັນໃນຕ່າງປະເທດ ເປັນຕົ້ນ ຍີ່ປຸ່ນ ແລະ ບັນດາປະເທດທີ່ຕິດກັບທະເລ. ຍິ່ງໄປກວ່ານັ້ນ, ການເຂົ້າຮ່ວມອົງການ ການຄ້າເສຣີອາຊຽນ ຈະເພີ້ມທະວີ ຫຼື ສົ່ງເສີມການຄ້າ ສຳລັບຜະລິດຕະຜົນປ່າໄມ້ຂອງລາວ ຖ້າພາສີນຳເຂົ້າ ເຄື່ອງປ່າຂອງດົງ ທີ່ໄດ້ປຸງແຕ່ງແລ້ວ ຢູ່ປະເທດອື່ນ ຫາກຕ່ຳລົງ ຫຼື ຖືກຍົກເລີກ. ໃນເວລາດຽວກັນ, ຄວາມຕ້ອງການຜະລິດຕະຜົນປ່າໄມ້ ທີ່ມີສູງ ຈາກ ສ.ປ.ປ.ລາວ ຂອງບັນດາປະເທດໃກ້ຄຽງ ແລະ ສ.ປ.ປ.ລາວ ມີຊາຍແດນທີ່ຍາວ ຕິດກັບບັນດາປະເທດໃກ້ຄຽງ ກໍເປັນໄພຂົ່ມຂູ່ ຕໍ່ ຊັບພະຍາກອນປ່າໄມ້ຂອງລາວເຊັ່ນດຽວກັນ.

ກາລະໂອກາດ, ເງື່ອນໄຂທີ່ດີທາງດ້ານສິ່ງແວດລອ້ມ ແລະ ໄພຂົ່ມຂູ່ ດັ່ງທີ່ຍົກໃຫ້ເຫັນຂ້າງເທິງນີ້, ໂດຍສະເພາະ ປັດໃຈທາງບວກ ທີ່ສາມາດເປັນເງື່ອນໄຂທ່າແຮງທາງດ້ານການຕະຫຼາດ ສຳລັບຜະລິດຕະຜົນປ່າໄມ້ຂອງລາວ ແລະ ການສ້າງລາຍຮັບແຫ່ງຊາດ ຕະຫຼອດຮອດ ການຄວບຄຸມ ຫຼື ກຳຈັດປັດໃຈທາງລົບ, ທັງສອງປັດໃຈດັ່ງກ່າວນີ້ ຄວນໄດ້ຮັບການພິຈາລະນາເປັນຢ່າງດີ ໃນການພັດທະນາຍຸດທະສາດປ່າໄມ້ ຂອງ ສ.ປ.ປ.ລາວ.

ການອະນຸລັກປ່າໄມ້ຂອງ ສ.ປ.ປ.ລາວ ແມ່ນມີຜົນກະທົບທີ່ສຳຄັນ ແລະ ໂດຍກົງ ຕໍ່ກັບຫຼາຍໆດ້ານ ໃນເຂດອ່າງໂຕ່ງແມ່ນ້ຳຂອງ ລວມທັງການກະສິກຳ, ການປະມົງ, ອຸດສາຫະກຳ, ການຄົມມະນາຄົມທາງນ້ຳ ແລະ ການດຳລົງຊີວິດປະຈຳວັນຂອງປະຊາຊົນ. ສ.ປ.ປ.ລາວ ໄດ້ຮັບການມອບໝາຍ ໃນການປຶກສາຫາລື ແລະ ການຮ່ວມມື ກ່ຽວກັບການອະນຸລັກ ໃນຂອບເຂດອ່າງໂຕ່ງແມ່ນ້ຳຂອງ ໂດຍສະເພາະ ແມ່ນຜ່ານຄະນະກຳມະການອົງການແມ່ນ້ຳຂອງ.

#### 4.1.2.3. ຂໍ້ຕົກລົງກັບສາກົນ

ການເພີ້ມທະວີສາຍພົວພັນ ທີ່ ສ.ປ.ປ.ລາວ ກຳລັງສ້າງກັບ ອົງການການຄ້າໂລກ ແລະ ຂົງເຂດການຄ້າເສລີອາຊຽນ ແມ່ນເປັນເງື່ອນໄຂໜຶ່ງ ໃນການສະໜອງກາລະໂອກາດທີ່ສຳຄັນ ເພື່ອຍົກສູງພາລະບົດບາດໃນການແຂ່ງຂັນ ທາງດ້ານການຕະຫຼາດ ສຳລັບຜະລິດຕະພົນປ່າໄມ້ຂອງລາວເຮົາ ໃນຂົງເຂດພາກພື້ນ ແລະ ສາກົນ.

ສ.ປ.ປ.ລາວ ໄດ້ສະໝັກເຂົ້າເປັນສະມາຊິກ ຂອງ ອົງການການຄ້າໂລກ. ນີ້ແມ່ນເປັນພື້ນຖານ ສຳລັບການເຂົ້າຮ່ວມຂອງ ສ.ປ.ປ.ລາວ ໃນເຄືອຂ່າຍການຄ້າສາກົນ ໃນອານາຄົດ ແລະ ເພື່ອບັນລຸການໄດ້ຮັບການປົກປ້ອງຈາກກົດບັນຍັດ ຫຼື ຂໍ້ກຳນົດ ຂອງອົງການການຄ້າໂລກ. ສ.ປ.ປ.ລາວ ໄດ້ເຂົ້າຮ່ວມ ເປັນສະມາຊິກອາຊຽນ ໃນປີ 1997 ແລະ ມີຄວາມພະຍາຍາມ ໃນການຫຼຸດຜ່ອນພາສີອາກອນ ຕາມເງື່ອນໄຂ ຂອງລະບົບພາສີອາກອນ ທີ່ມີປະສິດທິຜົນລວມ ຢູ່ພາຍໃນ ຂົງເຂດການຄ້າເສລີອາຊຽນ. ການຫຼຸດຜ່ອນພາສີອາກອນ ພາຍໃຕ້ ລະບົບພາສີອາກອນ ດັ່ງກ່າວ ບໍ່ໄດ້ກໍ່ໃຫ້ເກີດຜົນສະທ້ອນທາງລົບຢ່າງໃດ ຕໍ່ ການເກັບລາຍຮັບຂອງລັດຖະບານ ຫຼື ການແຂ່ງຂັນທາງດ້ານອຸດສາຫະກຳ ລວມທັງອຸດສາຫະກຳປຸງແຕ່ງໄມ້.

ສິ່ງທ້າທາຍສະເພາະ ຈະປາກົດເດັ່ນຂື້ນ ໃນເມື່ອ ມີການຍົກເວັ້ນ ຫຼື ເກືອດຫ້າມ ທາງດ້ານປະລິມານ (ລວມທັງ ການຫ້າມສົ່ງໄມ້ທ່ອນ ແລະ ໄມ້ເລື່ອຍ ອອກຕ່າງປະເທດ ໃນບັນດາການເກືອດຫ້າມອື່ນໆ) ແລະ ມາດຕະການໃນການຍົກເວັ້ນພາສີອາກອນ ອື່ນໆນັ້ນ ກາຍເປັນຄຳສັ່ງ ຫຼື ພັນທະທີ່ຈະຕອ້ງໄດ້ປະຕິບັດ. ໃນປະຈຸບັນ ລັດຖະບານ ກຳລັງດຳເນີນການກະກຽມ ການສຳຫຼວດ ມາດຕະການຍົກເວັ້ນພາສີອາກອນທັງໝົດ ດັ່ງໄດ້ຕົກລົງກັນ ໃນກອງປະຊຸມອາຊຽນ ທີ່ຈັດຂຶ້ນ ໃນເດືອນ ເມສາ ປີ 2002.

ຄວາມອຸດົມສົມບູນທາງດ້ານຊີວະນາໆພັນ ໃນ ສ.ປ.ປ.ລາວ ແມ່ນມີລັກສະນະເປັນເອກະລັກສະເພາະ ແລະ ມີຄວາມສຳຄັນ ບໍ່ສະເພາະແຕ່ຢູ່ໃນລະດັບຊາດເທົ່ານັ້ນ ແຕ່ຍັງຢູ່ໃນລະດັບພາກພື້ນ ແລະ ສາກົນອີກດ້ວຍ. ຍຸດທະສາດກ່ຽວກັບຊີວະນາໆພັນ ແລະ ແຜນງານແຫ່ງຊາດ ພາຍໃຕ້ກອບ ຂອງສົນທິສັນຍາວ່າດ້ວຍຊີວະນາໆພັນ ແມ່ນໄດ້ຮັບການສ້າງຂຶ້ນ ພອ້ມໆກັນກັບແຜນຍຸດທະສາດປ່າໄມ້ຮອດປີ 2020. ທັງສອງຍຸດທະສາດດັ່ງກ່າວນີ້ ຈະກຳນົດນະໂຍບາຍ ແລະ ແຜນດຳເນີນງານ ພາຍໃຕ້ເປົ້າໝາຍລວມອັນດຽວກັນ. ຄຽງຄູ່ກັນນັ້ນ, ສ.ປ.ປ.ລາວ ຍັງໄດ້ຮ່ວມມືຢ່າງໃກ້ສິດ ກັບບັນດາປະເທດເພື່ອນບ້ານໃກ້ຄຽງ ໃນການອະນຸລັກປ່າສະຫງວນ ທີ່ຕັ້ງຢູ່ໃກ້ຂອບເຂດຊາຍແດນລະຫວ່າງປະເທດ ແລະ ການຄວບຄຸມ ການລັກລອບຄ້າຂາຍພືດ ແລະ ສັດປ່າທີ່ຫວງຫ້າມ ຕາມເຂດຊາຍແດນ.

## 4.2. ສິ່ງທ້າທາຍ ແລະ ທາງເລືອກ ສຳລັບການພັດທະນາປ່າໄມ້

### 4.2.1. ສິ່ງທ້າທາຍ ສຳລັບຂະແໜງປ່າໄມ້

ຜົນກະທົບທີ່ອາດເກີດຂື້ນ ຕໍ່ກັບປ່າໄມ້ ແລະ ວຽກງານປ່າໄມ້ຂອງລາວ ຈາກການພັດທະນາທາງດ້ານເສດຖະກິດ-ສັງຄົມ ທັງຢູ່ພາຍໃນປະເທດ ແລະ ບັນດາປະເທດເພື່ອນບ້ານໃກ້ຄຽງ ແລະ ຄວາມພະຍາຍາມ ໃນການເຊື່ອມປະສານເຂົ້າກັບຂົງເຂດພາກພື້ນ ແມ່ນເປັນບັນຫາຍາກທີ່ຈະສາມາດປະເມີນໄດ້. ເຖິງຢ່າງໃດກໍຕາມ, ອີງຕາມການພັດທະນາ ຢູ່ປະເທດໃກ້ຄຽງ ແລະ ບັນດາປະເທດກຳລັງພັດທະນາອື່ນໆ ສາມາດຄາດຄະເນລ່ວງໜ້າ ໄດ້ວ່າການປ່ຽນແປງ ທີ່ຈະເກີດຂຶ້ນ ຢູ່ ສ.ປ.ປ.ລາວ ອາດມີດັ່ງນີ້:

- **ການເພີ່ມຂຶ້ນ ຂອງຮູບແບບໃນການຫັນປ່ຽນການນຳໃຊ້ທີ່ດິນປ່າໄມ້ ໄປເປັນການນຳໃຊ້ປະເພດອື່ນໆ.** ເມື່ອຈຳນວນປະຊາກອນເພີ່ມຂຶ້ນ ເນື້ອທີ່ປ່າໄມ້ ໂດຍລວມແລ້ວ ແມ່ນຖືກຫັນປ່ຽນໄປເປັນ ເນື້ອທີ່ດິນປູກຝັງ; ດິນນາ ແລະ ທົ່ງຫຍ້າລ້ຽງສັດ, ເສັ້ນທາງ ແລະ ອ່າງເກັບນ້ຳ ຖືກສ້າງຂຶ້ນ ແລະ ເນື້ອທີ່ຕົວເມືອງກໍຂະຫຍາຍອອກຕື່ມ. ລະດັບຂອງການສູນເສຍປ່າໄມ້ ຍ້ອນການພັດທະນາເຫຼົ່ານັ້ນ ອາດມີຄວາມແຕກຕ່າງກັນຫຼາຍ ເຖິງແມ່ນວ່າການຫັນປ່ຽນໄປເພື່ອການກະສິກຳ ອາດຈະຄຽງຄູ່ກັນກັບການເພີ້ມຂຶ້ນຂອງຈຳນວນປະຊາກອນ.

- **ຄວາມຕ້ອງການ ຜະລິດຕະພັນປ່າໄມ້ ຢູ່ພາຍໃນ ແລະ ຕ່າງປະເທດເພີ່ມຂຶ້ນ.** ເມື່ອຈຳນວນປະຊາກອນເພີ່ມຂຶ້ນ ແລະ ຊີວິດການເປັນຢູ່ດີຂຶ້ນ, ຄວາມຕ້ອງການດ້ານໄມ້ ສຳລັບປຸກສ້າງ; ປະຕູ, ໄມ້ປູພື້ນ ແລະ ເຄື່ອງໃຊ້ພາຍໃນເຮືອນ/ເຟີນີເຈີ ກໍເພີ້ມຂຶ້ນ. ຄວາມຕ້ອງການ ຜະລິດຕະພັນໄມ້ປ່ອງ ແລະ ຫວາຍ, ພືດເສັ້ນໄຍ ແລະ ອາຫານ ຈາກປ່າໄມ້, ຢາປົວພະຍາດ ແລະ ເຄື່ອງປຸງແຕ່ງອາຫານ ເຊັ່ນດຽວກັບຄວາມຕອ້ງການໄມ້ເນື້ອເຍື່ອ ແລະ ໄມ້ເຮັດເຈັ້ຍ ກໍເພີ່ມຂຶ້ນ. ຄວາມຕອ້ງການຈາກພາຍນອກ ແມ່ນຂຶ້ນກັບການແຂ່ງຂັນ ແລະ ບັນດາກຳແພງການຄ້າ, ແລະ ດ້ວຍເຫດນີ້ ຄວາມຕ້ອງການຈາກພາຍນອກ ອາດຈະເພີ່ມຂຶ້ນຫຼາຍກວ່າ ຄວາມຕອ້ງການ ຢູ່ພາຍໃນ.

- **ຄວາມຈຳເປັນ ໃນການອະນຸລັກ ດິນ ແລະ ນ້ຳ ເພີ່ມຂຶ້ນ.** ຄວາມຕ້ອງການຢູ່ພາຍໃນ ສຳລັບການສະໜອງນ້ຳທີ່ສະອາດ, ຮັບປະກັນເພື່ອເປັນນ້ຳດື່ມ ແລະ ນ້ຳໃຊ້, ແລະ ສຳລັບການສະໜອງພະລັງງານໄຟຟ້ານ້ຳຕົກ ອາດເພີ່ມຂຶ້ນ ເຊັ່ນດຽວກັບການເພີ່ມຂຶ້ນຂອງການພັດທະນາເສດຖະກິດ-ສັງຄົມ, ໃນກໍລະນີຂອງ ສ.ປ.ປ.ລາວ ຄວາມຕອ້ງການໃນການອະນຸລັກ ເພື່ອສະໜອງນ້ຳໃຫ້ແກ່ການຜະລິດພະລັງງານໄຟຟ້າດັ່ງກ່າວ ຍິ່ງເພີ່ມຂຶ້ນ ໃນເມື່ອຄວາມຕອ້ງການຊື້ກະແສໄຟຟ້າ ຈາກ ສ.ປ.ປ.ລາວ ຂອງບັນດາປະເທດເພື່ອນບ້ານໃກ້ຄຽງ ຫາກເພີ່ມຂຶ້ນ. ເມື່ອຈຳນວນປະຊາກອນທີ່ມາຕັ້ງຖິ່ນຖານ ຢູ່ເຂດທົ່ງພຽງ ຫຼາຍຂຶ້ນກວ່າເກົ່າ ຄວາມຕ້ອງການ ແລະ ຄວາມຈຳເປັນທາງດ້ານເສດຖະກິດ ເພື່ອປັບປຸງມາດຕະການໃນການປ້ອງກັນໄພນ້ຳຖ້ວມ ກໍອາດເພີ້ມຂຶ້ນ ເຊັ່ນດຽວກັນ. ເພາະສະນັ້ນ ປ່າໄມ້ໃນເຂດອ່າງໂຕ່ງ ແມ່ນຈຳເປັນຈະຕ້ອງ ໄດ້ສະຫງວນ ເພື່ອການປ້ອງກັນ ແລະ ອະນຸລັກແຫຼ່ງນ້ຳ.

- **ຄວາມຕອ້ງການ ໃນການປ້ອງກັນຊີວະນາໆພັນ ເພີ້ມຂຶ້ນ.** ໃນເມື່ອການພັດທະນາຂະຫຍາຍຕົວຂຶ້ນ, ເສັ້ນທາງໄປສູ່ ຫຼື ຜ່ານປ່າໄມ້ ຖືກສ້າງຂຶ້ນ, ທີ່ດິນປ່າໄມ້ໄດ້ຖືກປ່ຽນແປງໄປສູ່ການນຳໃຊ້ປະເພດອື່ນ ແລະ ຖິ່ນກຳເນີດທາງທຳມະຊາດຂອງພືດ ແລະ ສັດ ກໍໄດ້ຮັບການທຳລາຍຫຼາຍຂຶ້ນ. ເສດຖະກິດຂອງລາວ ຈະຕິດພັນກັບຕະຫຼາດໂລກ ແລະ ກ່ຽວພັນກັບສາກົນຫຼາຍຂຶ້ນ. ຕໍ່ກັບການພັດທະນາດັ່ງກ່າວ ຄວາມຈຳເປັນ ສຳລັບການປ້ອງກັນຊີວະນາໆພັນທີ່ອຸດົມສົມບູນຮັ່ງມີຂອງຊາດ ຈະເພີ້ມຂຶ້ນ ທັງທາງກົງ ເຊັ່ນ: ການທອ່ງທ່ຽວທຳມະຊາດ ແລະ ທາງອອ້ມ ເຊັ່ນ: ການລົງທຶນ ແລະ ສົ່ງເສີມການປອ້ງກັນຊີວະນາໆພັນ. ຄວາມຕອ້ງການດັ່ງກ່າວຈະເພີ້ມຂຶ້ນ ເມື່ອຄວາມປົກຫຸ້ມ ຂອງປ່າໄມ້ແຫ່ງຊາດຫຼຸດລົງ ແລະ ຄວາມຮັບຮູ້ຂອງສັງຄົມ ຕໍ່ກັບຄວາມສຳຄັນ ໃນການອະນຸລັກຊີວະນາໆພັນ ໄດ້ຮັບການຍົກສູງຂຶ້ນ.

ສັງລວມແລ້ວ, ຄວາມກົດດັນຕໍ່ປ່າໄມ້ຂອງລາວເຮົາ ແມ່ນເກີດມາຈາກຄວາມຂັດແຍ່ງ ຂອງຄວາມຕອ້ງການທີ່ແຕກຕ່າງກັນ ແລະ ການຂາດເຂີນແຫຼ່ງຊັບພະຍາກອນນັ້ນເອງ. ດ້ວຍເຫດນັ້ນ ເປົ້າໝາຍຂອງລັດຖະບານ ແລະ ບັນດາຜູ້ໃຫ້ທຶນ ຕອ້ງມີລະບົບທີ່ແທດເໝາະ ແລະ ມີປະສິດຕິພາບ ໃນການຄຸ້ມຄອງຊັບພະຍາກອນປ່າໄມ້ ໃຫ້ຍືນນານ ແລະ ໂດຍລວມແລ້ວ ແມ່ນໃນທົ່ວຂະແໜງປ່າໄມ້.

### 4.2.2. ທາງເລືອກ ສຳລັບການພັດທະນາປ່າໄມ້

**ຄວາມຈຳເປັນອັນຮີບດ່ວນ ແລະ ຄວາມຕອ້ງການ ໃນການພັດທະນາ.** ຄວາມຈຳເປັນອັນຮີບດ່ວນ ໃນການພັດທະນາ ມັນຮຽກຮອ້ງໃຫ້ຂະແໜງການ ມີການເຕີບໂຕຢູ່ໃນຈັງຫວະໄວ ແລະ ໃນກອບຂອງຄວາມຍືນນານ ຂອງຊັບພະຍາກອນ ເຊິ່ງແມ່ນທາງເລືອກໜຶ່ງ ແລະ ທາງເລືອກດຽວເທົ່ານັ້ນ. ຄວາມຮຽກຮອ້ງຕອ້ງການ ຂອງການພັດທະນາ ໃນຖານະທີ່ ສ.ປ.ປ.ລາວ ເປັນປະເທດດອ້ຍພັດທະນາປະເທດໜຶ່ງ ໃນໂລກ ແມ່ນຕອ້ງໄດ້ອີງໃສ່ຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນຊັບພະຍາກອນປ່າໄມ້ ໂດຍການຂຸດຄົ້ນ ຫຼືບໍ່ກໍຂຸດຄົ້ນໃນລະດັບຕ່ຳກວ່າຄວາມອາດສາມາດສະໜອງຂອງປ່າໄມ້. ແຕ່ເຖິງຢ່າງໃດກໍຕາມ, ຖ້າຫາກການຂຸດຄົ້ນໄມ້ນັ້ນ ຫາກເກີນຄວາມສາມາດສະໜອງຂອງປ່າໄມ້ (ຂຸດຄົ້ນໄມ້ບໍ່ຖືກຫຼັກວິຊາການ) ແລະ ການຫຼຸດໜອ້ຍຖອຍລົງຂອງເນື້ອທີ່ປ່າໄມ້ ຂອງປະເທດ, ອີງໃສ່ບົດຮຽນຜ່ານມາ ຂອງບັນດາປະເທດໃກ້ຄຽງ ແມ່ນເຫັນວ່າ ພວກເຮົາຈຳເປັນຕອ້ງຮັບປະກັນວ່າ ການຂຸດຄົ້ນໄມ້ຈາກປ່າທຳມະຊາດ ຕອ້ງມີປະສິດຕິຜົນ ແລະ ຍືນນານ ທັງທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລອ້ມ. ຄວາມຮັບຮູ້ ແລະ ຄວາມເປັນຫ່ວງເປັນໃຍຂອງລັດຖະບານ ກ່ຽວກັບບັນຫານີ້ ໄດ້ສະແດງອອກໃນຄວາມພະຍາຍາມ ໃນການປັບປຸງຂະແໜງປ່າໄມ້ ເພື່ອຜົນປະໂຫຍດລວມ ຂອງປະເທດຊາດ.

**ທາງດ້ານແຫຼ່ງຊັບພະຍາກອນ,** ເປັນການຮັບຮູ້ແຈ້ງແລ້ວວ່າ ໃນຊຸມປີຜ່ານມານັ້ນ ການຫັນປ່ຽນເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້ ແລະ ປ່າໄມ້ ທີ່ເປັນແຫຼ່ງກຳເນີດຕົ້ນຕໍຂອງໄມ້ ໄປຮັບໃຊ້ເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງຕ່າງໆ, ແມ່ນເປັນການສູນເສັຍຊັບພະຍາກອນຢ່າງວອ່ງໄວ ເຊັ່ນ: ການ ບຸກເບີກເນື້ອທີ່ ເພື່ອສ້າງເສັ້ນທາງໃຫຍ່ໆ ແລະ ໂຄງການກໍ່ສ້າງເຂື່ອນໄຟຟ້າ, ເຊິ່ງປະຈຸບັນບັນດາໂຄງການຕ່າງໆເຫຼົ່ານັ້ນ ກໍກຳລັງກ້າວເຂົ້າສູ່ຊ່ວງໄລຍະທ້າຍ ແລະ ໃກ້ຈະສຳເລັດລົງແລ້ວ. ໃນໄລຍະດຽວກັນນັ້ນ, ລັດຖະບານ ກໍບໍ່ອະນຸຍາດ ໃຫ້ມີການຂຸດຄົ້ນໄມ້ແບບຊະຊາຍ (ທີ່ຜິດກັບລະບຽບການ ແລະ ກົດໝາຍ) ໂດຍສະເພາະ ຢູ່ໃນເຂດປ່າສະຫງວນແຫ່ງຊາດ ແລະ ປ່າປ້ອງກັນ ຫຼື ໃນສະຖານທີ່ອື່ນໆອີກ. ດ້ວຍເຫດນັ້ນ ການຜະລິດໄມ້ ແລະ ເຄື່ອງປ່າຂອງດົງ ໃນອະນາຄົດ ຈະຕ້ອງມາຈາກປ່າປູກ ແລະ ເຂດປ່າຜະລິດແຫ່ງຊາດ ທີ່ໄດ້ສ້າງຕັ້ງຂຶ້ນຢ່າງຖືກຕອ້ງຕາມລະບຽບການ ແລະ ກົດໝາຍ ດັ່ງທີ່ໄດ້ກຳນົດໄວ້ ຢູ່ໃນ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 59/ນຍ ກ່ຽວກັບ ການຄຸ້ມຄອງປ່າຜະລິດແບບຍືນນານ.

ເພື່ອເປັນການຂະຫຍາຍແຫຼ່ງຊັບພະຍາກອນທຳມະຊາດ ໃຫ້ຫຼາຍຂຶ້ນ, ຜ່ານມາ ລັດຖະບານກໍໄດ້ມີຄວາມພະຍາຍາມ ໃນການກຳນົດນະໂຍບາຍ, ຂໍ້ແນະນຳຕ່າງໆ ເພື່ອແນໃສ່ຊຸກຍູ້ ສົ່ງເສີມ ໃຫ້ມີການຟື້ນຟູ ເນື້ອທີ່ປ່າໄມ້ທີ່ຊຸດໂຊມ. ໃນກົດໝາຍປ່າໄມ້, ດຳລັດ, ຄຳສັ່ງ ແລະ ຂໍ້ແນະນຳຕ່າງໆໃນການຈັດຕັ້ງປະຕິບັດ ແມ່ນໄດ້ວາງນະໂຍບາຍ ແລະ ວິທີການ ໃນການຊຸກຍູ້ ແລະ ສົ່ງເສີມໃຫ້ປະຊາຊົນ ໄດ້ມີສວ່ນຮ່ວມໃນການຟື້ນຟູປ່າ ຢ່າງແຂງແຮງ. ຍິ່ງໄປກວ່ານັ້ນ, ໃນເມື່ອລະດັບບໍລິມາດຂຸດຄົ້ນໄມ້ໃນແຕ່ລະປີຈາກປ່າຜະລິດ ຢູ່ໃນຂອບເຂດເພດານຂອງຄວາມສົມດູນແລ້ວ, ຄວາມພະຍາຍາມໃນການຂະຫຍາຍແຫຼ່ງຊັບພະຍາກອນ ກໍຍິ່ງເພີ່ມຂຶ້ນ. ດ້ວຍການສະໜັບສະໜູນ ຈາກທະນາຄານພັດທະນາອາຊີ ເພື່ອສ້າງສວນປູກໄມ້ແບບຍືນນານຢູ່ໃນຫຼາຍແຂວງ ແລະ ກໍຄາດຄະເນວ່າ ການພັດທະນາສວນປູກໄມ້ແບບຍືນນານ ຈະເປັນ ພື້ນຖານ ຫຼື ກະດູກສັນຫຼັງ ຂອງຂະແໜງປ່າໄມ້ ໃນປີ 2020.

**ໃນພາກຈັດຕັ້ງປະຕິບັດ,** ສ.ປ.ປ.ລາວ ໄດ້ຜ່ານການທົດລອງ ໂດຍລັດເປັນເຈົ້າຂອງ ແລະ ເປັນຜູ້ດຳເນີນງານ ໃນຮູບການລັດວິສາຫະກິດມາແລ້ວ, ແຕ່ຜົນໄດ້ຮັບເຫັນວ່າ ບໍ່ເປັນທີ່ໜ້າເພິ່ງພໍໃຈເທົ່າທີ່ຄວນ ບໍ່ວ່າທາງດ້ານການສ້າງລາຍຮັບ ກໍຄືທາງດ້ານການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະປະຊາຊົນຜູ້ທີ່ທຸກຍາກ. ຕໍ່ມາ ລັດຖະບານໄດ້ມອບຄວາມຮັບຜິດຊອບໃຫ້ທອ້ງຖິ່ນ ແລະ ມອບສິດໃຫ້ໜ່ວຍງານລັດ ເປັນຜູ້ນຳໜ້າ ໃນການຂຸດຄົ້ນ,

ອະນຸຍາດໃຫ້ແຂວງ ແລະ ເມືອງ ຈັດຕັ້ງກອງຂຸດຄົ້ນຂຶ້ນ. ເຖິງຢ່າງໃດກໍຕາມ ຮູບແບບການຈັດຕັ້ງນີ້ ກໍຍັງບໍ່ທັນມີປະສິດຕິຜົນເທົ່າທີ່ຄວນເທື່ອ.

ຈາກບົດຮຽນທີ່ຜ່ານມານັ້ນ, ລັດຖະບານ ໄດ້ເຫັນດີທາງດ້ານຫຼັກການ ກ່ຽວກັບການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຈາກປ່າຜະລິດ ດ້ວຍການນຳໃຊ້ລະບົບແຜນຄຸ້ມຄອງ-ຈັດສັນ ແລະ ແຜນການຂຸດຄົ້ນແບບວິທະຍາສາດ-ວິທະຍາການ ເຊິ່ງແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ແລະ ກົມປ່າໄມ້ ເປັນຜູ້ສ້າງຂຶ້ນ ແລະ ມອບໃຫ້ໜ່ວຍຄຸ້ມຄອງປ່າຜະລິດ ໂດຍສົມທົບກັບການຈັດຕັ້ງປ່າໄມ້ບ້ານ ເປັນຜູ້ຈັດຕັ້ງປະຕິບັດ (ໂດຍການເຂົ້າຮ່ວມຂອງປະຊາຊົນ). ສຳລັບການຂາຍຜະລິດຕະພົນນັ້ນ ແມ່ນຈະນຳໃຊ້ລະບົບການແຂ່ງຂັນລາຄາ ເພື່ອໃຫ້ພົນປະໂຫຍດສູງສຸດ ໂດຍແມ່ນກະຊວງການຄ້າ ເປັນຜູ້ດຳເນີນການ ແລະ ເປັນຜູ້ກຳນົດລາຄາພັນທະບົນພື້ນຖານການປັບຕົວຂອງລາຄາຕະຫຼາດ ທີ່ຈະຜັກດັນໃຫ້ຂະແໜງການຄ້າ ມີປະສິດຕິພາບສູງຂຶ້ນ.

ສຳລັບການປູກໄມ້ນັ້ນ ຜ່ານມາ ແມ່ນບໍລິສັດໃຫຍ່ ມີບົດບາດນຳໜ້າ ແລະ ຍັງຈະສືບຕໍ່ ໄປຄຽງຄູ່ກັບຊາວກະສິກອນ, ປະຊາຊົນບັນດາເຜົ່າ ເຊິ່ງແມ່ນກຸ່ມເປົ້າໝາຍບຸລິມະສິດ ຢູ່ໃນປະຈຸບັນ.

## 4.3. ຈຸດປະສົງ ຂອງຂະແໜງປ່າໄມ້

### 4.3.1. ວິໄສທັດ

ລັດຖະບານ ສ.ປ.ປ.ລາວ ຮັບຮູ້ເຖິງຄວາມເປັນໄປໄດ້ວ່າ ຮອດປີ 2020 ຂະແໜງປ່າໄມ້ ຈະເປັນຂະແໜງໜຶ່ງທີ່ໃຫຍ່ ແລະ ເຂັ້ມແຂງ, ສືບຕໍ່ ເປັນຂະແໜງ ທີ່ມີບົດບາດນຳໜ້າ ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ເປັນຂະແໜງໜຶ່ງ ທີ່ມີການຄຸ້ມຄອງປ່າຜະລິດທຳມະຊາດ ແບບວິທະຍາສາດ ທີ່ສາມາດ ຜະລິດໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ໃນລະດັບທີ່ໝັ້ນຄົງຍືນນານ, ໂດຍການມີສ່ວນຮ່ວມຂອງປະຊາຊົນ, ພາຍໃຕ້ການຄວບຄຸມດູແລ ແລະ ສະໜັບສະໜູນທາງດ້ານວິຊາການຈາກພະນັກງານທີ່ມີຄຸນນະພາບ, ມີຄວາມສາມາດ ທີ່ໄດ້ຜ່ານການຝຶກອົບຮົມ ຢ່າງເໝາະສົມ ຈາກໜ່ວຍງານຂອງລັດ ທັງຢູ່ໃນລະດັບສູນກາງ ແລະ ທ້ອງຖິ່ນ. ຄຽງຄູ່ກັບລະບົບການຄຸ້ມຄອງປ່າຜະລິດທຳມະຊາດແບບຍືນນານ, ເນື້ອທີ່ສວນປູກໄມ້ ທີ່ຊາວກະສິກອນ, ປະຊາຊົນ ແລະ ພາກສ່ວນເອກະຊົນ ລົງທຶນປູກຢ່າງກວ້າງຂວາງນັ້ນ ຈະສາມາດສະໜອງໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ແກ່ການປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໄດ້ຢ່າງພຽງພໍ.

**ເປັນຂະແໜງໜຶ່ງ** ທີ່ສຳຄັນ ແລະ ສາມາດຄຸ້ມຄອງຊັບພະຍາກອນປ່າໄມ້ ໄດ້ຢ່າງມີປະສິດຕິຜົນ ຊຶ່ງສາມາດສ້າງຜົນປະໂຫຍດອັນມະຫາສານ ໃຫ້ແກ່ສັງຄົມ ແລະ ເສດຖະກິດ ເປັນຕົ້ນແມ່ນ ການກະສິກຳ, ອຸດສາຫະກຳ, ການທ່ອງທ່ຽວທຳມະຊາດ, ພະລັງງານໄຟຟ້າ ແລະ ການຄົມມະນາຄົມ ໂດຍການສະໜອງນ້ຳ ຢ່າງພຽງພໍ, ໃຫ້ອາກາດທີ່ບໍລິສຸດ-ສົດຊື່ນ ແລະ ສະຖານທີ່ທ່ອງທ່ຽວ ແລະ ພັກຜ່ອນ ທີ່ສວຍງາມ ທັງຍັງສາມາດ ປ້ອງກັນດິນ ແລະ ນ້ຳ ຢູ່ບໍລິເວນຍອດນ້ຳອີກດ້ວຍ.

**ເປັນຂະແໜງໜຶ່ງ** ທີ່ສາມາດປົກປັກຮັກສາ ພັນພືດ ແລະ ສັດ ທີ່ອຸດົມສົມບູນ ຮັ່ງມີ ໂດຍສະເພາະ ຢູ່ພາຍໃນປ່າສະຫງວນແຫ່ງຊາດ ທີ່ໄດ້ຜ່ານການກຳນົດຂອບເຂດ ແລະ ຈັດສັນເປັນຢ່າງດີ ໂດຍການມີສ່ວນຮ່ວມຢ່າງຈິງຈັງ

ຂອງປະຊາຊົນ ທີ່ດຳລົງຊີວິດ ຢູ່ພາຍໃນ ຫຼື ອ້ອມຮອບປ່າສະຫງວນແຫ່ງຊາດ ຕາມຮູບແບບ ການປະສົມປະສານ ລະຫວ່າງ ການອະນຸລັກ ໄປຄຽງຄູ່ ກັບການພັດທະນາ.

**ເປັນຂະແໜງໜຶ່ງ** ທີ່ສ້າງຜົນປະໂຫຍດ ອັນສຳຄັນໃຫ້ແກ່ປະຊາຊົນຜູ້ທຸກຍາກ ທີ່ເຂົ້າຮ່ວມໃນການຄຸ້ມຄອງ ປ່າໄມ້, ຊຶ່ງແມ່ນແຮງງານຊົນນະບົດ ຫຼື ແມ່ນຄອບຄົວ ທີ່ນຳໃຊ້ເຄື່ອງປ່າຂອງດົງ; ເປັນການສ້າງລາຍຮັບຈາກການ ເກັບພາສີ ເປັນເອກະພາບ ປະກອບສ່ວນເຂົ້າໃນການພັດທະນາປະເທດ, ພ້ອມດຽວກັນນັ້ນ ກໍເປັນການສ້າງລາຍຮັບ ທາງດ້ານເງິນຕາຕ່າງປະເທດ ຈາກການສົ່ງຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ອອກຕ່າງປະເທດ.

**ເປັນຂະແໜງໜຶ່ງ** ທີ່ມີຄວາມສາມາດໃນການປຸງແຕ່ງໄມ້ ທີ່ມີຄຸນນະພາບ ແລະ ດຸ່ນດ່ຽງກັບປະລິມານການ ສະໜອງວັດຖຸດິບ ຈາກປ່າຜະລິດທຳມະຊາດ ແລະ ປ່າປູກໄດ້ຢ່າງຍືນນານ, ປະກອບດ້ວຍອຸປະກອນ ແລະ ກົນຈັກ ທີ່ທັນສະໄໝ, ມີບຸກຄະລະກອນ ທີ່ໄດ້ຜ່ານການຝຶກອົບຮົມຢ່າງດີ ສາມາດດຳເນີນການຜະລິດ, ຜະລິດຕະພັນ ທີ່ໄດ້ ອອກແບບ ຖືກກັບຄວາມນິຍົມຂອງຜູ້ຊົມໃຊ້ ແລະ ມີຄຸນນະພາບສູງ, ສາມາດແຂ່ງຂັນໄດ້ ທັງຢູ່ຕະຫຼາດພາຍໃນ ແລະ ຕະຫຼາດສາກົນ.

**ເປັນຂະແໜງໜຶ່ງ** ທີ່ລັດຖະບານ ສ້າງສະພາບແວດລ້ອມ ເອື້ອອຳນວຍທາງດ້ານກົດໝາຍ ແລະ ລະບຽບ ການ, ບົດແນະນຳທາງດ້ານວິຊາການ, ການລົງທຶນສ້າງພື້ນຖານ ແລະ ສະໜັບສະໜູນດ້ານການບໍລິການ ເຊັ່ນ: ດ້ານ ການຄົ້ນຄວ້າ, ການສົ່ງເສີມ ແລະ ການຝຶກອົບຮົມ; ອົງການປົກຄອງທ້ອງຖິ່ນ ໄດ້ຮັບການມອບໝາຍ ໃນການສ້າງແຜນງານ ແລະ ໂຄງການ ໂດຍອີງໃສ່ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງທ້ອງຖິ່ນ; ປະຊາຊົນດຳເນີນການ ຄຸ້ມຄອງຊັບພະຍາກອນ ທີ່ໄດ້ຮັບມອບໝາຍ ໃນຮູບແບບການມີສ່ວນຮ່ວມ ແລະ ພາກສ່ວນນັກລົງທຶນເອກະຊົນ ດຳເນີນບັນດາກິດຈະກຳດ້ານການຄ້າ ໂດຍສະເພາະ ແມ່ນການປູກ ແລະ ການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ຕາມກົນໄກຕະຫຼາດ.

**ເປັນຂະແໜງໜຶ່ງ** ທີ່ມີກອບນິຕິກຳ ແລະ ລະບຽບການທີ່ສົມບູນ ແລະ ຄົບຊຸດ ເພື່ອເປັນເຄື່ອງມື ແລະ ມີ ຄວາມສາມາດໃນການຈັດຕັ້ງປະຕິບັດຢ່າງມີປະສິດຕິພາບ ແລະ ມີປະສິດຕິຜົນ, ມີຄວາມສາມາດໃນການກວດກາ, ກວດການ ແລະ ການບັງຄັບໃຊ້ກົດໝາຍ ແລະ ລະບຽບການ ເພື່ອຄວບຄຸມທຸກໆກິດຈະກຳກ່ຽວກັບປ່າໄມ້ ທີ່ຜິດ ກົດໝາຍ ແລະ ລະບຽບການ.

**ເປັນຂະແໜງໜຶ່ງ** ທີ່ມີຄວາມອາດສາມາດ ໃນການສ້າງ ແລະ ຮັກສາພື້ນຖານທາງດ້ານເທັກໂນໂລຊີດ້ວຍຕົນ ເອງໄດ້ ໂດຍຜ່ານແຜນງານ ສຶກສາຄົ້ນຄວ້າ ແລະ ພັດທະນາ; ການເຜີຍແຜ່ໝາກຜົນຂອງການສຶກສາຄົ້ນຄວ້າ ຜ່ານສູນຝຶກທີ່ມີການຄຸ້ມຄອງເປັນຢ່າງດີ, ຊຶ່ງປະກອບດ້ວຍພະນັກງານເຕັກນິກວິຊາການ ແລະ ວິທະຍາສາດ ທີ່ມີຄຸນ ນະພາບສູງ, ປະກອບດ້ວຍອຸປະກອນ ແລະ ຂໍ້ສະດວກຢ່າງພຽງພໍ ແລະ ສາມາດ ຝຶກອົບຮົມ ໃຫ້ພະນັກງານວິຊາ ການ ແລະ ພະນັກງານວິຊາສະເພາະ ແລະ ຜູ້ປະກອບອາຊີບທີ່ກ່ຽວຂ້ອງ ຢູ່ພາຍໃນ ແລະ ດ້ວຍຮູບການຮ່ວມມືກັບ ບັນດາສະຖາບັນຄົ້ນຄວ້າ ແລະ ສູນຝຶກອົບຮົມຕ່າງປະເທດ.

**ເປັນຂະແໜງໜຶ່ງ** ທີ່ນຳໃຊ້ລະບົບແບບມີສ່ວນຮ່ວມ ເຂົ້າໃນການວາງແຜນ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູຊັບພະຍາກອນປ່າໄມ້ ໃນພື້ນທີ່ອັນກວ້າງຂວາງ ແລະ ນຳໃຊ້ລະບົບການຕິດຕາມ, ກວດກາ ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ທີ່ເໝາະສົມ ແລະ ມີປະສິດຕິຜົນສູງ.

***ເປັນຂະແໜງໜຶ່ງ*** ທີ່ໄດ້ຮັບ ການຮັບຮູ້ຂອງສາກົນ ບໍ່ວ່າທາງດ້ານເຕັກນິກ ວິຊາການ ກໍຄືຄຸນນະພາບການຜະລິດຂອງປ່າໄມ້ ຊຶ່ງມີການຢັ້ງຢືນຈາກສາກົນ, ປະຕິບັດງານຮ່ວມກັນ ໃນບັນຍາກາດອັນອົບອຸ່ນ ແລະ ແບບເພື່ອນມິດທີ່ຮັກແພງ ແລະ ໄດ້ຮັບການສະໜັບສະໜູນຈາກປະຊາຄົມໂລກ.

## 4.3.2. ຈຸດປະສົງ ແລະ ລະດັບຄາດໝາຍ

ລັດຖະບານໄດ້ກຳນົດ ເປົ້າໝາຍໃນການພັດທະນາແຫ່ງຊາດ ເຊິ່ງປະກອບມີ 2 ເປົ້າໝາຍຕົ້ນຕໍ ທີ່ຈະຕ້ອງບັນລຸໃຫ້ໄດ້ ໃນປີ 2020. ***ເປົ້າໝາຍທີໜຶ່ງ ແມ່ນ ເພື່ອຫຼຸດພົ້ນອອກຈາກສະພາບການເປັນປະເທດດ້ອຍພັດທະນາ; ເປົ້າໝາຍທີສອງ ແມ່ນເພື່ອລຶບລ້າງຄວາມທຸກຍາກ.*** ການພັດທະນາຂະແໜງປ່າໄມ້ ແລະ ການຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ແບບຍືນນານ ແມ່ນໜຶ່ງໃນອົງປະກອບທີ່ສຳຄັນ ເພື່ອບັນລຸເປົ້າໝາຍດັ່ງກ່າວ. ຍຸດທະສາດຂະຫຍາຍຕົວ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ຮັບຮູ້ຢ່າງຈະແຈ້ງ ກ່ຽວກັບບົດບາດອັນສຳຄັນ ຂອງການ ຄຸ້ມຄອງປ່າໄມ້ແບບຍືນນານ ເພື່ອລຶບລ້າງຄວາມທຸກຍາກ ໂດຍການຄຸ້ມຄອງປ່າໄມ້ບ້ານ ລວມທັງ ການປຸງແຕ່ງ ແລະ ຂາຍເຄື່ອງປ່າຂອງດົງ, ການອະນຸລັກດິນ-ນ້ຳ, ການປູກໄມ້ໃນເນື້ອທີ່ຂະໜາດນ້ອຍ, ການມີສ່ວນຮ່ວມ ໃນການຄຸ້ມຄອງປ່າຜະລິດ ແລະ ອື່ນໆ.

ຈຸດປະສົງລວມ ທີ່ມີການສະໜັບສະໜູນດ້ວຍນະໂຍບາຍປ່າໄມ້ ແລະ ລະບົບການຄຸ້ມຄອງປ່າໄມ້ ທີ່ໄດ້ມີການປັບປຸງນັ້ນ ແມ່ນການແກ້ໄຂຄວາມທຸກຍາກ. ປະຊາຊົນລາວສ່ວນໃຫຍ່ ແມ່ນດຳລົງຊີວິດ ໃນເຂດຊົນນະບົດ ຊຶ່ງອ້ອມຮອບໄປດ້ວຍປ່າໄມ້ ຫຼື ຢູ່ໃນປ່າໄມ້ (ຫຼື ເຂດທີ່ເຄີຍມີປ່າໄມ້). ປະຊາຊົນເຫຼົ່ານັ້ນ ສ່ວນໃຫຍ່ປະກອບດ້ວຍກຸ່ມຄົນທີ່ທຸກຍາກ ໃນນັ້ນ ລວມທັງບັນດາເຜົ່າຊົນຕ່າງໆ. ການດຳລົງຊີວິດປະຈຳວັນ ແລະ ການດຳເນີນກິດຈະກຳໃນການສ້າງລາຍຮັບ ຂອງເຂົາເຈົ້າສ່ວນໃຫຍ່ ແມ່ນຕິດພັນກັບການເກັບກູ້ຜະລິດຕະພັນປ່າໄມ້ ຊຶ່ງນອກຈາກເພື່ອນຳໃຊ້ພາຍໃນຄອບຄົວແລ້ວ ກໍແມ່ນເພື່ອຂາຍ. ສະນັ້ນ ຈຶ່ງເວົ້າໄດ້ວ່າ ປ່າໄມ້ ແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ໃນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ.

**ຈຸດປະສົງສະເພາະ ສຳລັບການພັດທະນາຂະແໜງປ່າໄມ້ ແມ່ນ:**

1) ສ້າງຄວາມເຂັ້ມແຂງ ຂອງບັນດາອົງການຈັດຕັ້ງຂອງລັດ ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງ ເພື່ອຮັບປະກັນວ່າຍຸດທະສາດປ່າໄມ້ ຈະສາມາດບັນລຸຄາດໝາຍໄດ້.
2) ຄວບຄຸມ ແລະ ແກ້ໄຂການກະທຳຕ່າງໆ ທີ່ຈະເຮັດໃຫ້ ຊັບພະຍາກອນປ່າໄມ້ ຫຼຸດນ້ອຍຖອຍລົງ ທັງທາງດ້ານປະລິມານ ແລະ ຄຸນນະພາບ, ພ້ອມດຽວກັນ ກໍເປັນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນຜູ້ທີ່ທຸກຍາກ ໃນເຂດຊົນນະບົດ ແລະ ຮັກສາໄວ້ ຊຶ່ງຄວາມປົກຫຸ້ມ ຂອງປ່າໄມ້.
3) ພັດທະນາ ແລະ ບັງຄັບໃຊ້ ກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບປ່າໄມ້.
4) ນຳເອົາການຜະລິດໄມ້ ຈາກປ່າຜະລິດ ເຂົ້າສູ່ການຄຸ້ມຄອງແບບຍືນນານ ໂດຍການຮ່ວມມືກັບປະຊາຊົນທ້ອງຖິ່ນ, ແລະ ສົ່ງເສີມການປູກໄມ້ເພື່ອເປັນສິນຄ້າ ໂດຍປະຊາຊົນ, ກຸ່ມຄົນ, ການຈັດຕັ້ງ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ, ສ່ວນລັດຈະສະໜອງດ້ານນະໂຍບາຍ, ອຳນວຍຄວາມສະດວກ ແລະ ສະໜອງທາງດ້ານເຕັກນິກວິຊາການ.
5) ສ້າງຄວາມສົມດູນ ລະຫວ່າງ ອຸດສາຫະກຳປຸງແຕ່ງໄມ້ ແລະ ບໍລິມາດໄມ້ ທີ່ອະນຸຍາດໃຫ້ຂຸດຄົ້ນປະຈຳປີ ທີ່ໄດ້ກຳນົດຕາມຫຼັກວິທະຍາສາດ ແລະ ສົ່ງເສີມຢ່າງແຂງແຮງການປຸງແຕ່ງເປັນຜະລິດຕະພັນສຳເລັດຮູບຢູ່ພາຍໃນ.

6) ປະກອບສ່ວນເຂົ້າໃນການ ອະນຸລັກ ລະບົບນິເວດປ່າໄມ້, ຖິ່ນອາໃສ ແລະ ບັນດາຊະນິດພັນພືດ ແລະ ສັດ ທີ່ໃກ້ຈະສູນພັນ.
7) ປ້ອງກັນດິນ, ແຫຼ່ງນ້ຳ, ສິ່ງແວດລ້ອມ ແລະ ຮັບປະກັນຄວາມໝັ້ນຄົງ ຂອງສິ່ງກໍ່ສ້າງພື້ນຖານໂຄງລ່າງທີ່ສຳຄັນຕ່າງໆ ດ້ວຍການອະນຸລັກປ່າໄມ້.
8) ນຳໃຊ້ລາຍຮັບຈາກປ່າໄມ້ ໃຫ້ເກີດປະໂຫຍດສູງສຸດ ໃນການພັດທະນາຂະແໜງການເສດຖະກິດອື່ນໆ ຕາມແຜນການພັດທະນາບຸລິມະສິດ ຂອງລັດຖະບານ ລວມທັງ ການປະກອບສ່ວນທາງອ້ອມ ເຂົ້າໃນການລຶບລ້າງຄວາມທຸກຍາກ.
9) ຮັບປະກັນ ການຄຸ້ມຄອງເຄື່ອງປ່າຂອງດົງ ແບບຍືນນານ ແລະ ການປະກອບສ່ວນຂອງເຄື່ອງປ່າຂອງດົງ ເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໃນເຂດຊົນນະບົດ.

**ລະດັບຄາດໝາຍຂອງຂະແໜງປ່າໄມ້ ທີ່ຕ້ອງໄດ້ບັນລຸ ເພື່ອປະກອບສ່ວນ ເຂົ້າໃນການລຶບລ້າງຄວາມທຸກຍາກ ແມ່ນ:**

1) ຍົກລະດັບຄວາມອຸດົມສົມບູນ ຂອງປ່າໄມ້ ທີ່ມີໃນປະຈຸບັນ ຂຶ້ນໃຫ້ໄດ້ 70% ດວ້ຍການ ຟື້ນຟູປ່າໄມ້ທີ່ເຊື່ອມໂຊມໃຫ້ໄດ້ 6.000.000 ເຮັກຕາ ແລະ ປູກໄມ້ໃຫ້ໄດ້ 500.000 ເຮັກຕາ, ຊຶ່ງຖືເປັນອົງປະກອບໜຶ່ງທີ່ສຳຄັນ ໃນການດຳລົງຊີວິດປະຈຳວັນ ຂອງປະຊາຊົນໃນເຂດຊົນນະບົດ ລວມທັງ ການສະໜອງ ຜະລິດຕະຜົນປ່າໄມ້ ແລະ ນ້ຳແບບຍືນນານ ແລະ ການປອ້ງກັນໄພພິບັດ ທາງທຳມະຊາດ.
2) ສະໜອງ ຜະລິດຕະຜົນປ່າໄມ້ ແບບຍືນນານ ເພື່ອການຊົມໃຊ້ພາຍໃນ ແລະ ເປັນການສ້າງລາຍຮັບ ຂອງຄອບຄົວ; ລາຍຮັບທີ່ໄດ້ຈາກຜະລິດຕະຜົນປ່າໄມ້ ແລະ ການສົ່ງຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງອອກຕ່າງປະເທດ ປະກອບສ່ວນໃນການສ້າງລາຍຮັບແຫ່ງຊາດ ແລະ ລາຍຮັບເປັນເງິນຕາຕ່າງປະເທດ, ທັງຍັງເປັນການເພີ້ມວຽກເຮັດງານທຳ ທັງ ທາງກົງ ແລະ ທາງອ້ອມອີກດ້ວຍ.
3) ອະນຸລັກ ຊະນິດພັນພືດ, ພັນສັດ ແລະ ຖິ່ນທີ່ຢູ່ອາໃສ ທີ່ເປັນເອກະລັກສະເພາະຂອງພືດ ແລະ ສັດ ທີ່ຖືກໄພຂົ່ມຂູ່ດ້ວຍຫຼາຍສາເຫດ ບໍ່ວ່າຢູ່ພາຍໃນປະເທດ ກໍຄືຢູ່ສະຖານທີ່ອື່ນໆ.
4) ປົກປັກຮັກສາສິ່ງແວດລອ້ມ; ປອ້ງກັນດິນ, ຮັກສາແຫຼ່ງນ້ຳ ແລະ ພູມອາກາດ.

ເພື່ອບັນລຸເປົ້າໝາຍ ໃນການຍົກລະດັບຄວາມອຸດົມສົມບູນຂອງປ່າໄມ້ ທີ່ມີຢູ່ໃນປະຈຸບັນ ໃຫ້ສູງຂຶ້ນ ກໍຄືເປົ້າໝາຍ ໃນການອະນຸລັກສິ່ງແວດລອ້ມ ແລະ ການສະໜອງຜະລິດຕະຜົນປ່າໄມ້ ຈາກປ່າ ທຳມະຊາດແບບຍືນນານນັ້ນ, ຈຳເປັນ ຈະຕອ້ງມີມາດຕະການ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູ ສະພາບປ່າໄມ້ ກໍຄືລະດັບ ຄວາມປົກຫຸ້ມຂອງປ່າໄມ້ ທີ່ມີຢູ່ໃນປະຈຸບັນ ໃຫ້ອຸດົມສົມບູນ ແລະ ໃຫ້ມີຄຸນນະພາບ ດີຂຶ້ນກວ່າເກົ່າ ໂດຍຜ່ານ ຂະບວນການຟື້ນຟູປ່າແບບທຳມະຊາດ ແລະ ການປູກປ່າ. ການຟື້ນຟູປ່າໄມ້ ໃນເຂດ ພື້ນທີ່ປ່າໄມ້ ທີ່ເຊື່ອມໂຊມ ໃນເນື້ອທີ່ ປະມານ 6 ລ້ານເຮັກຕາ ດັ່ງທີ່ກ່າວ ຂ້າງເທິງນັ້ນ ແມ່ນຖືເປັນ ວຽກງານໜຶ່ງ ທີ່ສຳຄັນ ແລະ ຮີບດ່ວນ. ເຖິງຢ່າງໃດກໍຕາມ ຕອ້ງເຂົ້າໃຈແຈ້ງວ່າ ພື້ນທີ່ສ່ວນໃຫຍ່ ໃນເຂດປ່າເຊື່ອມໂຊມ ແລະ ເຂດປ່າເລົ່າ ແມ່ນຖືກນຳໃຊ້ເຂົ້າໃນການເຮັດໄຮ່ໝູນວຽນຂອງປະຊາຊົນ, ສະນັ້ນ ການຟື້ນຟູປ່າໄມ້ ໃນເຂດພື້ນທີ່ດັ່ງກ່າວ ຈະສາມາດບັນລຸໄດ້ ກໍຕໍ່ເມື່ອຕອ້ງດຳເນີນໄປບົນພື້ນຖານ ການພັດທະນາແບບປະສົມປະສານ ໄປຄຽງຄູ່ ກັບ ການພັດທະນາດ້ານອື່ນໆ ເຊັ່ນ: ການສົ່ງເສີມການຜະລິດກະສິກຳ ແບບໝັ້ນຄົງ ຫຼື ການປູກພືດເປັນສິນຄ້າ ໃນລະດັບຄອບຄົວ, ການຜະລິດກະສິກຳ-ປ່າໄມ້ແບບປະສົມປະສານ, ການພັດທະນາລະບົບ ທະນາຄານ-ສິນເຊື່ອ, ການຄ້າ-ການຕະຫຼາດ, ຂໍ້ມູນຂ່າວສານ ແລະ ການພັດທະນາພື້ນຖານໂຄ່ງລ່າງອື່ນໆ.

# 5. ນະໂຍບາຍ, ແຜນງານ ແລະ ແຜນການດຳເນີນງານບຸລິມະສິດ

## 5.1. ທິດທາງນະໂຍບາຍ ແລະ ຫຼັກການ ໃນການຈັດຕັ້ງປະຕິບັດ

ລັດຖະບານ ຮັບຮູ້ວ່າ ການປະຕິບັດບັນດາເປົ້າໝາຍ ແລະ ຈຸດປະສົງຂອງນະໂຍບາຍປ່າໄມ້ ໃຫ້ບັນລຸຜົນສຳເລັດ ຫຼື ເປັນຮູບປະທຳນັ້ນ ແມ່ນຮຽກຮ້ອງໃຫ້ດຳເນີນການ ກັບສິ່ງທ້າທາຍອັນສຳຄັນ ຢູ່ໃນແຕ່ລະຂົງເຂດນະໂຍບາຍ. ໃນນັ້ນ ຮຽກຮ້ອງ ໃຫ້ສືບຕໍ່ຄວາມພະຍາຍາມ ຄື:

1) ກຳນົດນະໂຍບາຍແຫ່ງຊາດ ກ່ຽວກັບການນຳໃຊ້ທີ່ດິນ ແລະ ການວາງແຜນນຳໃຊ້ທີ່ດິນແບບຍືນນານ ໃນລະດັບມະຫາພາກ ແລະ ໃນລະດັບພາກສະໜາມ.
2) ປັບປຸງ ການຄຸ້ມຄອງຊັບພະຍາກອນທຳມະຊາດ ໃນຂັ້ນບ້ານ ແນໃສ່ເພື່ອລຶບລ້າງຄວາມທຸກຍາກ.
3) ນຳໃຊ້ຮູບແບບທີ່ມີລັກສະນະວິທະຍາສາດ ແລະ ສາມາດເຊື່ອຖືໄດ້ ເຂົ້າໃນການກຳນົດບໍລິມາດການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໃນປ່າຜະລິດທຳມະຊາດທີ່ຍືນນານ.
4) ຄວບຄຸມການຂຸດຄົ້ນ ແລະ ການສົ່ງໄມ້ ແລະ ເຄື່ອງປ່າຂອງດົງອອກຕ່າງປະເທດ ໃຫ້ເຂົ້າສູ່ລະບຽບຫຼັກການ ແລະ ລະບົບແບບຍືນນານ; ສົ່ງເສີມການປຸງແຕ່ງ ເຄື່ອງປ່າຂອງດົງ ໂດຍການມີສ່ວນຮ່ວມຂອງປະຊາຊົນ.
5) ປັງປຸງ ຄຸນນະພາບການຜະລິດ ຂອງອຸດສາຫະກຳປຸງແຕ່ງໄມ້ ດ້ວຍການນຳໃຊ້ມາດຕະການຕ່າງໆ ໃນນັ້ນ ລວມທັງ ການເຮັດໃຫ້ຄວາມຕອ້ງການໃນການປຸງແຕ່ງ ສົມດູນ ກັບຄວາມອາດສາມາດ ໃນການສະໜອງແບບຍືນນານຂອງປ່າໄມ້ ແລະ ເພີ່ມທະວີການປຸງແຕ່ງຜະລິດຕະພັນໄມ້ສຳເລັດຮູບ ໃຫ້ຫຼາຍຂຶ້ນ.
6) ສົ່ງເສີມການປູກໄມ້ ແລະ ການຄຸ້ມຄອງສວນປູກໄມ້ ໂດຍການກຳນົດບັນດາເປົ້າໝາຍ, ຜູ້ລົງທຶນ ແລະ ຕະຫຼາດ ໃຫ້ລະອຽດ ຈະແຈ້ງ, ພອ້ມດຽວກັນ ກໍພັດທະນາແຜນການລົງທຶນປູກໄມ້ ເພື່ອປັບປຸງພື້ນຖານໃຫ້ແກ່ການສະໜອງໄມ້ ແລະ ການສ້າງລາຍຮັບໃຫ້ແກ່ຊາວກະສິກອນ.
7) ສະກັດກັ້ນ ບັນດາການກະທຳ ຫຼື ກິດຈະການຕ່າງໆ ທີ່ເປັນການບຸກລຸກຊັບພະຍາກອນປ່າໄມ້ ເຊິ່ງເຮັດໃຫ້ຊີວະນາໆພັນເຊື່ອມໂຊມລົງ ໂດຍການບັງຄັບໃຊ້ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ, ກໍ່ສ້າງຄວາມສາມາດ ແລະ ການມີສ່ວນຮ່ວມຂອງປະຊາຊົນ ໃນການຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນປ່າໄມ້.
8) ກຳນົດເຂດເປົ້າໝາຍ ທີ່ຈະດຳເນີນການປິດປ່າທຳມະຊາດ, ໃນນີ້ລວມມີ ເຂດທີ່ຈະປິດປ່າແບບຖາວອນ ຄື: ເຂດຍຸດທະສາດປອ້ງກັນຊາດ ແລະ ເຂດທີ່ເປັນຕົ້ນນ້ຳລຳທານ ຫຼື ເຂດອ່າງໂຕ່ງ ແລະ ເຂດທີ່ຈະປິດປ່າແບບຊົ່ວຄາວ ຄື: ເຂດທີ່ມີການຖາງປ່າ ເຮັດໄຮ່ມາຫຼາຍປີແລ້ວ, ເຂດທີ່ຍັງບໍ່ທັນໄດ້ຈັດສັນແບບຍືນນານ ແລະ ເຂດທີ່ມີການຂຸດຄົ້ນໄມ້ຫຼາຍເກີນຄວາມສາມາດ ໃນການສະໜອງຂອງປ່າໄມ້.

ບັນດາຫຼັກການຕ່າງໆລຸ່ມນີ້ ແມ່ນຖືເປັນໜ້າທີ່ໃຈກາງຂອງການຄຸ້ມຄອງຂອງຂະແໜງການ ໃນການປະຕິບັດບັນດານະໂຍບາຍ ແລະ ແຜນງານຕ່າງໆດັ່ງທີ່ໄດ້ກຳນົດໄວ້:

1) ສ້າງໃຫ້ສຳເລັດ ແລະ ປັບປຸງ ນິຕິກຳກ່ຽວກັບການຄຸ້ມຄອງປ່າໄມ້, ກຳນົດຄວາມຮັບຜິດຊອບຂອງບັນດາພາກສ່ວນທີ່ກ່ຽວຂອ້ງ ຢ່າງຈະແຈ້ງ ແລະ ມີມາດຖານ ແລະ ມີຄວາມໂປ່ງໄສ ສຳລັບການຕັດສິນບັນຫາ.
2) ປັບປຸງ ປະສິດຕິພາບຂອງຂະແໜງການ ແລະ ສ້າງຄວາມເຂັ້ມແຂງ ໃນການແຂ່ງຂັນໃນລະດັບສາກົນ ໂດຍຜ່ານມາດຕະຖານທາງດ້ານການຕະຫຼາດ.
3) ເຮັດໃຫ້ສຳເລັດຂະບວນການກະຈາຍອຳນາດລົງສູ່ທອ້ງຖິ່ນ, ແບ່ງຄວາມຮັບຜິດຊອບໃຫ້ທອ້ງຖິ່ນ ຫຼື ລະບົບການວາງແຜນ ແລະ ການຈັດຕັ້ງປະຕິບັດ ແບບແຕ່ລຸ່ມຂຶ້ນເທິງຢ່າງຂາດຕົວ ແລະ ການເສີມສ້າງຄວາມເຂັ້ມແຂງ ໂດຍສະເພາະ ໃນລະດັບທອ້ງຖິ່ນ.

4) ເພີ້ມທະວີການສ້າງລາຍຮັບ ແລະ ການແບ່ງປັນຜົນປະໂຫຍດ ຢ່າງແທດເໝາະ ດ້ວຍການນໍາໃຊ້ ກົນໄກຊຸກຍູ້ການປະດິດສ້າງໃໝ່.
5) ຍາດແຍ່ງເອົາການຮ່ວມມືສາກົນຢ່າງມີປະສິດຕິຜົນ.

## 5.2. ແຜນງານ ແລະ ແຜນການດໍາເນີນງານ

### 5.2.1. ການນໍາໃຊ້ທີ່ດິນ ແລະ ປ່າໄມ້

#### 5.2.1.1. ການວາງແຜນການນໍາໃຊ້ທີ່ດິນ

- ກະກຽມນະໂຍບາຍ ກ່ຽວກັບການນໍາໃຊ້ທີ່ດິນແຫ່ງຊາດ.
- ນໍາໃຊ້ລະບົບການວາງແຜນການນໍາໃຊ້ທີ່ດິນ ໃນລະດັບມະຫາພາກ ແລະ ລະດັບພາກສະໜາມ.
- ດໍາເນີນການແບ່ງເຂດນໍາໃຊ້ທີ່ດິນ ໃນລະດັບມະຫາພາກ ເພື່ອກໍານົດປະເພດທີ່ດິນ ເຊັ່ນ: ທີ່ດິນປ່າໄມ້, ກະສິກໍາ, ອຸດສາຫະກໍາ, ວັດທະນະທໍາ ແລະ ທີ່ດິນນໍາໃຊ້ເພື່ອເປົ້າໝາຍອື່ນໆ ແນໃສ່ເພື່ອການຄຸ້ມຄອງ ແລະ ພັດທະນາການນໍາໃຊ້ທີ່ດິນແບບຍືນນານ.
- ແບ່ງເຂດການນໍາໃຊ້ທີ່ດິນປ່າໄມ້ແຕ່ລະປະເພດຢ່າງລະອຽດ ໃນລະດັບຊາດ, ແຂວງ, ເມືອງ ແລະ ບ້ານ.
- ສ້າງກົນໄກປະສານງານໃນການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນ ໃນລະດັບສູນກາງ ແລະ ທ້ອງຖິ່ນ.
- ດໍາເນີນການສໍາຫຼວດຄືນຄວາມເປັນໄປໄດ້ ເພື່ອກໍານົດເຂດເປົ້າໝາຍ ທີ່ຈະປິດປ່າທໍາມະຊາດ, ໃນນີ້ລວມທັງ ເຂດທີ່ຈະປິດປ່າແບບຖາວອນ ແລະ ປິດປ່າແບບຊົ່ວຄາວ.

#### 5.2.1.2. ສໍາເລັດການຮ່າງບັນດາລະບຽບການຕ່າງໆ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍປ່າໄມ້

- ກະກຽມ ແລະ ອອກລະບຽບການ ຂອງກະຊວງກະສິກໍາ ແລະ ປ່າໄມ້ ກ່ຽວກັບ ການຄຸ້ມຄອງ ປ່າປ້ອງກັນ ແລະ ປ່າຟື້ນຟູ.

#### 5.2.1.3. ກ່ຽວກັບປ່າໄມ້ບ້ານ

- ໃຫ້ຄວາມກະຈ່າງແຈ້ງ ນິຍາມ ແລະ ສະຖານະພາບທາງນິຕິກໍາ ຂອງປ່າໄມ້ບ້ານ (ປ່າຄຸ້ມຄອງ ແລະ ຊົມໃຊ້ຂອງບ້ານ) ຢູ່ໃນກົດໝາຍປ່າໄມ້.

#### 5.2.1.4. ກວດກາຕິດຕາມ ການປ່ຽນແປງການນໍາໃຊ້ທີ່ດິນ ແລະ ວິໄຈຫາສາເຫດ ການຫຼຸດລົງຂອງປ່າໄມ້

- ທົບທວນຄືນ ລະບົບການຈັດແບ່ງປະເພດການນໍາໃຊ້ທີ່ດິນ ທີ່ນໍາໃຊ້ໃນປະຈຸບັນ ສໍາລັບການສໍາຫຼວດການນໍາໃຊ້ທີ່ດິນ ແລະ ຄວາມປົກຫຸ້ມຂອງປ່າໄມ້.
- ສືບຕໍ່ຕິດຕາມກວດກາການປ່ຽນແປງການນໍາໃຊ້ທີ່ດິນ ແລະ ຄວາມປົກຫຸ້ມຂອງປ່າໄມ້, ລວມທັງຜົນກະທົບ ຂອງການປ່ຽນແປງດັ່ງກ່າວ ຕໍ່ກັບຊີວະນາໆພັນ ແລະ ລະດັບຄວາມທຸກຍາກ.
- ສ້າງດອນຕົວຢ່າງແບບຖາວອນ ແລະ ນໍາສະເໜີ ວິທີການ ທີ່ທັນສະໄໝກວ່າເກົ່າ ເພື່ອເອົາມານໍາໃຊ້ໃນການກວດກາຕິດຕາມ ສະພາບປ່າໄມ້ ແບບປົກກະຕິ.
- ສືບຕໍ່ ວິໄຈ ສາເຫດທີ່ສໍາຄັນ ຂອງການປ່ຽນແປງການນໍາໃຊ້ທີ່ດິນ ແລະ ຄວາມປົກຫຸ້ມຂອງປ່າໄມ້,
- ສ້າງຕັ້ງ ລະບົບເຊື່ອມປະສານ ລະຫວ່າງ ການຕິດຕາມກວດກາການນໍາໃຊ້ທີ່ດິນ ແລະ ການສ້າງນະໂຍບາຍກ່ຽວກັບ ການນໍາໃຊ້ທີ່ດິນ ແລະ ປ່າໄມ້.

### 5.2.2. ປ່າຜະລິດ

#### 5.2.2.1. ການຄຸ້ມຄອງປ່າຜະລິດ

<u>ດ້ານນິຕິກຳ</u>

- ກະກຽມ ແລະ ອອກຄຳສັ່ງ, ແຈ້ງການ ແລະ ບົດແນະນຳທາງດ້ານວິຊາການ ເພື່ອຈັດຕັ້ງປະຕິບັດ ດຳລັດນາຍົກລັດຖະມົນຕີ ເລກທີ 59/ນຍ.2002 ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ເຜີຍແຜ່ ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ ຜູ້ມີສ່ວນຮ່ວມທັງໝົດຮັບຮູ້ ແລະ ເຂົ້າໃຈ ໂດຍ ການພິມເຜີຍແຜ່ ແລະ ຈັດກອງປະຊຸມສຳມະນາ.

<u>ການກໍ່ສ້າງຄວາມສາມາດ</u>

- ເພີ່ມທະວີ ການຝຶກອົບຮົມ ໃຫ້ແກ່ພະນັກງານວິຊາການ ຂອງກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ກ່ຽວກັບການຈັດສັນປ່າຜະລິດ.
- ເຜີຍແຜ່ ແລະ ປຸກລະດົມ ປະຊາຊົນ ໃຫ້ເຂົ້າໃຈກ່ຽວກັບ ລະບຽບການຄຸ້ມຄອງປ່າໄມ້ ເພື່ອເຂົ້າຮ່ວມກັບພະນັກງານປ່າໄມ້ (ໜ່ວຍຄຸ້ມຄອງປ່າຜະລິດ) ໃນການສຳຫຼວດ ແລະ ວາງແຜນ ໃນລະດັບພາກສະໜາມ.

<u>ການບັງຄັບໃຊ້ ແລະ ການປະຕິບັດກົດໝາຍ</u>

- ຍົກສູງພາລະບົດບາດຂອງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການຈັດຕັ້ງປະຕິບັດບັນດາຄຳສັ່ງ ແລະ ລະບຽບການໃຫ້ເຂັ້ມງວດ, ຖ້າເປັນໄປໄດ້ ແມ່ນເພີ້ມ ຈຳນວນພະນັກງານ, ອຸປະກອນ ແລະ ງົບປະມານ ສຳລັບ ການດຳເນີນວຽກງານ ພາກສະໜາມ ໂດຍ ການນຳໃຊ້ງົບປະມານ ໃນຮ່ວງສວ່ນແບ່ງຈາກລາຍຮັບ ຂອງການຂາຍຜະລິດຕະພົນປ່າໄມ້.

#### 5.2.2.2. ການຢັ້ງຢືນປ່າຜະລິດ

- ວິເຄາະຜົນຂອງການທົດລອງຢັ້ງຢືນປ່າໄມ້ ໂດຍສະເພາະ ທາງດ້ານມູນຄ່າ ແລະ ຜົນປະໂຫຍດທີ່ຈະໄດ້ຮັບ ພາຍໃຕ້ ນະໂຍບາຍ ແລະ ເງື່ອນໄຂຕົວຈິງ ຂອງ ສປປລາວ.
- ພິຈາລະນາສືບຕໍ່ເຮັດການຢັ້ງຢືນປ່າໄມ້ ໃນເຂດປ່າຜະລິດທີ່ມີແຜນຈັດສັນແບບຍືນນານ.

#### 52.2.3. ການມີສ່ວນຮ່ວມຂອງບ້ານ ໃນການຄຸ້ມຄອງປ່າຜະລິດ

- ຮັບປະກັນ ການມີສ່ວນຮ່ວມຢ່າງເຕັມເມັດເຕັມໜ່ວຍຂອງປະຊາຊົນ ໃນການຄຸ້ມຄອງປ່າຜະລິດ ໂດຍຜ່ານ ການອະທິບາຍແຜນການຄຸ້ມຄອງໂຄງການ ແລະ ການທັດສະນະສຶກສາ ໃນເຂດຄຸ້ມຄອງ ທີ່ມີຢູ່ໃນປະຈຸບັນ.
- ເພີ່ມທະວີການມີສວ່ນຮ່ວມຂອງປະຊາຊົນ ໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳຂອງບ້ານ ແບບຍືນນານ ໂດຍຜ່ານລະບົບການວາງແຜນນຳໃຊ້ທີ່ດິນຂັ້ນບ້ານ ແລະ ການມອບດິນ-ມອບປ່າ.

5.2.2.4. **ການຄວບຄຸມ ການຂຸດຄົ້ນໄມ້ ຢູ່ນອກເຂດປ່າຜະລິດ**

- ປະກາດຢ່າງເປັນທາງການ ສໍາລັບສະຖານທີ່ ແລະ ບໍລິມາດໄມ້ ທີ່ອະນຸມັດໃຫ້ຂຸດຄົ້ນປະຈໍາປີ.
- ສ້າງຕັ້ງຕາໜ່າງການກວດກາການຂຸດຄົ້ນໄມ້ນອກເຂດປ່າຜະລິດ ຢ່າງເປັນປົກກະຕິ ໂດຍສະເພາະ ຢູ່ໃນເຂດປ່າສະຫງວນແຫ່ງຊາດ ແລະ ໃນເຂດປ່າອຸດົມສົມບູນທີ່ມີເນື້ອທີ່ນ້ອຍ ກະແຈກກະຈາຍ ໂດຍການຮ່ວມມືຂອງປະຊາຊົນ.

5.2.2.5. **ການຈັດສັນປ່າຜະລິດແບບປະສົມປະສານ**

- ສ້າງຕັ້ງປ່າຜະລິດແບບຍືນນານ ໃນຂອບເຂດທົ່ວປະເທດ.
- ສ້າງຕັ້ງກົນໄກການຈັດຕັ້ງທີ່ແທດເໝາະ ເພື່ອຄຸ້ມຄອງປ່າຜະລິດໃຫ້ມີປະສິດຕິຜົນ ໃນລະດັບແຂວງ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດຂອງນາຍົກລັດຖະມົນຕີ ເລກທີ 59/ນຍ.2002, ລະບຽບການຂອງກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0204/ກປ.2003 ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.
- ກໍານົດ ແລະ ສ້າງມາດຖານທາງດ້ານເຕັກນິກວິຊາການທີ່ຄົບຖ້ວນ ເພື່ອຄຸ້ມຄອງຈັດສັນປ່າຜະລິດ ດ້ວຍການນໍາໃຊ້ ລະບຽບຫຼັກການໃນການຂຸດຄົ້ນ, ການວາງແຜນປ່າໄມ້, ເຕັກນິກວິຊາການໃນການປູກໄມ້ ຟື້ນຟູປ່າ, ການຕັດສາງ, ການຄວບຄຸມ ແລະ ປ້ອງກັນສັດຕູພືດ ແລະ ບົ້ງແມງ, ການປຸງແຕ່ງ, ການພັດທະນາການຕະຫຼາດ ແລະ ການຂາຍ.
- ສະໜອງງົບປະມານຢ່າງພຽງພໍໃຫ້ແກ່ວຽກງານການຄຸ້ມຄອງ ຈັດສັນປ່າຜະລິດ.

## 5.2.3. ເຄື່ອງປ່າຂອງດົງ

### 5.2.3.1. ປັບປຸງ ເງື່ອນໄຂພື້ນຖານ ສໍາລັບການພັດທະນາເຄື່ອງປ່າຂອງດົງ

- ດໍາເນີນ ການສໍາຫຼວດ ແລະ ສຶກສາ ເບິ່ງທ່າແຮງ ແລະ ຄວາມສາມາດທີ່ເປັນໄປໄດ້ ເພື່ອເປັນບ່ອນອີງໃນການກໍານົດນະໂຍບາຍ ແລະ ແຜນງານ ຫຼື ໂຄງການ ສໍາລັບການພັດທະນາເຄື່ອງປ່າຂອງດົງ *(ເບິ່ງເອກະສານຕິດຄັດ ທີ 1)*

### 5.2.3.2. ປັບປຸງການຂຸດຄົ້ນ ແລະ ການຕະຫຼາດ ເພື່ອການພັດທະນາເຄື່ອງປ່າຂອງດົງ

- ຮັບປະກັນ ເຮັດໃຫ້ ແຜນການຂຸດຄົ້ນປະຈໍາປີ ສອດຄ່ອງກັບ ແຜນການຄຸ້ມຄອງປ່າໄມ້ ທີ່ໄດ້ຮັບການພັດທະນາຂຶ້ນ ໂດຍຜ່ານຂະບວນການວາງແຜນການນໍາໃຊ້ທີ່ດິນຂັ້ນບ້ານ.
- ຍົກສູງຄວາມໂປ່ງໃສ ແລະ ປະຕິບັດຕາມຫຼັກການ ແລະ ຂັ້ນຕອນຂອງການວາງແຜນການຂຸດຄົ້ນຢ່າງເຂັ້ມງວດໃນແຕ່ລະປີ.
- ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ໂດຍອີງໃສ່ຜົນການປະເມີນ ຄວາມອາດສາມາດຕົວຈິງໃນການສະໜອງຂອງຊັບພະຍາກອນທີ່ມີ ແລະ ບໍ່ໃຫ້ອີງໃສ່ແຕ່ຄວາມຕ້ອງການຂອງຕະຫຼາດດ້ານດຽວ. ການກໍານົດ ຕົວເລກຂຸດຄົ້ນ ຕ້ອງມີລັກສະນະຍືນນານ, ວິທະຍາສາດ ແລະ ບໍ່ເປັນໄພຂົ່ມຂູ່ ຕໍ່ພື້ນຖານຊັບພະຍາກອນປ່າໄມ້.
- ຍົກຄ່າພັນທະໃຫ້ສູງຂຶ້ນກວ່າເກົ່າ ສໍາລັບຜະລິດຕະພົນປ່າໄມ້ ທີ່ມີຜົນກະທົບຫຼາຍຈາກການຂຸດຄົ້ນເກີນຄວາມສາມາດ ຫຼື ຜະລິດຕະພົນໃດທີ່ເຫັນວ່າ ມີຈໍານວນຫຼຸດລົງ ຫຼື ຖືກໄພຂົ່ມຂູ່.
- ສົ່ງເສີມການປຸງແຕ່ງ ແລະ ການສົ່ງເຄື່ອງປ່າຂອງດົງ ອອກຕ່າງປະເທດ ໂດຍການກໍານົດລະບຽບການຊື້ຂາຍທີ່ເໝາະສົມ ແລະ ການສະໜອງດ້ານເຕັກນິກ ແລະ ການເງິນ.

#### 5.2.3.3. ການກໍ່ສ້າງຄວາມສາມາດ

<u>ການສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ</u>

- ປັບປຸງອຳນາດການປົກຄອງຂັ້ນບ້ານ ໃຫ້ມີຄວາມສາມາດ ໃນການຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນນານ ໂດຍສະເພາະ ແມ່ນ ເຄື່ອງປ່າຂອງດົງ.
- ປັບປຸງການປະສານງານໃຫ້ດີຂຶ້ນ ແລະ ກ້າວໄປສູ່ການພິຈາລະນາສ້າງຕັ້ງຄະນະຮັບຜິດຊອບຮ່າງຍຸດທະສາດສະເພາະເຄື່ອງປ່າຂອງດົງແບບມີສ່ວນຮ່ວມຫຼາຍຂຶ້ນ.

<u>ເພີ່ມທະວີ ການສຶກສາຄົ້ນຄວ້າ ແລະ ການສົ່ງເສີມ</u>

- ພັດທະນາກົນໄກ ກ່ຽວກັບການແລກປ່ຽນຂໍ້ມູນຂ່າວສານ ແລະ ການສະໜອງການບໍລິການ ທາງດ້ານວິຊາການ, ສັງຄົມ, ສິນເຊື່ອ ແລະ ການບໍລິການອື່ນໆທີ່ຈຳເປັນ ເພື່ອເຮັດໃຫ້ການຄົ້ນຄວ້າ ແລະ ສົ່ງເສີມດ້ານປ່າໄມ້ ຕິດພັນກັນ ແລະ ໄດ້ຮັບການຈັດຕັ້ງປະຕິບັດ.
- ສ້າງກົນໄກປະສານງານ ໃນການຄົ້ນຄວ້າ ລະຫວ່າງສູນຄົ້ນຄວ້າປ່າໄມ້ (ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້) ກັບອົງການຈັດຕັ້ງອື່ນໆ ລວມທັງ ສະຖາບັນຢາພື້ນເມືອງ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ຄະນະປ່າໄມ້ ແລະ ຄະນະວິທະຍາສາດ (ມະຫາວິທະຍາໄລແຫ່ງຊາດ), ອົງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ສະຫະພັນແມ່ຍິງລາວ.

### 5.2.4. ການພັດທະນາການປູກໄມ້

#### 5.2.4.1. ການສ້າງແຜນງານພັດທະນາການປູກໄມ້ແຫ່ງຊາດ

- ສ້າງແຜນງານພັດທະນາການປູກໄມ້ແຫ່ງຊາດ ທີ່ຄົບຖ້ວນ ສົມບູນ ນັບແຕ່ຂອດການເລືອກແນວພັນ, ການກ້າເບ້ຍໄມ້, ການຄຸ້ມຄອງສວນປູກ ແລະ ການປຸງແຕ່ງ ໂດຍກຳນົດໃຫ້ຈະແຈ້ງ ບັນດາກຸ່ມເປົ້າໝາຍ ແລະ ສິ່ງກະຕຸກຊຸກຍູ້.

#### 5.2.4.2. ການປັບປຸງປະສິດຕິພາບ ຂອງການປູກໄມ້

<u>ປັບປຸງເຕັກນິກ-ວິທະຍາການ ໃນການປູກໄມ້</u>

- ດຳເນີນການຄົ້ນຄວ້າ ແລະ ທົດສອບກ່ຽວກັບເຕັກນິກທີ່ຈະນຳໃຊ້ ຕໍ່ຊະນິດພັນໄມ້ (ລວມທັງແກ່ນໄມ້ ແລະ ວິທີການຜະລິດເບ້ຍໄມ້ ແລະ ການນຳໃຊ້ພັນໄມ້ພື້ນເມືອງ), ຄົ້ນຄວ້າ ທົດລອງ ກ່ຽວກັບຄວາມເໝາະສົມລະຫວ່າງຊະນິດໄມ້ ແລະ ສະຖານທີ່/ພື້ນທີ່ປູກ, ການເກັບກູ້, ວິທີການຕັດຢອນ/ຕັດສາງ, ລິກິ່ງ ແລະ ການຖາງຫຍ້າ, ການກະກຽມສະຖານທີ່ ແລະ ກະກຽມດິນ, ການໃສ່ຝຸ່ນ ແລະ ການຄຸ້ມຄອງບົວລະບັດຮັກສາພາຍຫຼັງການປູກ.
- ເຜີຍແຜ່ຜົນການຄົ້ນຄວ້າ ໄປສູ່ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຕະຫຼອດຮອດກຸ່ມເປົ້າໝາຍ ຜູ້ລົງທຶນປູກໄມ້ໃນອະນາຄົດ. ສິ່ງດັ່ງກ່າວ ຈະເປັນການຊ່ວຍຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການພັດທະນາຄວາມອາດສາມາດ ເພື່ອເຮັດສຳເລັດໜ້າທີ່ການເມືອງຂອງຕົນ.

- ສ້າງຄວາມຊຳນິຊຳນານ ໃນການເກັບແກ່ນໄມ້, ປູກຕົ້ນໄມ້ ໃນຈຳນວນທີ່ຖືກຕອ້ງ, ການຕັດສາງ ແລະ ລິກິ່ງ ເພື່ອປັບປຸງຄຸນນະພາບ ແລະ ຍົກລາຄາຂາຍໄມ້ ຂອງກຸ່ມຜູ້ລົງທຶນປູກໄມ້ ໃຫ້ສູງຂຶ້ນ ໂດຍສະເພາະແມ່ນເຈົ້າຂອງສວນປູກໄມ້ສັກ ຢູ່ພາກເໜືອ.

<u>ການຮັບປະກັນທາງດ້ານລາຄາ</u>

- ດຳເນີນການສຶກສາຄົ້ນຄວ້າ ເພື່ອຊອກຮູ້ຜົນກະທົບຈາກທ່າອ່ຽງຂອງຕະຫຼາດ ແລະ ວິທີການຄັດເລືອກຊະນິດພັນໄມ້ ແລະ ຊອກຮູ້ເງື່ອນໄຂ ໃນການຂາຍຜະລິດຕະພັນໄມ້ປູກ ໂດຍສະເພາະແມ່ນບັນຫາທີ່ກ່ຽວກັບຄຸນນະພາບ ໄດ້ຮັບການກຳນົດ ແລະ ກວດກາຄືແນວໃດ ແລະ ໃນເງື່ອນໄຂໃດ ທີ່ລາຄາຄວນເພີ່ມຂຶ້ນ ແລະ ຫຼຸດລົງ.
- ພັດທະນາ ແລະ ສົ່ງເສີມ ການນຳໃຊ້ເຕັກໂນໂລຢີ ເຂົ້າໃນການປຸງແຕ່ງໄມ້ທ່ອນຂະໜາດນອ້ຍຈາກສວນປູກ.

### 5.2.4.3. ການປັບປຸງ ກອບນິຕິກຳ ແລະ ລະບຽບການ

- ສ້າງຂັ້ນຕອນ ເພື່ອຮັບຮູ້ ສິດໃນການນຳໃຊ້ ທີ່ດິນ ແລະ ປ່າໄມ້ ຕາມປະເພນີ ຂອງປະຊາຊົນທ້ອງຖິ່ນ ຫຼື ຮູບແບບ ໃນການທົດແທນຄືນມູນຄ່າເສັຽຫາຍ ທີ່ເກີດຈາກການພັດທະນາສວນປູກໄມ້ເປັນສິນຄ້າ.
- ເຮັດໃຫ້ລະບຽບການ ກ່ຽວກັບທຸລະກິດໄມ້ປູກ ກະທັດຮັດ, ງ່າຍດາຍ ແລະ ສະດວກຂຶ້ນ ນັບແຕ່ຂອດການລົງທຶນປູກ, ການຂຸດຄົ້ນ, ຂົນສົ່ງ ແລະ ການສົ່ງໄມ້ປູກ ອອກຕ່າງປະເທດ.
- ສ້າງໃຫ້ເປັນລະບົບ-ຂັ້ນຕອນທີ່ກະທັດຮັດ ໃນການປ່ຽນແປງ ຈາກໃບຢັ້ງຢືນສິດນຳໃຊ້ທີ່ດິນຊົ່ວຄາວ ໄປເປັນ ການຮັບຮູ້ສິດນຳໃຊ້ທີ່ດິນຖາວອນ (ໃບຕາດິນ) ແນໃສ່ອຳນວຍຄວາມສະດວກ ໃຫ້ແກ່ ຊາວກະສິກອນ.
- ກະກຽມບັນດາປັດໃຈທີ່ຈຳເປັນ ເພື່ອຮອງຮັບການລົງທຶນປູກໄມ້ ໃນພື້ນທີ່ຂະໜາດໃຫຍ່ ຈາກນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ຊຶ່ງສ່ວນໜຶ່ງ ອາດແມ່ນການສະໜັບສະໜູນ ຈາກກົນໄກການພັດທະນາພື້ນທີ່ສີຂຽວ ເພື່ອຈຸດປະສົງຮັກສາສິ່ງແວດລອ້ມ ໄປຄຽງຄູ່ກັບການຊົມໃຊ້ຂອງປະຊາຊົນທອ້ງຖິ່ນ.

### 5.2.4.4. ການປັບປຸງທາງດ້ານງົບປະມານ ແລະ ນະໂຍບາຍກະຕຸກຊຸກຍູ້

- ສົ່ງເສີມການປູກໄມ້ແບບປະສົມປະສານ (ປູກປະສົມກັບພືດອຸດສາຫະກຳ) ໂດຍສະເພາະ ໃນລະດັບຄອບຄົວ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວຢ່າງເປັນປົກກະຕິຕໍ່ເນື່ອງ.
- ທົບທວນຄືນ ລະບົບເງິນທຶນກູ້ຢືມສຳລັບການປູກໄມ້ ທີ່ມີຢູ່ໃນປະຈຸບັນ ໂດຍສະເພາະ ສວນປູກໄມ້ຂະໜາດນອ້ຍຂອງປະຊາຊົນ, ຄວາມເປັນໄປໄດ້ທາງດ້ານການລົງທຶນ, ຄວາມຍືນນານ, ເຫດຜົນຂອງການໃຫ້ນະໂຍບາຍກະຕຸກຊຸກຍູ້ ນະໂຍບາຍຖົມຊຸມ ແລະ ອື່ນໆ.
- ຄົ້ນຄວ້າ ວິໃຈ ວິທີການ ແລະ ເຄື່ອງມື ເພື່ອສະໜັບສະໜູນ ການປູກໄມ້ຂອງປະຊາຊົນ ໂດຍການທົບທວນຄືນ ຮູບແບບການທົດລອງທີ່ກຳລັງດຳເນີນຢູ່ໃນປະຈຸບັນ ລວມທັງ ການປູກໄມ້ ໃນຮູບແບບການແບ່ງປັນຜົນປະໂຫຍດຮ່ວມກັນ.

### 5.2.4.5. ການພັດທະນາການຕະຫຼາດ

- ສະໜອງຂໍ້ມູນກ່ຽວກັບລາຄາໄມ້ ແລະ ຜະລິດຕະພັນໄມ້ ຢູ່ຕະຫຼາດພາຍໃນ ແລະ ຕະຫຼາດສາກົນ.

## 5.2.5. ແຜນການຂຸດຄົ້ນ ແລະ ຄ່າພັນທະ

### 5.2.5.1 ການສ້າງແຜນການຂຸດຄົ້ນແຫ່ງຊາດ ໃຫ້ເປັນໄປຕາມແຜນການຄຸ້ມຄອງ

- ຫັນປ່ຽນ ຈາກການກຳນົດ ແລະ ແບ່ງປັນ ແຜນການຂຸດຄົ້ນແຫ່ງຊາດ ໄປສູ່ ການສ້າງ ແລະ ກຳນົດ ແຜນການຂຸດຄົ້ນແຕ່ລຸ່ມຂຶ້ນເທິງ ຕາມແຜນການຄຸ້ມຄອງຈັດສັນປ່າໄມ້ ໃນເຂດປ່າຜະລິດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ.
- ແຈ້ງ ແຜນການຄຸ້ມຄອງປ່າຜະລິດ ແລະ ແຜນດຳເນີນງານ ໃຫ້ເຈົ້າຂອງໂຮງງານປຸງແຕ່ງໄມ້ຮັບຮູ້ ເພື່ອເປັນບ່ອນອີງ ໃນການສ້າງແຜນການລົງທຶນໄລຍະຍາວໄດ້ຢ່າງແທດເໝາະ.

### 5.2.5.2. ການກຳນົດຄ່າພັນທະ

- ປັບປຸງ ຮ່າງສູດຄິດໄລ່ ສຳລັບການກຳນົດ ຄ່າພັນທະ ເພື່ອສະທ້ອນໃຫ້ເຫັນ ລາຄາຂອງຕະຫຼາດສາກົນ.
- ສ້າງລະບົບການແບ່ງປັນຜົນປະໂຫຍດ ທີ່ຍຸຕິທຳ ແລະ ແຜນການໃນການໃຊ້ຈ່າຍທີ່ສົມເຫດສົມຜົນ ເພື່ອເຮັດໃຫ້ການກຳນົດຄ່າພັນທະມີປະສິດຕິຜົນ.

### 5.2.5.3. ການເກັບຄ່າພັນທະ

- ທົບທວນຄືນ ລະບົບ ແລະ ອັດຕາ ໃນການເກັບຄ່າພັນທະທີ່ນຳໃຊ້ຢູ່ໃນປະຈຸບັນ ລວມທັງ ພາສີອາກອນ ແລະ ຄ່າທຳນຽມອື່ນໆ ທີ່ ຕ້ອງຈ່າຍເຂົ້າ ຄັງເງິນແຫ່ງຊາດ ເພື່ອເຊີດຊູຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການເກັບລາຍຮັບ.

### 5.2.5.4. ການຂາຍໄມ້ທ່ອນ

- ສືບຕໍ່ ທົດລອງເຮັດການປະມູນ ໄປຄຽງຄູ່ກັບການປັບປຸງຄວາມອາດສາມາດທາງດ້ານການຈັດຕັ້ງ ແລະ ພະນັກງານ ເພື່ອນຳໄປຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

## 5.2.6. ອຸດສາຫະກຳການປຸງແຕ່ງໄມ້

### 5.2.6.1. ເຮັດໃຫ້ຂັ້ນຕອນໃນການຂໍອະນຸຍາດ ດຳເນີນໂຮງງານກະທັດຮັດ ແລະ ງ່າຍດາຍລົງ

- ກະຕຸກຊຸກຍູ້ ໃຫ້ມີການປຶກສາຫາລື ໃນບັນດາກະຊວງທີ່ກ່ຽວຂ້ອງຕ່າງໆ ເຊັ່ນ: ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ກະຊວງການເງິນ ແລະ ຄະນະຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອ ເຮັດໃຫ້ຂັ້ນຕອນໃນການບໍລິຫານ ຫຼື ຄຸ້ມຄອງ ສຳລັບ ການສ້າງຕັ້ງໂຮງງານປຸງແຕ່ງໄມ້ ແລະ ການດຳເນີນກິດຈະກຳຂອງເຂົາເຈົ້າ ມີຄວາມສະດວກ ແລະ ງ່າຍດາຍຂຶ້ນ.
- ເພີ່ມທະວີຄວາມໂປ່ງໃສ ໂດຍການກຳນົດມາດຖານ ແລະ ຄວາມຮັບຜິດຊອບ ກ່ຽວກັບການອະນຸມັດ (ອະນຸຍາດ) ດຳເນີນທຸລະກິດ, ອະນຸຍາດດຳເນີນກິດຈະການ ແລະ ອື່ນໆ.
- ດັດສົມໂຮງງານປຸງແຕ່ງໄມ້ທີ່ມີໃນປະຈຸບັນ ໃຫ້ສົມດູນກັບແຫຼ່ງວັດຖຸດິບທີ່ມີຢູ່ໃນປະຈຸບັນ ໄປພ້ອມໆກັບການປັບປຸງໂຮງງານປຸງແຕ່ງໄມ້ຈຳນວນໜຶ່ງ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

#### 5.2.6.2. ວິທີການທີ່ເໝາະສົມ ໃນການຫຼຸດຜ່ອນກຳລັງ (ເຄື່ອງຈັກ) ປຸງແຕ່ງໄມ້

- ກຳນົດມາດຖານລວມ ສຳລັບການຄັດເລືອກໂຮງງານ ເພື່ອສືບຕໍ່ດຳເນີນການຜະລິດ.
- ສ້າງເຂດທົດລອງ ສຳລັບການແຂ່ງຂັນ ຫຼື ປະມູນລາຄາຂາຍໄມ້ທ່ອນ ແລະ ປັບປຸງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ເພື່ອຜັນຂະຫຍາຍ ໃນຂອບເຂດທົ່ວປະເທດ.
- ປັບປຸງການບັງຄັບໃຊ້ກົດໝາຍ ແລະ ການບໍລິຫານທີ່ດີ ໃນການຂຸດຄົ້ນ ແລະ ການສະໜອງໄມ້ໃຫ້ໂຮງງານປຸງແຕ່ງໄມ້ ໄປພ້ອມໆກັບການປະຕິບັດມາດຕະການອັນເດັດຂາດ ໃນການຖອນໃບອະນຸຍາດດຳເນີນທຸລະກິດ ຂອງໂຮງງານປຸງແຕ່ງໄມ້ ທີ່ນຳເອົາໄມ້ທອ່ນເຂົ້າມາ ຈາກແຫຼ່ງທີ່ບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕອ້ງຕາມກົດໝາຍ.

#### 5.2.6.3. ການປັບປຸງ ສະມັດຕະພາບ ໃນການປຸງແຕ່ງໄມ້

- ເພີ້ມຄວາມເຂັ້ມງວດ ໃນການປະຕິບັດລະບຽບການ, ຫຼັກການ ແລະ ບົດແນະນຳທາງດ້ານວິຊາການກ່ຽວກັບການສຳຫຼວດໝາຍຕົ້ນຕັດ, ການຕັດປ້ຳ, ການຈັດຊັ້ນຄຸນນະພາບ ແລະ ສັນຍາການຊື້-ຂາຍໄມ້ທ່ອນ.
- ນຳໃຊ້ນະໂຍບາຍຫຼຸດຜ່ອນພາສີ (ຫຼຸດອັດຕາພາສີລົງ) ສຳລັບການຕິດຕັ້ງເຄື່ອງຈັກປຸງແຕ່ງໄມ້ ຂັ້ນສອງ ຫຼື ຂັ້ນສາມ ແລະ ໃຫ້ການຝຶກອົບຮົມທີ່ເໝາະສົມ.
- ພິຈາລະນາ ການພັດທະນາລະບົບເຄືອຄ່າຍ ສຳລັບວຽກງານປ່າໄມ້ ແລະ ການຄ້າໄມ້ ແນໃສ່ສົ່ງເສີມການຢັ້ງຢືນການຄຸ້ມຄອງປ່າໄມ້ ແລະ ສ້າງຜົນປະໂຫຍດສູງສຸດ ທາງດ້ານການຕະຫຼາດຜະລິດຕະພົນປ່າໄມ້ ທີ່ໄດ້ຜ່ານການຢັ້ງຢືນ.

#### 5.2.6.4. ສືບຕໍ່ສົ່ງເສີມ ການສົ່ງຜະລິດຕະພັນໄມ້ສຳເລັດຮູບ ທຸກຊະນິດ ແລະ ໄມ້ເຄິ່ງສຳເລັດຮູບ ບາງຊະນິດ ອອກຕ່າງປະເທດ

- ເຂັ້ມງວດ ໃນການປະຕິບັດ ຄຳສັ່ງຂອງລັດຖະບານ ວ່າດ້ວຍການຫ້າມສົ່ງໄມ້ທ່ອນ, ໄມ້ເລື່ອຍ ແລະ ໄມ້ເຄິ່ງສຳເລັດຮູບບາງຊະນິດ ອອກຕ່າງປະເທດ.
- ໂອນບັນດາຜະລິດຕະພັນໄມ້ທີ່ຍັງເຫຼືອ ຈາກ *ບັນຊີ ໂຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ (Temporary Exclusion List)* ມາເປັນ *ບັນຊີຫຼຸດຜ່ອນອັດຕາພາສີ (Inclusion List)* ແລະ ຫຼຸດຜ່ອນອັດຕາພາສີ ລົງມາ ຢູ່ພາຍໃຕ້ກອບຂອງ ຂົງເຂດການຄ້າເສລີອາຊຽນ ແນໃສ່ເພື່ອກະຕຸກຊຸກຍູ້ ແລະ ສົ່ງເສີມການສົ່ງອອກຕ່າງປະເທດ.
- ຜ່ອນຜັນຊົ່ວຄາວ ບັນດາຂໍ້ເກືອດຫ້າມ ແລະ ຂໍ້ຈຳກັດ ສຳລັບການລົງທຶນຕ່າງປະເທດ ໃນການປຸງແຕ່ງໄມ້ເຄິ່ງສຳເລັດຮູບ ທີ່ ນຳໃຊ້ໄມ້ທຳມະຊາດ ທີ່ໄດ້ຜ່ານຂະບວນການປຸງແຕ່ງຂັ້ນໜຶ່ງແລ້ວ.
- ນຳໃຊ້ນະໂຍບາຍຫຼຸດຜ່ອນພາສີ ສຳລັບການຕິດຕັ້ງ ເຕົາອົບໄມ້.
- ປັບປຸງ ແລະ ຍົກລະດັບຄວາມຊຳນິຊຳນານ ດ້ານການປຸງແຕ່ງໄມ້ຂອງນາຍຊ່າງ/ກຳມະກອນ ດ້ວຍການຈັດຕັ້ງ ການຝຶກອົບຮົມວິຊາຊີບໃຫ້ຢ່າງພຽງພໍ.
- ສົ່ງເສີມສີມືແຮງງານ ໃນການປຸງແຕ່ງໄມ້ຂະໜາດນອ້ຍ ແບບຫັດຖະກຳ ຄວັດລວດລາຍ, ຈັກສານໃນລະດັບ ຄອບຄົວ, ກຸ່ມຄອບຄົວ ຫຼື ລະດັບບ້ານ ເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນ.

### 5.2.7. ການອະນຸລັກຊີວະນາໆພັນ

#### 5.2.7.1. ການປັບປຸງ ກອບນິຕິກຳ ແລະ ລະບຽບການ

- ພິຈາລະນາ ການເຂົ້າຮ່ວມ ສົນທິສັນຍາສາກົນອື່ນໆ (ນອກຈາກ ສົນທິສັນຍາວ່າດ້ວຍຊີວະນາໆພັນ ແລະ ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນພືດ ແລະ ສັດ ທີ່ໃກ້ຈະສູນພັນ).
- ພິຈາລະນາການກະກຽມສ້າງກົດໝາຍອະນຸລັກຊີວະນາໆພັນ ໂດຍອີງໃສ່ ບັນດາລະບຽບການຕ່າງໆທີ່ມີໃນປະຈຸບັນ ກ່ຽວກັບປ່າສະຫງວນແຫ່ງຊາດ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.
- ປັບປຸງລະບຽບການ ກ່ຽວກັບການນຳໃຊ້ເຂດດິນທາມ ເພື່ອລ້ຽງປາ ແລະ ການທ່ອງທ່ຽວທຳມະຊາດ.
- ພັດທະນາ ບັນດາລະບຽບການ ແລະ ມາດຕະການໃນການຄວບຄຸມ ເພື່ອປົກປັກຮັກສາພູມປັນຍາທ້ອງຖິ່ນ ແລະ ການປ້ອງກັນລິຂະສິດກ່ຽວກັບຊັບສິນທາງປັນຍາ ເພື່ອຮັບປະກັນຜົນປະໂຫຍດຈາກການພັດທະນາຜະລິດຕະພັນຢາ ຫຼື ຜະລິດຕະພັນອື່ນໆ ທີ່ໄດ້ມາຈາກພັນພືດ ພາຍໃນປະເທດ ຊຶ່ງມີທ່າແຮງທາງດ້ານເສດຖະກິດໃນລະດັບຊາດ ແລະ ໃນລະດັບທ້ອງຖິ່ນ.

#### 5.2.7.2. ການປັບປຸງ ການຄຸ້ມຄອງ ແລະ ພັດທະນາປ່າສະຫງວນແຫ່ງຊາດ

- ທົບທວນຄືນ ລະບົບປ່າສະຫງວນແຫ່ງຊາດທີ່ມີຢູ່ໃນປະຈຸບັນ ເພື່ອໃຫ້ກວມເອົາຖິ່ນອາໄສທີ່ສຳຄັນສ່ວນໃຫຍ່ຂອງສັດປ່າ-ສັດນ້ຳ ແລະ ເພື່ອຍົກເລີກ ຫຼື ຕັດແຍກເຂດພື້ນທີ່ໆໄດ້ພັດທະນາແລ້ວອອກ.
- ກະກຽມແຜນພັດທະນາ ແລະ ຄຸ້ມຄອງປ່າສະຫງວນແຫ່ງຊາດ ໄລຍະຍາວ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງ ປະຊາຊົນທ້ອງຖິ່ນ.
- ຈັດສັນທຶນຮອນ ໃຫ້ແກ່ການຄຸ້ມຄອງປ່າສະຫງວນແຫ່ງຊາດ ໂດຍຜ່ານງົບປະມານແຫ່ງລັດ, ທຶນຈາກການດຳເນີນກິດຈະກຳຕ່າງໆທີ່ກໍ່ໃຫ້ເກີດລາຍຮັບ ແລະ ລາຍຮັບຈາກການປັບໄໝຕ່າງໆ.
- ພັດທະນາການທ່ອງທ່ຽວແບບອະນຸລັກທຳມະຊາດ ໂດຍຜ່ານ ການລົງທຶນເຂົ້າໃນບັນດາແຜນງານ ແລະ ໂຄງການຕ່າງໆ.
- ສະໜອງພະນັກງານທີ່ມີຄວາມສາມາດ ໃນການຄຸ້ມຄອງປ່າສະຫງວນ ພ້ອມທັງ ຈັດຫາອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ຈຳເປັນ (ເຊັ່ນ: ພາຫານະ, ຄອມພິວເຕີ, ຊຸດເຄື່ອງແບບ ແລະ ອື່ນໆ) ເພື່ອດຳເນີນການຄຸ້ມຄອງປ່າສະຫງວນແຫ່ງຊາດ ໃຫ້ມີປະສິດຕິຜົນສູງຂຶ້ນ.
- ເພີ້ມຈຳນວນພະນັກງານປ່າສະຫງວນແຫ່ງຊາດ ແລະ ບຳລຸງຍົກລະດັບຄວາມສາມາດຂອງເຂົາເຈົ້າ ໂດຍຜ່ານການຈັດຕັ້ງປະຕິບັດແຜນງານໄລຍະສັ້ນ ແລະ ໄລຍະຍາວ, ປະຕິບັດລະບົບການຍ້ອງຍໍ ຊົມເຊີຍ ກະຕຸກຊຸກຍູ້ ການປະຕິບັດໜ້າທີ່ຂອງເຂົາເຈົ້າ ພາຍໃຕ້ເງື່ອນໄຂການດຳລົງຊີວິດ ແລະ ການປະຕິບັດວຽກງານໃນເຂດທີ່ຫຍຸ້ງຍາກກັນດານ.
- ພິຈາລະນາ ໃນການພັດທະນາລະບຽບການ ຫຼື ບົດແນະນຳຕ່າງໆ ສຳລັບຜູ້ດຳເນີນງານກ່ຽວກັບການທ່ອງທ່ຽວ ໃນເຂດປ່າສະຫງວນແຫ່ງຊາດ ເພື່ອເປັນບ່ອນອີງພື້ນຖານ ໃຫ້ແກ່ການພັດທະນາຄວາມຮັບຜິດຊອບ ຂອງນັກທ່ອງທ່ຽວທຳມະຊາດ ທີ່ຈະນຳຜົນປະໂຫຍດ ມາສູ່ຊາວບ້ານ ແລະ ສິ່ງແວດລ້ອມ ໄປຄຽງຄູ່ກັບການສ້າງລາຍຮັບເຂົ້າປະເທດ.
- ກຳນົດເຂດອະນຸລັກແຫຼ່ງພັນທຸກຳ ແລະ ສ້າງລະບຽບການ ໃນການອະນຸລັກແຫຼ່ງພັນທຸກຳໄມ້ທຳມະຊາດໃນຂອບເຂດທົ່ວປະເທດ.

5.2.7.3. **ການຄວບຄຸມ ການຄ້າຂາຍສັດປ່າ-ສັດນ້ຳ**

- ນຳໃຊ້ລະບົບຂໍ້ມູນ-ຂ່າວສານທີ່ເກັບກຳໄດ້ ຈາກການສຶກສາໃນປະຈຸບັນກ່ຽວກັບການຄ້າຂາຍສັດປ່າ ໃນ ສ.ປ.ປ.ລາວ ເພື່ອກຳນົດ ແລະ ຈັດລຽງບູລິມະສິດແຜນດຳເນີນງານ ແນໃສ່ປັບປຸງລະບົບການກວດກາ ຄວບຄຸມ ການຄ້າຂາຍສັດປ່າ ແລະ ສັດນ້ຳ ທັງຢູ່ພາຍໃນ ແລະ ສາກົນ.
- ເພີ່ມທະວີ ການກວດກາລາດຕະເວນຕາມຊາຍແດນ ເພື່ອ ຄວບຄຸມການລັກລອບສົ່ງສັດປ່າ-ສັດນ້ຳ ໄປຍັງປະເທດໃກ້ຄຽງ ແລະ ປັບປຸງລະບົບການກວດກາຕິດຕາມເສັ້ນທາງຄ້າຂາຍ ແລະ ຂົນສົ່ງສັດປ່າອອກຈາກເຂດປ່າສະຫງວນແຫ່ງຊາດ.
- ນຳໃຊ້ ທ່າແຮງ ຫຼື ດ້ານຕັ້ງໜ້າ ຂອງການເຂົ້າຮ່ວມໃນສົນທິສັນຍາ CITES ເພື່ອຮ່ວມມືກັບຕ່າງປະເທດຢ່າງແຂງແຮງ ກ່ຽວກັບການກວດກາ ການຄ້າຂາຍສັດປ່າ-ສັດນ້ຳ ແລະ ພືດ ຕາມຊາຍແດນ.

5.2.7.4. **ຍົກສູງລະດັບການສຶກສາ ແລະ ຄວາມຮັບຮູ້ຂອງມວນຊົນ**

- ສຶກສາ ແລະ ຝຶກອົບຮົມ ໃຫ້ແກ່ພະນັກງານຂັ້ນສູນກາງ, ແຂວງ ແລະ ເມືອງ (ລວມທັງ ພະນັກງານການເງິນ ແລະ ພາສີ ຂອງກະຊວງການເງິນ) ກ່ຽວກັບການອະນຸລັກຊີວະນາໆພັນ ແລະ ການຄ້າຂາຍຊະນິດພັນພືດ ແລະ ສັດປ່າ-ສັດນ້ຳ.
- ສ້າງແຜນງານ ຫຼື ໂຄງການສົ່ງເສີມ ກ່ຽວກັບການນຳໃຊ້ຊະນິດພັນພືດ ແລະ ສັດປ່າ-ສັດນ້ຳ ແບບຍືນນານ ແລະ ການອະນຸລັກອື່ນໆ.
- ສຶກສາອົບຮົມ, ປຸກລະດົມ ແລະ ຂົນຂວາຍ ປະຊາຊົນ ໃຫ້ມີຈິດສຳນຶກ ແລະ ປ່ຽນແປງຮູບແບບ ໃນການນຳໃຊ້ຊັບພະຍາກອນປ່າໄມ້ ທີ່ອາດເປັນໄພຂົ່ມຂູ່ ຕໍ່ຊັບພະຍາກອນປ່າໄມ້ ຊຶ່ງກໍ່ໃຫ້ເກີດຜົນກະທົບທາງລົບ ຕໍ່ລະບົບຊີວະນາໆພັນ.
- ນຳສະເໜີ ແລະ ບັນຈຸ ຫົວຂໍ້ກ່ຽວກັບການອະນຸລັກຊີວະນາໆພັນ ເຂົ້າໃນຫຼັກສູດການສອນ ຂອງການສຶກສາລະບົບສາມັນ (ປະຖົມ ແລະ ມັດທະຍົມ).

5.2.7.5. **ການປັບປຸງ ການຄົ້ນຄວ້າ**

- ກະກຽມບັນດາໂຄງການສຶກສາຄົ້ນຄວ້າ ກ່ຽວກັບພັນພືດ, ສັດປ່າ-ສັດນ້ຳ ແລະ ຖິ່ນອາໃສ ທີ່ສຳຄັນ ແລະເປັນເອກະລັກ ຢູ່ພາຍໃນ ແລະ ນອກເຂດປ່າສະຫງວນແຫ່ງຊາດ.
- ຮ່ວມມືກັບມະຫາວິທະຍາໄລ ແລະ ສະຖາບັນຕ່າງປະເທດ ໃນການພັດທະນາ ຄວາມຮູ້ທາງດ້ານວິທະຍາສາດເຕັກໂນໂລຢີ ແລະ ໃຫ້ການຝຶກອົບຮົມລະດັບສູງ ໃຫ້ແກ່ນັກສຶກສາ ແລະ ພະນັກງານຂອງລັດ.
- ສ້າງ ແລະ ພັດທະນາຖານຂໍ້ມູນກ່ຽວກັບ ຊະນິດພັນພືດ ແລະ ສັດປ່າ-ສັດນ້ຳ ທີ່ຈະນຳໃຊ້ ເຂົ້າໃນການຄົ້ນຄວ້າວິທະຍາສາດ, ການກຳນົດນະໂຍບາຍການຄຸ້ມຄອງ.

## 5.2.8. ປ່າປ້ອງກັນ ແລະ ການຄຸ້ມຄອງຈັດສັນອ່າງໂຕ່ງ

- ສ້າງກົນໄກປະສານງານລະຫວ່າງຂະແໜງການ ເພື່ອຄຸ້ມຄອງຈັດສັນອ່າງໂຕ່ງ ໃຫ້ມີປະສິດທິຜົນ.
- ພັດທະນາ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດ ການຄຸ້ມຄອງຈັດສັນອ່າງໂຕ່ງແບບປະສົມປະສານຢູ່ໃນລະດັບທ້ອງຖິ່ນ (ພາກສະໜາມ).
- ພັດທະນາຮູບແບບກອງທຶນແບບປະດິດສ້າງ ເພື່ອສະໜອງໃຫ້ແກ່ ການດຳເນີນກິດຈະກຳການຄຸ້ມຄອງຈັດສັນອ່າງໂຕ່ງ.

- ຈັດລຽງບຸລິມະສິດ ບັນດາເຂດອ່າງໂຕ່ງທີ່ໄດ້ກຳນົດໃນຂອບເຂດທົ່ວປະເທດ ຊຶ່ງເຫັນວ່າມີຄວາມສຳຄັນ ແລະ ຈຳເປັນໃນການຄຸ້ມຄອງ ແລະ ປ້ອງກັນ ເພື່ອຮັບປະກັນການອະນຸລັກດິນ ແລະ ນ້ຳ ໂດຍຜ່ານ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນນານ.
- ສ້າງແຜນການ, ໂຄງການ ເພື່ອຟື້ນຟູປ່າໄມ້ແບບທຳມະຊາດເປັນຕົ້ນຕໍ ໂດຍການ ປະສົມປະສານ ກັບການປູກ ໃນເຂດພື້ນທີ່ອ່າງໂຕ່ງ ທີ່ຊຸດໂຊມ ໂດຍການມີສ່ວນຮ່ວມຂອງປະຊາຊົນ.

## 5.2.9. ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ

### 5.2.9.1. ກອບທາງດ້ານນິຕິກຳ

- ໃຫ້ຄວາມໝາຍ, ນິຍາມ ແລະ ສະຖານະພາບ ຂອງປ່າໄມ້ບ້ານ ທີ່ກຳນົດຢູ່ໃນກົດໝາຍປ່າໄມ້ ໃຫ້ຈະແຈ້ງ, ແລະ ກຳນົດມາດຕະການ ກ່ຽວກັບການປ່ຽນແປງການນຳໃຊ້ທີ່ດິນປ່າໄມ້ບ້ານ ໄປສູ່ເປົ້າ ໝາຍການນຳໃຊ້ອື່ນ ລວມທັງ ຂັ້ນຕອນ ແລະ ວິທີການ ໃນການຊົດເຊີຍ ມູນຄ່າເສັຽຫາຍ.

### 5.2.9.2. ການມອບດິນ-ມອບປ່າ

- ທົບທວນຄືນ ຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ຈາກການມອບດິນ-ມອບປ່າ ໂດຍສະເພາະ ແມ່ນການຜະລິດກະສິກຳ, ການເກັບກູ້ເຄື່ອງປ່າຂອງດົງ ແລະ ການນຳໃຊ້ຊັບພະຍາກອນອື່ນໆທີ່ມີຢູ່ໃນ ປະຈຸບັນ ເພື່ອປັບປຸງ ແລະ ຈັດຕັ້ງປະຕິບັດການມອບດິນ-ມອບປ່າ ຕາມສະພາບຕົວຈິງທາງດ້ານເສດຖະ ກິດ-ສັງຄົມ ຂອງບ້ານ.
- ໃຫ້ຄວາມກະຈ່າງແຈ້ງ ສະຖານະພາບທາງດ້ານກົດໝາຍ ຂອງ ໃບຢັ້ງຢືນການນຳໃຊ້ທີ່ດິນຊົ່ວຄາວ ທີ່ໄດ້ ອອກໃຫ້ປະຊາຊົນ ຫຼາຍກວ່າ 3 ປີ ໃນໄລຍະຜ່ານມາ.
- ພິຈາລະນາ ສ້າງລະບົບການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ບົນພື້ນຖານ ສະຖານະພາບ ທາງ ດ້ານກົດໝາຍ ກ່ຽວກັບທີ່ດິນ ແລະ ປ່າໄມ້ຂັ້ນບ້ານ.

### 5.2.9.3. ການຢຸດຕິການຖາງປ່າເຮັດໄຮ່

- ກຳນົດເຂດຈຸດສຸມ ໂດຍອີງໃສ່ຍຸດທະສາດຂະຫຍາຍຕົວ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ດຳເນີນ ການມອບດິນ-ມອບປ່າຄືນໃໝ່ ແລະ ຊຸກຍູ້ ສົ່ງເສີມໃຫ້ປະຊາຊົນສ້າງແຜນການນຳໃຊ້ທີ່ດິນຂັ້ນບ້ານ ໄລ ຍະຍາວ ບົນພື້ນຖານທ່າແຮງຂອງຊັບພະຍາກອນທຳມະຊາດທີ່ມີໃນປະຈຸບັນ.
- ສຶກສາ ຜົນກະທົບຕົວຈິງ ຂອງການຖາງປ່າເຮັດໄຮ່ ຕໍ່ກັບຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ.
- ພິຈາລະນາ ກຳນົດຈຳນວນຄອບຄົວເປົ້າໝາຍ ທີ່ຈະໄດ້ຮັບການຊ່ວຍເຫຼືອ ໃນການຮັບຮອງເອົາລະບົບ ການດຳລົງຊີວິດແບບໃໝ່ ທີ່ໄດ້ຮັບການປັບປຸງ ແທນການຖາງປ່າເຮັດໄຮ່.

### 5.2.9.4. ເພີ່ມທະວີການຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ເປັນສ່ວນໜຶ່ງຂອງການດຳລົງຊີວິດຢູ່ເຂດຊົນນະບົດ

- ສ້າງກອບທາງດ້ານກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ ໃຫ້ຈະແຈ້ງ ເຊິ່ງສາມາດເຮັດໃຫ້ການຄຸ້ມຄອງຊັບພະຍາກອນທຳມະຊາດ ຂັ້ນບ້ານ ມີປະສິດທິຜົນ ລວມ ທັງ ລະບົບການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມໃນຂັ້ນບ້ານ ທີ່ສະທ້ອນໃຫ້ເຫັນສະພາບການ ນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ.

- ຊ່ວຍເຫຼືອຊາວບ້ານ ໃນການສ້າງ ແຜນການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ບົນພື້ນຖານແຜນການນໍາໃຊ້ທີ່ດິນລວມ ໂດຍສຸມໃສ່ຮູບແບບການນໍາໃຊ້ຊັບພະຍາກອນທີ່ດິນ ແລະ ປ່າໄມ້ລວມຂອງບ້ານແບບຍືນນານ ແລະ ມີຜົນປະໂຫຍດຮ່ວມກັນຢ່າງສົມເຫດສົມຜົນ, ມີການບົວລະບັດ ຮັກສາ ແລະ ການຟື້ນຟູປ່າໄມ້ ໃນເຂດປອ້ງກັນແຫຼ່ງນໍ້າຂອງບ້ານ ແລະ ການສ້າງລາຍຮັບອື່ນໆ.
- ສ້າງລະບົບສົ່ງເສີມ ຕາມຄວາມຕອ້ງການຂອງປະຊາຊົນ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ບັນດາຊາວກະສິກອນ ຫຼື ຄອບຄົວຕົວແບບ ແລະ ອື່ນໆ.
- ຊ່ວຍເຫຼືອ ຊາວບ້ານ ໃນການສ້າງຕັ້ງກຸ່ມ ຫຼື ສະມາຄົມ ເພື່ອຄຸ້ມຄອງເຄື່ອງປ່າຂອງດົງ ຮ່ວມກັນ ລວມທັງ ການປູກ, ການນໍາໃຊ້, ການປຸງແຕ່ງ ແລະ ການຂາຍ.
- ສ້າງລະບົບການເງິນຈຸລະພາກ ເພື່ອຊ່ວຍເຫຼືອປະຊາຊົນ ໃນການລົງທຶນ ປູກພືດກະສິກໍາ, ປູກ, ຂຸດຄົ້ນ ແລະ ປຸງແຕ່ງເຄື່ອງປ່າຂອງດົງ, ການລ້ຽງສັດ ແລະ ອື່ນໆ.
- ພັດທະນາກົນໄກການຕະຫຼາດພາຍໃນ ແລະ ສາກົນ ເພື່ອສົ່ງເສີມການຂາຍຜະລິດຕະຜົນປ່າໄມ້ ແລະ ຜະລິດຕະພັນກະສິກໍາ.

## 5.3. ຂົງເຂດໃນການດໍາເນີນງານຮ່ວມກັນ ຂອງບັນດາຂະແໜງການທີ່ກ່ຽວຂອ້ງ

### 5.3.1. ຂັ້ນຕອນທາງດ້ານລະບຽບກົດໝາຍ ແລະ ການຈັດຕັ້ງປະຕິບັດ

ບັນດາກອບທາງດ້ານລະບຽບກົດໝາຍ ແລະ ຂໍ້ກໍານົດຕ່າງໆທີ່ສໍາຄັນ ສໍາລັບແຕ່ລະປະເພດປ່າໄມ້ ແລະ ບັນດາກິດຈະກໍາປ່າໄມ້ ແມ່ນໄດ້ລະບຸໄວ້ສະເພາະ ໃນພາກທີ 2 ແລະ ທີ 3. ບັນດາຂໍ້ສະເໜີລວມ ເພື່ອປັບປຸງ ແລະ ແກ້ໄຂ ແຕ່ລະລະບຽບການ ແລະ ກົດໝາຍ, ຂໍ້ກໍານົດສະເພາະ ສໍາລັບແຕ່ລະຂະແໜງການຍ່ອຍນັ້ນ ແມ່ນໄດ້ລະບຸລະອຽດ ໃນໝວດທີ່ຜ່ານມາຂອງພາກນີ້. ເພື່ອໃຫ້ມີລະບຽບການທີ່ຄົບຊຸດ ແລະ ເກາະກ່າຍກັນ ສໍາລັບຂະແໜງການໂດຍລວມ ແລະ ເພີ່ມໂອກາດ ໃນການຈັດຕັ້ງປະຕິບັດບັນດາລະບຽບການເຫຼົ່ານັ້ນໃຫ້ຖືກຕອ້ງ, ແຜນດໍາເນີນງານຂ້າງລຸ່ມນີ້ ເຫັນວ່າມີຄວາມຈໍາເປັນຕອ້ງໄດ້ເອົາໃຈໃສ່:

1) ປະສານສົມທົບກັບກະຊວງຍຸຕິທໍາ ເພື່ອກໍານົດເຄື່ອງມື ໃນການສົ່ງເສີມ ສໍາລັບລະບຽບກົດໝາຍທີ່ກ່ຽວຂອ້ງກັບປ່າໄມ້ ໃນຮູບແບບທີ່ເໝາະສົມ ສໍາລັບອົງການປົກຄອງທອ້ງຖິ່ນ ຫຼື ບ້ານ ນໍາເອົາໄປປັບປຸງໃນການຈັດຕັ້ງປະຕິບັດ ແລະ ຍົກສູງຄວາມຮັບຮູ້ຂອງປະຊາຊົນ.
2) ປັບປຸງການເຂົ້າເຖິງ ແລະ ການເຜີຍແຜ່ບັນດາກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ດ້ວຍການຈັດພິມສັງລວມເອົາລະບຽບການທັງໝົດ ທີ່ໄດ້ປະກາດໃຊ້ ແລະ ມີຜົນບັງຄັບໃຊ້ໄດ້ ຢູ່ໃນປະຈຸບັນ ແລະ ມີການກໍານົດອອກມາໃຊ້ແຕ່ລະໄລຍະ.
3) ແຈ້ງໃຫ້ມວນຊົນຮັບຮູ້ ຕໍ່ກັບ ບັນດາເອກະສານນິຕິກໍາປ່າໄມ້ ທີ່ໄດ້ຖືກຍົກເລີກໄປແລ້ວ ແລະ ບັນດານິຕິກໍາປ່າໄມ້ ທີ່ຍັງມີຜົນບັງຄັບໃຊ້ຢູ່.
4) ສືບຕໍ່ຮ່າງບັນດາຂໍ້ກໍານົດ, ລະບຽບການ ແລະ ບົດແນະນໍາຕ່າງໆ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍປ່າໄມ້.
5) ຝຶກອົບຮົມກ່ຽວກັບວິທີການຮ່າງລະບຽບການຕ່າງໆ ທີ່ກ່ຽວຂອ້ງກັບວຽກງານປ່າໄມ້ ແລະ ວິທີການຈັດຕັ້ງປະຕິບັດບັນດາລະບຽບການດັ່ງກ່າວ ໂດຍແນໃສ່ພະນັກງານພາຍໃນຫອ້ງການ ກະຊວງກະສິກໍາ ແລະ ປ່າໄມ້, ພະແນກວິຊາການ (ກົມປ່າໄມ້), ພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ຫອ້ງການກະສິກໍາ ແລະ ປ່າໄມ້ເມືອງ ໂດຍຕິດພັນກັບພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຂັ້ນ.

6) ສ້າງຕັ້ງຄະນະຮັບຜິດຊອບ ຫຼື ຄະນະດຳເນີນງານ ສຳລັບແຕ່ລະຂະແໜງຍ່ອຍ ໃນຂົງເຂດວຽກງານປ່າໄມ້ ເພື່ອໃຫ້ມີສ່ວນກ່ຽວພັນໃນການປຶກສາຫາລື ຫຼື ທີມງານທີ່ປະກອບດ້ວຍຫຼາຍພາກສ່ວນ ໃນການຮ່າງລະບຽບກົດໝາຍທີ່ສຳຄັນ ຮ່ວມກັນ.

### 5.3.2. ການປະຕິບັດລະບຽບກົດໝາຍ ແລະ ການບໍລິຫານທີ່ດີ

ບັນຫາສຳລັບການບັງຄັບໃຊ້ກົດໝາຍ, ການປະຕິບັດລະບຽບກົດໝາຍ ແລະ ການບໍລິຫານທີ່ດີ ສ່ວນໃຫຍ່ແມ່ນກ່ຽວພັນກັບການຂຸດຄົ້ນ, ເກັບກູ້ ແລະ ນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ. ເຖິງຢ່າງໃດກໍຕາມ, ຄຽງຄູ່ໄປກັບຄວາມພະຍາຍາມຂອງລັດຖະບານ ໃນການຄວບຄຸມການນຳໃຊ້ຊັບພະຍາກອນປ່າໄມ້ ກໍບໍ່ປາສະຈາກໄດ້ບັນຫາທີ່ເກີດຂຶ້ນ ເຊັ່ນ: ການເກັບກູ້, ຂຸດຄົ້ນ, ນຳໃຊ້ ແລະ ຄ້າຂາຍຜົນຜະລິດປ່າໄມ້ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຢູ່ໃນຫຼາຍລະດັບ.

ການປະຕິບັດລະບຽບກົດໝາຍທີ່ບໍ່ທັນເຂັ້ມງວດ ແລະ ຮັດກຸມພຽງພໍ ແມ່ນເປັນສາເຫດໜຶ່ງທີ່ນຳໄປສູ່ການຂຸດຄົ້ນຊະຊາຍ ເຖິງວ່າການຂຸດຄົ້ນຈະດຳເນີນຢູ່ໃນເຂດປ່າຜະລິດກໍຕາມ ແຕ່ກໍຍັງບໍ່ປະຕິບັດຕາມແຜນການຄຸ້ມຄອງທີ່ໄດ້ກຳນົດໄວ້; ຫຼືວ່າ ການຂຸດຄົ້ນເກີນແຜນການທີ່ໄດ້ອະນຸຍາດໃຫ້; ຂຸດຄົ້ນນອກເຂດທີ່ໄດ້ຮັບອະນຸຍາດ ຫຼື ນອກເຂດທີ່ໄດ້ກຳນົດໄວ້ໃນແຜນການຂຸດຄົ້ນ, ຂຸດຄົ້ນບໍ່ຖືກຕາມຂັ້ນຕອນເຕັກນິກວິຊາການ ເຊິ່ງລວມທັງ ເຄື່ອງປ່າຂອງດົງ. ເຊັ່ນດຽວກັນ, ການປະຕິບັດລະບຽບກົດໝາຍທີ່ບໍ່ທັນເຂັ້ມງວດ ແລະ ຮັດກຸມພຽງພໍນັ້ນ ແມ່ນເປັນສາເຫດໜຶ່ງທີ່ເຮັດໃຫ້ເກີດມີກໍລະນີການລັກລອບຕັດ, ຂຸດຄົ້ນ, ເກັບກູ້ໄມ້ ແລະ ເຄື່ອງປ່າຂອງດົງ ແຜ່ລາມເຂົ້າໄປໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ.

ຄຽງຄູ່ກັບບັນດາຂໍ້ສະເໜີສຳລັບການດຳເນີນງານ ຕໍ່ກັບແຕ່ລະບັນຫາ ດັ່ງທີ່ກ່າວມາຂ້າງເທິງນັ້ນ, ເພື່ອແນໃສ່ປັບປຸງຂອດໃນການບໍລິຫານທີ່ດີ ແລະ ການຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງກັບປ່າໄມ້ ໃຫ້ເຂັ້ມງວດຂຶ້ນຕື່ມນັ້ນ ບັນດາຂໍ້ສະເໜີຕ່າງໆລຸ່ມນີ້ ຄວນໄດ້ຮັບການເອົາໃຈໃສ່ ແລະ ພິຈາລະນາ:

1) ກຳນົດໃຫ້ຈະແຈ້ງ ແລະ ຊັດເຈນຕື່ມ ຂອບເຂດ ແລະ ຄວາມຮັບຜິດຊອບທີ່ຊ້ຳຊ້ອນກັນ, ກຳນົດຢ່າງຈະແຈ້ງ ທັງໃນພາກປະຕິບັດ ວ່າພາກສ່ວນໃດມີຄວາມຮັບຜິດຊອບອັນໃດ ແລະ ມີສິດອະນຸຍາດອັນໃດ ຢູ່ໃນລະດັບໃດ ແລະ ພາກສ່ວນໃດ ບໍ່ມີສິດ.
2) ພິຈາລະນາ ເພື່ອກຳນົດແຜນງານ ໃນການດຳເນີນວຽກງານຮ່ວມກັນຂອງບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງ ເຊິ່ງປະກອບມີ ປ່າໄມ້, ຕຳຫຼວດ, ການເງິນ ແລະ ພາກສ່ວນອື່ນໆ ເພື່ອດຳເນີນການກວດກາ ແລະ ສະກັດກັ້ນປະກົດການທີ່ຝ່າຝືນຕໍ່ລະບຽບກົດໝາຍກ່ຽວກັບການຂຸດຄົ້ນ ແລະ ຄ້າຂາຍໄມ້ ແລະ ເຄື່ອງປ່າຂອງດົງ.

### 5.3.3. ການສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ການພັດທະນາຊັບພະຍາກອນມະນຸດ

ການປັບປຸງບັນດາການຈັດຕັ້ງທີ່ກ່ຽວຂ້ອງ ແລະ ການພັດທະນາຊັບພະຍາກອນມະນຸດ ໃຫ້ນັບມື້ເຂັ້ມແຂງແມ່ນໜຶ່ງໃນເງື່ອນໄຂທີ່ຈຳເປັນອັນດັບທຳອິດ ໃນການຈັດຕັ້ງປະຕິບັດຕາມແຕ່ລະບັນຫາ ທີ່ໄດ້ພັດທະນາຢູ່ໃນຍຸດທະສາດສະບັບນີ້ ໃຫ້ປະສົບຜົນສຳເລັດ, ຊຶ່ງລວມມີ 2 ຂົງເຂດຕົ້ນຕໍໃນການປັບປຸງໃຫ້ເຂັ້ມແຂງ ຄື: 1) ຄວາມອາດສາມາດໃນການວິເຄາະ, ຄົ້ນຄວ້າ ສັງລວມຂະແໜງການ, ການກຳນົດນະໂຍບາຍ ແລະ ການກວດກາຕິດຕາມ ໃນລະດັບສູນກາງ, 2) ການຈັດຕັ້ງປະຕິບັດ ລວມທັງ ການຊຸກຍູ້ສົ່ງເສີມ ໃນລະດັບທ້ອງຖິ່ນ ຫຼື ພາກສະໜາມ. ຄຽງຄູ່ກັບຂໍ້ສະເໜີສະເພາະ ດັ່ງທີ່ໄດ້ກ່າວມາແລ້ວນັ້ນ ມີບາງຂໍ້ສະເໜີລວມເພີ້ມເຕີມ ຄືດັ່ງລຸ່ມນີ້:

ການກຳນົດນະໂຍບາຍ

1) ປັບປຸງລະບົບການເກັບກຳ, ສັງລວມ, ກັ່ນກອງ, ວິໃຈ, ເກັບຮັກສາ ແລະ ສະໜອງຂໍ້ມູນ ສະຖິຕິທີ່ຈຳເປັນ ແລະ ກ່ຽວຂ້ອງທັງໝົດ ທັງໃນລະດັບກະຊວງ ແລະ ລະດັບກົມ.
2) ກຳນົດໄລຍະເວລາ ສຳລັບການທົບທວນຄືນເປັນປະຈຳພາຍໃນຂະແໜງການ ໂດຍການນຳໃຊ້ຂໍ້ມູນ ຂ່າວສານ ທີ່ໄດ້ເກັບຮັກສາໄວ້ນັ້ນ ເພື່ອເປັນບ່ອນອີງ.
3) ປັບປຸງ ຍົກລະດັບຄວາມອາດສາມາດຂອງພະນັກງານ ກ່ຽວກັບການວິເຄາະ ແລະ ການຮ່າງນະໂຍບາຍ ໂດຍການເຂົ້າຮ່ວມໃນການຝຶກອົບຮົມ ແລະ ການສຶກສາຂັ້ນສູງ.

ການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນງານ

1) ຈັດຕັ້ງປະຕິບັດ ແຜນພັດທະນາຊັບພະຍາກອນມະນຸດ ຕາມແຜນຍຸດທະສາດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍການພິຈາລະນາຕາມຄວາມຕອ້ງການໃນການຝຶກອົບຮົມ ດັ່ງທີ່ໄດ້ສະເໜີໃນພາກທີ່ຜ່ານມາ.
2) ສະໜອງອຸປະກອນຮັບໃຊ້, ສິ່ງອຳນວຍຄວາມສະດວກ ແລະ ພາຫະນະທີ່ຈຳເປັນໃຫ້ແກ່ທອ້ງຖິ່ນ ເພື່ອປະຕິບັດໜ້າທີ່ໆໄດ້ກຳນົດໄວ້ໃນພາກທີ່ຜ່ານມາ ໂດຍການສະໜອງແຫຼ່ງທຶນໃໝ່ ບວກໃສ່ກັບທຶນທີ່ມີແລ້ວ.
3) ເອົາແຜນພັດທະນາຊັບພະຍາກອນມະນຸດ ທີ່ເປັນອັນລະອຽດນັ້ນ ໄປສອດທອ້ຍເຂົ້າໃນບັນດາໂຄງການຮ່ວມມືສາກົນຕ່າງໆ.

## 5.3.4. ການສຶກສາຄົ້ນຄວ້າ ແລະ ການສົ່ງເສີມ

ບັນດາຄວາມຕອ້ງການ ສຳລັບການສຶກສາຄົ້ນຄວ້າໃນແຕ່ລະດ້ານ ແມ່ນໄດ້ຖືກກຳນົດໃນພາກທີ່ຜ່ານມາ. ການກຳນົດຈຸດສຸມ ສຳລັບກິດຈະກຳໃນການສຶກສາຄົ້ນຄວ້າ ແລະ ການປະສານງານລະຫວ່າງສະຖາບັນຄົ້ນຄວ້າຕ່າງໆ ກັບ ສູນຄົ້ນຄວ້າປ່າໄມ້ ທີ່ຖືວ່າມີບົດບາດສຳຄັນເປັນໃຈກາງ ແລະ ກ່ຽວພັນກັບສະຖາບັນອື່ນໆ ເຊັ່ນ: ມະຫາວິທະຍາໄລແຫ່ງຊາດ, ບໍລິສັດເອກະຊົນ ແລະ ບັນດາໂຄງການຮ່ວມມືຕ່າງໆນັ້ນ ແມ່ນເປັນປັດໃຈທີ່ສຳຄັນຕົ້ນຕໍໃນບັນດາກິດຈະກຳສຶກສາຄົ້ນຄວ້າແບບມີປະສິດຕິຜົນ.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ໄດ້ຖືກສ້າງຕັ້ງຂຶ້ນໃນທ້າຍປີ 2001 ແລະ ພອ້ມດຽວກັນ ບັນດາກິດຈະກຳໃນການດຳເນີນງານຕ່າງໆ ຕະຫຼອດຮອດລະບົບການຈັດຕັ້ງໃນລະດັບທອ້ງຖິ່ນ ໄດ້ຮັບການຂະຫຍາຍຕົວຢ່າງວອ່ງໄວ. ເຖິງຢ່າງໃດກໍຕາມ ບັນດາກິດຈະກຳການສົ່ງເສີມ ເພື່ອສະໜອງຄວາມຕອ້ງການທາງດ້ານການຜະລິດກະສິກຳ ແລະ ການປູກໄມ້ຂອງປະຊາຊົນໃນລະດັບທອ້ງຖິ່ນ ໃນປະຈຸບັນ ເຫັນວ່າຍັງຢູ່ໃນບາດກ້າວເລີ່ມຕົ້ນຢູ່. ຄວາມອາດສາມາດຂອງພະນັກງານ ຕະຫຼອດຮອດລະບົບໃນການຈັດຕັ້ງປະຕິບັດ ຍັງມີຄວາມຈຳເປັນຈະຕອ້ງໄດ້ຮັບການປັບປຸງເປັນແຕ່ລະບາດກ້າວ.

ວຽກງານການຄົ້ນຄວ້າ

1) ສ້າງແຜນຍຸດທະສາດການຄົ້ນຄວ້າກ່ຽວກັບປ່າໄມ້ ແຕ່ນີ້ຫາປີ 2010 ແລະ 2020.
2) ສ້າງກົນໄກໃນການປະສານງານ ລະຫວ່າງສະຖາບັນຄົ້ນຄວ້າຕ່າງໆທີ່ກ່ຽວຂອ້ງ.
3) ຍົກລະດັບຄວາມອາດສາມາດ ໃຫ້ແກ່ນັກຄົ້ນຄວ້າ ໂດຍການເຂົ້າຮ່ວມຝຶກອົບຮົມ ແລະ ຜ່ານລະບົບການສຶກສາຂັ້ນສູງ.

**<u>ວຽກງານສົ່ງເສີມ</u>**:

1) ກຳນົດພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງກອງສົ່ງເສີມກະສິກຳ ແລະ ປ່າໄມ້ ໃນລະດັບທ້ອງຖິ່ນ ໃຫ້ຈະແຈ້ງຂຶ້ນຕື່ມ.
2) ຝຶກອົບຮົມໃຫ້ແກ່ພະນັກງານສົ່ງເສີມ ຫຼື ນັກສົ່ງເສີມ ຢູ່ໃນລະດັບທ້ອງຖິ່ນ ກ່ຽວກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າທີ່ຖືກມອບໝາຍ ຕະຫຼອດຮອດວິທີການ ໃນການສົ່ງເສີມ ຕາມຄວາມຕ້ອງການຂອງປະຊາຊົນ, ຄວາມຮູ້ຄວາມສາມາດທາງດ້ານເຕັກນິກວິຊາການ ແລະ ການຕະຫຼາດ.
3) ສ້າງລະບົບການບໍລິການໆສົ່ງເສີມແບບມີປະສິດຕິຜົນ ໂດຍມີການເຂົ້າຮ່ວມຈາກທຸກພາກສ່ວນ ລວມທັງສະຖາບັນຄົ້ນຄວ້າ, ພາກສ່ວນເອກະຊົນ ແລະ ສ່ວນບຸກຄົນ.

## 5.3.5. ບົດບາດຍິງ-ຊາຍ

ການນຳໃຊ້ຊັບພະຍາກອນປ່າໄມ້ ແມ່ນມີຜົນກະທົບທີ່ສຳຄັນ ທາງດ້ານສະຫວັດດີການ ແລະ ການຢູ່ລອດຂອງປະຊາຊົນບັນດາເຜົ່າ ໃນເຂດຫ່າງໄກສອກຫຼີກ ແລະ ເຂດທີ່ມີສິ່ງແວດລ້ອມລໍ່ແຫຼມ ເຊັ່ນ: ເຂດທີ່ດິນຄ້ອຍຊັນໃນເຂດພູດອຍ, ເຂດຮ່ອມພູ ແລະ ເຂດຕ່ຳແຫ້ງແລ້ງ. ປ່າໄມ້ ຍັງສາມາດຊ່ວຍໃນການປ້ອງກັນດິນ ແລະ ຊັບພະຍາກອນນ້ຳ ດ້ວຍການປ້ອງກັນການເຊາະເຈື່ອນ, ການດັດສົມການສະໜອງນ້ຳຈືດ ແລະ ຫຼຸດຜ່ອນໄພຂົ່ມຂູ່ຈາກ ນ້ຳຖ້ວມ ແລະ ແຫ້ງແລ້ງ.

ທັງເພດຍິງ ແລະ ເພດຊາຍ ແມ່ນມີຄວາມແຕກຕ່າງກັນ ໃນການນຳໃຊ້ຊັບພະຍາກອນປ່າໄມ້, ຄວາມສາມາດໃນການຄວບຄຸມ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນ. ສະນັ້ນ ໃນການພັດທະນາປ່າໄມ້ ຄວນພິຈາລະນາຄຳນຶງເຖິງຄວາມຮັບຮູ້ ທີ່ແຕກຕ່າງກັນລະຫວ່າງເພດຍິງ-ຊາຍ ກ່ຽວກັບການຄຸ້ມຄອງ-ຈັດສັນປ່າໄມ້ແບບຍືນນານ, ເຊິ່ງລວມທັງ ການປັບປຸງພາກປະຕິບັດຕົວຈິງ ເຂົ້າໃນແຜນຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ແນໃສ່ເພື່ອຮັບໃຊ້ຜົນປະໂຫຍດຫຼາຍດ້ານ. ການບໍລິການດ້ານວຽກງານປ່າໄມ້ ຢູ່ ສ.ປ.ປ.ລາວເຮົາ ກໍຄືຢູ່ຫຼາຍປະເທດ ສ່ວນໃຫຍ່ ແມ່ນບໍ່ກ້ຳເກິ່ງກັນ ລະຫວ່າງ ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງເພດຍິງ ແລະ ເພດຊາຍ. ດ້ວຍເຫດນັ້ນ ຈຶ່ງມີຄວາມຈຳເປັນ ໃຫ້ມີສ່ວນຮ່ວມຂອງພະນັກງານປ່າໄມ້ ເພດຍິງຫຼາຍຂຶ້ນ.

ຜ່ານການນຳໃຊ້ປ່າໄມ້ຫຼາຍຮູບແບບທີ່ແຕກຕ່າງກັນຂອງເຂົາເຈົ້າ, ເພດຍິງ ແລະ ເພດຊາຍ ສາມາດສະສົມຄວາມຮັບຮູ້ທີ່ພິເສດ ແລະ ແຕກຕ່າງກັນກ່ຽວກັບປ່າໄມ້ ແລະ ພືດພັນ. ເພດຍິງ ມີບົດບາດເປັນຜູ້ດູແລ ແລະ ນຳໃຊ້ປ່າໄມ້ ຊຶ່ງບົດບາດດັ່ງກ່າວແມ່ນມີຄວາມສຳຄັນຢູ່ສະເໝີ ເພາະເຂົາເຈົ້າຈະເປັນຜູ້ປະຕິບັດທັງໝົດບັນດາກິດຈະກຳປະຈຳວັນທີ່ກ່ຽວພັນກັບປ່າໄມ້ ເຊັ່ນ: ການຫາຟືນ, ເກັບເຫັດ, ເກັບຜັກປ່າ, ຫາໜໍ່ໄມ້, ຫາເຜືອກ/ມັນ ແລະ ອື່ນໆ ເພື່ອເປັນອາຫານປະຈຳວັນທີ່ສຳຄັນໃຫ້ແກ່ຄອບຄົວ ແລະ ເປັນອາຫານສັດ. ເພດຊາຍ ມີບົດບາດເປັນຜູ້ນຳໃຊ້ຊັບພະຍາກອນປ່າໄມ້ ເຊິ່ງລວມມີບັນດາກິດຈະກຳໃຫຍ່ໆ ຄື: ການຂຸດຄົ້ນໄມ້, ຕັດໄມ້, ລ່າເນື້ອ, ຂຸດຄົ້ນວັດຖຸດິບເພື່ອຕອບສະໜອງຫັດຖະກຳ ແລະ ອຸດສາຫະກຳທ້ອງຖິ່ນຂະໜາດນ້ອຍ. ເພື່ອບັນລຸເປົ້າໝາຍດັ່ງກ່າວ ຄວນເອົາໃຈໃສ່:

1) ສົ່ງເສີມບົດບາດຍິງ-ຊາຍ ເຂົ້າຮ່ວມ ໃນທຸກກິດຈະກຳຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້.
2) ພັດທະນາວິທີການປູກຈິດສຳນຶກບົດບາດຍິງ-ຊາຍ, ບົດແນະນຳທາງດ້ານເຕັກນິກວິຊາການ ແລະ ການປະຕິບັດຕົວຈິງໃນການຄຸ້ມຄອງຊັບພະຍາກອນປ່າໄມ້.

3) ດຳເນີນການສຶກສາຄົ້ນຄວ້າ ບັນດາຜົນກະທົບດ້ານເສດຖະກິດ-ສັງຄົມ ຂອງໂຄງການປ່າໄມ້ ຕໍ່ບົດບາດຍິງ-ຊາຍ.
4) ຮັບປະກັນຄວາມສະເໝີພາບ ທາງດ້ານໜ້າທີ່ຄວາມຮັບຜິດຊອບ ຂອງເພດຍິງ ແລະ ເພດຊາຍ ໃນການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້ (ການສຶກສາ, ການສົ່ງເສີມ, ການຝຶກອົບຮົມ ແລະ ການຜະລິດ ຕະຫຼອດຮອດ ການບໍລິການດ້ານການເງິນ ແລະ ສິນເຊື່ອ).
5) ເພີ່ມທະວີຄວາມຮັບຜິດຊອບ ໃນການພັດທະນາຄູ່ມືຝຶກອົບຮົມ ກ່ຽວກັບບົດບາດຍິງ-ຊາຍ ແລະ ເຊື່ອມເຂົ້າໃນລະບົບການສຶກສາຂັ້ນຕ່າງໆ.
6) ສົ່ງເສີມ ໃຫ້ເພດຍິງເຂົ້າຮ່ວມ ໃນການກຳນົດນະໂຍບາຍ ຫຼື ການຕັດສິນບັນຫາ ຕາມເງື່ອນໄຂເໝາະສົມ ໃນທຸກໆລະດັບ ບົນພື້ນຖານ ຄວາມຮູ້ ຄວາມສາມາດທີ່ມີ.
7) ສົ່ງເສີມທຸກກິດຈະກຳ ທີ່ສາມາດສ້າງໃຫ້ມີລາຍຮັບຈາກບັນດາໂຄງການຕ່າງໆທີ່ກ່ຽວຂ້ອງກັບປ່າໄມ້ ເພື່ອປັບປຸງຊີວິດການເປັນຢູ່ຂອງເພດຍິງໃຫ້ດີຂຶ້ນ.

### 5.3.6. ງົບປະມານ ແລະ ການຈັດສັນງົບປະມານ

ຂະແໜງປ່າໄມ້ ມີແຫຼ່ງງົບປະມານຢູ່ຫຼາຍແຫຼ່ງ ລວມທັງ ງົບປະມານຂອງລັດຖະບານ, ການລົງທຶນຂອງພາກສ່ວນເອກະຊົນ, ທຶນຊ່ວຍເຫຼືອລ້າ ແລະ ບັນດາໂຄງການທຶນກູ້ຢືມ. ສຳລັບງົບປະມານຂອງລັດຖະບານ ທີ່ສະໜອງໃຫ້ແກ່ຂະແໜງປ່າໄມ້ ແມ່ນຜ່ານງົບປະມານ 2 ປະເພດ ຄື: ງົບປະມານລວມ ແລະ ງົບປະມານສະເພາະ. ໃນປະຈຸບັນ ເຫັນວ່າມີພຽງແຕ່ງົບປະມານສະເພາະ ທີ່ນຳໃຊ້ຢູ່ໃນຂະແໜງປ່າໄມ້ ເຊິ່ງແມ່ນລາຍຮັບຈາກຄ່າພັນທະການປູກໄມ້ທີ່ໄດ້ມາຈາກການເກັບນຳຜູ້ທີ່ໄດ້ຮັບອະນຸຍາດຂຸດຄົ້ນໄມ້ ຈາກປ່າທຳມະຊາດ. ການຄຸ້ມຄອງປ່າຜະລິດ ຈະເປັນສ່ວນໜຶ່ງ ໃນການສະໜອງງົບປະມານ ໃຫ້ແກ່ຂະແໜງປ່າໄມ້ ໂດຍຜ່ານການແບ່ງປັນລາຍຮັບ ຈາກການຂາຍໄມ້ອີງຕາມດຳລັດເລກທີ 59/ນຍ.

ກ່ຽວກັບການແບ່ງປັນງົບປະມານໃຫ້ແກ່ຂະແໜງປ່າໄມ້ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ບັນດາກິດຈະກຳລວມ ແມ່ນຖືກກຳນົດ ແລະ ຈັດສັນໃນແຕ່ລະໆດັບທີ່ແຕກຕ່າງກັນ. ໝາຍຄວາມວ່າ ບໍ່ມີການຊ່ວຍເຫຼືອ ແລະ ການສະໜອງງົບປະມານ ຈາກກະຊວງກະສິກຳ ແລະ ປ່າໄມ້ ເພື່ອສະໜອງໃຫ້ແກ່ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫຼື ຈາກກົມປ່າໄມ້ ສະໜອງໃຫ້ແກ່ຂະແໜງປ່າໄມ້ແຂວງ ແລະໜ່ວຍງານປ່າໄມ້ເມືອງ. ສຳລັບຮ່ວງງົບປະມານສະເພາະ ລວມທັງ ງົບປະມານ ທີ່ໄດ້ຈາກການແບ່ງປັນລາຍຮັບ ຈາກການຂາຍໄມ້, ສ່ວນໃຫຍ່ ແມ່ນໄດ້ມາຈາກບັນດາແຂວງທີ່ມີທ່າແຮງໃນການຂຸດຄົ້ນໄມ້ ແລະ ກໍມີແຕ່ບັນດາແຂວງທີ່ມີລາຍຮັບດັ່ງກ່າວນັ້ນ ໄດ້ນຳໃຊ້ງົບປະມານດັ່ງກ່າວເປັນສ່ວນໃຫຍ່. ເມື່ອເປັນເຊັ່ນນັ້ນ ການແບ່ງປັນງົບປະມານສະເພາະດັ່ງກ່າວນັ້ນ ຈຳເປັນຕອ້ງໄດ້ທົບທວນຄືນໃນຈຸດຂອງຄວາມຕອ້ງການ ແລະ ຄວາມຈຳເປັນຕົວຈິງ ສຳລັບການປູກໄມ້, ການສຳຫຼວດປ່າໄມ້ ແລະ ການຄຸ້ມຄອງຈັດສັນປ່າຜະລິດ.

ບັນຫາອື່ນໆອີກເຊັ່ນ ການດຳເນີນກິດຈະກຳກ່ຽວກັບການອະນຸລັກ ໂດຍລວມແລ້ວ ແມ່ນນຳໃຊ້ງົບປະມານລວມຈຳນວນນ້ອຍບໍ່ພຽງພໍ ຫຼື ທຶນຊ່ວຍເຫຼືອຈາກສາກົນ. ງົບປະມານທີ່ນຳໃຊ້ເຂົ້າໃນການຄຸ້ມຄອງປ່າສະຫງວນ ແລະ ການປອ້ງກັນ ແລະ ອະນຸລັກສັດປ່າ-ສັດນ້ຳ ແມ່ນມີຄວາມຈຳເປັນຕອ້ງໄດ້ພິຈາລະນາຢ່າງຮີບດ່ວນ ເພື່ອແນໃສ່ຮັບປະກັນການຈັດຕັ້ງປະຕິບັດ ບັນດາຂໍ້ສະເໜີຕ່າງໆ ທີ່ໄດ້ກຳນົດໄວ້ໃນພາກທີ 5 ຂອງຍຸດທະສາດສະບັບນີ້. ບັນດາແຜນການດຳເນີນງານຕ່າງໆ ສຳລັບການແບ່ງປັນ ແລະ ການສະໜອງງົບປະມານແບບສະເໝີພາບ ປະກອບມີຄືດັ່ງລຸ່ມນີ້:

1) ທົບທວນຄືນ ການສະໜອງງົບປະມານລວມ ໃຫ້ແກ່ຂະແໜງປ່າໄມ້ ບົນພື້ນຖານການວິເຄາະ ຫຼື ພິຈາລະນາ ຄວາມດຸນດ່ຽງລະຫວ່າງ ການສ້າງລາຍຮັບເຂົ້າງົບປະມານ ຈາກຂະແໜງປ່າໄມ້ ແລະ ມູນຄ່າທີ່ຈຳເປັນທີ່ຈະຕອ້ງ ໄດ້ບູລະນະຮັກສາ ໃນລະບົບການຄຸ້ມຄອງທີ່ແທດເໝາະ ພາຍໃນຂະແໜງປ່າໄມ້ ໂດຍສະເພາະ ແມ່ນວຽກງານ ອະນຸລັກປ່າໄມ້ ເພື່ອເຮັດໃຫ້ຊັບພະຍາກອນປ່າໄມ້ ກໍຄືຊັບພະຍາກອນທຳມະຊາດ ຟື້ນຕົວຄືນສູ່ສະພາບເດີມ ແລະ ບໍ່ມີວັນບົກແຫ້ງ.
2) ທົບທວນຄືນ ການນຳໃຊ້ລາຍຮັບ ທີ່ໄດ້ຈາກຄ່າພັນທະປູກໄມ້ ແລະ ພິຈາລະນາຄວາມເປັນໄປໄດ້ ໃນການ ສະໜອງທຶນຮອນ ໃຫ້ແກ່ວຽກງານອະນຸລັກຊັບພະຍາກອນປ່າໄມ້.
3) ສ້າງກອງທຶນພັດທະນາປ່າໄມ້ ໂດຍໃຫ້ກົມກຽວກັບກອງທຶນອື່ນໆທີ່ກ່ຽວຂອ້ງ.
4) ທົບທວນຄືນ ການແບ່ງປັນງົບປະມານສະເພາະ ເພື່ອສະແດງໃຫ້ເຫັນຄວາມຕອ້ງການທີ່ຈຳເປັນຕົວຈິງ ຂອງແຂວງ.

### 5.3.7. ການຮ່ວມມືກັບສາກົນ

ໃນໄລຍະທົດສະວັດທີ່ຜ່ານມາ ມີຫຼາຍໆພາກສວ່ນ, ອົງການສາກົນ ແລະ ພາກພື້ນ ຕະຫຼອດຮອດອົງການທີ່ບໍ່ ແມ່ນຂອງລັດຖະບານ ໄດ້ມີສວ່ນຮ່ວມໃນການສະໜັບສະໜູນ ແລະ ປະກອບສວ່ນໃຫ້ແກ່ຂະແໜງປ່າໄມ້ຂອງ ສ.ປ.ປ.ລາວ. ດັ່ງທີ່ໄດ້ກ່າວມາແລ້ວ, ການສະໜອງການຊ່ວຍເຫຼືອຈາກສາກົນ ສວ່ນໃຫຍ່ ແມ່ນເປັນການປະກອບ ສວ່ນໃຫ້ແກ່ການຍົກລະດັບຄວາມສາມາດ ແລະ ການໃຊ້ຈ່າຍບອ່ນທີ່ເຫັນວ່າຂາດເຂີນ ແລະ ບໍ່ພຽງພໍເທົ່ານັ້ນ, ນອກ ເໜືອຈາກນັ້ນ ກໍແມ່ນໃນການປັບປຸງການສຶກສາ, ຂໍ້ມູນຂ່າວສານ ແລະ ການສະໜອງງົບປະມານໃຫ້ແກ່ບັນດາແຜນ ງານ ແລະ ໂຄງການຕ່າງໆ.

ການຊ່ວຍເຫຼືອຂອງສາກົນໃນອະນາຄົດ ຈຳເປັນຕອ້ງໄດ້ສະໜອງຕາມຄວາມຕອ້ງການຂອງບັນດາວຽກງານ ບຸລິມະສິດ ແລະ ຂໍ້ສະເໜີ ດັ່ງທີ່ໄດ້ກຳນົດໄວ້ ໃນຍຸດທະສາດສະບັບນີ້, ແນໃສ່ ເພື່ອເອກະພາບ ກັບບັນດາວຽກງານ ແລະ ຂໍ້ສະເໜີດັ່ງກ່າວ ກ່ຽວກັບການສະໜອງໃນແຕ່ລະດ້ານສະເພາະ ບົນພື້ນຖານ ນະໂຍບາຍພາຍໃນ ແລະ ການ ສົມທຽບປະສິດຕິຜົນ ໃນການຊ່ວຍເຫຼືອ ທັງທາງດ້ານງົບປະມານ ຕະຫຼອດຮອດພະນັກງານວິຊາການ ແລະ ການຝຶກ ອົບຮົມ, ແລະ ໃນຂະແໜງຍອ່ຍສະເພາະ. ເປົ້າໝາຍ ແມ່ນເພື່ອແນໃສ່ເພີ່ມທະວີປະສິດຕິຜົນ ຂອງການປະກອບ ສວ່ນອັນລ້ຳຄ່າ ໃຫ້ຂະແໜງປ່າໄມ້ຂອງ ສ.ປ.ປ.ລາວ ແລະ ເພື່ອສ້າງໃຫ້ໄດ້ປະໂຫຍດສູງສຸດຈາກຜົນຮັບທັງໝົດ ແລະ ຈາກຄວາມພະຍາຍາມໃນການຮ່ວມມື ເທົ່າທີ່ຈະສາມາດເປັນໄປໄດ້.

ຄຽງຄູ່ກັນນັ້ນ, ການປຶກສາຫາລືກ່ຽວກັບປ່າໄມ້ ໃນລະດັບສາກົນ ແລະ ພາກພື້ນ ແມ່ນໄດ້ຮັບການເພີ່ມທະວີ ໃນຫຼາຍຮູບແບບ ແລະ ຜ່ານບັນດາສົນທິສັນຍາຕ່າງໆທີ່ກ່ຽວຂອ້ງກັບປ່າໄມ້ ລວມທັງ ການປະຊຸມປຶກສາຫາລືດ້ານ ປ່າໄມ້ ຂອງອົງການສະຫະປະຊາຊາດ, ກອງປະຊຸມເຈົ້າໜ້າທີ່ອະວຸໂສປ່າໄມ້ ຂອງບັນດາ ປະເທດອາຊຽນ, ສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ, ສົນທິສັນຍາວ່າດ້ວຍຊີວະນາໆພັນ, ສົນທິສັນຍາວ່າ ດ້ວຍການຄ້າຂາຍພັນພືດ ແລະ ສັດປ່າທີ່ໃກ້ຈະສູນພັນ ແລະ ອື່ນໆ. ສ.ປ.ປ.ລາວ ເຊິ່ງເປັນປະເທດທີ່ອຸດົມສົມບູນ ໄປດ້ວຍຊັບພະຍາກອນປ່າໄມ້ ແລະ ໄດ້ຮັບຜົນສຳເລັດໃນການຄຸ້ມຄອງຊັບພະຍາກອນປ່າໄມ້ ໃນລະດັບໃດໜຶ່ງ ສາມາດປະກອບສວ່ນເຂົ້າໃນຂະບວນການເຄື່ອນໄຫວດັ່ງກ່າວ ໂດຍການເຂົ້າຮ່ວມຢ່າງຈິງຈັງໃນບັນດາສົນທິສັນຍາ ຕ່າງໆ. ບັນດາຂໍ້ສະເໜີຕ່າງໆລຸ່ມນີ້ ແມ່ນແນໃສ່ເພື່ອສາມາດເຮັດໃຫ້ບັນລຸໄດ້ ບັນດາເປົ້າໝາຍດັ່ງກ່າວ:

1) ປັບປຸງວຽກງານຮ່ວມມືພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ບັນດາກົມກອງທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການປະສານງານກ່ຽວກັບການສະໜອງການຊ່ວຍເຫຼືອຂອງສາກົນດີຂຶ້ນ ແລະ ເຂົ້າຮ່ວມຢ່າງຈິງຈັງໃນການປຶກສາຫາລືກ່ຽວກັບປ່າໄມ້ ໃນລະດັບສາກົນ.
2) ຍົກສູງນະໂຍບາຍ ກໍຄືກົນໄກໃນການຮ່ວມມືຂອງລັດຖະບານທີ່ມີໃນປະຈຸບັນ ໂດຍສະເພາະໃນຂົງເຂດທີ່ລະຫວ່າງລັດຖະບານ ແລະ ອົງການສາກົນສາມາດແລກປ່ຽນທັດສະນະ ແລະ ຂໍ້ມູນຂ່າວສານ ທີ່ກ່ຽວພັນກັບການສະໜອງການຊ່ວຍເຫຼືອໃຫ້ແກ່ຂະແໜງປ່າໄມ້.

## 6. ກົນໄກໃນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ ຍຸດທະສາດປ່າໄມ້ ຮອດປີ 2020

ຍຸດທະສາດປ່າໄມ້ຮອດປີ 2020 ທີ່ກຳນົດລະອຽດອົງປະກອບແຕ່ລະດ້ານ ສຳລັບການພັດທະນາປ່າໄມ້ຮອດປີ 2020 ແມ່ນເປັນເອກະສານທາງການສູງສຸດ ເພື່ອ ຊີ້ນຳການພັດທະນາ ຂະແໜງປ່າໄມ້ ແລະ ກໍແມ່ນໜຶ່ງໃນບັນດາປັດໃຈທີ່ສຳຄັນ ໃນການຈັດຕັ້ງປະຕິບັດ ຍຸດທະສາດລຶບລ້າງຄວາມທຸກຍາກແຫ່ງຊາດ. ຍຸດທະສາດປ່າໄມ້ ຮອດປີ 2020 ປະກອບດ້ວຍ ການວິເຄາະ ວິໃຈສະພາບ ແລະ ບັນຫາ, ຈຸດປະສົງໃນການພັດທະນາຂະແໜງການ, ທິດທາງນະໂຍບາຍ ແລະ ແຜນດຳເນີນງານ. ມາດຕະການຈັດຕັ້ງປະຕິບັດ ລວມມີທັງໝົດ 146 ແຜນດຳເນີນງານ ນັບແຕ່ຂໍ້ສະເໜີໃນການຮ່າງ ແລະ ທົບທວນຄືນ ນະໂຍບາຍ ຈົນເຖິງ ການດຳເນີນງານ ຫຼື ຈັດຕັ້ງປະຕິບັດໃນພາກສະໜາມ ແລະ ນັບແຕ່ ການສຶກສາຄົ້ນຄວ້າ ຈົນເຖິງ ການຮ່ວມມືກັບສາກົນ. ຕາມຫຼັກການແລ້ວ ບັນດາແຜນດຳເນີນງານຕ່າງໆທີ່ສະເໜີໃນຍຸດທະສາດປ່າໄມ້ 2020 ແມ່ນຈຳເປັນຈະຕອ້ງໄດ້ຮັບການຈັດຕັ້ງປະຕິບັດໂດຍຂະແໜງການທີ່ຮັບຜິດຊອບ ດັ່ງທີ່ໄດ້ກຳນົດໄວ້ໃນ ຕາຕະລາງ ກອບໃນການຈັດຕັ້ງປະຕິບັດ *(ເອກະສານຕິດຄັດທີ 2)*, ແຕ່ເຖິງຢ່າງໃດກໍຕາມ ມີຫຼາຍແຜນດຳເນີນງານແມ່ນມີການພົວພັນເຊິ່ງກັນແລະກັນ ແລະ ສະລັບຊັບຊອ້ນ ແລະ ມີຄວາມຈຳເປັນຕອ້ງໄດ້ດຳເນີນງານຮ່ວມກັນ. ກົນໄກສະເພາະ ໃນລະດັບລັດຖະບານ ແມ່ນຈຳເປັນຕອ້ງມີການປະສານງານທີ່ດີ ແລະ ຄອ່ງແຄ້ວ ໃນການຈັດຕັ້ງປະຕິບັດບັນດາແຜນດຳເນີນງານທີ່ກຳນົດໃນຍຸດທະສາດ ໃຫ້ບັນລຸຜົນສຳເລັດ ລວມທັງການຕິດຕາມ ກວດກາ ແລະ ປະເມີນຜົນ.

### 6.1. ກອບໃນການຈັດຕັ້ງປະຕິບັດ ສຳລັບແຜນດຳເນີນງານທີ່ສະເໜີໃນຍຸດທະສາດປ່າໄມ້

ກອບໃນການຈັດຕັ້ງປະຕິບັດ ສຳລັບແຕ່ລະແຜນດຳເນີນງານທີ່ສະເໜີໃນຍຸດທະສາດປ່າໄມ້ 2020 ໄດ້ກຳນົດແຈ້ງ ຂອບເຂດຄວາມຮັບຜິດຊອບ ຂອງພາກສ່ວນທີ່ກ່ຽວຂອ້ງທັງໝົດ ເຊິ່ງໃນນັ້ນ ປະກອບມີ ພາກສ່ວນຮັບຜິດຊອບຕົ້ນຕໍ ແລະ ພາກສ່ວນທີ່ກ່ຽວຂອ້ງ, ການຈັດລຽງບຸລິມະສິດ ສຳລັບແຕ່ລະແຜນດຳເນີນງານ, ຄາດໝາຍ ກຳນົດເວລາໃນການດຳເນີນງານ, ຄວາມເປັນໄປໄດ້ທາງດ້ານບຸກຄະລາກອນ ແລະ ຂໍ້ສະເໜີທາງດ້ານແຫຼ່ງທຶນ, ເຊິ່ງທັງໝົດນັ້ນ ແມ່ນໄດ້ກຳນົດໃນເອກະສານຕິດຄັດທີ 2. ເຖິງວ່າແຕ່ລະແຜນດຳເນີນງານທີ່ກຳນົດໃນຍຸດທະສາດປ່າໄມ້ ຈະມີລັກສະນະຂໍ້ສະເໜີ ແຕ່ມັນຈະຖືກກຳນົດ ໃນແຜນການປະຈຳປີ ແລະ ແຜນການ 5 ປີ ຂອງບັນດາກະຊວງ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂອ້ງທັງໝົດ ທັງລະດັບສູນກາງ ແລະ ທອ້ງຖິ່ນ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຢູ່ໃນຂົງເຂດວຽກງານ ແລະ ທອ້ງຖິ່ນຂອງຕົນ.

### 6.2. ອົງການຮັບຜິດຊອບ ສຳລັບການຈັດຕັ້ງປະຕິບັດ, ການກວດກາ ແລະ ປະເມີນຜົນ

ກະຊວງກະສິກຳ ແລະ ປ່າໄມ້ ຈະຖືກມອບໝາຍ ໃຫ້ເປັນຂະແໜງການໃຈກາງ ໃນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ ຍຸດທະສາດປ່າໄມ້ 2020 ໂດຍແມ່ນກົມປ່າໄມ້ ເປັນເສນາທິການໃນການຈັດຕັ້ງປະຕິບັດຕົວຈິງ. ນອກຈາກນັ້ນ ຍັງມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການປະສານງານ ສຳລັບການຈັດຕັ້ງປະຕິບັດ ບັນດາແຜນດຳເນີນງານ ທີ່ກ່ຽວຂອ້ງ ກັບຂະແໜງການອື່ນໆ ຕະຫຼອດ ຮອດການຈັດກອງປະຊຸມກັບບັນດາກະຊວງ ແລະ ພາກສ່ວນທີ່ກ່ຽວຂອ້ງທັງໝົດ ເພື່ອປຶກສາຫາລື ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ ຍຸດທະສາດປ່າໄມ້ 2020.

ກະຊວງກະສິກຳ ແລະ ປ່າໄມ້ ຈະເປັນຜູ້ຕິດຕາມ, ກວດກາ ແລະ ລາຍງານຕໍ່ລັດຖະບານ ກ່ຽວກັບຜົນການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ 2020 ບົນພື້ນຖານຕົວເລກຄາດໝາຍ ແລະ ກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຍຸດທະສາດປ່າໄມ້ ຕະຫຼອດຮອດ ຂໍ້ສະເໜີຕ່າງໆ ກ່ຽວກັບການປັບປຸງ ແກ້ໄຂ ແຜນດຳເນີນງານຕ່າງໆທີ່ຈຳເປັນເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງໃນແຕ່ລະໄລຍະ.

## 6.3. ແຫຼ່ງງົບປະມານ ເພື່ອຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້

ຍຸດທະສາດປ່າໄມ້ ຮອດປີ 2020 ເປັນ ເອກະສານພື້ນຖານ ເພື່ອຊີ້ນຳ ໃນການພັດທະນາ ວຽກງານປ່າໄມ້ ແລະ ເປັນພື້ນຖານ ສຳລັບ ການສ້າງແຜນດຳເນີນງານດ້ານປ່າໄມ້ຂອງລັດຖະບານ ແລະ ເພື່ອສ້າງແຜນງານ ແລະ ໂຄງການຮ່ວມມືກັບສາກົນ ໃນໄລຍະສັ້ນ ແລະ ໄລຍະກາງ. ຜ່ານການຈັດຕັ້ງປະຕິບັດ ໃນຊ່ວງໄລຍະໃດໜຶ່ງ ຍຸດທະສາດປ່າໄມ້ ຮອດປີ 2020 ຈະຕ້ອງໄດ້ ຮັບການທົບທວນຄືນ ແລະ ດັດປັບ ໃຫ້ທ່ວງທັນກັບສະພາບ ແລະ ເງື່ອນໄຂໃນການພັດທະນາ ເສດຖະກິດ-ສັງຄົມ ແລະ ຕອບສະໜອງຕາມແນວທາງນະໂຍບາຍຂອງພັກ-ລັດ ໃນແຕ່ລະໄລຍະ. ຄວາມຕອ້ງການງົບປະມານ ໃນການຈັດຕັ້ງ ປະຕິບັດແຜນດຳເນີນງານທັງໝົດ ທີ່ກຳນົດໃນຍຸດທະສາດປ່າໄມ້ 2020 ປະມານ 180 ລ້ານໂດລາສະຫະລັດ, ຊຶ່ງອາດຈະໄດ້ ມາຈາກຫຼາຍແຫຼ່ງທຶນ ທີ່ແຕກຕ່າງກັນ ຄື:

1. ງົບປະມານຂອງລັດຖະບານ.
2. ກອງທຶນພັດທະນາປ່າໄມ້.
3. ກອງທຶນອະນຸລັກ ສິ່ງແວດລອ້ມ.
4. ອົງການຈັດຕັ້ງສາກົນ ຫຼື ອົງການຜູ້ໃຫ້ທຶນສາກົນ ແລະ ອົງການຈັດຕັ້ງ ທີ່ບໍ່ແມ່ນຂອງລັດຖະບານ.
5. ການປະກອບສ່ວນ ຫຼື ການລົງທຶນ ຂອງພາກສ່ວນເສດຖະກິດຕ່າງໆ ຂອງສັງຄົມ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ.

## 6.4. ການປຶກສາຫາລື ກັບສາກົນ

ເພື່ອປຸກລະດົມ ຂົນຂວາຍ ແລະ ນຳໃຊ້ ການຊ່ວຍເຫຼືອຂອງສາກົນ ເຂົ້າໃນການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ແຕ່ນີ້ຫາປີ 2020 ໃຫ້ໄດ້ຮັບໝາກຜົນສູງສຸດ ແລະ ບັນລຸໄດ້ຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ແມ່ນມີຄວາມຈຳເປັນຕອ້ງໄດ້ສືບຕໍ່ປຶກສາຫາລື ແລະ ແລກປ່ຽນຂໍ້ຄິດເຫັນ ກັບບັນດາຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນ ໃນແຕ່ລະໄລຍະ.

## 6.5. ການສົ່ງເສີມການລົງທຶນ ພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ວຽກງານປ່າໄມ້

ການລົງທຶນພາຍໃນ ແລະ ການລົງທຶນຂອງຕ່າງປະເທດ (ໃນນີ້ເນັ້ນໃສ່ ພາກສ່ວນເອກະຊົນ ແລະ ນັກລົງທຶນຕ່າງປະເທດ) ເຂົ້າໃນຂົງເຂດວຽກງານປ່າໄມ້ ແມ່ນເນັ້ນໃສ່ ການສົ່ງເສີມການລົງທຶນ ເຂົ້າໃສ່ ການປູກໄມ້ ແລະ ການປຸງແຕ່ງຜະລິດຕະພັນໄມ້ ຈາກປ່າປູກ ລວມທັງ ເຄື່ອງເຟີນີເຈີ, ເຄື່ອງປະດັບເອ້ ຫຼື ເຄື່ອງໃຊ້ໃນເຮືອນ, ການປູກ ແລະ ການປຸງແຕ່ງ ເຄື່ອງປ່າຂອງດົງ, ການອະນຸລັກ ຊັບພະຍາກອນປ່າໄມ້ ແລະ ການທອ່ງທ່ຽວແບບອະນຸລັກທຳມະຊາດ. ສຳລັບການກຳນົດເຂດ ໃນການລົງທຶນ ແມ່ນອີງໃສ່ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ພາຍໃນ ສະບັບເລກທີ 10/ສພຊ, ລົງວັນທີ 22 ຕຸລາ 2004 ແລະ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນຂອງຕ່າງປະເທດ ສະບັບເລກທີ 11/ສພຊ, ລົງວັນທີ 22 ຕຸລາ 2004.

# ເອກະສານຕິດຄັດ

1. ການສຶກສາສຳຄັນ ທີ່ສະເໜີ ກ່ຽວກັບເຄື່ອງປ່າຂອງດົງ
2. ກອບໃນການຈັດຕັ້ງປະຕິບັດຍຸດທະສາດປ່າໄມ້ ຮອດປີ 2020
3. ນິຍາມ ແລະ ອະທິບາຍຄຳສັບ

*ເອກະສານຕິດຄັດ ທີ 1:*

# ການສຶກສາສຳຄັນ ທີ່ສະເໜີ ກ່ຽວກັບເຄື່ອງປ່າຂອງດົງ

ບາງຫົວຂໍ້ທີ່ສຳຄັນ ທີ່ຈຳເປັນ ສຳລັບການສຶກສາ ເພື່ອປັບປຸງຄວາມຮູ້ ກ່ຽວກັບເຄື່ອງປ່າຂອງດົງ ຄືດັ່ງລຸ່ມນີ້:

## *ການພັດທະນາຊົນນະບົດ*

- ກຳນົດ ເຄື່ອງປ່າຂອງດົງທີ່ສຳຄັນສຸດ ສຳລັບການນຳໃຊ້ໃນຄອບຄົວ ແລະ ການສ້າງລາຍໄດ້ໃຫ້ຊາວບ້ານ. ໂຄງການເຄື່ອງປ່າຂອງດົງ ອົງການ IUCN-ກົມປ່າໄມ້ ໄດ້ຜະລິດປຶ້ມຄູ່ມື ອອກ ເຊິ່ງໄດ້ກຳນົດ ເຄື່ອງປ່າຂອງດົງ 24 ຊະນິດທີ່ສຳຄັນທີ່ສຸດ ເພື່ອການນຳໃຊ້ພາຍໃນ/ເປັນສະບຽງອາຫານ ແລະ ສົ່ງອອກ.
- ຄຸນຄ່າທາງດ້ານອາຫານຂອງເຄື່ອງປ່າຂອງດົງ ແລະ ບົດບາດຂອງມັນໃນການຄ້ຳປະກັນສະບຽງອາຫານ.
- ສຳຫຼວດຊະນິດພັນພືດທີ່ເປັນຢາ. ກຳນົດໂອກາດໃນການຮັກສາສຸຂະພາບ ແລະ ການດຳເນີນທຸລະກິດ.
- ລັກສະນະທຳມະຊາດ ແລະ ລະດັບຂອງການນຳໃຊ້ເຄື່ອງປ່າຂອງດົງແບບປະເພນີ. ພັດທະນາລະບົບການຕິດຕາມກວດກາການນຳໃຊ້ດັ່ງກ່າວ.
- ວິທີການນຳເອົາເຄື່ອງປ່າຂອງດົງມາປູກ ຫຼື ຂະຫຍາຍພັນພາຍໃນ, ຈັດລຽງບຸລິມະສິດເຄື່ອງປ່າຂອງດົງ ທີ່ມີການຫຼຸດລົງ ຫຼື ໃກ້ຈະສູນພັນ.
- ວິທີການປຸງແຕ່ງເຄື່ອງປ່າຂອງດົງກ່ອນການຂາຍ ເພື່ອນຳໃຊ້ໃຫ້ໝົດຄຸນຄ່າ, ຫຼຸດຜ່ອນສິ່ງເສດເຫຼືອຈາກການນຳໃຊ້ໃຫ້ຕ່ຳສຸດ ແລະ ຍົກສູງລາຍຮັບໃຫ້ໄດ້ສູງສຸດ.
- ຮັບຮອງການເຂົ້າເຖິງ ແລະ ສິດນຳໃຊ້ເຄື່ອງປ່າຂອງດົງຊະນິດຕ່າງໆທີ່ຮັບຮູ້ໃນທ້ອງຖິ່ນ ທີ່ເປັນພື້ນຖານສຳລັບການການພັດທະນາລະບຽບການປ້ອງກັນ ແລະ ການນຳໃຊ້ທີ່ແທດເໝາະ ຮ່ວມກັບປະຊາຊົນ.
- ຄວາມຮູ້ທາງວະນະວັດວິທະຍາຂອງທ້ອງຖິ່ນ ເພື່ອເປັນພື້ນຖານ ສຳລັບການພັດທະນາແຜນການສະເພາະ ໃນການຄຸ້ມຄອງຊັບພະຍາກອນເຄື່ອງປ່າຂອງດົງ.
- ເພີ້ມທະວີການທົດລອງ ເພື່ອພັດທະນາລະບົບການກະສິກຳ-ປ່າໄມ້ແບບປະສົມປະສານ ໃນຫຼາຍໆຮູບແບບ.
- ການສຶກສາທາງດ້ານຄຸນຄ່າໃນການອະນຸລັກຂອງທ້ອງຖິ່ນດັ້ງເດີມ ບົນພື້ນຖານຄວາມແຕກຕ່າງທາງດ້ານພາສາຊົນຊາດ-ຊົນເຜົ່າ, ສາມາດນຳໃຊ້ຜົນການສຶກສາເຂົ້າໃນການສົ່ງເສີມ ການອະນຸລັກ ແລະ ຄວາມຍືນນານໃນການຄຸ້ມຄອງການເກັບກູ້, ການຜະລິດ/ປຸງແຕ່ງ ແລະ ການຕະຫຼາດເຄື່ອງປ່າຂອງດົງ.

## *ຊີວະນາໆພັນ ແລະ ພື້ນຖານຊັບພະຍາກອນ*

- ສ້າງແຜນທີ່ລະອຽດ ກ່ຽວກັບພືດພັນ ໂດຍອີງໃສ່ຂໍ້ມູນຕົວຈິງຈາກການສຳຫຼວດພາກສະໜາມ ແລະ ການເກັບຕົວຢ່າງ (ເພື່ອວາງແຜນ ແລະ ແບ່ງເຂດປ່າສະຫງວນແຫ່ງຊາດ, ແລະ ເພື່ອສະໜອງຂໍ້ມູນໃຫ້ແກ່ວຽກງານການສຳຫຼວດ ແລະ ຕິດຕາມກວດກາເຄື່ອງປ່າຂອງດົງ).

- ດຳເນີນການສຳຫຼວດຊະນິດພັນພືດ ແລະ ການເກັບຕົວຢ່າງ ບົນພື້ນຖານການນຳໃຊ້ຕາມປະເພນີ ເພື່ອຊ່ວຍໃນການກຳນົດ ຫຼື ຈຳແນກຊະນິດເຄື່ອງປ່າຂອງດົງທີ່ສາມາດເຊື່ອຖືໄດ້.
- ທົດລອງ ແລະ ພັດທະນາວິທີການ ສຳລັບການປະເມີນໂດຍກົງ ຊັບພະຍາກອນເຄື່ອງປ່າຂອງດົງ ທີ່ສາມາດເຊື່ອຖືໄດ້.
- ຄວາມຍືນນານ ແລະ ຜົນໄດ້ຮັບທາງນິເວດວິທະຍາ ຈາກການຂຸດຄົ້ນເຄື່ອງປ່າຂອງດົງ, ການຈັດລຽງບຸລິມະສິດເຄື່ອງປ່າຂອງດົງ ສຳລັບຊະນິດທີ່ມີຕະຫຼາດສຳຄັນ.
- ສ້າງສະຖາບັນຊາກແຫ້ງ ແລະ ສວນພຶກສາສາດ ເພື່ອເກັບກຳ, ລວບລວມ, ບັນທຶກ ແລະ ຮັກສາ ຊັບພະຍາກອນ ແລະ ຂໍ້ມູນຂ່າວສານທາງດ້ານພຶກສາດ-ເຜົ່າຊົນ *(ethno-botanical)* (ລວມທັງ ການສະສົມແກ່ນພັນ ໃນບ່ອນທີ່ເໝາະສົມ).

## *ການພັດທະນາແຫຼ່ງຊາດ ແລະ ການພັດທະນາຜະລິດຕະພັນ*

- ພັດທະນາ ແລະ ທົດສອບວິທີການ ສຳລັບຕິດຕາມ-ກວດກາ ການຄ້າຂາຍເຄື່ອງປ່າຂອງດົງ (ລວມທັງ ການລັກລອບຄ້າຂາຍ).
- ຍົກສູງວຽກງານ ໃນການພັດທະນາຜະລິດຕະພັນ ເພື່ອເພີ່ມທະວີການສົ່ງອອກເຄື່ອງປ່າຂອງດົງ ແລະ ເພື່ອພັດທະນາຕະຫຼາດ ແລະ ຜະລິດຕະພັນການຄ້າໃໝ່. ຕົວຢ່າງ ມີຄວາມສົນໃຈ ຫຼື ມີທ່າແຮງສູງ ໃນການຜະລິດໄມ້ເກດສະໜາຢູ່ພາຍໃນ. ແລະ ການຄັດເລືອກ ແລະ ປູກໝາກແໜ່ງຊະນິດພັນປັບປຸງ *(Amomum spp).*
- ສົ່ງເສີມອຸດສະຫະກຳເຄື່ອງຂອງດົງ (ອາດຈະ ຜ່ານໂຄງການໃໝ່ ພາຍໃນສູນຄົ້ນຄວ້າປ່າໄມ້), ໂດຍເຈາະຈົງໃສ່ບັນດາຊະນິດພັນທີ່ສາມາດປະສົບຜົນສຳເລັດໃນການປູກ ຫຼື ພັດທະນາໄດ້ຢູ່ພາຍໃນ.
- ທັດສະນະສຶກສາຢູ່ປະເທດຈີນ ແລະ ຫວຽດນາມ ເພື່ອກຳນົດຄວາມຕອ້ງການຜະລິດຕະພັນ, ຕະຫຼາດ ແລະ ລູກຄ້າ, ວິທີການ ແລະ ຊະນິດພັນ ທີ່ກ່ຽວຂ້ອງກັບການພັດທະນາທາງດ້ານການຄ້າ ແລະ ອຸດສະຫະກຳເຄື່ອງປ່າຂອງດົງ.

## *ຂໍ້ມູນຂ່າວສານ ແລະ ຖານຂໍ້ມູນ*

- ທາງດ້ານພື້ນຖານຊັບພະຍາກອນ ປະກອບດ້ວຍ:
  - ຊະນິດພັນ ແລະ ການນຳໃຊ້ແຕ່ລະຊະນິດພັນ.
  - ການກະຈາຍ ຫຼື ແຈກຢາຍຂອງຊະນິດພັນ.
  - ປະຊາກອນທາງດ້ານຊີວະວິທະຍາ ແລະ ລະດັບຄວາມຍືນນານສູງສຸດ ໃນການການເກັບກູ້/ຂຸດຄົ້ນ.
  - ທ່າອ່ຽງໃນຄວາມຍືນນານ ແລະ ການກະຈາຍ ຂອງຊະນິດພັນ.

- ທາງການຄ້າ, ການປຸງແຕ່ງ ແລະ ການສົ່ງອອກ ປະກອບມີ:
  - ບໍລິມາດ ແລະ ມູນຄ່າຂອງການຄ້າ ແລະ ການສົ່ງອອກ.
  - ຕະຫຼາດ ແລະ ລາຄາສາກົນ.
  - ຜູ້ຊື້ຂາຍ, ຜູ້ປຸງແຕ່ງ ແລະ ລູກຄ້າຜູ້ສຸດທ້າຍ.
  - ທ່າອ່ຽງ ແລະ ການປະເມີນ ທາງດ້ານບໍລິມາດ, ຈຸດປາຍທາງ ແລະ ລາຄາ.

## *ເອກະສານຕິດຄັດທີ 2:* ກອບໃນການຈັດຕັ້ງປະຕິບັດ

### 1. <u>ການນຳໃຊ້ທີ່ດິນ ແລະ ປ່າໄມ້</u>

| ແຜນງານ/ແຜນການດຳເນີນງານທີ່ສະເໜີ (ແຜນການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| **ກ. <u>ນຳສະເໜີ ການວາງແຜນການນຳໃຊ້ທີ່ດິນ</u>** | | | | |
| ກ-1. ກະກຽມນະໂຍບາຍ ກ່ຽວກັບການນຳໃຊ້ທີ່ດິນແຫ່ງຊາດ | ສຳນັກງານນາຍົກ (ສນຍ) ກົມວາງແຜນນຳໃຊ້ແລະພັດທະນາທີ່ດິນ (ກຜພດຊ) | ຄະນະກຳມະການທີ່ດິນແຫ່ງຊາດ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| ກ-2. ນຳໃຊ້ລະບົບການວາງແຜນການນຳໃຊ້ທີ່ດິນ ໃນລະດັບມະຫາພາກ ແລະ ລະດັບພາກສະໜາມ (1-ກ-4 ແລະ 5) | ສນຍ (ກຜພດຊ) | ຄ/ກທີ່ດິນແຫ່ງຊາດ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| ກ-3. ດຳເນີນການແບ່ງເຂດນຳໃຊ້ທີ່ດິນ ໃນລະດັບມະຫາພາກ ເພື່ອກຳນົດປະເພດການນຳໃຊ້ທີ່ດິນ ເຊັ່ນ: ທີ່ດິນປ່າໄມ້, ກະສິກຳ, ອຸດສາຫະກຳ, ວັດທະນະທຳ ແລະ ທີ່ດິນນຳໃຊ້ເພື່ອເປົ້າໝາຍອື່ນໆ ແນໃສ່ເພື່ອການຄຸ້ມຄອງ ແລະ ພັດທະນາການນຳໃຊ້ທີ່ດິນແບບຍືນນານ, | ສນຍ (ກຜພດຊ) | ຄ/ກທີ່ດິນແຫ່ງຊາດ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| ກ-4. ແບ່ງເຂດການນຳໃຊ້ທີ່ດິນປ່າໄມ້ແຕ່ລະປະເພດຢ່າງລະອຽດ ໃນລະດັບຊາດ, ແຂວງ, ເມືອງ ແລະ ບ້ານ (1-ກ-2 ແລະ 5, 1-ງ-5) | ສນຍ (ກຜພດຊ) | ຄ/ກທີ່ດິນແຫ່ງຊາດ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| ກ-5. ສ້າງກົນໄກປະສານງານໃນການນຳໃຊ້ທີ່ດິນ ໃນລະດັບສູນກາງ ແລະ ທ້ອງຖິ່ນ (1-ກ-2 ແລະ 4) | ສນຍ (ກຜພດຊ) | ຄ/ກທີ່ດິນແຫ່ງຊາດ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| ກ-6. ດຳເນີນການສຳຫຼວດຄືນຄວາມເປັນໄປໄດ້ ເພື່ອກຳນົດເຂດເປົ້າໝາຍ ທີ່ຈະປົດປ່າທຳມະຊາດ, ໃນນີ້ລວມທັງ ເຂດທີ່ຈະປົດປ່າແບບຖາວອນ ແລະ ປົດປ່າແບບຊົ່ວຄາວ. | ກ/ຊກ-ປ (ກປມ) | ກປແຂວງ, ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ ການຊ່ວຍເຫຼືອ: ຈຳເປັນ |
| **.ຂ. <u>ສຳເລັດການຮ່າງບັນດາລະບຽບການຕ່າງໆເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍປ່າໄມ້</u>** | | | | |
| ຂ-1. ກະກຽມ ແລະ ອອກລະບຽບການ ຂອງກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບ ປ່າປ້ອງກັນ ແລະ ປ່າຟື້ນຟູ. | ກະຊວງກະສິກຳ-ປ່າໄມ້ (ກຊກປ),(ກົມປ່າໄມ້/ກປມ) | ກ/ຊຍຕທ, ກປແຂວງ, ກປເມືອງ, ບ້ານ | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| **ຄ. <u>ໃຫ້ຄວາມກະຈ່າງແຈ້ງ ນິຍາມ ແລະ ສະຖານະພາບ ຂອງ ປ່າໄມ້ບ້ານ</u>** | | | | |

| ແຜນງານ/ແຜນການດຳເນີນງານທີ່ສະເໜີ (ແຜນການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ຄ-1. ໃຫ້ຄວາມກະຈ່າງແຈ້ງ ນິຍາມ ແລະ ສະຖານະພາບທາງນິຕິກຳ ຂອງປ່າໄມ້ບ້ານ (ປ່າຄຸ້ມຄອງ ແລະ ຊົມໃຊ້ຂອງບ້ານ) ຢູ່ໃນກົດໝາຍປ່າໄມ້ (9-ກ-1) | ກ/ຊກ-ປ (ກປມ) | ກ/ຊຍຕທ, ກປແຂວງ, ກປເມືອງ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| **ງ. <u>ກວດກາຕິດຕາມ ການປ່ຽນແປງການນຳໃຊ້ທີ່ດິນ ແລະ ວິໄຈຫາສາເຫດ ການຫຼຸດລົງຂອງປ່າໄມ້</u>** | | | | |
| ງ-1. ທົບທວນຄືນ ລະບົບການຈັດແບ່ງປະເພດການນຳໃຊ້ທີ່ດິນ ທີ່ນຳໃຊ້ໃນປະຈຸບັນ ສຳລັບການສຳຫຼວດການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມຂອງປ່າໄມ້, | ກ/ຊກ-ປ (ກປມ) | ສນຍ (ກົມແຜນທີ່) | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| ງ-2. ສືບຕໍ່ກວດກາຕິດຕາມການປ່ຽນແປງການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມ ຂອງປ່າໄມ້, ລວມທັງຜົນກະທົບຂອງການປ່ຽນແປງດັ່ງກ່າວ ຕໍ່ກັບຊີວະນາໆພັນ ແລະ ລະດັບຄວາມທຸກຍາກ, | ກ/ຊກ-ປ (ກປມ) | ສນຍ (ກົມແຜນທີ່) | ທຸກໆ 5 ປີ | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ງ-3. ສ້າງດອນຕົວຢ່າງແບບຖາວອນ ແລະ ນຳສະເໜີ ວິທີການ ທີ່ທັນສະໄໝກວ່າເກົ່າ ເພື່ອມານຳໃຊ້ ໃນການກວດກາຕິດຕາມແບບປົກກະຕິ, | ກ/ຊກ-ປ (ກປມ) | ສນຍ (ກົມແຜນທີ່) | ກາງ: ເຖິງປີ2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ງ-4. ສືບຕໍ່ ວິໄຈ ສາເຫດທີ່ສຳຄັນ ສຳລັບການປ່ຽນແປງການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມຂອງປ່າໄມ້, | ກ/ຊກ-ປ (ກປມ) | ສນຍ (ກົມແຜນທີ່, ກວພດຊ) | ທຸກໆ 5 ປີ | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ງ-5. ສ້າງຕັ້ງ ລະບົບເຊື່ອມປະສານ ລະຫວ່າງ ການຕິດຕາມກວດກາການນຳໃຊ້ທີ່ດິນ ແລະ ການສ້າງນະໂຍບາຍກ່ຽວກັບ ການນຳໃຊ້ທີ່ດິນ ແລະ ປ່າໄມ້ (1-ກ-2) | ສນຍ (ກຜພຊ) | ຄ/ກທີ່ດິນແຫ່ງຊາດ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ |

## 2. <u>ປ່າຜະລິດ</u>

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| **ກ. <u>ການຄຸ້ມຄອງປ່າຜະລິດ</u>** | | | | |
| 1). <u>ດ້ານນິຕິກຳ</u> | | | | |
| ກ-1. ກະກຽມ ແລະ ອອກຄຳສັ່ງ, ແຈ້ງການ ແລະ ບົດແນະນຳ ທາງດ້ານວິຊາການ ເພື່ອຈັດຕັ້ງປະຕິບັດ ດຳລັດ ນາຍົກລັດຖະມົນຕີ ເລກທີ່ 59/ນຍ.2002 ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ຂອງກະຊວງກະສິກຳ ແລະ ປ່າໄມ້, | ກ/ຊກ-ປ (ກປມ) | ກປແຂວງ, ກປເມືອງ, ບ້ານ | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| ກ-2. ເຜີຍແຜ່ ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ ຜູ້ມີສ່ວນຮ່ວມທັງໝົດຮັບຮູ້ ແລະ ເຂົ້າໃຈ | ກ/ຊກ-ປ (ກປມ) | ກປແຂວງ, ກປເມືອງ, ບ້ານ, ຣ/ງອຸດສ/ກໄມ້ | ສູງ: ເຖິງປີ 2005 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ໂດຍ ການພິມເຜີຍແຜ່ ແລະ ຈັດກອງປະຊຸມສຳມະນາ.<br>2). <u>ການກໍ່ສ້າງຄວາມສາມາດ</u><br>ກ-3. ເພີ່ມທະວີ ການຝຶກອົບຮົມ ໃຫ້ແກ່ພະນັກງານວິຊາການ ຂອງກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການປະສິກຳ ແລະ ປ່າໄມ້ ເມືອງ ໃນການຄຸ້ມຄອງປ່າຜະລິດ,<br>ກ-4. ເຜີຍແຜ່ ແລະ ປຸກລະດົມປະຊາຊົນໃຫ້ເຂົ້າໃຈ ກ່ຽວກັບລະບຽບການຄຸ້ມຄອງປ່າໄມ້ ເພື່ອເຂົ້າຮ່ວມກັບພະນັກງານປ່າໄມ້ (ໜ່ວຍຄຸ້ມຄອງປ່າຜະລິດ) ໃນການສຳຫຼວດ ແລະ ວາງແຜນປ່າໄມ້ ລະດັບພາກສະໜາມ.<br>3). <u>ການບັງຄັບໃຊ້ ແລະ ການປະຕິບັດກົດໝາຍ</u><br>ກ-5. ຍົກສູງພາລະບົດບາດຂອງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການຈັດຕັ້ງປະຕິບັດ ບັນດາຄຳສັ່ງ ແລະ ລະບຽບການໃຫ້ເຂັ້ມງວດ, ຖ້າເປັນໄປໄດ້ ແມ່ນເພີ້ມຈຳນວນພະນັກງານ, ອຸປະກອນ ແລະ ງົບປະມານ ສຳລັບ ການດຳເນີນວຽກງານພາກສະໜາມ ໂດຍການນຳໃຊ້ງົບປະມານ ສ່ວນແບ່ງຈາກລາຍຮັບ ຂອງການຂາຍຜະລິດຕະພົນປ່າໄມ້ (2-ກ-1) | ກ/ຊກ-ປ (ກປມ)<br><br>ກ/ຊກ-ປ (ກປມ)<br><br><br><br>ກ/ຊກ-ປ (ກປມ) | ກປແຂວງ, ກປເມືອງ, ໜ່ວຍຄ/ຄປ່າຜະລິດ<br>ກປແຂວງ, ກປເມືອງ, ບ້ານ, ໜ່ວຍຄ/ຄປຜລ<br><br><br>ກປແຂວງ, ກປເມືອງ, ໜ່ວຍຄ/ຄປຜລ, ສ/ຄປມບ | ສູງ: ເຖິງປີ 2010<br><br>ສູງ: ເຖິງປີ 2010<br><br><br><br>ສູງ: ເຖິງປີ 2005 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br><br><br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ຂ. <u>ການຍັ້ງຢືນປ່າຜະລິດ</u>**<br>ຂ-1. ວິເຄາະຜົນຂອງການທົດລອງຍັ້ງຢືນປ່າໄມ້ ໂດຍສະເພາະ ທາງດ້ານມູນຄ່າ ແລະ ຜົນປະໂຫຍດ ທີ່ຈະໄດ້ຮັບ ພາຍໃຕ້ ນະໂຍບາຍ ແລະ ເງື່ອນໄຂຕົວຈິງ ຂອງ ສປປລາວ,<br>ຂ-2. ພິຈາລະນາສືບຕໍ່ເຮັດການຍັ້ງຢືນປ່າໄມ້ ໃນເຂດປ່າຜະລິດທີ່ມີແຜນຈັດສັນແບບຍືນນານ. | ກ/ຊກ-ປ (ກປມ)<br><br>ກ/ຊກ-ປ (ກປມ) | ກປແຂວງ, ກປເມືອງ, ໜ່ວຍຄ/ຄປຜລ, ສ/ຄປມບ | ກາງ: ເຖິງປີ 2010<br><br>ກາງ: | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| **ຄ. <u>ການມີສ່ວນຮ່ວມຂອງບ້ານ ໃນການຄຸ້ມຄອງປ່າຜະລິດ</u>**<br>ຄ-1. ຮັບປະກັນ ການມີສ່ວນຮ່ວມຢ່າງເຕັມເມັດເຕັມໜ່ວຍຂອງປະຊາຊົນ ໃນການຄຸ້ມຄອງປ່າຜະລິດ ໂດຍຜ່ານ ການອະທິບາຍແຜນການຄຸ້ມຄອງໂຄງການແລະການທັດສະນະສຶກສາໃນເຂດຄຸ້ມຄອງທີ່ມີຢູ່ໃນປະຈຸບັນ<br>ຄ-2. ເພີ່ມທະວີການມີສ່ວນຮ່ວມຂອງປະຊາຊົນ ໃນການຄຸ້ມຄອງ ແລະ ນຳໃຊ້ແບບຍືນນານ ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳຂອງບ້ານ ໂດຍຜ່ານລະບົບການວາງແຜນນຳໃຊ້ທີ່ດິນຂັ້ນບ້ານ ແລະ ການມອບດິນ-ມອບປ່າ. | ກ/ຊກ-ປ (ກປມ)<br><br>ກ/ຊກ-ປ (ກປມ) | ກປແຂວງ, ກປເມືອງ, ໜ່ວຍຄ/ຄປຜລ, ສ/ຄປມບ | ສູງ: ເຖິງປີ 2010<br><br>ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| | | | | |
| **ງ- <u>ການຄວບຄຸມ ການຂຸດຄົ້ນໄມ້ ຢູ່ນອກເຂດປ່າຜະລິດ</u>** | | | | |
| ງ-1. ປະກາດ ຢ່າງເປັນທາງການ ສຳລັບສະຖານທີ່ ແລະ ບໍລິມາດໄມ້ ທີ່ອະນຸມັດໃຫ້ຂຸດຄົ້ນປະຈຳປີ, | ກ/ຊກ-ປ (ກປມ) | ກປແຂວງ/ເມືອງ,<br>ສ/ຄປມບ, ຣ/ງປຕໄມ້ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| ງ-2. ສ້າງຕັ້ງຕາໜ່າງການກວດກາການຂຸດຄົ້ນໄມ້ນອກເຂດປ່າຜະລິດ ຢ່າງເປັນປົກກະຕິ ໂດຍສະເພາະ ຢູ່ໃນເຂດປ່າສະຫງວນແຫ່ງຊາດ ແລະ ໃນເຂດປ່າອຸດົມສົມບູນທີ່ມີເນື້ອທີ່ໜອ້ຍ ກະແຈກກະຈາຍໂດຍການຮ່ວມມືຂອງປະຊາຊົນ. | ກ/ຊກ-ປ (ກປມ) | ກປແຂວງ/ເມືອງ,<br>ສ/ຄປມບ, ຣ/ງປຕໄມ້ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| **ຈ- <u>ການຈັດສັນປ່າຜະລິດແບບປະສົມປະສານ</u>** | | | | |
| ຈ-1. ສ້າງຕັ້ງປ່າຜະລິດໃນຂອບເຂດທົ່ວປະເທດ, | ກ/ຊກ-ປ (ກປມ) | ກປແຂວງ/ເມືອງ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ¥Œ2. ¦É¾¤-ª˜¤-¡ö--Ä¡-¡¾--¥ñ©ª˜¤ê†-Áê©-ÀÏ¾½ -À²˜º-£÷É´-£º¤-¯È¾-º½ìò©-Ã¹É-´ó-¯½¦ò©-ªò-ºö- -Ã--ì½©ñ®-Á¢-¸¤ ª¾´ê†Ä©É¡¡¿-ö©Ä¸É Ã--©¿ìñ©¢º¤--¾¨ö¡-ìñ©«½´ö-ªó Àì¡-êó 59/-¨.2002, ì½®¼®-¡¾--¢º¤-¡½§¸¤-¡½¦ò¡¿ -Áì½ ¯È¾-Ä´É ¦½®ñ®-Àì¡-êó 0204/¡¯.2003 Áì½ ì½®¼®-¡¾--º˜-Å-ê†-¡È¼¸-¢ºÉ¤, | ກ/ຊກ-ປ (ກປມ),<br>ກປແຂວງ | ກປເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| ຈ-3. ກຳນົດ ແລະ ສ້າງບັນດາເງື່ອນໄຂທາງດ້ານເຕັກນິກວິຊາການທີ່ຄົບຖ້ວນ ເພື່ອຄຸ້ມຄອງຈັດສັນປ່າຜະລິດ. ເຊິ່ງໃນນີ້ ອາດລວມທັງ ລະບຽບຫຼັກການໃນການຂຸດຄົ້ນ, ການວາງແຜນປ່າໄມ້, ເຕັກນິກວິຊາການໃນການປູກໄມ້ ຟື້ນຟູປ່າ, ການຕັດສາງ, ການຄວບຄຸມ ແລະ ປອ້ງກັນສັດຕູພືດ ແລະ ບົ້ງແມງ, ການປຸງແຕ່ງ, ການພັດທະນາການຕະຫຼາດ ແລະ ການຂາຍ (2-ກ-1) | ກ/ຊກ-ປ (ກປມ) | ກປແຂວງ/ເມືອງ,<br>ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຈ-4. ສະໜອງງົບປະມານຢ່າງພຽງພໍໃຫ້ແກ່ວຽກງານການຄຸ້ມຄອງ ຈັດສັນປ່າຜະລິດ. | ກ/ຊການເງິນ | ກ/ຊກ-ປ (ກປມ),<br>ກປແຂວງ/ເມືອງ | ສູງ: ເຖິງປີ 2020 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

## 3. <u>ການຄຸ້ມຄອງເຄື່ອງປ່າຂອງດົງ</u>

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| **ກ. <u>ປັບປຸງ ເງື່ອນໄຂພື້ນຖານ ສຳລັບການພັດທະນາເຄື່ອງປ່າຂອງດົງ</u>**<br>ກ-1. ດຳເນີນການສຳຫຼວດ ແລະ ສຶກສາ ເພື່ອຍົກສູງຄວາມຮູ້ຄວາມສາມາດທີ່ຈຳເປັນ ເພື່ອເປັນບ່ອນອີງໃນການກຳນົດນະໂຍບາຍ ແລະ ແຜນງານ/ໂຄງການສຳລັບການພັດທະນາເຄື່ອງປ່າຂອງດົງ (3-ຄ-5) | ກ/ຊກ-ປ (ສະຖາບັນຄົ້ນຄວ້າກ-ປ) | ກ/ຊອສຫກ, ສາທາ, ການຄ້າ,ມຊ, ສ/ຄຍິງ, ຮ/ງປຸງແຕ່ງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ຂ. <u>ປັບປຸງການຂຸດຄົ້ນ ແລະ ການຕະຫຼາດ ເພື່ອພັດທະນາເຄື່ອງປ່າຂອງດົງ</u>**<br>ຂ-1. ຮັບປະກັນ ເຮັດໃຫ້ ແຜນການຂຸດຄົ້ນປະຈຳປີ ສອດຄ່ອງກັບ ແຜນການຄຸ້ມຄອງປ່າໄມ້ ທີ່ໄດ້ຮັບການພັດທະນາຂຶ້ນ ໂດຍຜ່ານຂະບວນການວາງແຜນນຳໃຊ້ທີ່ດິນຂັ້ນບ້ານ.<br>ຂ-2. ຍົກສູງ ຄວາມໂປ່ງໃສ ແລະ ຄວາມເປັນເອກະພາບ ໃນລະບົບ ແລະ ຂັ້ນຕອນ ຂອງການກຳນົດແຜນການຂຸດຄົ້ນ ແລະ ປະຕິບັດຕາມລະບົບ ແລະ ຂັ້ນຕອນຂອງການວາງແຜນການຂຸດຄົ້ນຢ່າງເຂັ້ມງວດ ໃນແຕ່ລະປີ.<br>ຂ-3. ສ້າງແຜນການຂຸດຄົ້ນ ຄປດ ໂດຍອີງໃສ່ຜົນການປະເມີນ ຄວາມອາດສາມາດຕົວຈິງ ໃນການສະໜອງຂອງຊັບພະຍາກອນທີ່ມີ ແລະ ບໍ່ໃຫ້ອີງໃສ່ແຕ່ຄວາມຕ້ອງການຂອງຕະຫຼາດດ້ານດຽວ. ການກຳນົດ ຕົວເລກຂຸດຄົ້ນ ຕອ້ງມີລັກສະນະຍືນນານ, ວິທະຍາສາດ ໂດຍບໍ່ເປັນໄພຂົ່ມຂູ່ ຕໍ່ພື້ນຖານຊັບພະພະຍາກອນປ່າໄມ້.<br>ຂ-4. ຍົກຄ່າພັນທະໃຫ້ສູງຂຶ້ນກວ່າເກົ່າ ສຳລັບຜະລິດຕະພັນປ່າໄມ້ ທີ່ມີຜົນກະທົບຫຼາຍຈາກການຂຸດຄົ້ນເກີນຄວາມສາມາດ ຫຼື ຜະລິດຕະພັນໃດທີ່ເຫັນວ່າມີຈຳນວນຫຼຸດລົງ ຫຼື ຖືກໄພຂົ່ມຂູ່.<br>ຂ-5. ສົ່ງເສີມການປຸງແຕ່ງ ແລະ ການສົ່ງເຄື່ອງປ່າຂອງດົງ ອອກຕ່າງປະເທດ ໂດຍການກຳນົດລະບຽບການຊື້-ຂາຍ ທີ່ເໝາະສົມ ແລະ ການສະໜອງທາງດ້ານເຕັກນິກ ແລະ ການເງິນ | ກ/ຊກ-ປ (ກປມ)<br>ກ/ຊກ-ປ (ກປມ)<br>ກ/ຊກ-ປ (ກປມ)<br>ກ/ຊກ-ປ (ກປມ), ກ/ຊການຄ້າ<br>ກ/ຊອຫກ, ກ/ຊການຄ້າ | ກປແຂວງ, ກປເມືອງ, ການຄ້າ, ບ້ານ<br>ກປແຂວງ, ກປເມືອງ, ການຄ້າ, ບ້ານ<br>ກປແຂວງ, ກປເມືອງ, ການຄ້າ, ບ້ານ<br>ກປແຂວງ, ກປເມືອງ, ການຄ້າ, ບ້ານ, ພໍ່ຄ້າ<br>ກ/ຊກ-ປ, ກ/ຊກ/ງ | ສູງ: ເຖິງປີ 2010<br>ສູງ: ເຖິງປີ 2007<br>ສູງ: ເຖິງປີ 2007<br>ສູງ: ເຖິງປີ 2007<br>ສູງ | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ເປັນໄປໄດ້<br>ພາຍໃນ: ເປັນໄປໄດ້<br>ພາຍໃນ: ເປັນໄປໄດ້<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ຄ. <u>ການກໍ່ສ້າງຄວາມສາມາດ</u>**<br>1). <u>ການສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ</u> | ກ/ຊກ-ປ (ສະຖາບັນກ-ປ) | ກປແຂວງ, ກປເມືອງ, | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ຄ-1. ປັບປຸງອຳນາດການປົກຄອງຂັ້ນບ້ານ ໃຫ້ມີຄວາມສາມາດ ໃນການພັດທະນາລະບົບການຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນນານ ໂດຍສະເພາະແມ່ນເຄື່ອງປ່າຂອງດົງ (2-ຄ-2, ແລະ 9-ງ-2)<br>ຄ-2. ເອົາໃຈໃສ່ເຮັດ ໃຫ້ການປະສານງານດີຂື້ນ ແລະ ກ້າວໄປສູ່ການພິຈາລະນາ ສ້າງຕັ້ງຄະນະຮັບຜິດຊອບຮ່າງຍຸດທະສາດສະເພາະເຄື່ອງປ່າຂອງດົງ ແບບມີສ່ວນຮ່ວມຫຼາຍຂື້ນ. | ກ/ຊກ-ປ (ສະຖາບັນກ-ປ) | ບ້ານ, ກ/ຊອສທກ, ສາທາ, ການຄ້າ,ມຊ, ສ/ຄຍິງ, ຮ/ງປຸງແຕ່ງ, ບ້ານ | ກາງ: ເຖິງປີ2010 | ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 2). <u>ເພີ້ມທະວີ ການສຶກສາຄົ້ນຄວ້າ ແລະ ການສົ່ງເສີມ</u><br>ຄ-4. ພັດທະນາກົນໄກ ກ່ຽວກັບການແລກປ່ຽນຂໍ້ມູນຂ່າວສານ ແລະ ການສະໜອງການບໍລິການທາງດ້ານວິຊາການ, ສັງຄົມ, ສິນເຊື່ອ ແລະ ການບໍລິການອື່ນໆທີ່ຈຳເປັນ ຕໍ່ພະນັກງານ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ (5-ງ-2, 7-ຂ-3, ແລະ 9-ງ-3) | ກ/ຊກ-ປ (ສະຖາບັນກ-ປ, ກອງສົ່ງເສີມກ-ປ) | ກ/ຊອສທກ, ສາທາ, ການຄ້າ,ມຊ, ສ/ຄຍິງ, ຮ/ງປຸງແຕ່ງ, ບ້ານ. | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຄ-5. ສ້າງກົນໄກປະສານງານ ໃນການຄົ້ນຄວ້າ ລະຫວ່າງສູນຄົ້ນຄວ້າປ່າໄມ້ ກັບອົງການຈັດຕັ້ງອື່ນໆ ລວມທັງ ສະຖາບັນຢາພື້ນເມືອງ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ, ຄະນະວິທະຍາສາດ ແລະ ຄະນະປ່າໄມ້ (ມະຫາວິທະຍາໄລແຫ່ງຊາດ), ອົງການວິທະຍາສາດເທັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ສະຫະພັນແມ່ຍິງລາວ. | ກ/ຊກ-ປ (ສະຖາບັນກ-ປ) | ກ/ຊອສທກ, ສາທາ, ການຄ້າ,ມຊ, ສ/ຄຍິງ, ຮ/ງປຸງແຕ່ງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

## 4. <u>ການພັດທະນາການປູກໄມ້</u>

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ກ. <u>ການສ້າງແຜນງານພັດທະນາການປູກໄມ້ແຫ່ງຊາດ</u><br>ກ-1. ສ້າງແຜນງານພັດທະນາການປູກໄມ້ແຫ່ງຊາດ ທີ່ຄົບຖ້ວນ ສົມບູນ ນັບແຕ່ຂອດການເລືອກແນວ ພັນ, ການກ້າເບັ້ຍໄມ້, ການຄຸ້ມຄອງສວນປູກ ແລະ ການປຸງແຕ່ງ ໂດຍກຳ ນົດໃຫ້ຈະແຈ້ງ ບັນດາກຸ່ມເປົ້າໝາຍ ແລະ ສິ່ງກະຕຸກຊຸກຍູ້. | ກ/ຊກປ(ກອງສ/ສກປ) | ກປມ, ກປແຂວງ, ກປເມືອງ | ສູງ: ເຖິງປີ 2005 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| **ຂ. <u>ການປັບປຸງປະສິດຕິພາບ ຂອງການປູກໄມ້</u>** | | | | |
| 1). <u>ປັບປຸງເຕັກນິກ-ວິທະຍາການ ໃນການປູກໄມ້</u> | | | | |
| ຂ-1. ດຳເນີນການຄົ້ນຄວ້າ ແລະ ທົດສອບ ກ່ຽວກັບເຕັກນິກທີ່ຈະນຳໃຊ້ຕໍ່ຊະນິດພັນໄມ້ (ລວມທັງແກ່ນໄມ້, ວິທີການຜະລິດເບັ້ຍໄມ້ ແລະ ການນຳໃຊ້ພັນໄມ້ພື້ນເມືອງ), ຄົ້ນຄວ້າ ທົດລອງ ກ່ຽວກັບຄວາມເໝາະສົມ ລະຫວ່າງຊະນິດໄມ້ ແລະ ສະຖານທີ່/ພື້ນທີ່ປູກ, ການເກັບກູ້, ວິທີການຕັດຍອນ/ຕັດສາງ/ລິກິ່ງ ແລະ ການຖາງຫຍ້າ, ການກະກຽມສະຖານທີ່ ແລະ ກະກຽມດິນ, ການໃສ່ຝຸ່ນ ແລະ ການຄຸ້ມຄອງບົວລະບັດຮັກສາພາຍຫຼັງການປູກ, | ກ/ຊກ-ປ (ສະຖາບັນກປ), ມະຫາວິທະຍາໄລແຫ່ງຊາດ (ມຊ) | ກ/ຊກປ(ກປມ), ກ-ປ ແຂວງ/ເມືອງ, ບໍລິສັດການຄ້າ, ຊາວກະສິກອນ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຂ-2. ນຳເອົາຜົນການຄົ້ນຄວ້າ ລົງສູ່ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຕະຫຼອດຮອດກຸ່ມເປົ້າໝາຍ ຜູ້ລົງທຶນປູກໄມ້ ໃນອະນາຄົດ. ສິ່ງດັ່ງກ່າວ ຈະເປັນການຊ່ວຍເຫຼືອຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃນການພັດທະນາຄວາມອາດສາມາດເພື່ອເຮັດສຳເລັດໜ້າທີ່ການເມືອງຂອງຕົນ, | ກ/ຊກ-ປ (ກອງສ/ສ, ສະຖາບັນກ-ປ) | ກ-ປແຂວງ/ເມືອງ, ຊາວກະສິກອນ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| ຂ-3. ສ້າງຄວາມຊຳນິຊຳນານ ໃນການເກັບແກ່ນໄມ້, ປູກໄມ້ ໃນຈຳນວນທີ່ຖືກຕອ້ງ, ການຕັດສາງ ແລະ ລິກິ່ງ ເພື່ອປັບປຸງຄຸນນະພາບ ແລະ ຍົກລາຄາຂາຍໄມ້ຂອງກຸ່ມຜູ້ລົງທຶນປູກໄມ້ໃຫ້ສູງຂື້ນ ໂດຍສະເພາະແມ່ນເຈົ້າຂອງສວນປູກໄມ້ສັກ ຢູ່ພາກເໜືອ (9-ງ-3). | ກ/ຊກ-ປ (ກອງສ/ສ, ສະຖາບັນກ-ປ(ແຂວງ)) | ກປແຂວງ/ເມືອງ | ສູງ: ເຖິງປີ 2007 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 2). ການ<u>**ຮັບປະກັນທາງດ້ານລາຄາ**</u> | | | | |
| ຂ-4. ສຶກສາຄົ້ນຄວ້າ ເພື່ອຊອກຮູ້ຜົນກະທົບຈາກທ່າອ່ຽງຂອງຕະຫຼາດ ແລະ ວິທີການຄັດເລືອກຊະນິດພັນໄມ້, ແລະ ຊອກຮູ້ເງື່ອນໄຂ ໃນການຂາຍຜະລິດຕະພັນໄມ້ປູກ ໂດຍສະເພາະແມ່ນ ຄຸນນະພາບ ໄດ້ຮັບການກຳນົດ ແລະ ກວດກາຄືແນວໃດ ແລະ ໃນເງື່ອນໄຂໃດ ລາຄາຄວນເພີ່ມຂື້ນ ແລະ ຫຼຸດລົງ. | ກ/ຊກ-ປ (ກອງສ/ສ, ກປມ) | ກ-ປແຂວງ/ເມືອງ, ຊາວກະສິກອນ, ບ/ສການຄ້າ/ປຸງແຕ່ງໄມ້ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຂ-5. ພັດທະນາ ແລະ ສົ່ງເສີມການນຳໃຊ້ເທັກໂນໂລຍີ ເຂົ້າໃນການປຸງແຕ່ງໄມ້ທອ່ນຂະໜາດນອ້ຍ ຈາກສວນປູກ. | ກ/ຊກ-ປ(ກປມ), ກ/ຊອຫ | ອ/ກປຸງແຕ່ງໄມ້ | ກາງ | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ຄ. <u>ການປັບປຸງ ກອບນິຕິກຳ ແລະ ລະບຽບການ</u>** | | | | |
| ຄ-1. ສ້າງຂັ້ນຕອນ ເພື່ອຮັບຮູ້ ສິດໃນການນຳໃຊ້ ທີ່ດິນ ແລະ ປ່າໄມ້ ຕາມປະເພນີ ຂອງປະຊາຊົນທ້ອງຖິ່ນ ຫຼື ຮູບແບບ ໃນການທົດແທນຄືນມູນຄ່າເສັຽຫາຍ ທີ່ເກີດຈາກການພັດທະນາສວນປູກໄມ້ເປັນສິນຄ້າ (1-ຄ-1), | ກ/ຊກ-ປ (ກປມ, ກອງສ/ສ) | ກ-ປແຂວງ/ເມືອງ, ບ້ານ, ບ/ສການຄ້າ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| ຄ-2. ເຮັດໃຫ້ລະບຽບການກ່ຽວກັບທຸລະກິດໄມ້ປູກ ກະທັດຮັດ, ງ່າຍດາຍ ແລະ ສະດວກຂື້ນ ນັບ | ກ/ຊກ-ປ (ກປມ, ກອງສ/ສ) | ກ-ປແຂວງ/ເມືອງ, | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ແຕ່ຂອດການລົງທຶນປູກ, ການຂຸດຄົ້ນ, ຂົນສົ່ງ ແລະ ການສົ່ງໄມ້ປູກອອກຕ່າງປະເທດ,<br>ຄ-3. ສ້າງໃຫ້ເປັນລະບົບ-ຂັ້ນຕອນທີ່ກະທັດຮັດ ໃນການປ່ຽນແປງ ຈາກໃບຢັ້ງຢືນກຳມະສິດການນຳໃຊ້ທີ່ດິນຊົ່ວຄາວ ໄປເປັນ ການຮັບຮູ້ສິດນຳໃຊ້ທີ່ດິນຖາວອນ (ໃບຕາດິນ) ແນໃສ່ອຳນວຍຄວາມສະດວກໃຫ້ແກ່ຊາວກະສິກອນ,<br>ຄ-4. ກະກຽມບັນດາປັດໃຈທີ່ຈຳເປັນ ເພື່ອຮອງຮັບການລົງທຶນປູກໄມ້ ໃນພື້ນທີ່ຂະໜາດໃຫຍ່ ຈາກນັກລົງທຶນທັງພາຍໃນ ແລະ ຕ່າງກະເທດ ເຊິ່ງສ່ວນໜຶ່ງ ອາດແມ່ນການສະໜັບສະໜູນ ຈາກກົນໄກການພັດທະນາພື້ນທີ່ສີຂຽວ ເພື່ອຈຸດປະສົງຮັກສາສິ່ງແວດລ້ອມ ໄປຄຽງຄູ່ກັບການຊົມໃຊ້ຂອງປະຊາຊົນທ້ອງຖິ່ນ. | <br>ກ/ຊກ-ປ (ກປມ), ກ/ຊກ/ງ<br><br><br>ກ/ຊກ-ປ (ກອງສ/ສ), ອວຕສ, ຄະນະກ/ຄ/ຄລົງທຶນ ຕປທ (ຄຄກຕປ) | ບ້ານ, ບ/ສການຄ້າ ສນຍ(ກຜພຊ), ກ-ປ ແຂວງ/ເມືອງ<br><br>ກ-ປແຂວງ/ເມືອງ, ບ້ານ | <br>ສູງ: ເຖິງປີ 2007<br><br><br>ສູງ: ເຖິງປີ 2007 | ການຊ່ວຍເຫຼືອ:ຕອ້ງການ<br>ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ<br><br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ງ. <u>ການປັບປຸງທາງດ້ານງົບປະມານ ແລະ ນະໂຍບາຍກະຕຸກຊຸກຍູ້</u>**<br>ງ-1. ສົ່ງເສີມການປູກໄມ້ແບບປະສົມປະສານ ໂດຍສະເພາະໃນລະດັບຄອບຄົວ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວຢ່າງເປັນປົກະຕິຕໍ່ເນື່ອງ<br>ງ-2. ທົບທວນຄືນ ລະບົບເງິນທຶນກູ້ຢືມສຳລັບການປູກໄມ້ ທີ່ມີຢູ່ໃນປະຈຸບັນ ໂດຍສະເພາະ ສວນປູກໄມ້ຂະໜາດນອ້ຍຂອງປະຊາຊົນ, ຄວາມເປັນໄປໄດ້ທາງດ້ານການລົງທຶນ, ຄວາມຍືນນານ, ເຫດຜົນຂອງການໃຫ້ນະໂຍບາຍກະຕຸກຊຸກຍູ້, ນະໂຍບາຍຖົມຊຸມ ແລະ ອື່ນໆ,<br>ງ-3. ຄົ້ນຄວ້າ ວິໃຈ ວິທີການ ແລະ ເຄື່ອງມື/ພາຫະນະ ເພື່ອສະໜັບສະໜູນ ການປູກໄມ້ຂອງປະຊາຊົນ ໂດຍການທົບທວນຄືນ ຮູບແບບການທົດລອງທີ່ກຳລັງດຳເນີນຢູ່ໃນປະຈຸບັນ ລວມທັງ ການປູກໄມ້ໃນຮູບແບບການແບ່ງປັນຜົນປະໂຫຍດຮ່ວມກັນ. | <br>ກ/ຊກ-ປ (ກອງສ/ສ),<br><br>ກ/ຊກ-ປ (ກອງສ/ສ), ທະນາຄານສົ່ງເສີມກະສິກຳ (ທສກ)<br>ກ/ຊກ-ປ (ກອງສ/ສ, ກປມ), ກ/ຊການເງິນ | <br>ກ-ປແຂວງ/ເມືອງ, ຊາວກະສິກອນ,<br>ກ-ປແຂວງ/ເມືອງ, ຊາວກະສິກອນ, ບ/ສການຄ້າ<br>ກ-ປແຂວງ/ເມືອງ, ຊາວກະສິກອນ | <br>ສູງ<br><br>ສູງ: ເຖິງປີ 2007<br><br>ສູງ: ເຖິງປີ 2007 | <br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ<br><br>ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| **ຈ- <u>ການພັດທະນາການຕະຫຼາດ</u>**<br>ຈ-1. ສະໜອງຂໍ້ມູນກ່ຽວກັບລາຄາຂອງຜະລິດຕະພັນໄມ້ ຢູ່ຕະຫຼາດພາຍໃນ ແລະ ຕະຫຼາດສາກົນ. | <br>ກ/ຊການຄ້າ | <br>ອ/ກໄມ້, ກ/ຊອຫ, ກ/ຊກປ, ກ/ຊກງ | <br>ສູງ: ເຖິງປີ 2010 | <br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

## 5. <u>ແຜນການຂຸດຄົ້ນ ແລະ ຄ່າພັນທະ</u>

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| 1. ທົບທວນ ຈາກ ການກຳນົດ ແລະ ແບ່ງປັນ ແຜນການຂຸດຄົ້ນແຫ່ງຊາດ ໄປສູ່ ການສ້າງ ແລະ ກຳນົດ ແຜນການຂຸດຄົ້ນແຕ່ລຸ່ມຂຶ້ນເທິງ ຕາມແຜນການຄຸ້ມຄອງຈັດສັນປ່າໄມ້ໃນເຂດປ່າຜະລິດທີ່ໄດ້ຮັບ ການສ້າງຕັ້ງຂຶ້ນ, | ກ/ຊກ-ປ (ກປມ) | ກປແຂວງ, ກປເມືອງ, ອຸດສາຫະກຳປ/ຕໄມ້ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| 2. ແຈ້ງແຜນການຄຸ້ມຄອງປ່າຜະລິດ ແລະ ແຜນດຳເນີນງານ ໃຫ້ໂຮງງານປຸງແຕ່ງໄມ້ຮັບຮູ້ ເພື່ອເປັນ ບ່ອນອີງ ໃນການສ້າງແຜນການລົງທຶນໄລຍະຍາວໄດ້ຢ່າງແທດເໝາະ (2-ງ-1) | ກ/ຊກ-ປ (ກປມ) | ກປແຂວງ, ກປເມືອງ, ອ/ກປ/ຕໄມ້ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ |
| 3. ປັບປຸງຮ່າງສູດຄິດໄລ່ ການກຳນົດຄ່າພັນທະ ເພື່ອສະທ້ອນໃຫ້ເຫັນລາຄາຂອງຕະຫຼາດສາກົນ, | ກ/ຊການຄ້າ, | ກ/ຊກປ (ກປມ), ອ/ກປ/ຕໄມ້, ສປມບ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| 4. ສ້າງລະບົບການແບ່ງປັນຜົນປະໂຫຍດທີ່ຍຸຕິທຳ ແລະ ແຜນການໃນການໃຊ້ຈ່າຍທີ່ສົມເຫດສົມຜົນ ເພື່ອເຮັດໃຫ້ການກຳນົດຄ່າພັນທະມີປະສິດຕິຜົນ. | ກ/ຊການເງິນ | ກ/ຊກປ, ກປແຂວງ, ກປ ເມືອງ, ສປມບ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| 5. ທົບທວນຄືນ ລະບົບ ແລະ ອັດຕາ ໃນການເກັບຄ່າພັນທະທີ່ນຳໃຊ້ຢູ່ໃນປະຈຸບັນ ລວມທັງ ພາສີອາ ກອນ ແລະ ຄ່າທຳນຽມອື່ນໆ ທີ່ ຕ້ອງຈ່າຍເຂົ້າ ຄັງເງິນແຫ່ງຊາດ ເພື່ອເຊີດຊູຄວາມຮັບຜິດຊອບ ລະ ຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການເກັບລາຍຮັບ. | ກ/ຊການເງິນ | ກ/ຊກປ, ກ/ງແຂວງ,ກປ ແຂວງ,ບ້ານ, ອ/ກປຕໄມ້ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງການ |
| 6. ສືບຕໍ່ ທົດລອງເຮັດການປະມູນ ຄຽງຄູ່ໄປກັບການປັບປຸງຄວາມອາດສາມາດທາງດ້ານການຈັດຕັ້ງ ແລະ ພະນັກງານ ເພື່ອນຳໄປຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ (6-ຂ-2) | ກ/ຊການຄ້າ, ກ/ຊກ-ປ | ກ/ຊກປ, ກ/ງແຂວງ, ກປແຂວງ,ບ້ານ,ອ/ກໄມ້ | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕອ້ງກາ |

## 6. <u>ອຸດສາຫະກຳການປຸງແຕ່ງໄມ້</u>

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ກ. <u>ເຮັດໃຫ້ຂັ້ນຕອນໃນການຂໍອະນຸຍາດ ດຳເນີນໂຮງງານກະທັດຮັດ ແລະ ງ່າຍດາຍລົງ</u> | | | | |
| ກ-1. ຊຸກຍູ້ ໃຫ້ມີການປຶກສາຫາລື ໃນບັນດາກະຊວງທີ່ກ່ຽວຂ້ອງຕ່າງໆ ເຊັ່ນ: ກ/ຊກ-ປ, ກ/ຊອຸດສາຫະກຳ | ກ/ຊກ-ປ, ກ/ຊກງ, ກ/ຊອກ | ຮ/ງອ/ກປຸງແຕ່ງໄມ້ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ແລະ ທັດຖະກຳ, ກ/ຊການເງິນ ແລະ ຄະນະຄຸ້ມຄອງການລົງທຶນ ພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ຂັ້ນຕອນໃນການບໍລິຫານ/ຄຸ້ມຄອງ ການສ້າງຕັ້ງໂຮງງານປຸງແຕ່ງໄມ້ ແລະ ການດຳເນີນກິດຈະກຳຂອງເຂົາເຈົ້າ ມີຄວາມສະດວກ ແລະ ງ່າຍດາຍຂຶ້ນ, | ທກ, ຄກຕປ | | | |
| ກ-2. ເພີ່ມທະວີຄວາມໂປ່ງໃສ ໂດຍການກຳນົດມາດຖານ ແລະ ຄວາມຮັບຜິດຊອບ ກ່ຽວກັບການອະນຸມັດ (ອະນຸຍາດ) ດຳເນີນທຸລະກິດ, ອະນຸຍາດດຳເນີນກິດຈະການ ແລະ ອື່ນໆ, | ກ/ຊກ-ປ, ກ/ຊອກທກ | ຮ/ງອ/ກປຸງແຕ່ງໄມ້ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| ກ-3. ດັດສົມໂຮງງານປຸງແຕ່ງໄມ້ທີ່ມີໃນປະຈຸບັນ ເພື່ອໃຫ້ສົມດູນກັບແຫຼ່ງວັດຖຸດິບທີ່ມີໃນປະຈຸບັນ ໄປພ້ອມໆກັບການປັບປຸງໂຮງງານປຸງແຕ່ງໄມ້ຈຳນວນໜຶ່ງ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ. | ກ/ຊກ-ປ, ກ/ຊອກທກ | ຮ/ງອ/ກປຸງແຕ່ງໄມ້ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| **ຂ. <u>ວິທີການທີ່ເໝາະສົມ ໃນການຫຼຸດຜ່ອນກຳລັງ (ເຄື່ອງຈັກ) ປຸງແຕ່ງໄມ້</u>** | | | | |
| ຂ-1. ກຳນົດມາດຖານລວມ ສຳລັບການຄັດເລືອກໂຮງງານ ເພື່ອສືບຕໍ່ດຳເນີນການຜະລິດ, | ກ/ຊກ-ປ (ກປມ) | ຮ/ງປຸງແຕ່ງໄມ້, ກ/ຊອທ. | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| ຂ-2. ສ້າງເຂດທົດລອງ ສຳລັບການແຂ່ງຂັນ ຫຼື ປະມູນລາຄາ ໃນການຂາຍໄມ້ທ່ອນ ແລະ ປັບປຸງຄວາມເຂັ້ມແຂງທາງດ້ານອົງການຈັດຕັ້ງ ເພື່ອຜັນຂະຫຍາຍໄປໃນຂອບເຂດທົ່ວປະເທດ (5-6) | ກ/ຊກ-ປ (ກປມ), ກ/ຊການຄ້າ | ກ-ປແຂວງ/ເມືອງ, ກ/ງ, ກ/ຄແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2005 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຂ-3. ປັບປຸງການບັງຄັບໃຊ້ກົດໝາຍ ແລະ ການບໍລິຫານ ໃນການຂຸດຄົ້ນ ແລະ ການສະໜອງໄມ້ໃຫ້ໂຮງງານປຸງແຕ່ງໄມ້ ໄປພ້ອມກັບການປະຕິບັດມາດຕະການ ຖອນໃບອະນຸຍາດດຳເນີນທຸລະກິດຂອງບັນດາໂຮງງານປຸງແຕ່ງໄມ້ ທີ່ນຳເອົາໄມ້ທ່ອນເຂົ້າມາຈາກແຫຼ່ງທີ່ບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມກົດໝາຍ. | ກ/ຊກ-ປ (ກປມ), ກ/ຊອກທກ | ກ-ປແຂວງ/ເມືອງ, ຮ/ງປຕໄມ້ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| **ຄ. <u>ການປັບປຸງ ສະມັດຕະພາບ ໃນການປຸງແຕ່ງໄມ້</u>** | | | | |
| ຄ-1. ເພີ່ມຄວາມເຂັ້ມງວດ ໃນການປະຕິບັດລະບຽບ, ຫຼັກການ ແລະ ບົດແນະນຳທາງດ້ານວິຊາການ ກ່ຽວກັບການສຳຫຼວດໝາຍຕົ້ນຕັດ, ການຕັດປ່ຳ, ການຈັດຊັ້ນຄຸນນະພາບ ແລະ ສັນຍາການຊື້-ຂາຍໄມ້ທ່ອນ, | ກ/ຊກ-ປ (ກປມ) | ກ-ປແຂວງ/ເມືອງ, ສ/ຄປມບ້ານ | ສູງ | ພາຍໃນ: ເປັນໄປໄດ້ |
| ຄ-2. ນຳໃຊ້ນະໂຍບາຍພາສີດຶງດູດ (ກະຕຸກຊຸກຍູ້) ສຳລັບການຕິດຕັ້ງເຄື່ອງຈັກປຸງແຕ່ງໄມ້ ຂັ້ນສອງ ຫຼື ຂັ້ນສາມ ແລະ ສະໜອງການຝຶກອົບຮົມທີ່ເໝາະສົມ (6-ງ-4) | ກ/ຊກງ | ກ/ຊກ-ປ(ກປມ), ກ/ຊອທ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ |
| ຄ-3. ພັດທະນາລະບົບເຄືອຄ່າຍ ວຽກງານປ່າໄມ້ ແລະ ການຄ້າໄມ້ ແນໃສ່ສົ່ງເສີມການຍັ້ງຢືນການຄຸ້ມຄອງປ່າໄມ້ ແລະ ສ້າງປະໂຫຍດສູງສຸດດ້ານການຕະຫຼາດເທົ່າທີ່ຈະເປັນໄປໄດ້ ສຳລັບຜະລິດຕະພັນປ່າໄມ້ທີ່ໄດ້ຜ່ານການຍັ້ງຢືນ. | ກ/ຊກ-ປ, ກ/ຊກຄ | ກ-ປແຂວງ/ເມືອງ, ກ/ງ-ກ/ຄແຂວງ/ເມືອງ, ສ/ຄປມບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| **໗. <u>ສືບຕໍ່ສົ່ງເສີມການສົ່ງຜະລິດຕະພັນໄມ້ສຳເລັດຮູບທຸກຊະນິດ ແລະ ໄມ້ເຄິ່ງສຳເລັດຮູບບາງຊະນິດ ອອກຕ່າງປະເທດ</u>** | | | | |
| ໗-1. ເຂັ້ມງວດ ໃນການປະຕິບັດ ຄຳສັ່ງ ຫ້າມສົ່ງໄມ້ທ່ອນ, ໄມ້ເລື່ອຍ ແລະ ໄມ້ເຄິ່ງສຳເລັດຮູບບາງຊະນິດ ອອກຕ່າງປະເທດ | ກ/ຊກຄ | ກ/ຊກ-ປ(ກປມ),ກ/ຄ, ປມແຂວງ, ຮ/ງປຕໄມ້ | ສູງ: | ພາຍໃນ: ເປັນໄປໄດ້ |
| ໗-2. ໂອນບັນດາຜະລິດຕະພັນໄມ້ທີ່ຍັງເຫຼືອ ຈາກ *ບັນຊີໂຈະການຫຼຸດຜ່ອນອັດຕາພາສີໄວ້ຊົ່ວຄາວ (Temporary Exclusion List)* ມາເປັນ *ບັນຊີຫຼຸດຜ່ອນອັດຕາພາສີ (Inclusion List)* ແລະ ຫຼຸດຜ່ອນ ອັດຕາພາສີ ລົງມາ ຢູ່ ພາຍໃຕ້ ກອບຂອງ AFTA/CEPT ແນໃສ່ເພື່ອກະຕຸກຊຸກຍູ້ ແລະ ສົ່ງເສີມການສົ່ງອອກ, | ກ/ຊກຄ | ກ/ຊກ-ປ(ກປມ), ການຄ້າແຂວງ, ປ່າໄມ້ແຂວງ, ຮ/ງປຸງແຕ່ງໄມ້ | ສູງ: ເຖິງປີ 2008 | ພາຍໃນ: ເປັນໄປໄດ້ |
| ໗-3. ຜ່ອນຜັນຊົ່ວຄາວ ບັນດາຂໍ້ເກືອດຫ້າມ ແລະ ຂໍ້ຈຳກັດ ການລົງທືນຕ່າງປະເທດ ໃນການປຸງແຕ່ງໄມ້ເຄິ່ງສຳເລັດຮູບ ທີ່ ນຳໃຊ້ໄມ້ທ່ອນທຳມະຊາດ ທີ່ໄດ້ຜ່ານຂະບວນການປຸງແຕ່ງຂັ້ນໜຶ່ງແລ້ວ, | ຄກຕປ, ກ/ຊກຄ | ກ/ຊກ-ປ(ກປມ), ການຄ້າແຂວງ, ປ່າໄມ້ແຂວງ, ຮ/ງປຸງແຕ່ງໄມ້ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ |
| ໗-4. ນຳໃຊ້ນະໂຍບາຍພາສີດຶງດູດ ສຳລັບການຕິດຕັ້ງ ເຕົາອົບໄມ້ (6-ຄ-2) | ກ/ຊກງ | ກ/ຊກ-ປ(ກປມ), ກ/ຊອຫ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ |
| ໗-5. ປັບປຸງ ແລະ ຍົກລະດັບຄວາມຊຳນິຊຳນານ ດ້ານການປຸງແຕ່ງໄມ້ຂອງນາຍຊ່າງ/ກຳມະກອນ ດ້ວຍການຈັດຕັ້ງ ການຝຶກອົບຮົມວິຊາຊີບ ໃຫ້ຢ່າງພຽງພໍ. | ກ/ຊກປ, ກ/ຊອຫ, ກ/ຊສສ | ກ/ຊແຮງງານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ໗-6. ສົ່ງເສີມສີມືແຮງງານ ໃນການປຸງແຕ່ງໄມ້ຂະໜາດນ້ອຍ ແບບຫັດຖະກຳ ຄວັດລວດລາຍ, ຈັກສານ ໃນລະດັບ ຄອບຄົວ, ກຸ່ມຄອບຄົວ ຫຼື ບ້ານ ເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນ. | ກ/ຊອຫ, | ກ/ຊກ-ປ, ກ/ຊແຮງງານ, ກ/ຊການຄ້າ, ທະນາຄານ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

# 7. ການອະນຸລັກຊີວະນາໆພັນ

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| **ກ. <u>ການປັບປຸງ ກອບນິຕິກຳ ແລະ ລະບຽບການ</u>** | | | | |
| ກ-1. ພິຈາລະນາ ການເຂົ້າຮ່ວມ ສົນທິສັນຍາສາກົນອື່ນໆ (ນອກຈາກ ສົນທິສັນຍາ ຊີວະນາໆພັນ (CBD) ແລະ CITES) | ອົງການວິທະຍາສາດ (ອວຕສ) | ກ/ຊກປ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ກ-2. ພິຈາລະນາການກະກຽມສ້າງກົດໝາຍອະນຸລັກຊີວະນາໆພັນ ໂດຍອີງໃສ່ ບັນດາລະບຽບການຕ່າງໆທີ່ມີໃນປະຈຸບັນ ກ່ຽວກັບປ່າສະຫງວນແຫ່ງຊາດ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ | ກ/ຊກ-ປ (ກປມ), ອວຕສ | ກປແຂວງ,ກປເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| ກ-3. ປັບປຸງລະບຽບການທາງດ້ານນິຕິກຳ ກ່ຽວກັບການນຳໃຊ້ ເຂດດິນທາມ ເພື່ອລ້ຽງປາ ແລະ ການທ່ອງທ່ຽວທຳມະຊາດອື່ນໆ | ກ/ຊກ-ປ (ກປມ) | ກ/ຊກປ (ກົມລ້ຽງສັດ), | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| ກ-4. ພັດທະນາ ບັນດາລະບຽບການ ແລະ ມາດຕະການໃນການຄວບຄຸມ ເພື່ອປົກປັກຮັກສາພູມປັນຍາທ້ອງຖິ່ນ ແລະ ການປ້ອງກັນລິຂະສິດກ່ຽວກັບຊັບສິນທາງປັນຍາ ເພື່ອຮັບປະກັນຜົນປະໂຫຍດຈາກການພັດທະນາຜະລິດຕະພັນຢາ ຫຼື ຜະລິດຕະພັນອື່ນໆ ທີ່ໄດ້ມາຈາກພັນພືດ ໃນ ສປປລາວ ເຊິ່ງມີທ່າແຮງທາງດ້ານເສດຖະກິດໃນລະດັບຊາດ ແລະ ໃນລະດັບປະຊາຊົນທ້ອງຖິ່ນ ບ່ອນທີ່ພູມປັນຍາທ້ອງຖິ່ນອາດສາມາດເກີດຜົນປະໂຫຍດທາງການຄ້າໄດ້. | ກ/ຊກ-ປ(ກປມ),ກ/ຊຍຸຕິທຳ | ກ/ຊກຄ, ອວຕສ, ປະຊາຊົນ | ກາງ: ເຖິງປີ2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ຂ. <u>ການປັບປຸງ ການຄຸ້ມຄອງ ແລະ ພັດທະນາປ່າສະຫງວນແຫ່ງຊາດ</u>** | | | | |
| ຂ-1. ທົບທວນຄືນ ລະບົບປ່າສະຫງວນແຫ່ງຊາດ ທີ່ມີຢູ່ໃນປະຈຸບັນ ເພື່ອໃຫ້ກວມເອົາຖິ່ນອາໃສທີ່ສຳຄັນສ່ວນໃຫຍ່ຂອງສັດປ່າ ແລະ ສັດນ້ຳ ແລະ ເພື່ອຍົກເລີກ ຫຼື ຕັດແຍກເຂດພື້ນທີ່ໆໄດ້ພັດທະນາຫຼາຍແລ້ວອອກ (7-ກ-2) | ກ/ຊກ-ປ (ກປມ) | ອວຕສ, ກປແຂວງ, ກປເມືອງ | ສູງ: ເຖິງປີ 2007 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ:ຈຳເປັນ |
| ຂ-2. ກະກຽມແຜນພັດທະນາ ແລະ ຄຸ້ມຄອງປ່າສະຫງວນແຫ່ງຊາດ ໄລຍະຍາວ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງ ປະຊາຊົນທ້ອງຖິ່ນ (7-ກ-2, 7-ຂ-1) | ກ/ຊກ-ປ (ກປມ) | ກປແຂວງ-ເມືອງ,ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຂ-3. ປັບປຸງລະບົບການເງິນສຳລັບຄຸ້ມຄອງປ່າສະຫງວນແຫ່ງຊາດ ໂດຍຜ່ານງົບປະມານແຫ່ງລັດ ແລະ ທຶນຈາກການດຳເນີນບັນດາກິດຈະກຳຕ່າງໆທີ່ກໍ່ໃຫ້ເກີດລາຍຮັບ ແລະ ລາຍຮັບຈາກການປັບໃໝຕ່າງໆ | ກ/ຊກ-ປ (ກປມ), ກ/ຊການເງິນ | ກປແຂວງ-ເມືອງ,ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| ຂ-4. ພັດທະນາການທ່ອງທ່ຽວອະນຸລັກທຳມະຊາດ ໂດຍຜ່ານການລົງທຶນເຂົ້າໃນບັນດາແຜນງານ/ໂຄງການ | ສນຍ (ອົງການທ່ອງທ່ຽວ) | ກປແຂວງ-ເມືອງ,ບ້ານ | ກາງ: | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບູລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ຂ-5. ສະໜອງພະນັກງານທີ່ມີຄວາມສາມາດ ໃນການຄຸ້ມຄອງປ່າສະຫງວນ ພ້ອມທັງ ຈັດຫາ ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ຈຳເປັນ (ເຊັ່ນ: ພາຫານະ, ຄອມພິວເຕີ້, ຊຸດເຄື່ອງແບບ ແລະ ອື່ນໆ) ເພື່ອດຳເນີນວຽກງານການຄຸ້ມຄອງປ່າສະຫງວນແຫ່ງຊາດໃຫ້ມີປະສິດຕິຜົນສູງຂຶ້ນ (7-ຂ-3) | ກ/ຊກ-ປ (ກປມ) | ກປແຂວງ-ເມືອງ, | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຂ-6. ເພີ່ມຈຳນວນພະນັກງານປ່າສະຫງວນແຫ່ງຊາດ ແລະ ບຳລຸງຍົກລະລະດັບຄວາມສາມາດຂອງ ເຂົາເຈົ້າ ໂດຍຜ່ານການຈັດຕັ້ງປະຕິບັດແຜນງານໄລຍະສັ້ນ ແລະ ໄລຍະຍາວ, ປະຕິບັດ ລະບົບການຍອ້ງຍໍ ຊົມເຊີຍ ກະຕຸກຊຸກຍູ້ ການປະຕິບັດໜ້າທີ່ຂອງເຂົາເຈົ້າ ພາຍໃຕ້ເງື່ອນໄຂ ການດຳລົງຊີວິດ ແລະ ປະຕິບັດວຽກງານໃນເຂດທີ່ຫຍຸ້ງຍາກກັນດານ (7-ຂ-3) | ກ/ຊກ-ປ (ກປມ) | ກປແຂວງ-ເມືອງ | ສູງ: | ພາຍໃນ: ເປັນໄປໄດ້ |
| ຂ-7. ພິຈາລະນາການພັດທະນາລະບຽບການ/ບົດແນະນຳ ສຳລັບຜູ້ດຳເນີນການທ່ອງທ່ຽວໃນເຂດປ່າສະຫງວນ ແຫ່ງຊາດ ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາຄວາມຮັບຜິດຊອບຂອງນັກທ່ອງທ່ຽວທຳມະຊາດ ທີ່ ຈະນຳຜົນປະໂຫຍດມາສູ່ຊາວບ້ານ ແລະ ສິ່ງແວດລອ້ມ ໄປຄຽງຄູ່ກັບການສ້າງລາຍຮັບເຂົ້າປະເທດ | ກ/ຊກ-ປ (ກປມ) | ອ/ກທທຊ, ກປແຂວງ ກປເມືອງ,ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| ຂ-8. ກຳນົດເຂດອະນຸລັກແຫຼ່ງພັນທຸກຳໄມ້ ແລະ ສ້າງລະບຽບການໃນການອະນຸລັກແຫຼ່ງພັນທຸກຳໄມ້ ທຳມະຊາດ ໃນຂອບເຂດທົ່ວປະເທດ | ກ/ຊກ-ປ (ກປມ, ສະຖາບັນກ-ປ), ອວຕສ | ກປແຂວງ-ເມືອງ, ອວຕສແຂວງ/ເມືອງ, ມຊ | ສູງ:ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ຄ. <u>ການກວດກາ ຄວບຄຸມ ການຄ້າຂາຍສັດປ່າ-ສັດນ້ຳ</u>** | | | | |
| ຄ-1. ນຳໃຊ້ລະບົບຂໍ້ມູນ-ຂ່າວສານທີ່ເກັບກຳໄດ້ ຈາກການສຶກສາໃນປະຈຸບັນກ່ຽວກັບການຄ້າຂາຍສັດປ່າ ໃນ ສປປລາວ ເພື່ອກຳນົດ ແລະ ຈັດລຽງບູລິມະສິດແຜນດຳເນີນງານ ແນໃສ່ປັບປຸງລະບົບການກວດກາ ຄວບຄຸມ ການຄ້າຂາຍສັດປ່າ-ສັດນ້ຳ ທັງຢູ່ພາຍໃນ ແລະ ສາກົນ, | ກ/ຊກ-ປ (ກປມ), ກ/ຊກງ | ການຄ້າ, ຕຳຫຼວດ, ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| ຄ-2. ເພີ່ມທະວີ ການກວດກາລາດຕະເວນຕາມຊາຍແດນ ເພື່ອ ຄວບຄຸມການລັກລອບສົ່ງສັດປ່າ ໄປຍັງປະ ເທດໃກ້ຄຽງ ແລະ ປັບປຸງລະບົບການກວດກາຕິດຕາມເສັ້ນທາງຄ້າຂາຍ ແລະ ຂົນສົ່ງສັດປ່າ ອອກຈາກ ເຂດປ່າສະຫງວນແຫ່ງຊາດ, | ກ/ຊກ-ປ (ກປມ), ຕຳຫຼວດ, ກ/ຊກງ | ກ-ປແຂວງ/ເມືອງ, ຕຳຫຼວດ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ:ຈຳເປັນ |
| ຄ-3. ນຳໃຊ້ທ່າແຮງ ຫຼື ດ້ານຕັ້ງໜ້າ ຂອງການເຂົ້າຮ່ວມໃນສົນທິສັນຍາ CITES ເພື່ອຮ່ວມມືກັບຕ່າງປະ ເທດຢ່າງແຂງແຮງ ກ່ຽວກັບການກວດກາ ການຄ້າຂາຍສັດປ່າ-ສັດນ້ຳ ແລະ ພືດ ຕາມຊາຍແດນ. | ກ/ຊກ-ປ, ອວຕສ, ກ/ຊການຕ່າງປະເທດ | ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| **ງ. <u>ຍົກສູງລະດັບການສຶກສາ ແລະ ຄວາມຮັບຮູ້ຂອງມວນຊົນ</u>** | | | | |
| ງ-1. ສຶກສາແລະຝຶກອົບຮົມ ໃຫ້ແກ່ພະນັກງານຂັ້ນສູນກາງ, ແຂວງ, ເມືອງ (ລວມທັງ ພ/ງການເງິນ ແລະ ພາສີ ຂອງກ/ຊການເງິນ) ກ່ຽວກັບການອະນຸລັກຊີວະນາໆພັນແລະການຄ້າຂາຍພັນພືດ, ສັດປ່າ-ສັດນ້ຳ, | ກ/ຊກ-ປ (ກປມ) | ການເງິນແຂວງ/ເມືອງ, ປ່າໄມ້ແຂວງ/ເມອືງ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ງ-2. ສ້າງແຜນງານ ຫຼື ໂຄງການສົ່ງເສີມ ກ່ຽວກັບການນຳໃຊ້ຊະນິດພັນພືດ ແລະ ສັດປ່າ-ສັດນ້ຳແບບຍືນນານ ແລະ ການອະນຸລັກອື່ນໆ (3-ຄ-1, 9-ງ-3) | ກ/ຊກ-ປ (ກປມ, ກອງສົ່ງເສີມ) | ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ງ-3. ສຶກສາອົບຮົມ, ປຸກລະດົມ ແລະ ຂົນຂວາຍ ປະຊາຊົນ ໃຫ້ມີຈິດສຳນຶກ ແລະ ປ່ຽນແປງຮູບແບບໃນການນຳໃຊ້ຊັບພະຍາກອນປ່າໄມ້ ທີ່ອາດເປັນໄພຂົ່ມຂູ່ ຕໍ່ຊັບພະຍາກອນປ່າໄມ້ ເຊິ່ງກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ລະບົບຊີວະນາໆພັນ (2-ຄ-2, 3-ຄ-1, 9-ງ-2) | ກ/ຊກ-ປ (ກປມ, ກອງສົ່ງເສີມ) | ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ງ-4. ນຳສະເໜີ ແລະ ບັນຈຸ ຫົວຂໍ້ກ່ຽວກັບການອະນຸລັກຊີວະນາໆພັນ ເຂົ້າໃນຫຼັກສູດການສອນຂອງການສຶກສາລະບົບສາມັນ (ປະຖົມ ແລະ ມັດທະຍົມ). | ກ/ຊກ-ປ, ກ/ຊສຶກສາ | ກປມ,ກ-ປແຂວງ/ເມືອງ, ສຶກສາແຂວງ/ເມືອງ | ສູງ: | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| **ຈ. <u>ການປັບປຸງ ການຄົ້ນຄວ້າ</u>** | | | | |
| ຈ-1. ກະກຽມບັນດາໂຄງການສຶກສາຄົ້ນຄວ້າ ກ່ຽວກັບພັນພືດ, ສັດປ່າ-ສັດນ້ຳ ແລະ ຖິ່ນອາໃສທີ່ສຳຄັນ ແລະ ເປັນເອກະລັກ ຢູ່ພາຍໃນ ແລະ ນອກເຂດປ່າສະຫງວນແຫ່ງຊາດ, | ກ/ຊກ-ປ (ສະຖາບັນ ກ-ປ), ອວຕສ, ມຊ | ກປແຂວງ/ເມືອງ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຈ-2. ຮ່ວມມືກັບມະຫາວິທະຍາໄລ ແລະ ສະຖາບັນຕ່າງປະເທດ ໃນການພັດທະນາຄວາມຮູ້ທາງດ້ານວິທະຍາສາດເຕັກໂນໂລຢີ ແລະ ສະໜອງການຝຶກອົບຮົມລະດັບສູງ ໃຫ້ແກ່ນັກສຶກສາ ແລະ ພະນັກງານຂອງລັດ, | ກ/ຊກ-ປ (ສະຖາບັນ ກ-ປ), ອວຕສ, ມຊ | ສະຖາບັນ/ມະຫາວິທະຍາໄລຕ່າງປະເທດ | ສູງ: | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຈ-3. ສ້າງ ແລະ ພັດທະນາຖານຂໍ້ມູນກ່ຽວກັບ ຊະນິດພັນພືດ ແລະ ສັດປ່າ-ສັດນ້ຳ ທີ່ຈະນຳໃຊ້ ເຂົ້າໃນການສຶກສາຄົ້ນຄວ້າວິທະຍາສາດ, ການກຳນົດນະໂຍບາຍການຄຸ້ມຄອງ, | ກ/ຊກ-ປ (ສະຖາບັນກ-ປ, ກປມ), ອວຕສ, ມຊ | ກປແຂວງ/ເມືອງ | ກາງ: ເຖິງປີ2020 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

## 8. <u>ປ່າປ້ອງກັນ ແລະ ການຄຸ້ມຄອງ-ຈັດສັນອ່າງໂຕ່ງ</u>

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| 1. ສ້າງກົນໄກປະສານງານລະຫວ່າງຂະແໜງການ ເພື່ອຄຸ້ມຄອງຈັດສັນອ່າງໂຕ່ງ ໃຫ້ມີປະສິດທິຜົນ. | ອວຕສ, ກ/ຊກ-ປ (ກົມແຜນການ)<br>ກ/ຊກ-ປ (ກຜກ) | ກ/ຊອຫ, ກ/ຊຄຂປກ | ກາງ: ເຖິງປີ2010 | ພາຍໃນ: ເປັນໄປໄດ້ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| 2. ພັດທະນາ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດ ການຄຸ້ມຄອງຈັດສັນອ່າງໂຕ່ງແບບປະສົມປະສານ ຢູ່ໃນລະດັບທ້ອງຖິ່ນ (ພາກສະໜາມ).<br>3. ພັດທະນາຮູບແບບກອງທຶນແບບປະດິດສ້າງ (innovative funding schemes) ເພື່ອສະໜອງໃຫ້ແກ່ການດຳເນີນກິດຈະກຳການຄຸ້ມຄອງຈັດສັນອ່າງໂຕ່ງ.<br>4. ຈັດຈັດລຽງບຸລິມະສິດ ບັນດາເຂດອ່າງໂຕ່ງທີ່ໄດ້ກຳນົດໃນຂອບເຂດທົ່ວປະເທດ ຊຶ່ງເຫັນວ່າມີຄວາມສຳຄັນ ແລະ ຈຳເປັນໃນການຄຸ້ມຄອງ ແລະ ປ້ອງກັນ ເພື່ອຮັບປະກັນການອະນຸລັກດິນ ແລະ ນ້ຳ ໂດຍຜ່ານ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນນານ.<br>5. ສ້າງແຜນການ, ໂຄງການ ເພື່ອຟື້ນຟູປ່າໄມ້ແບບທຳມະຊາດເປັນຕົ້ນຕໍ ໂດຍການ ປະສົມປະສານກັບການປູກ ໃນເຂດອ່າງໂຕ່ງ ທີ່ຊຸດໂຊມ ໂດຍການມີສ່ວນຮ່ວມຂອງປະຊາຊົນ. | ກ/ຊກ-ປ (ກຜກ, ກປມ, ກອງສ/ສ)<br>ກ/ຊກ-ປ (ກປມ, ກອງສ/ສ)<br><br>ກ/ຊກ-ປ (ກປມ, ກອງສ/ສ) | ກ-ປແຂວງ/ເມືອງ<br>ກ-ປແຂວງ/ເມືອງ,<br>ກ/ຊກ-ປ (ກປມ, ກອງສ/ສ)<br>ກ-ປແຂວງ/ເມືອງ, ບ້ານ | ສູງ:<br>ສູງ: ເຖິງປີ 2010<br>ສູງ: ເຖິງປີ 2010<br>ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

## 9. <u>ການນຳໃຊ້ທີ່ດິນ ແລະ ການຄຸ້ມຄອງປ່າໄມ້ຂັ້ນບ້ານ</u>

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| **ກ. <u>ກອບທາງດ້ານຕິນິໄນ</u>**<br>ກ-1. ອະທິບາຍຄວາມໝາຍນິຍາມ ແລະ ສະຖານະພາບຂອງປ່າໄມ້ບ້ານ ທີ່ກຳນົດຢູ່ໃນກົດໝາຍປ່າໄມ້ໃຫ້ຈະແຈ້ງ, ກຳນົດມາດຕະການກ່ຽວກັບການປ່ຽນແປງການນຳໃຊ້ທີ່ດິນປ່າໄມ້ບ້ານ ໄປສູ່ເປົ້າໝາຍການນຳໃຊ້ອື່ນ ລວມທັງ ຂັ້ນຕອນ/ວິທີການໃນການຊົດເຊີຍມູນຄ່າເສັຽຫາຍ. (1-ຄ-1) | ກ/ຊກ-ປ (ກປມ) | ກ/ຊຍຸຕິທຳ,ກ-ປແຂວງ ກ-ປເມືອງ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| **ຂ. <u>ການມອບດິນ-ມອບປ່າ</u>**<br>ຂ-1. ທົບທວນຄືນ ຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນຈາກການມອບດິນ-ມອບປ່າ ໂດຍສະເພາະການຜະລິດກະສິກຳ, ການເກັບກູ້ເຄື່ອງປ່າຂອງດົງ ແລະ ການນຳໃຊ້ຊັບພະຍາກອນອື່ນໆທີ່ມີເພື່ອປັບປຸງແລະດຳເນີນການມອບດິນ-ມອບປ່າ ຕາມສະພາບຕົວຈິງດ້ານເສດຖະກິດ-ສັງຄົມຂອງບ້ານ, | ກ/ຊກ-ປ (ກອງສ/ສກ-ປ) | ສນຍ(ກຜພຊ), ກ/ຊກງ (ກົມຕາດິນ), ກປແຂວງ/ເມືອງ, ບ້ານ<br>ສນຍ(ກຜພຊ), ກ/ຊກງ | ສູງ: ເຖິງປີ 2007 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ຂ-2. ໃຫ້ຄວາມກະຈ່າງແຈ້ງ ສະຖານະພາບທາງດ້ານກົດໝາຍ ຂອງ ໃບຢັ້ງຢືນການນຳໃຊ້ທີ່ດິນຊົ່ວຄາວ ທີ່ໄດ້ ອອກໃຫ້ປະຊາຊົນ ຫຼາຍກວ່າ 3 ປີ ໃນໄລຍະຜ່ານມາ, | ກ/ຊກ-ປ (ກອງສ/ສກ-ປ) | (ກົມຕາດິນ), ກ/ຊຍຸຕິທຳ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| ຂ-3. ພິຈາລະນາ ສ້າງລະບົບການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ບົນພື້ນຖານ ສະຖານະພາບທາງດ້ານກົດໝາຍ ກ່ຽວກັບທີ່ດິນ ແລະ ປ່າໄມ້ຂັ້ນບ້ານ (1-ກ-1ແລະ 3, 1-ຄ-1, 9-ກ-1) | ກ/ຊກ-ປ (ກອງສ/ສກ-ປ) | ສນຍ(ກຜພຊ), ກ/ຊກງ (ກົມຕາດິນ), ກ/ຊຍຸຕິທຳ, ກປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕ້ອງການ |
| **ຄ. <u>ການຢຸດຕິການຖາງປ່າເຮັດໄຮ່</u>** | | | | |
| ຄ-1. ກຳນົດເຂດຈຸດສຸມ ໂດຍອີງໃສ່ NGPES, ດຳເນີນການມອບດິນ-ມອບປ່າຄືນໃໝ່ ແລະ ຊຸກຍູ້ສົ່ງເສີມໃຫ້ປະຊາຊົນສ້າງແຜນການນຳໃຊ້ທີ່ດິນຂັ້ນບ້ານໄລຍະຍາວ ບົນພື້ນຖານທ່າແຮງຂອງຊັບພະຍາກອນທຳມະຊາດທີ່ມີໃນປະຈຸບັນ (2-ຄ-2, 3-ຄ-1, 9-ຂ-4, 9-ງ-2), | ກ/ຊກ-ປ (ກອງສ/ສກ-ປ) | ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕ້ອງການ |
| ຄ-2. ສຶກສາ ຜົນກະທົບຕົວຈິງ ຂອງການຖາງປ່າເຮັດໄຮ່ ຕໍ່ກັບປ່າໄມ້ ແລະ ສິ່ງແວດລ້ອມ, | ກ/ຊກ-ປ (ກອງສ/ສກ-ປ, ສະຖາບັນກ-ປ) | ອວຕສ, ກ-ປແຂວງ/ເມືອງ, ບ້ານ | ກາງ: ເຖິງປີ2010 | ພາຍໃນ: ຈຳກັດ ການຊ່ວຍເຫຼືອ: ຈຳເປັນ |
| ຄ-3. ພິຈາລະນາ ກຳນົດຈຳນວນຄອບຄົວເປົ້າໝາຍ ທີ່ຈະໄດ້ຮັບການຊ່ວຍເຫຼືອ ໃນການຮັບຮອງເອົາລະບົບການດຳລົງຊີວິດແບບໃໝ່ທີ່ໄດ້ຮັບການປັບປຸງ ແທນການຖາງປ່າເຮັດໄຮ່. | ກ/ຊກ-ປ (ກອງສ/ສກ-ປ) | ກ-ປແຂວງ/ເມືອງ, ປ/ຊ | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້ |
| **ງ. <u>ເພີ້ມທະວີການຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ເປັນສ່ວນໜຶ່ງຂອງການດຳລົງຊີວິດຢູ່ເຂດຊົນນະບົດ</u>** | | | | |
| ງ-1. ສ້າງກອບທາງດ້ານກົດໝາຍ ແລະ ລະບຽບການ ກ່ຽວກັບຊັບພະຍາກອນທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ ໃຫ້ຈະແຈ້ງ ທີ່ສາມາດເຮັດໃຫ້ການຄຸ້ມຄອງຊັບພະຍາກອນທຳມະຊາດ ຂັ້ນບ້ານມີປະສິດທິຜົນ ລວມທັງ ລະບົບການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມໃນຂັ້ນບ້ານ ທີ່ສະທ້ອນໃຫ້ເຫັນສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ (1-ກ-1 ແລະ 3, 1-ຄ-1, 9-ກ-1, 9-ຂ-4), | ກ/ຊກ-ປ (ກປມ, ກອງສ/ສກ-ປ) | ສນຍ(ກຜພຊ), ກ/ຊກງ, ກ/ຊຍຕທ, ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕ້ອງການ |
| ງ-2. ຊ່ວຍເຫຼືອຊາວບ້ານ ໃນການສ້າງແຜນການຄຸ້ມຄອງທີ່ດິນແລະປ່າໄມ້ບ້ານ ບົນພື້ນຖານແຜນການນຳໃຊ້ທີ່ດິນລວມ ໂດຍສຸມໃສ່ຮູບແບບການນຳໃຊ້ຊັບພະຍາກອນທີ່ດິນ ແລະ ປ່າໄມ້ ຮ່ວມກັນແບບຍືນນານ ແລະ ມີຜົນປະໂຫຍດຮ່ວມກັນຢ່າງສົມເຫດສົມຜົນ, ມີການປົວລະບັດຮັກສາ ແລະ ການຟື້ນຟູປ່າໄມ້ ໃນເຂດປ້ອງກັນແຫຼ່ງນ້ຳຂອງບ້ານ ແລະ ການສ້າງລາຍຮັບອື່ນໆ (2-ຄ-2, 3-ຄ-1, 9-ຄ-1), | ກ/ຊກ-ປ (ກອງສ/ສກ-ປ) | ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ ການຊ່ວຍເຫຼືອ: ຈຳເປັນ |
| ງ-3. ສ້າງລະບົບສົ່ງເສີມ ຕາມຄວາມຕ້ອງການຂອງປະຊາຊົນ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ຈາກຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ບັນດາຊາວກະສິກອນ ຫຼື ຄອບຄົວຕົວແບບ ແລະ ອື່ນໆ (3-ຄ-1, 4-ຂ-3, 7-ງ-2), | ກ/ຊກ-ປ (ກອງສ/ສກ-ປ) | ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ ການຊ່ວຍເຫຼືອ: ຈຳເປັນ |
| ງ-4. ຊ່ວຍເຫຼືອ ຊາວບ້ານ ໃນການສ້າງຕັ້ງກຸ່ມ ຫຼື ສະມາຄົມ ເພື່ອຄຸ້ມຄອງເຄື່ອງປ່າຂອງດົງ ຮ່ວມກັນ ລວມທັງ ການປູກ, ການນຳໃຊ້, ການຂາຍ ແລະ ການປຸງແຕ່ງ, | ກ/ຊກ-ປ (ກອງສ/ສກ-ປ) | ກ-ປແຂວງ/ເມືອງ, | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສວ່ນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ງ-5. ສ້າງລະບົບການເງິນຈຸລະພາກ ເພື່ອຊ່ວຍເຫຼືອປະຊາຊົນ ໃນການລົງທຶນ ປູກພືດກະສິກຳ, ປູກ-ຂຸດຄົ້ນ ແລະ ປຸງແຕ່ງເຄື່ອງປ່າຂອງດົງ, ການລ້ຽງສັດ ແລະ ອື່ນໆ. | ທສກ, ກ/ຊກ-ປ | ບ້ານ<br>ກ-ປແຂວງ/ເມືອງ, | ສູງ: ເຖິງປີ 2010 | ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ |
| ງ-6. ພັດທະນາກົນໄກການຕະຫຼາດພາຍໃນ ແລະ ສາກົນ ເພື່ອສົ່ງເສີມການຂາຍຜະລິດຕະພົນປ່າໄມ້ ແລະ ຜະລິດຕະພັນກະສິກຳ. | ກ/ຊກປ (ກອງສົ່ງເສີມກປ) | ບ້ານ<br>ກປແຂວງ/ເມືອງ,<br>ອ/ກໄມ້, ບ້ານ | ສູງ: ເຖິງປີ 2010 | ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |

## 10. ຂົງເຂດໃນການດຳເນີນງານຮ່ວມກັນ ຂອງບັນດາຂະແໜງການທີ່ກ່ຽວຂອ້ງ

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສວ່ນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ກ. ຂັ້ນຕອນທາງດ້ານກົດໝາຍ, ລະບຽບການ ແລະ ການຈັດຕັ້ງປະຕິບັດ | | | | |
| 1. ປະສານສົມທົບກັບກະຊວງຍຸຕິທຳ ເພື່ອກຳນົດເຄື່ອງມື ໃນການສົ່ງເສີມ ສຳລັບກົດໝາຍ ແລະ ລະບຽບການທີ່ກ່ຽວຂອ້ງກັບປ່າໄມ້ ໃນຮູບແບບທີ່ເໝາະສົມ ສຳລັບອຳນາດການປົກຄອງທອ້ງຖິ່ນ ແລະ ບ້ານ ນຳເອົາໄປປັບປຸງໃນການຈັດຕັ້ງປະຕິບັດ ແລະ ຍົກສູງຄວາມຮັບຮູ້ຂອງປະຊາຊົນ. | ກ/ຊກ-ປ (ກປມ)<br>ກ/ຊກ-ປ (ກປມ) | ກ/ຊຍຕທ, ກປແຂວງ/ເມືອງ, ບ້ານ, ອຸດສາຫະກຳ<br>ກປແຂວງ/ເມືອງ, ບ້ານ, ອຸດສາຫະກຳ | ສູງ: ເຖິງປີ 2007<br>ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ<br>ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| 2. ປັບປຸງການເຂົ້າເຖິງ ແລະ ການເຜີຍແຜ່ບັນດາກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ດ້ວຍການຈັດພິມ ສັງລວມເອົາລະບຽບການທັງໝົດທີ່ໄດ້ປະກາດໃຊ້ ແລະ ຍັງມີຜົນບັງຄັບໃຊ້ຢູ່ໃນປະຈຸບັນ ແລະ ມີການກຳນົດອອກມາໃຊ້ເປັນແຕ່ລະໄລຍະ. | ກ/ຊກ-ປ (ກປມ) | ກປແຂວງ/ເມືອງ, ບ້ານ, ອຸດສາຫະກຳ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| 3. ແຈ້ງໃຫ້ມວນຊົນຊາບ ຕໍ່ກັບ ບັນດາເອກະສານນິຕິກຳປ່າໄມ້ ທີ່ໄດ້ຍົກເລີກໄປແລ້ວ ແລະ ບັນດານິຕິກຳປ່າໄມ້ ທີ່ຍັງມີຜົນບັງຄັບໃຊ້ຢູ່. | ກ/ຊກ-ປ (ກປມ) | ກປແຂວງ/ເມືອງ, ບ້ານ, ອຸດສາຫະກຳ | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| 4. ສືບຕໍ່ຮ່າງບັນດາຂໍ້ກຳນົດ, ລະບຽບການ ແລະ ບົດແນະນຳຕ່າງໆທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍປ່າໄມ້. | ກ/ຊກ-ປ | ກ/ຊກ-ປ, ກປມ, ກ-ປແຂວງ/ເມືອງ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບູລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| 5. ຝຶກອົບຮົມກ່ຽວກັບວິທີການຮ່າງລະບຽບການຕ່າງໆທີ່ກ່ຽວຂ້ອງກັບວຽກງານປ່າໄມ້ ແລະ ວິທີການໃນການຈັດຕັ້ງປະຕິບັດບັນດາລະບຽບການດັ່ງກ່າວ ໂດຍແນໃສ່ພະນັກງານພາຍໃນຫ້ອງການ ກະຊວງກະສິກຳ ແລະ ປ່າໄມ້, ພະແນກວິຊາການ ກົມປ່າໄມ້, ພະແນກກະສິກຳ-ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ ໂດຍຕິດພັນກັບພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບໃນແຕ່ລະຂັ້ນ.<br>6. ສ້າງຕັ້ງຄະນະຮັບຜິດຊອບ ຫຼື ຄະນະດຳເນີນງານ ສຳລັບຂະແໜງຍ່ອຍໃນຂົງເຂດວຽກງານປ່າໄມ້ ເພື່ອໃຫ້ມີສ່ວນກ່ຽວພັນກັບການປຶກສາຫາລື ຫຼື ທີມງານ ທີ່ປະກອບດ້ວຍຫຼາຍພາກສ່ວນ ໃນການຮ່າງລະບຽບການ ແລະ ກົດໝາຍທີ່ສຳຄັນຮ່ວມກັນ. | ກ/ຊກ-ປ (ກປມ) | ບັນດາກະຊວງ, ກົມອອ້ມຂ້າງກ/ຊກປ, ຂະແໜງອ/ກ, ກປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| **ຂ. <u>ການປະຕິບັດລະບຽບ ກົດໝາຍ ແລະ ການບໍລິຫານ</u>**<br>1. ກຳນົດແຈ້ງ ແລະ ຊັດເຈນຕື່ມ ຂອບເຂດຄວາມຮັບຜິດຊອບທີ່ຊ້ຳຊ້ອນກັນ, ທັງໃນພາກປະຕິບັດ ວ່າພາກສ່ວນໃດມີສິດ ແລະ ມີຄວາມຮັບຜິດຊອບອັນໃດ, ຢູ່ໃນລະດັບໃດ ແລະ ພາກສ່ວນໃດ ບໍ່ມີສິດ.<br>2. ພິຈາລະນາ ເພື່ອກຳນົດແຜນງານ ໃນການດຳເນີນວຽກງານຮ່ວມກັນຂອງບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງ ເຊິ່ງປະກອບມີ ປ່າໄມ້, ຕຳຫຼວດ, ການເງິນ ແລະ ພາກສ່ວນອື່ນໆ ເພື່ອດຳເນີນການກວດກາ ແລະ ສະກັດກັ້ນ ປະກົດການທີ່ຝ່າຝືນຕໍ່ລະບຽບກົດໝາຍກ່ຽວກັບການຂຸດຄົ້ນ ແລະ ຄ້າຂາຍໄມ້ ແລະ ເຄື່ອງປ່າຂອງດົງ. | ສນຍ, ກ/ຊກ-ປ, ກ/ຊກຄ<br><br>ກ/ຊກ-ປ, ກ/ຊປກສ, ກ/ຊກ-ງ ແລະ ອື່ນໆ | ກ-ປແຂວງ/ເມືອງ, ອຸດສາຫະກຳ, ບ້ານ<br>ຂະແໜງການຂອງແຂວງ ຣ/ງອຸດສາຫະກຳ, ບ້ານ | ສູງ: ເຖິງປີ 2007<br><br>ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້<br><br>ພາຍໃນ: ເປັນໄປໄດ້ |
| **ຄ. <u>ການສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ການພັດທະນາຊັບພະຍາກອນມະນຸດ</u>**<br>ຄ-1. <u>ການກຳນົດນະໂຍບາຍ</u><br>1. ປັບປຸງລະບົບການເກັບກຳ, ສັງລວມ, ກັ່ນກອງ, ວິໃຈ, ເກັບຮັກສາ ແລະ ສະໜອງຂໍ້ມູນ ສະຖິຕິທີ່ຈຳເປັນ ແລະ ກ່ຽວຂ້ອງທັງໝົດ ທັງໃນລະດັບກະຊວງ ແລະ ລະດັບກົມ.<br>2. ກຳນົດໄລຍະເວລາ ສຳລັບການທົບທວນຄືນພາຍໃນຂະແໜງການ ໂດຍການນຳໃຊ້ຂໍ້ມູນ ຂ່າວສານທີ່ໄດ້ເກັບຮັກສາໄວ້ນັ້ນ ເພື່ອເປັນບ່ອນອີງ. | ກ/ຊກ-ປ (ກົມກອງອອ້ມຂ້າງກະຊວງ)<br>ກ/ຊກ-ປ (ກປມ) | ກ-ປແຂວງ/ເມືອງ<br><br>ກົມອອ້ມຂ້າງກ/ຊກປ, ກ-ປແຂວງ/ເມືອງ | ສູງ: ເຖິງປີ 2007<br><br>ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ<br>ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| 3. ປັບປຸງ ຍົກລະດັບຄວາມອາດສາມາດຂອງພະນັກງານ ກ່ຽວກັບການວິເຄາະ ແລະ ການຮ່າງນະໂຍບາຍ ໂດຍການເຂົ້າຮ່ວມໃນການຝຶກອົບຮົມ ແລະ ການສຶກສາຂັ້ນສູງ. | ກ/ຊກ-ປ (ກປມ) | ຂ/ໜອຸດສາຫະກຳ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ຄ-2. <u>ການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນງານ</u> | | | | |
| 1. ຈັດຕັ້ງປະຕິບັດແຜນພັດທະນາຊັບພະຍາກອນມະນຸດ ຕາມແຜນຍຸດທະສາດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍການພິຈາລະນາຕາມຄວາມຕອ້ງ ການໃນການຝຶກອົບຮົມ ດັ່ງທີ່ໄດ້ສະເໜີໃນພາກທີ່ຜ່ານມາ. | ກ/ຊກ-ປ (ກົມກອງ ອອ້ມຂ້າງກ/ຊ) | ກ-ປແຂວງ/ເມືອງ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| 2. ສະໜອງອຸປະກອນຮັບໃຊ້, ສິ່ງອຳນວຍຄວາມສະດວກ ແລະ ພາຫະນະທີ່ຈຳເປັນໃຫ້ແກ່ທອ້ງຖິ່ນ ເພື່ອປະຕິບັດໜ້າທີ່ໆໄດ້ກຳນົດໄວ້ໃນພາກທີ່ຜ່ານມາ ໂດຍການສະໜອງແຫຼ່ງທຶນໃໝ່ ບວກໃສ່ທຶນທີ່ມີແລ້ວ. | ກ/ຊກ-ປ | ກ-ປແຂວງ/ເມືອງ | ສູງ: | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 3. ເອົາແຜນພັດທະນາຊັບພະຍາກອນມະນຸດທີ່ເປັນອັນລະອຽດນັ້ນ ໄປສອດທອ້ຍເຂົ້າໃນບັນດາໂຄງການຮ່ວມມືສາກົນທັງໝົດ. | ກ/ຊກ-ປ (ກົມກອງ ອອ້ມຂ້າງກ/ຊ) | ກ-ປແຂວງ/ເມືອງ | ສູງ: | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ງ. <u>ການສຶກສາຄົ້ນຄວ້າ ແລະ ການສົ່ງເສີມ</u>** | | | | |
| ງ-1. <u>ວຽກງານການຄົ້ນຄວ້າ</u> | | | | |
| 1. ສ້າງແຜນຍຸດທະສາດການຄົ້ນຄວ້າກ່ຽວກັບປ່າໄມ້ ແຕ່ນີ້ຫາປີ 2010 ແລະ 2020. | ກ/ຊກ-ປ (ສະຖາບັນກ-ປ) | ມຊ,ກປແຂວງ/ເມືອງ ພາກສວ່ນອ/ຊ, ບ້ານ | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| 2. ສ້າງກົນໄກໃນການປະສານງານ ລະຫວ່າງສະຖາບັນຄົ້ນຄວ້າຕ່າງໆທີ່ກ່ຽວຂ້ອງ. | ກ/ຊກ-ປ (ສະຖາບັນກ-ປ) | ມຊ, ກະຊວງອື່ນໆທີ່ກ່ຽວຂ້ອງ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕອ້ງການ |
| 3. ຍົກລະດັບຄວາມອາດສາມາດ ໃຫ້ແກ່ນັກຄົ້ນຄວ້າ ໂດຍການເຂົ້າຮ່ວມຝຶກອົບຮົມ ແລະ ຜ່ານລະບົບການສຶກສາຂັ້ນສູງ. | ກ/ຊກ-ປ (ສະຖາບັນກ-ປ) | ມຊ, ມະຫາວິທະຍາໄລ/ສະຖາບັນສາກົນ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| ງ-2. <u>ວຽກງານສົ່ງເສີມ</u>: | | | | |
| 1. ກຳນົດພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຂະແໜງສົ່ງເສີມກະສິກຳ ແລະ ປ່າໄມ້ໃນລະດັບທອ້ງຖິ່ນ ໃຫ້ຈະແຈ້ງຂຶ້ນຕື່ມ. | ກ/ຊກ-ປ (ກອງສ/ສກ-ປ) | ກອງສ/ສແຂວງ, ກ-ປ ເມືອງ, ບ້ານ | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້ |
| 2. ຝຶກອົບຮົມໃຫ້ແກ່ພະນັກງານສົ່ງເສີມ ຫຼື ນັກສົ່ງເສີມ ຢູ່ໃນລະດັບທອ້ງຖິ່ນ ກ່ຽວກັບໜ້າທີ່ ແລະ | ກ/ຊກ-ປ (ກອງສ/ສກ-ປ) | ກອງສ/ສແຂວງ, ກ-ປ | ສູງ: ເຖິງປີ 2010 | |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ຄວາມຮັບຜິດຊອບຂອງເຂົາເຈົ້າທີ່ຖືກມອບໝາຍ ຕະຫຼອດຮອດ ວິທີການ ໃນການສົ່ງເສີມຕາມຄວາມຕ້ອງການຂອງປະຊາຊົນ ແລະ ຄວາມສາມາດດ້ານເຕັກນິກວິຊາການ ແລະ ການຕະຫຼາດ. | | ເມືອງ, ບ້ານ | | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 3. ສ້າງລະບົບການບໍລິການໆສົ່ງເສີມແບບມີປະສິດຕິຜົນ ໂດຍການເຂົ້າຮ່ວມຂອງທຸກພາກສວ່ນ ລວມທັງສະຖາບັນຄົ້ນຄວ້າ, ພາກເອກະຊົນ ແລະ ສວ່ນບຸກຄົນ. | ກ/ຊກ-ປ (ກອງສ/ສກ-ປ) | ກອງສ/ສແຂວງ, ສະຖາບັນກປ, ກປເມືອງ,ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| **ຈ. <u>ບົດບາດຍິງ-ຊາຍ</u>** | | | | |
| 1. ສົ່ງເສີມບົດບາດຍິງ-ຊາຍ ເຂົ້າຮ່ວມ ໃນທຸກກິດຈະກຳຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້. | ກ/ຊກ-ປ(ກປມ, ກອງສ/ສກປ) | ສ/ພຍິງ,ສະຖາບັນ ກປ, ກປແຂວງ/ | ສູງ: ເຖິງປີ 2010 | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| 2. ພັດທະນາວິທີການປູກຈິດສຳນຶກບົດບາດຍິງ-ຊາຍ, ບົດແນະນຳທາງດ້ານເຕັກນິກວິຊາການ ແລະ ການປະຕິບັດຕົວຈິງໃນການຄຸ້ມຄອງຊັບພະຍາກອນປ່າໄມ້. | ກ/ຊກ-ປ(ກປມ, ສະຖາບັນກປ, ກອງສ/ສກປ) | ເມືອງ,ບ້ານ<br>ສ/ພຍິງ,ສະຖາບັນ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 3. ດຳເນີນການສຶກສາຄົ້ນຄວ້າ ບັນດາຜົນກະທົບດ້ານເສດຖະກິດ-ສັງຄົມ ຂອງໂຄງການປ່າໄມ້ ຕໍ່ບົດບາດຍິງ-ຊາຍ. | ກ/ຊກ-ປ(ກປມ,ສະຖາບັນກປ) | ກປ, ກປແຂວງ/<br>ເມືອງ,ບ້ານ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 4. ຮັບປະກັນຄວາມສະເໝີພາບ ທາງດ້ານໜ້າທີ່ຄວາມຮັບຜິດຊອບ ຂອງເພດຍິງ ແລະ ເພດຊາຍໃນການຄຸ້ມຄອງແລະ ນຳໃຊ້ ຊັບພະຍາກອນປ່າໄມ້ (ການສຶກສາ, ການສົ່ງເສີມ, ການຝຶກອົບຮົມ ແລະ ການຜະລິດ ຕະຫຼອດ ຮອດ ການບໍລິການດ້ານການເງິນ ແລະ ສິນເຊື່ອ). | ກ/ຊກ-ປ(ກປມ) | ສ/ພຍິງ,ສະຖາບັນ<br>ກປ, ກປແຂວງ/ | ສູງ: | ພາຍໃນ: ເປັນໄປໄດ້<br>ການຊ່ວຍເຫຼືອ:ຕ້ອງການ |
| 5. ເພີ່ມທະວີຄວາມຮັບຜິດຊອບ ໃນການພັດທະນາຄູ່ມືຝຶກອົບຮົມ ກ່ຽວກັບບົດບາດຍິງ-ຊາຍ ແລະ ເຊື່ອມເຂົ້າໃນລະບົບການສຶກສາຂັ້ນຕ່າງໆ. | ກ/ຊກ-ປ (ກອງສ/ສກປ), ກ/ຊສຶກສາ (ມຊ) | ເມືອງ,ບ້ານ<br>ສ/ພຍິງ,ສະຖາບັນ | ສູງ: ເຖິງປີ 2010 | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 6. ສົ່ງເສີມ ໃຫ້ເພດຍິງເຂົ້າຮ່ວມ ໃນການກຳນົດນະໂຍບາຍ ຫຼື ການຕັດສິນບັນຫາ ຕາມເງື່ອນໄຂເໝາະສົມ ໃນທຸກໆລະດັບ ບົນພື້ນຖານ ຄວາມຮູ້ ຄວາມສາມາດທີ່ມີ. | ກ/ຊກ-ປ (ກປມ) | ກປ, ກອງສ/ສກປ,<br>ກປ ແຂວງ/ກປ<br>ເມືອງ,ບ້ານ | ສູງ: | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |
| 7. ສົ່ງເສີມທຸກກິດຈະກຳ ທີ່ສາມາດສ້າງໃຫ້ມີລາຍຮັບຈາກບັນດາໂຄງການຕ່າງໆທີ່ກ່ຽວຂ້ອງກັບປ່າໄມ້ເພື່ອປັບປຸງຊີວິດການເປັນຢູ່ຂອງເພດຍິງໃຫ້ດີຂຶ້ນ. | ກ/ຊກ-ປ (ກອງສ/ສກ-ປ) | ສ/ພຍິງ,ສະຖາບັນ<br>ກປ, ກປມ,ກປ<br>ແຂວງ/ເມືອງ<br>ສ/ພຍິງ,ສະຖາບັນກປ, | ສູງ: | ພາຍໃນ: ຈຳກັດ<br>ການຊ່ວຍເຫຼືອ: ຈຳເປັນ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| | | ກອງສ/ສກປ, ກປ ແຂວງ/ເມືອງ, ບ້ານ ສ/ພຍິງ,ສະຖາບັນກປ, ກອງສ/ສກປ, ກປ ແຂວງ/ເມືອງ, ບ້ານ | | |
| **ສ. ງົບປະມານ ແລະ ການຈັດສັນງົບປະມານ** | | | | |
| 5) ທົບທວນຄືນການສະໜອງງົບປະມານລວມ ໃຫ້ແກ່ຂະແໜງການປ່າໄມ້ ບົນພື້ນຖານການວິເຄາະ ຫຼື ພິຈາລະນາບັນຫາຄວາມດຸນດ່ຽງລະຫວ່າງ ການສ້າງລາຍຮັບຂອງງົບປະມານ ຈາກຂະແໜງການປ່າໄມ້ ແລະ ມູນຄ່າທີ່ຈຳເປັນທີ່ຈະຕ້ອງໄດ້ບູລະນະຮັກສາ ໃນລະບົບການຄຸ້ມຄອງທີ່ແທດເໝາະ ພາຍໃນຂະແໜງການປ່າໄມ້ ໂດຍສະເພາະ ແມ່ນວຽກງານອະນຸລັກປ່າໄມ້ ເພື່ອເຮັດໃຫ້ສະພາບຊັບພະຍາກອນປ່າໄມ້ ກໍຄືຊັບພະຍາກອນທຳມະຊາດ ຟື້ນຄືນສູ່ສະພາບເດີມ ແລະ ບໍ່ມີວັນບົກແຫ້ງ. | ກ/ຊກ-ງ, ກ/ຊກ-ປ | ກ-ປແຂວງ/ເມືອງ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| 6) ທົບທວນຄືນ ການນຳໃຊ້ລາຍຮັບ ຈາກຄ່າພັນທະປູກໄມ້ ແລະ ພິຈາລະນາຄວາມເປັນໄປໄດ້ ໃນການສະໜອງທຶນຮອນ ໃຫ້ແກ່ວຽກງານອະນຸລັກຊັບພະຍາກອນປ່າໄມ້. | ກ/ຊກ-ງ, ກ/ຊກ-ປ | ກ-ປແຂວງ/ເມືອງ, ຜູ້ໃຫ້ທຶນ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| 7) ສ້າງກອງທຶນເພື່ອສະໜອງໃຫ້ແກ່ການພັດທະນາປ່າໄມ້ ໂດຍໃຫ້ກົມກຽວກັບກອງທຶນອື່ນໆທີ່ກ່ຽວຂ້ອງ, | ກ/ຊກ-ປ, ກ/ຊກ-ງ | ກ-ປແຂວງ/ເມືອງ, ບ້ານ | ສູງ: ເຖິງປີ 2007 | ພາຍໃນ: ເປັນໄປໄດ້ |
| 8) ທົບທວນຄືນ ການແບ່ງປັນງົບປະມານສະເພາະ ເພື່ອສະແດງໃຫ້ເຫັນຄວາມຕ້ອງການທີ່ຈຳເປັນຕົວຈິງຂອງແຂວງ. | ກ/ຊກ-ປ, | ກ/ຊກ-ງ | ສູງ: ເຖິງປີ 2007 | ການຊ່ວຍເຫຼືອ:ຕ້ອງການ ພາຍໃນ: ເປັນໄປໄດ້ |
| **ຊ. ການຮ່ວມມືກັບສາກົນ** | | | | |
| 3) ປັບປຸງວຽກງານຮ່ວມມືພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ບັນດາກົມກອງທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການປະສານງານກ່ຽວກັບການສະໜອງການຊ່ວຍເຫຼືອຂອງສາກົນດີຂຶ້ນ ແລະ ເຂົ້າຮ່ວມຢ່າງຈິງຈັງໃນ ການປຶກສາຫາລື ກ່ຽວກັບປ່າໄມ້ ໃນລະດັບສາກົນ. | ກ/ຊກ-ປ | ກົມກອງອອ້ມຂ້າງກ/ຊ | ສູງ: ເຖິງປີ 20107 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕ້ອງການ |
| 4) ຍົກສູງນະໂຍບາຍ ກໍຄືກົນໄກໃນການຮ່ວມມືຂອງລັດຖະບານທີ່ມີໃນປະຈຸບັນ ໂດຍສະເພາະໃນຂົງເຂດທີ່ລະຫວ່າງລັດຖະບານ ແລະ ອົງການສາກົນສາມາດແລກປ່ຽນທັດສະນະ ແລະ ຂໍ້ມູນຂ່າວສານ ທີ່ | ກ/ຊກ-ປ | ກະຊວງທີ່ກ່ຽວຂ້ອງອື່ນໆ ກ-ປແຂວງ/ເມືອງ, | ສູງ: ເຖິງປີ 2005 | ພາຍໃນ: ເປັນໄປໄດ້ ການຊ່ວຍເຫຼືອ:ຕ້ອງການ |

| ການດຳເນີນງານທີ່ສະເໜີ (ການດຳເນີນງານທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ | ແຫຼ່ງຊັບພະຍາກອນ (ແຫຼ່ງທຶນ) |
|---|---|---|---|---|
| ກ່ຽວພັນກັບການສະໜອງການຊ່ວຍເຫຼືອໃຫ້ແກ່ຂະແໜງການປ່າໄມ້. | | ຣ/ງອ/ກ, ບ້ານ ແລະ ຜູ້ໃຫ້ທຶນ | | |

***ໝາຍເຫດ***: - ***ສູງ*** *= ຈັດເຂົ້າໃນບຸລິມະສິດສູງ ຫຼື ຮີບດ່ວນ,* ***ກາງ*** *= ຈັດເຂົ້າໃນບຸລິມະສິດປານກາງ*

*- ບາງກິດຈະກຳ (ຫຼື ບາງແຜນການດຳເນີນງານ) ແມ່ນບໍ່ໄດ້ກຳນົດກອບເວລາໃນການຈັດຕັ້ງປະຕິບັດ ເນື່ອງຈາກວ່າ ເປັນວຽກງານທີ່ຈະຕ້ອງໄດ້ດຳເນີນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.*

*ເອກະສານຕິດຄັດທີ 3:*

## ນິຍາມ ແລະ ອະທິບາຍຄຳສັບ

<u>ພື້ນທີ່ປ່າໄມ້ (Current Forest):</u>

***ພື້ນທີ່ປ່າໄມ້ ແມ່ນລວມທັງປ່າທຳມະຊາດ ແລະ ປ່າປູກ, ເຊິ່ງແມ່ນພື້ນທີ່ດິນທີ່ມີປ່າໄມ້ ທີ່ມີຄວາມໜາແໜ້ນຂອງຊັ້ນເຮືອນຍອດປົກຫຸ້ມຫຼາຍກວ່າ 20% ຂຶ້ນໄປ, ມີເນື້ອທີ່ຫຼາຍກວ່າ 5 ຮຕ ແລະ ຕອ້ງເປັນພື້ນທີ່ໆມີຕົ້ນໄມ້ທີ່ມີຄວາມສູງຢ່າງໜອ້ຍ 5ມ ຂຶ້ນໄປ.*** ພື້ນຖານໃນການຈຳແນກລະຫວ່າງປ່າໄມ້ ແລະ ທີ່ດິນອື່ນໆ ແມ່ນ ຄວາມໜາແໜ້ນຂອງຊັ້ນເຮືອນຍອດ. ໃນກໍລະນີນີ້ ພື້ນທີ່ປ່າໄມ້ໄດ້ຖືກແບ່ງອອກເປັນແຕ່ລະປະເພດປ່າແຕກຕ່າງກັນ ເຊິ່ງປະກອບມີ ປ່າດົງດິບແຫ້ງແລ້ງເຂດສູງ ແລະ ເຂດຕ່ຳ (Upper and Lower Dry Evergreen Forest), ປ່າປະສົມເຂດສູງ ແລະ ເຂດຕ່ຳ (Upper and Lower Mixed Deciduous Forest), ປ່າລຽບແຄມນ້ຳ (Gallery Forest), ປ່າໃບເຂັມ (Coniferous Forest), ປ່າໃບເຂັມ ປະສົມໃບກວ້າງ (Mixed Broadleaved and Coniferous Forest), ປ່າໂຄກ (Dry Dipterocarp Forest)

<u>ພື້ນທີ່ໆສາມາດກາຍເປັນປ່າ (Potential Forest)</u>

***ແມ່ນພື້ນທີ່ດິນທີ່ເຄີຍເປັນປ່າມາກອ່ນ ແຕ່ຄວາມໜາແໜ້ນຂອງຊັ້ນເຮືອນຍອດຂອງປ່າໄມ້ປົກຄຸມ ຫຼຸດລົງຕ່ຳກວ່າ 20% ລົງມາ ດ້ວຍຫຼາຍໆເຫດຜົນທີ່ແຕກຕ່າງກັນ (ການຂຸດຄົ້ນ ຫຼື ຖາງ-ຈູດປ່າ ເຮັດໄຮ່).*** ປະເພດປ່າດັ່ງກ່າວນີ້ແມ່ນລວມທັງປ່າໄມ້ປອ່ງ, ເຂດພື້ນທີ່ໄຮ່ເກົ່າທີ່ປະມາດິນ (ເຂດປ່າປະເພດສອງ) ແລະ ເຂດຂາດປ່າຊົ່ວຄາວ ທີ່ໄດ້ຮັບການຟື້ນຟູແບບທຳມະຊາດ.

<u>ປ່າເຊື່ອມໂຊມ ຫຼື ເຂດຂາດປ່າຊົ່ວຄາວ (Unstocked Forest Areas)</u>

ແມ່ນເຂດທີ່ເຄີຍເປັນປ່າມາກອ່ນ ແຕ່ຖືກທຳລາຍ ຫຼື ລົບກວນຢ່າງໜັກໜ່ວງ ຈົນເຮັດໃຫ້ລະດັບຄວາມໜາແໜ້ນຂອງຊັ້ນເຮືອນຍອດຫຼຸດລົງຕ່ຳກວ່າ 20%. ເຂດດັ່ງກ່າວຍັງມີໂອກາດທີ່ຈະກາຍເປັນປ່າຄືນໃນອະນາຄົດ ຖ້າຫາກບໍ່ຖືກລົບກວນ ແລະ ທຳລາຍ ຫຼື ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູເປັນຢ່າງດີ.

<u>ປ່າໄມ້ປອ່ງ (Bamboo)</u>

ພື້ນທີ່ໆໃດໜຶ່ງ ທີ່ມີໄມ້ປອ່ງ ແລະ ຕົ້ນໄມ້ປົກຄຸມ ໂດຍຄວາມໜາແໜ້ນຂອງຊັ້ນເຮືອນຍອດຊັ້ນເທິງຂອງປ່າໄມ້ຫາກ ໜອ້ຍກວ່າ 5% ແມ່ນຖືກຈັດເຂົ້າໃນປະເພດປ່າໄມ້ປອ່ງ.

ໄຮ່ເກົ່າທີ່ຖືກປະປ່ອຍ ສ່ວນໃຫຍ່ຈະກາຍເປັນປ່າໄມ້ປອ່ງ ແລະ ໄມ້ປອ່ງບາງຊະນິດອາດປົກຄຸມເຂດດັ່ງກ່າວນານນັບຫຼາຍໆປີ. ການກະຈາຍຂອງປ່າໄມ້ປອ່ງ ອາດຈະມີຄວາມສູງ-ຕ່ຳ ແຕກຕ່າງກັນ ຕັ້ງແຕ່ 2 ຫາ 25 ແມັດ. ຖ້າຄວາມໜາແໜ້ນຂອງໄມ້ປອ່ງ ໃນຊັ້ນເຮືອນຍອດຊັ້ນລ່າງຫາກຕ່ຳກວ່າ 80% ຂອງຄວາມປົກຄຸມທັງໝົດ ແມ່ນຈະບໍ່ຖືກຈັດເຂົ້າໃນປະເພດປ່າໄມ້ປອ່ງ.